พาสาสาดพื้นถาม

ตาลางเถื่องพายจ๊ดสรงพะยัมขะมะลาว

จุดผะลิดสรง / อิทิสัมสรง			ธิมสิบ		ลิ้น				ข้อง ลำ ซอย	โก้ง ลำ ธูลำ
					ปายลิ้น		กาง ลิ้น	ภิก ลิ้น		
			ก่	ฉุมแอ้อ เพิ่ง	แอ้อ เพิ่ง	เตือก				
ฮัด	ผิ่อ	บ่ก้อง	ph			th		kh		
	บ่ผิ่อ	บ่ก้อง	p		t		c	k		
		ก้อง	b			d				
	สรากอกพาวถ้า		m			n	ñ	ŋ		
ขู	บ่ก้อง			f			s		h	
	ก้อง			v			y			
	ล้างลิ้น (ก้อง)					l				
สรางลิ่น						r				
เถิงสะหละเถิงพะยัมขะมะ			w				i ยู่ รูดสะกิด			?

ย: เป็นสะน: ล พะยัญชุ: ม:

มะหาวิทะยาไลแห่วชาด
ถะนะอักสอมสาด
พาภวิชาพาสาลาว-สี่สานมอมซึน
วรวงจัน, ๘๐๑๗

ພາສາສາດພື້ນຖານ

ຜູ້ຮຽບຮຽງ
ສົມເພດ ພົມມະວົງສາ

ຄະນະກວດແກ້
ຄະນາຈານ ໜ່ວຍວິຊາພາສາສາດ

ບຸນສົ່ງ ແກ້ວບົວສາຍ

ພາກວິຊາພາສາລາວ-ສື່ສານມວນຊົນ
ຄະນະອັກສອນສາດ
ມະຫາວິທະຍາໄລແຫ່ງຊາດ

ວຽງຈັນ, ๘๐๑๗

ສາລະບານ

ໜ້າທີ

ພາກທີ I ບາງບັນຫາພື້ນຖານຂອງພາສາສາດ 1
ບົດທີ ๑ ພາສາ ແລະຄວາມສຳຄັນຂອງພາສາ 1
ບົດທີ ๒ ທາດແທ້ ແລະພາລະກຳຂອງພາສາ 5
ບົດທີ ๓ ພາສາ ແລະຄວາມເອົ້າ 11
ບົດທີ ๔ ພາສາ ແລະຈິນຕະນາການ 15
ບົດທີ ๕ ລັກສະນະລະບົບ ແລະສັນຍານຂອງພາສາພາສາ 20
ບົດທີ ๖ ເຄົ້າກຳເນີດ ແລະການຂະຫຍາຍຕົວຂອງພາສາ 27

ພາກທີ II ອັກຂະຫຼະວິທະຍາ 34
ບົດທີ ๑ ອັກຂະຫຼະ ແລະອັກຂະຫຼະວິທະຍາ 34
ບົດທີ ๒ ພື້ນຖານຂອງອັກຂະຫຼະວິທະຍາ 38
ບົດທີ ๓ ການວິໄຈອັກຂະຫຼະ 46

ພາກທີ III ວັດຈະນາວິທະຍາ 68
ບົດທີ ๑ ເປົ້າໝາຍ ແລະໜ້າທີ່ຂອງວິທະຍາ 68
ບົດທີ ๒ ສັບ ແລະສຳນວນ(ຄຳເວົ້າ ແລະອະລິຄົງຕົວ) 73
ບົດທີ ๓ ຄວາມໝາຍຂອງສັບ 80
ບົດທີ ๔ ລະບົບວັດຈະນາ 89
ບົດທີ ๕ ການແບ່ງວັດຈະນາຕາມເຂດພູມສາດ 99
ບົດທີ ๖ ການຂະຫຍາຍຕົວຂອງວັດຈະນາ 104

ພາກທີ IV ໄວຍາກອນວິທະຍາ 107
ບົດທີ ๑ ບາງບັນຫາກ່ຽວກັບໄວຍາກອນ 107
ບົດທີ ๒ ຫົວໜ່ວຍໄວຍາກອນ 113
ບົດທີ ๓ ວິທີການ ແລະມາດເກນໄວຍາກອນ 119
ບົດທີ ๔ ວາຈີວິພາກ ແລະວາກະຍະສຳພັນ 126

ຄຳນຳ

ຫຼັກສູດວິຊາພາສາສາດພື້ນຖານເຫຼັ້ມນີ້, ໄດ້ຮຽບຮຽງ ແລະຮີບໂຮມຈາກວິຊາທິດສະດີພາສາ 1 ແລະ ທິດສະດີພາສາ 2 ໃນເມື່ອກ່ອນ ກໍເພື່ອເປັນການຕອບສະໜອງ ຕາມໂຄງການຫຼັກສູດການສິດສອນຂອງພາກວິຊາພາສາລາວ-ສື່ສານມວນຊົນ ໃນໄລຍະໃໝ່. ເນື້ອໃນຂອງຫຼັກສູດປະກອບດ້ວຍ 4 ພາກໃຫຍ່ ຄື ພາກທີ 1 ບາງທິດສະດີພື້ນຖານຂອງພາສາສາດ, ພາກທີ 2 ອັກຂະຫລະວິທະຍາ, ພາກທີ3 ວັດຈະນາວິທະຍາ ແລະພາກທີ 4 ໄວຍາກອນວິທະຍາ. ແຕ່ລະບົດໃນແຕ່ລະພາກ ເນື້ອໃນສ່ວນຫຼາຍສັ້ນ, ກະທັດຮັດ, ເຂົ້າໃຈໄດ້ງ່າຍ ເພື່ອໃຫ້ເໝາະສົມກັບໄລຍະເວລາທີ່ໂຄງການຫຼັກສູດກຳນົດ ຄືສາມໜ່ວຍກິດ. ເນື້ອຫາສາລະ, ຂໍ້ສົມມຸດ ຫຼືຕົວຢ່າງຕ່າງໆຢູ່ໃນບົດສ່ວນຫຼາຍ ຈະຍົກເອົາຢູ່ພາຍໃນພາສາລາວເປັນຫຼັກ.

ເຖິງຢ່າງໃດກໍຕາມ, ການຮຽບຮຽງ ແລະຮີບໂຮມຫຼັກສູດສະບັບນີ້ ມີຫຼາຍຈຸດອາດຈະຍັງບໍ່ແທດເໝາະ ກັບສະພາບການຕົວຈິງ. ສະນັ້ນ, ໃນເວລານຳໃຊ້ ເອກະສານເຫຼັ້ມນີ້ສິດສອນ, ອາຈານຜູ້ສິດສອນຕ້ອງໄດ້ມີຫົວຄິດປະດິດສ້າງ ນຳເອົາບົດຮຽນໃໝ່ໆເຂົ້າມາປະກອບກັບທິດສະດີທີ່ມີ ເພື່ອເຮັດໃຫ້ເນື້ອໃນຂອງບົດມີຄວາມຊັດເຈນຂຶ້ນກວ່າເກົ່າ ແລະແທດເໝາະກັບຄວາມເປັນຈິງໃນແຕ່ລະໄລຍະຂອງການຮຽນ-ການສອນ.

ຫຼັກສູດສະບັບນີ້, ໄດ້ຮຽບຮຽງຂຶ້ນ ເພື່ອສິດສອນເປັນຄວາມຮູ້ພື້ນຖານທາງດ້ານພາສາສາດໃຫ້ແກ່ນັກສຶກສາພາກວິຊາພາສາລາວ-ສື່ສານມວນຊົນ ຫຼືນັກສຶກສາພາກສ່ວນອື່ນທີ່ຮ່ຳຮຽນກ່ຽວກັບພາສາ.

ການຮຽບຮຽງ ແລະຮຽບໂຮມຫຼັກສູດສະບັບນີ້ ອາດຈະຍັງມີຫຼາຍບ່ອນບໍ່ທັນແທດເໝາະ ແລະອາດຈະຍັງມີຫຼາຍບ່ອນຂາດຕົກບົກຜ່ອງ. ສະນັ້ນ, ຂ້າພະເຈົ້າໃນນາມຜູ້ຮຽບຮຽງ ແລະຮຽບໂຮມ ຫວັງຢ່າງຍິ່ງວ່າຈະໄດ້ຮັບການຕຳນິຕິຊົມ, ເພີ່ມເຕີມເນື້ອຫາສາລະໃນທາງສ້ຳສັນຈາກຜູ້ອ່ານ ແລະຜູ້ນຳໃຊ້ ເພື່ອຈະເປັນປະໂຫຍດໃຫ້ແກ່ການດັດແປງ ແກ້ໄຂໃຫ້ດີຂຶ້ນກວ່າເກົ່າໃນຂັ້ນຕໍ່ໄປ.

ວັນທີ 28 ເດືອນ 10 ປີ 2013

ຜູ້ຮຽບຮຽງ

ສົມເພດ ພົມມະວົງສາ

ພາກທີ I
ບາງບັນຫາພື້ນຖານຂອງພາສາສາດ

ບົດທີ ๑
ພາສາ ແລະຄວາມສຳຄັນຂອງພາສາ

๑. ຄວາມຮູ້ທົ່ວໄປກ່ຽວກັບພາສາ

ຕາມປົກກະຕິ, ມະນຸດເຮົາລ້ວນແຕ່ມີຄວາມຮູ້ສຶກນຶກຄິດ ແລະເຂົ້າໃຈສິ່ງແວດລ້ອມອ້ອມຂ້າງ ຂອງຕົນ; ເມື່ອມີໂອກາດມະນຸດກໍຈະນຳເອົາສິ່ງທີ່ຕົນເຂົ້າໃຈ ຫຼືຄວາມ ຮູ້ສຶກນຶກຄິດນັ້ນສະແດງອອກ ຕໍ່ຜູ້ອື່ນ; ພາຫະນະເພື່ອນຳໃຊ້ໃນການສະແດງອອກນັ້ນແມ່ນພາສາ. ພາສາແມ່ນພາຫະນະສຳລັບ ແລກປ່ຽນຄົບຄ້າແນວຄິດອາລົມຈິດລະຫວ່າງຄົນກັບຄົນ. ພວກເຮົາຢາກຮູ້ວ່າຜູ້ໃດຜູ້ໜຶ່ງເປັນແນວໃດ ກໍຕ້ອງເບິ່ງການສະແດງອອກຂອງຄົນຜູ້ນັ້ນ ແລະການສະແດງອອກນັ້ນກໍແມ່ນອາໄສພາສາເປັນຫຼັກ.

ພາຫະນະ ຫຼືສື່ເພື່ອຄວາມເຂົ້າໃຈຂອງຄົນໃນສັງຄົມ, ນອກຈາກພາສາທີ່ໃຊ້ສຽງແລ້ວ ກໍຍັງມີ ສິ່ງອື່ນໆອີກທີ່ສາມາດນຳມາໃຊ້ເປັນສື່ ເພື່ອຄວາມເຂົ້າໃຈໄດ້ ເຊັ່ນ ຕົວ ອັກສອນ ແລະເຄື່ອງໝາຍ ຕ່າງໆເປັນຕົ້ນ. ເຖິງວ່າສິ່ງເຫຼົ່ານີ້ ມີອັນຈຳກັດຫຼາຍດ້ານ, ແຕ່ພວກມັນກໍມີອັນເດັ່ນຢູ່ບ່ອນວ່າມີສ່ວນ ຊ່ວຍໃຫ້ຄົນເຮົາເຂົ້າໃຈກັນໄດ້. ຍ້ອນແນວນັ້ນ, ພວກເຮົາຈຶ່ງສາມາດເຂົ້າໃຈກັນໄດ້ ໂດຍຜ່ານຫຼາຍ ທາງ ເຊັ່ນ ສາຍຕາ, ຫູ ຫຼືການສຳຜັດ.

- ສື່ທີ່ຄົນເຮົາເຂົ້າໃຈກັນໄດ້ ໂດຍຜ່ານສາຍຕາເອີ້ວ່າ "ຈັກຂຸພາສາ"
- ສື່ທີ່ຄົນເຮົາເຂົ້າໃຈກັນໄດ້ ໂດຍຜ່ານຫູເອີ້ວ່າ "ໂສຕະພາສາ"
- ສື່ທີ່ຄົນເຮົາເຂົ້າໃຈກັນໄດ້ ໂດຍຜ່ານການສຳຜັດເອີ້ວ່າ "ສຳຜັດພາສາ"

ໃນປັດຈຸບັນ, ວົງການພາສາສາດໄດ້ເລັ່ງໃສ່ການຄົ້ນຄວ້າພາສາ ທີ່ໃຊ້ສຽງເປັນຈຸດໜັກ. ເມື່ອ ເວົ້າເຖິງພາສາ, ເວລາໃດພາສາທີ່ໃຊ້ສຽງກໍອຸດົມສົມບູນກວ່າ. ຍ້ອນແນວນັ້ນ, ເພິ່ນຈຶ່ງເວົ້າເຖິງມັນ ເປັນອັນດັບທຳອິດ, ຫາກບໍ່ມີສຽງ ກໍຈະບໍ່ມີພາສາ, ເພາະບໍ່ມີພາສາໃດໃນໂລກນີ້ເປັນພາສາ "ມິດ ງຽບ" ສ່ວນວ່າສື່ຄວາມເຂົ້າໃຈຊະນິດອື່ນ ພຽງ ແຕ່ເປັນສ່ວນປະກອບ ເພື່ອເຮັດໃຫ້ພາສາທີ່ໃຊ້ສຽງ ນັ້ນມີສີສັນ ຫຼືເພີ່ມຄວາມມີຊີວິດຊີວາຂຶ້ນຕື່ມ.

๘. ພາສາສາດ ແລະການຮຽນຮູ້ພາສາ

ພາສາສາດ ແມ່ນຂະແໜງວິທະຍາສາດທີ່ຄົ້ນຄວ້າປາກົດການຕ່າງໆໃນພາສາ, ເປົ້າໝາຍ ການຄົ້ນຄວ້າຂອງພາສາສາດແມ່ນພາສາ ເມື່ອເວົ້າເຖິງພາສາສາດ, ມັນບໍ່ແມ່ນເລື່ອງງ່າຍດາຍຄືກັບ ການຮຽນພາສາຕ່າງປະເທດ ຜູ້ໃດຜູ້ໜຶ່ງເຖິງວ່າຈະຮູ້ພາສາຕ່າງປະເທດຫຼາຍປານໃດກໍຕາມ ກໍບໍ່ສາ ມາດເປັນນັກພາສາສາດໄດ້; ກົງກັນຂ້າມ, ຮູ້ແຕ່ພາສາແມ່ເກີດຂອງຕົນເອງກໍສາມາດເປັນນັກພາສາ ສາດໄດ້.

ນັກພາສາສາດຈະຕ້ອງເປັນຜູ້ທີ່ຮັບຮູ້ ແລະເຂົ້າໃຈພາສາຢ່າງເລິກເຊິ່ງ; ເພາະວ່າພາສາສາດ ກໍແມ່ນວິທະຍາສາດອັນໜຶ່ງ. ແຕ່ບັນຫາມີຢູ່ວ່າ ພາສາສາດຂຶ້ນກັບຂະແໜງວິທະຍາສາດທຳມະຊາດ ຫຼືສັງຄົມ?.

ຕໍ່ບັນຫາຂ້າງເທິງນີ້, ແຕ່ກ່ອນມາຮອດປັດຈຸບັນ ກໍຍັງມີຫຼາຍທັດສະນະທີ່ແຕກຕ່າງກັນ ໃນລະຫວ່າງກາງສະຕະວັດກ່ອນ, ມີນັກທິດສະດີບາງທ່ານ ທີ່ໄປຕາມລັດທິທຳມະຊາດຂອງເອີລົບຕາເວັນຕົກ ເຊັ່ນ ອາວກຸດສ໌ ສະລາຍເຊີ(August Schlicher) ແລະມາກມູນເລີ(Max Muller) ໄດ້ອີງໃສ່ທິດສະດີວິວັດທະນາການ ການຂະຫຍາຍຂອງດັກວິນຢູ່ໃນຊີວະສາດ ເພື່ອມາອະທິບາຍປາກົດການຕ່າງໆຂອງພາສາ. ເຂົາເຈົ້າເວົ້າວ່າ ພາສາບໍ່ຕ່າງຫຍັງກັບ"ສິ່ງວັດຖຸໃນທຳມະຊາດ" ມັນຕ້ອງຜ່ານວິວັດການກຳເນີດ, ຂະຫຍາຍຕົວ ແລະຕາຍໄປໃນທີ່ສຸດ.

ຕາມຄຳເຫັນຂອງທິດສະດີຂ້າງເທິງ, ເຂົາເຈົ້າຢາກຈັດພາສາເຂົ້າໃນຂະແໜງວິທະຍາສາດທຳມະຊາດ ແມ່ນຢູ່ວ່າເມື່ອເວົ້າເຖິງພາສາ ຫຼືຄວາມເວົ້າຂອງມະນຸດ, ຈະຕ້ອງໄດ້ເວົ້າເຖິງອະໄວຍະວະຜະລິດສຽງ ເຊິ່ງພົວພັນເຖິງວິຊາຊີວະສາດ ທີ່ນອນຢູ່ໃນວິທະຍາສາດທຳມະຊາດ ແຕ່ກໍບໍ່ຄວນເຫັນແກ່ຈຸດທີ່ພາສາພົວພັນກັບຂະແໜງວິທະຍາສາດທຳມະຊາດ ແລ້ວຈັດພາສາເຂົ້າຢູ່ໃນຂະແໜງວິທະຍາສາດທຳມະຊາດ.

ໃນຕົວຈິງ, ພາສາບໍ່ແມ່ນປາກົດການຂອງທຳມະຊາດ, ມັນແມ່ນປາກົດການຂອງສັງຄົມ. ພາສາບໍ່ເຕີບໃຫຍ່ຂະຫຍາຍຕົວຄືກັບຮ່າງກາຍທີ່ມີຊີວິດ; ມັນກຳເນີດ, ຄົງຕົວ ແລະຂະຫຍາຍຕົວພ້ອມກັບສັງຄົມ. ທ່ານສະຕາລິນເວົ້າກ່ຽວກັບບັນຫານີ້ວ່າ: "ນອກສັງຄົມບໍ່ມີພາສາ; ຄົນເຮົາມີແຕ່ເຂົ້າໃຈພາສາ ແລະການຂະຫຍາຍຕົວຂອງມັນ ໃນເວລາຄົ້ນຄວ້າມັນກັບປະຫວັດສາດສັງຄົມ, ປະຫວັດສາດຂອງປະຊາຊົນຜູ້ໃຫ້ກຳເນີດ, ນຳໃຊ້ ແລະປົກປັກຮັກສາພາສານັ້ນ".

ຄວາມຈິງພາສາສ່ອງແສງລະດັບການຂະຫຍາຍຕົວຂອງສັງຄົມ ເຊັ່ນ ຊີວິດການເປັນຢູ່, ຮີດຄອງປະເພນີ ແລະວັດທະນະທຳເປັນຕົ້ນ. ຍ້ອນແນວນັ້ນ, ວິຊາພາສາສາດບໍ່ສະເພາະແຕ່ຈະຕິດພັນກັບວັນນະຄະດີ, ມັນຍັງຕິດພັນກັບວິຊາປະຫວັດສາດ, ບູຮານຄະດີ, ຊົນຊາດວິທະຍາ ແລະວິຊາອື່ນໆອີກດ້ວຍ.

ຕໍ່ກັບນັກພາສາສາດ, ຕ້ອງຊອກຫາສິ່ງທີ່ຖືກຕ້ອງ ແລະງາມໃນພາສາ ແລ້ວດັດແປງຢ່າງມີຫົວຄິດປະດິດສ້າງ; ບໍ່ຄວນຈະເຮັດຕາມໃຈຕົນເອງ ເຊັ່ນ ສ້າງກົດຫຼັກໃດໜຶ່ງຂຶ້ນ ແລ້ວໃຫ້ທຸກຄົນປະຕິບັດຕາມ. ພ້ອມກັນນີ້, ນັກພາສາສາດຍັງຕ້ອງໄດ້ຄົ້ນຄວ້າດັດແປງພາສາຂຽນແຫ່ງຊາດໃຫ້ເປັນແບບແຜນຫຼືມາດຕະຖານ. ສະເພາະພາສາລາວພວກເຮົາ, ຄວາມຮຽກຮ້ອງອັນຮີບດ່ວນແມ່ນຄວາມເປັນເອກະພາບໃນການຜັນສຽງ ແລະຫຼັກຂຽນທວາຍ, ໂດຍສະເພາະກໍລະນີທັບສັບ(ການຂຽນຕາມສຽງຂອງຄຳທີ່ມາຈາກພາສາອື່ນ).

ການຮຽນຮູ້ພາສາ, ໃນຕົວຈິງກໍແມ່ນການສານຕໍ່ຄວາມຮູ້ດ້ານວັດທະນະທຳອີກຢ່າງໜຶ່ງ ໂດຍສະເພາະແມ່ນວັດທະນະທຳໃນການນຳໃຊ້ພາສາ. ຕໍ່ກັບບັນຫານນີ້ ພາສາລາວພວກເຮົາມີຄຳສັບຢັ້ງຢືນຈະແຈ້ງທີ່ສຸດ ເພາະວ່າພວກເຮົາຈະເອົາຖ້ອຍຄຳສຳນວນ ທີ່ ໃຊ້ກັບໝູ່ຄູ່ຂອງພວກເຮົາໄປໃຊ້ກັບຜູ້ທີ່ເຮົາເຄົາລົບນັບຖືບໍ່ໄດ້ເດັດຂາດ. ເມື່ອໃຊ້ຄຳແທນນາມ, ພວກເຮົາຈະໃຊ້ຄຳວ່າ"ຂ້ອຍ" ແທນຕົວ

ເຮົາເອງບໍ່ໄດ້, ຫາກຜູ້ທີ່ເຮົາເວົ້ານຳນັ້ນເປັນຜູ້ຊົ່ງຄຸນວຸດທິ ຫຼືມີຖານະຕຳແໜ່ງສູງ.

ຮຽນພາສານັ້ນກໍເປັນການປະກອບສ່ວນຢ່າງໜຶ່ງ ເພື່ອເຮັດໃຫ້ພາສາແຫ່ງຊາດເປັນເອກະພາບ ຫາກວ່າຄົນໃນຊາດຮຽນຮູ້ ແລະເຂົ້າໃຈພາສາແຫ່ງຊາດຢ່າງເລິກເຊິ່ງ ຕາມຫຼັກທີ່ໄດ້ກຳນົດແລ້ວ ກໍ ຈະເຮັດໃຫ້ການນຳໃຊ້ພາສາເປັນເອກະພາບກັນໃນທົ່ວປະເທດ.

๓. ຂະແໜງຕ່າງໆໃນພາສາສາດ

๓.๑ ອັກຂະຫຼວິທະຍາ

ອັກຂະຫຼະວິທະຍາ ແມ່ນວິຊາທີ່ຄົ້ນຄວ້າກ່ຽວກັບລະບົບສຽງຂອງພາສາ. ການນຳສຽງຢູ່ໃນບັນ ດາຫົວໜ່ວຍທີ່ມີຄວາມໝາຍຂອງພາສາ ການຜັນປ່ຽນຂອງສຽງພາສາຢູ່ໃນວິວັດປະຫວັດສາດ. ເພິ່ນ ຄົ້ນຄວ້າອັກຂະຫຼະໃນຫຼາຍດ້ານຕ່າງກັນ ເຊັ່ນ ດ້ານຟິສິກສາດ, ດ້ານສະລິລະສາດ ແລະດ້ານສັງ ຄົມ.

๓.๘ ວັດຈະນາວິທະຍາ

ວັດຈະນາວິທະຍາ ແມ່ນວິຊາທີ່ຄົ້ນຄວ້າກ່ຽວກັບປະມວນສັບ ຫຼື ຫົວໜ່ວຍທີ່ເທົ່າທຽມກັບສັບ. ໜ້າທີ່ຕົ້ນຕໍຂອງວັດຈະນາວິທະຍາ ແມ່ນຄົ້ນຄວ້າຄັງສັບ(ສາງຄຳສັບ) ຂອງພາສາ, ອະທິບາຍ ແລະ ວາດພາບຄວາມໝາຍຂອງແຕ່ລະຫົວໜ່ວຍນັ້ນໆ. ເພິ່ນໄດ້ແບ່ງວັດຈະນາວິທະຍາອອກເປັນຫຼາຍຂະ ແໜງນ້ອຍຕື່ມອີກ ຄື ວິຊາຄວາມໝາຍ, ວິຊາເຄົ້າສັບ(ນິລຸດຕິສາດ) ແລະວິຊາສຳນວນ.

๓.๓ ໄວຍາກອນວິທະຍາ

ໄວຍາກອນວິທະຍາ ແມ່ນວິຊາທີ່ຄົ້ນຄວ້າກ່ຽວກັບຫຼັກການເຄື່ອນໄຫວຂອງບັນດາຫົວໜ່ວຍພາ ສາທັງໝົດ ທີ່ມີຢູ່ໃນໂຄງສ້າງຂອງພາສາ ຫຼືເວົ້າວ່າໄວຍາກອນວິທະຍາ ແມ່ນວິຊາຄົ້ນຄວ້າລະບຽບ ການເຄື່ອນໄຫວ ແລະການນຳໃຊ້ພາສາທັງໝົດ. ໄວຍາກອນວິທະຍາມີ ๘ ພາກສ່ວນ ຄື ວະຈີວິ ພາກ ແລະວາກະຍະສຳພັນ.

๓.๔ ສັນທະສິນສາດ ภาษาศาสตร์

ສັນທະສິນສາດຂະແໜງນີ້ ມີໜ້າທີ່ຄົ້ນຄວ້າກ່ຽວກັບວາດເວົ້າ, ວາດຂຽນຢູ່ໃນສະພາວະທີ່ແຕກ ຕ່າງກັນ ເຊັ່ນ ວາດເວົ້າ, ວາດຂຽນຢູ່ໃນຂົງເຂດວິທະຍາສາດ, ການເມືອງ, ສິລະປະ ແລະວັດທະ ນະທຳເປັນຕົ້ນ. ນອກຈາກນີ້ ສັນທະສິນສາດຍັງຄົ້ນຄວ້າກ່ຽວກັບການສະແດງອາລົມຈິດ ໂດຍຜ່ານ ພາສາຕື່ມອີກ ເຊັ່ນ ການໃຊ້ສຽງ, ຄຳສັບ ຫຼືປະໂຫຍກ ໃຫ້ເໝາະສົມກັບສະພາວະຄວາມເປັນຈິງທີ່ ຕ້ອງການສະແດງອອກ. ເວົ້າອີກຢ່າງໜຶ່ງ, ສັນທະສິນສາດ ແມ່ນຄົ້ນຄວ້າກ່ຽວກັບການນຳໃຊ້ພາສາ ເພື່ອໃຫ້ຮັບປະກັນສິດທິຜົນສູງສຸດ ນັບທັງຄວາມຊັດເຈນ ແລະຄວາມນິ້ມນວນມ່ວນຫູ.

๔. ຄວາມສຳຄັນຂອງພາສາ

๔.๑ ພາສາກັບຊີວິດການເປັນຢູ່ຂອງສັງຄົມມະນຸດ

ໃນສັງຄົມ, ການແລກປ່ຽນຄວາມຄິດລະຫວ່າງຄົນກັບຄົນ ແມ່ນຄວາມຮຽກຮ້ອງຕ້ອງການອັນ ຈຳເປັນເຊິ່ງຂາດບໍ່ໄດ້. ຫາກບໍ່ມີການແລກປ່ຽນຄວາມຄິດຄວາມເຫັນແລ້ວ ການເຄື່ອນໄຫວທຸກຢ່າງ

ໃນສັງຄົມກໍຈະຢຸດຊະງັກ. ທຸກຂອບເຂດການເຄື່ອນໄຫວຂອງຄົນເຮົາ ຕ້ອງ ໃຊ້ພາສາເປັນສື່, ບໍ່ໃຊ້ພາສາກໍບໍ່ສາມາດຈະມີຄວາມເຂົ້າໃຈກັນໄດ້; ພວກເຮົາມີຄວາມຄິດຄວາມເຂົ້າໃຈແນວໃດ ກໍ ຈະບໍ່ມີໃຜຮູ້ ຫາກບໍ່ສະແດງອອກ, ສື່ທີ່ພວກເຮົາໃຊ້ເພື່ອສະແດງອອກນັ້ນແມ່ນພາສາ.

ພາສາມີຄວາມສຳຄັນຕໍ່ກັບຊີວິດການເປັນຢູ່ຂອງມະນຸດຫຼາຍທີ່ສຸດ ແລະຢູ່ບົນໜ້າໂລກນີ້ ກໍ ມີຫຼາຍຊາດຫຼາຍພາສາ. ການເປັນຢູ່ແຕ່ລະມື້, ຄົນຜູ້ໜຶ່ງຈະຕ້ອງໄດ້ໃຊ້ພາສາໃດໜຶ່ງ ເພື່ອເປັນພາຫະນະແລກປ່ຽນຄົບຄ້າສະມາຄົມກັບຄົນອື່ນ. ສະເພາະຜູ້ທີ່ຮູ້ພາສາຕ່າງປະເທດຫຼາຍພາສາ, ນອກຈາກໃຊ້ເປັນພາຫະນະ ຫຼືສື່ຕົ້ນຕໍແລ້ວ(ພາສາແມ່) ຍັງໄດ້ໃຊ້ພາສາອື່ນເປັນສື່ອີກດ້ວຍ.

๔.๘ ພາສາກັບການຕໍ່ສູ້ເພື່ອຂະຫຍາຍສັງຄົມ

ໃນສັງຄົມ, ຄົນເຮົາບໍ່ອາດດຳລົງຊີວິດຢູ່ຢ່າງໂດດດ່ຽວໄດ້; ຍ້ອນເງື່ອນໄຂສະພາບແວດລ້ອມ, ນັບແຕ່ຊາວບູຮານ ກໍ ຕ້ອງໄດ້ດຳລົງຊີວິດຮ່ວມກັນ, ເຂົາເຈົ້າໄດ້ໂຮມແຮງໂຮມໃຈກັນ ເພື່ອຕໍ່ສູ້ຕ້ານກັບໄພທຳມະຊາດ, ເພື່ອຍາດແຍ່ງ ແລະປົກປັກຮັກສາຊີວິດ ຕະຫຼອດເຖິງຊັບສົມບັດຂອງເຂົາເຈົ້າ.

ທຸກການເຄື່ອນໄຫວຂອງມະນຸດ, ພາສາມີບົດບາດສຳຄັນທີ່ສຸດ; ຖ້າບໍ່ມີພາສາກໍຈະບໍ່ມີການແລກປ່ຽນຄວາມຄິດຄວາມເຫັນນຳກັນ ແລະເມື່ອບໍ່ມີການແລກປ່ຽນຄວາມຄິດຄວາມເຫັນນຳກັນແລ້ວ ກໍຈະກ້າວໄປເຖິງບ່ອນບໍ່ມີຄວາມສາມາດຜະລິດວັດຖຸສິ່ງຂອງອອກມາໄດ້. ເມື່ອເປັນແນວນັ້ນ ສັງຄົມ ກໍຈະບໍ່ຄົງຕົວ, ມັນຈະພັງທະລາຍໄປໃນທີ່ສຸດ. ຍ້ອນມີພາສາ, ຈຶ່ງຢູ່ຮ່ວມກັນໃນສັງຄົມໄດ້ຢ່າງສະດວກສະບາຍ. ພາສາໄດ້ປະກອບສ່ວນອັນສຳຄັນເຂົ້າໃນວຽກງານເພີ່ມພູນຜະລິດຜົນ ແລະຕໍ່ສູ້ເພື່ອໃຫ້ສັງຄົມຂະຫຍາຍຕົວ. ທ່ານ ສະຕາລິນ ໄດ້ເວົ້າກ່ຽວກັບບັນຫານີ້ວ່າ: "ພາສາກໍແມ່ນພາຫະນະອັນໜຶ່ງ ສຳລັບຕໍ່ສູ້ເພື່ອຂະຫຍາຍສັງຄົມ".

ການຕໍ່ສູ້ໃນສັງຄົມ ກໍ ແມ່ນເງື່ອນໄຂອັນໜຶ່ງທີ່ຊຸກດັນໃຫ້ສັງຄົມຂະຫຍາຍຕົວ. ທ່ານ ມາກອັງແກນ ໄດ້ເວົ້າກ່ຽວກັບບັນຫານີ້ວ່າ "ປະຫວັດສາດຂອງສັງຄົມມະນຸດຕັ້ງແຕ່ກ່ອນຈົນເຖິງປັດຈະບັນແມ່ນປະຫວັດສາດແຫ່ງການຕໍ່ສູ້" ຈາກຄຳເວົ້ານີ້, ພວກເຮົາຈະເຫັນວ່າ ການຕໍ່ສູ້ແມ່ນສິ່ງທີ່ດຳເນີນຢູ່ຕະຫຼອດ, ແຕ່ກໍຄວນເຂົ້າໃຈຕື່ມອີກວ່າ ຮູບການຂອງການຕໍ່ສູ້ມີຫຼາຍດ້ານ ເຊັ່ນ ການ ຕໍ່ສູ້ດ້ານເສດຖະກິດ, ການເມືອງ ແລະແນວຄິດເປັນຕົ້ນ. ບັນດາຮູບການຂອງການຕໍ່ສູ້ນີ້ ມີສາຍພົວພັນກັນຢ່າງສະໜິດແໜ້ນ. ໃນນັ້ນພາສາຊ້ຳພັດມີບົດບາດສຳຄັນເປັນພິເສດຕໍ່ກັບການຕໍ່ສູ້ດ้านแนวคิด.

ຄຳຖາມ

๑. ພາສາໝາຍເຖິງຫຍັງ? ເປັນຫຍັງພວກເຮົາຈຶ່ງຕ້ອງໄດ້ໃຊ້ພາສາ? ສື່ທີ່ສາມາດໃຫ້ຄົນເຮົາເຂົ້າໃຈມີຫຍັງແດ່?.

๒. ພາສາສາດແມ່ນຫຍັງ? ເປັນຫຍັງພວກເຮົາຈຶ່ງຕ້ອງຮຽນພາສາ ໂດຍສະເພາະແມ່ນພາສາແມ່?

๓. ເພິ່ນແບ່ງພາສາສາດອອກເປັນຈັກຂະແໜງ? ແຕ່ລະຂະແໜງນັ້ນຄົ້ນຄວ້າກ່ຽວກັບຫຍັງ?

๔. ພາສາມີຄວາມໝາຍສຳຄັນແນວໃດ? (ຈົ່ງຍົກປະສົບການດ้านพาสาของตนเองประกอบที่ดีสะดี).

ບົດທີ ๔
ທາດແທ້ ແລະພາລະກຳຂອງພາສາ

I. ທາດແທ້ຂອງພາສາ

๑. ພາສາບໍ່ແມ່ນປາກົດການຂອງທຳມະຊາດ

ເມື່ອເວົ້າເຖິງປາກົດການຂອງທຳມະຊາດແລ້ວ, ພວກເຮົາລ້ວນແຕ່ເຂົ້າໃຈນຳກັນວ່າ ມີ ການເກີດ, ມີການເຕີບໃຫຍ່ຂະຫຍາຍຕົວ ແລະຕາຍໄປ. ວິວັດອັນນີ້ມັນໄດ້ກາຍເປັນສ່ວນໜຶ່ງ ເຊິ່ງບໍ່ຂຶ້ນກັບໃຈມັກຂອງຜູ້ໃດຜູ້ໜຶ່ງ ແລະກໍບໍ່ມີຜູ້ໃດຈະສະກັດກັ້ນມັນໄດ້.

ພາສາກໍເຄີຍຜ່ານວິວັດຂອງການກຳເນີດ, ຂະຫຍາຍຕົວ ແລະຕາຍໄປຄືກັບປາກົດການຂອງທຳມະຊາດ. ຍ້ອນແນວນັ້ນ, ບັນຫາຈຶ່ງມີຢູ່ວ່າ ພາສາມັນ ແມ່ນປາກົດການຂອງທຳມະຊາດ ຫຼືສັງຄົມ? ໃນການແກ້ໄຂບັນຫານີ້ ໄດ້ເກີດມີສອງທັດສະນະຂອງສອງຝ່າຍກົງກັນຂ້າມກັນ ຄືທັດສະ ນະທີ່ຜິດພາດ ແລະທັດສະນະທີ່ຖືກຕ້ອງ.

๑.๑ ທັດສະນະທີ່ຜິດພາດ

ມາຮອດກາງສະຕະວັດທີ XIX ວິທະຍາສາດທຳມະຊາດ ໄດ້ຂະຫຍາຍຕົວຂຶ້ນສູ່ລະດັບສູງ ແບບກະໂດດຂັ້ນ, ໂດຍສະເພາະແມ່ນທິດສະດີ ວ່າດ້ວຍການຜັນປ່ຽນດ້ານຊີວະສາດຂອງທ່ານດັກ ວິນ(Charles Darwin 1809-1882) ໄດ້ເຮັດໃຫ້ນັກພາສາສາດຫຼາຍຄົນຢັ້ງຢືນວ່າ ພາສາ ກໍແມ່ນປາ ກົດການທຳມະຊາດອັນໜຶ່ງ. ເຂົາເຈົ້າໄດ້ໃຫ້ຄວາມເຫັນວ່າ:

- ພາສາກໍຄືຮ່າງກາຍທີ່ມີຊີວິດອັນໜຶ່ງ ເຊິ່ງຜ່ານວິວັດການກຳເນີດ, ແລະຕາຍໄປຄືກັນກັບສິ່ງ ທີ່ມີຊີວິດທັ້ງປວງຄືກັນ ເຊັ່ນ ຄົນ, ສັດ, ຕົ້ນໄມ້ໃບຫຍ້າ ແລະອື່ນໆ. ຖ້າຫາກວ່າພາສາມີຮ່າງກາຍທີ່ ມີຊີວິດ ແນ່ນອນວ່າມັນຕ້ອງການມີການສືບເຊື້ອ ໝາຍຄວາມວ່າ ພາສາກໍບໍ່ຕ່າງຫຍັງກັບເຊື້ອຊາດ ຜິວພັນ ເຊິ່ງມີການສືບເຊື້ອ. ພໍ່ແມ່ເປັນແນວໃດລູກເກີດມາກໍເປັນແນວນັ້ນ. ຄົນເຮົາເມື່ອເກີດມາກໍ ຕ້ອງຮູ້ກິນ ແລະໄວຫຼືຊ້າຈະຮູ້ຄານ, ຮູ້ຍ່າງ ແລະຮູ້ປາກ. ພໍ່ແມ່ນມີຜິວພັນແນວໃດເມື່ອລູກເກີດມາ ກໍຈະມີຜິວພັນແນວນັ້ນ ແລະເວົ້າພາສານັ້ນ ໂດຍບໍ່ໄດ້ສັ່ງສອນແຕ່ປະການໃດ.

- ເດັກກໍມີພາສາ: ເດັກນ້ອຍທີ່ຫາກໍຮຽນປາກ ຈະແມ່ນເດັກຊາດໃດ ກໍລ້ວນແຕ່ມັກເວົ້າວ່າ ບາໆ, ບູໆ ຫຼືອື່ນໆ. ປາກົດການນີ້ ກໍຖືວ່າແມ່ນພາສາຄືກັນ ແລະກໍສາມາດສ້າງພາສາເດັກລວມໃຫ້ ແກ່ພາສານາໆຊາດໄດ້.

- ສັດກໍມີພາສາ: ນອກຈາກຄົນແລ້ວ ສັດກໍມີພາສາຄືກັນ, ເພາະວ່າເວລາແມ່ໄກ່ຕ້ອງການ ຢາກໃຫ້ລູກມັນມາຫາ ມັນກໍໃຊ້ສັນຍານຊະນິດໜຶ່ງໃຫ້ລູກຮູ້ ແລະເມື່ອມີໄພອັນຕະລາຍມັນຈະໃຊ້ສັນ ຍານແບບອື່ນອີກ ເພື່ອບອກໃຫ້ລູກມັນລີ້ໄພ ຫຼືປາກົດການຂອງສັດຊະນິດອື່ນໆ. ການເຄື່ອນໄຫວ ອັນນີ້ ກໍບໍ່ຕ່າງຫຍັງກັບສຽງຮ້ອງບອກກັນຂອງຄົນເຮົາໃນເວລາມີເຫດການຕ່າງໆ. ສະນັ້ນ, ສັດກໍມີ ພາສາຄືກັບຄົນ.

ທິດສະດີຕ່າງໆທີ່ຍົກມາຂ້າງເທິງນີ້ ເຖິງວ່າຈະມີຄວາມແຕກຕ່າງກັນດ້ານເນື້ອໃນ, ແຕ່ທັງໝົດນັ້ນແມ່ນມີຄວາມເປັນເອກະພາບກັນຢູ່ບ່ອນວ່າ, ພວກເຮົາຢາກຢັ້ງຢືນວ່າ ພາສາກໍແມ່ນປາກົດການທຳມະຊາດອັນໜຶ່ງ.

๑.๘ ທິດສະດີທີ່ຖືກຕ້ອງ

-ພາສາບໍ່ຄືຮ່າງກາຍທີ່ມີຊີວິດ, ຈິງຢູ່ວ່າພາສາໄດ້ຜ່ານການກຳເນີດ, ເຕີບໃຫຍ່ຂະຫຍາຍຕົວ, ສູນເສຍ ແລະຕາຍໄປແທ້, ແຕ່ວິວັດການອັນນີ້ ມັນ ຂຶ້ນກັບສັງຄົມເປັນຜູ້ຕັດສິນ. ສັງຄົມຮຽກຮ້ອງຕ້ອງການມັນ ມັນ ກໍຈະກຳເນີດ, ສັງຄົງນຳໃຊ້ມັນ ມັນ ກໍຂະຫຍາຍຕົວ ແລະໃນເມື່ອສັງຄົມບໍ່ຕ້ອງການ, ມັນຈະຄ່ອຍສູນເສຍ ແລະຕາຍໄປ. ວິວັດທະນາການອັນນີ້ ມັນຕ່າງຈາກວິວັດທະນາການກຳເນີດ, ຂະຫຍາຍຕົວ ແລະສູນເສຍໄປຂອງປາກົດການທຳມະຊາດ ເພາະປາກົດການທຳມະຊາດມັນໄດ້ກາຍເປັນປາກົດການອັນໜຶ່ງ ເຊິ່ງບໍ່ຂຶ້ນກັບຜູ້ໃດ. ສ່ວນວ່າພາສາມັນພັດຂຶ້ນກັບສັງຄົມ; ມັນຈະກຳເນີດຫຼືບໍ່ກຳເນີດ, ຈະຂະຫຍາຍ ຫຼື ບໍ່ຂະຫຍາຍ, ຈະສູນເສຍ ຫຼື ບໍ່ສູນເສຍ ແມ່ນຂຶ້ນກັບສັງຄົມທັງໝົດ. ສະນັ້ນ, ຈິ່ງເວົ້າໄດ້ວ່າ ພາສາແມ່ນປາກົດການຂອງສັງຄົມ.

- ພາສາບໍ່ມີລັກສະນະສືບເຊື້ອ, ການຮູ້ພາສາບໍ່ຄືກັບການຮູ້ກິນ, ຮູ້ໄປມາຂອງຄົນເຮົາ ເພາະວ່າຄົນເຮົາເກີດມາແລ້ວ ອາດຈະຮູ້ກິນ, ຮູ້ຄານ, ຮູ້ເຄື່ອນໄຫວໄປມາໄດ້, ແຕ່ເດັດຂາດບໍ່ຮູ້ພາສາ, ຖ້າຫາກວ່າບໍ່ຮູ້ສິດສອນຈາກພໍ່ແມ່ ຫຼືສັງຄົມ. ພາສາບໍ່ຄືກັບເຊື້ອຊາດ, ຜິວພັນຂອງຄົນເຮົາ, ເຖິງວ່າພໍ່ແມ່ເປັນຄົນຊົນຊາດໜຶ່ງ ເມື່ອລູກເກີດມາສອນພາສາໃດໃຫ້ມັນ ມັນ ກໍຈະຮູ້ພາສານັ້ນ ທັງ ທີ່ວ່າຜິວພັນໜ້າຕາຄືພໍ່ແມ່ເກີດຂອງມັນຢູ່. ຫາກວ່າພາສາມີລັກສະນະສືບເຊື້ອແລ້ວ ພາສາ ໃດກໍຈະເປັນຂອງຄົນໃນຊາດນັ້ນເທົ່ານັ້ນ, ຄົນຊາດອື່ນຈະບໍ່ມີຄວາມສາມາດຮຽນຮູ້ພາສາຂອງຊາດນັ້ນໄດ້.

- ເດັກບໍ່ມີພາສາ ສຽງເດັກທີ່ຫາກໍ່ຮຽນປາກກັບພາສາບໍ່ແມ່ນອັນດຽວກັນ, ເພາະມັນຍັງບໍ່ທັນມີຄວາມໝາຍຫຍັງໝົດ ແລະບໍ່ມີໃຜເຂົ້າໃຈສຽງນັ້ນໄດ້. ຄວາມຈິງແລ້ວ, ເດັກຊາດໃດກໍຕາມເມື່ອເລີ່ມຮຽນປາກ ລ້ວນ ແຕ່ເປັ່ງສຽງອອກຄ້າຍຄືກັນວ່າ ບາໆ, ມາໆ, ປາໆ... ບັນຫານີ້ມັນຂຶ້ນກັບການປະກອບສ້າງທາງດ້ານສະລິລະສາດຂອງອັກຂະຫຼະ ເພາະວ່າສຽງໃດທີ່ໃຊ້ຮີມສົບຄູ່ ເດັກຈະເວົ້າງ່າຍກວ່າໝູ່ ແລະສຽງທີ່ກະຈາຍອອກນັ້ນ ກໍ ມີລັກສະນະທຳມະຊາດ ຫຼືສັນຊາດຍານຫຼາຍກວ່າ. ສະນັ້ນ ຈິ່ງເວົ້າວ່າສຽງເດັກທີ່ຫາກໍຮຽນປາກບໍ່ແມ່ນພາສາ ແລະກໍບໍ່ສາມາດສ້າງພາສາເດັກລວມໃຫ້ແກ່ນໆ ຊາດໄດ້.

- ສັດບໍ່ມີພາສາ ສຽງສັດບໍ່ແມ່ນພາສາ, ສັດບໍ່ມີການຄົ້ນຄິດ ແລະມັນກໍອາດມີພາສາໄດ້, ແຕ່ວ່າໃນຕົວຈິງນັ້ນ, ມີບາງກໍລະນີສັດມັນກໍຮູ້ໃຊ້ສຽງສັນຍານອັນໃດອັນໜຶ່ງ ເຊັ່ນວ່າ ແມ່ໄກ່ໃຊ້ສຽງສັນຍານເອີ້ນລູກ, ໝາເມື່ອມັນດີໃຈ ຫຼືເຈັບປວດ ມັນ ກໍຮູ້ເປັ່ງສຽງຢ່າງໃດຢ່າງໜຶ່ງອອກມາ ແລະອື່ນໆ. ທັງໝົດປາກົດການຂ້າງເທິງນີ້ ແມ່ນມີລັກສະນະສືບເຊື້ອທີ່ເໝາະສົມກັບສະພາບແວດລ້ອມ ແລ້ວປາກົດຂຶ້ນເທົ່ານັ້ນ, ນີ້ແມ່ນເຫດການທຳມະດາທີ່ສຸດ. ຍັງມີສັດບາງຈຳພວກອາດຮູ້ຈັກສັນຍານສຽງບາງຢ່າງ ເຊັ່ນ ງົວ , ຄວາຍ, ຊ້າງ, ມ້າ... ມັນອາດຈັກຮູ້ຄຳວ່າ ຮາມ, ຮູຍ, ເລົ່າ... ນອກຈາກນີ້, ກໍ ຍັງມີສັດບາງຊະນິດມີຄວາມສາມາດຮູ້ສອນສຽງຄົນ ຫຼືເຮັດຕາມຄຳສັ່ງຂອງຄົນ . ປາກົດການທັງໝົດ

ເຫຼົ່ານີ້ ລ້ວນແຕ່ນອນໃນຂອບເຂດລະບົບສັນຍານທີໜຶ່ງ ເຊິ່ງມີລັກສະນະສືບເຊື້ອເທົ່ານັ້ນ. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ສັດບໍ່ມີພາສາ ແລະສຽງຂອງສັດກໍບໍ່ແມ່ນພາສາ.

๘. ພາສາແມ່ນປາກົດການສັງຄົມແບບພິເສດ

ເມື່ອເວົ້າເຖິງພາສາ ກໍຕ້ອງເວົ້າເຖິງສັງຄົມ , ພາສາມີລັກສະນະສັງຄົມສູງ, ມັນຕິດພັນກັບສັງຄົມແລະຂະຫຍາຍຕົວພ້ອມກັບສັງຄົມ. ທ່ານສະຕາລິນເວົ້າວ່າ: ພາສາແມ່ນພາຫະນະອັນໜຶ່ງ ໂດຍອາໄສອັນນັ້ນ ເພື່ອຄົບຄ້າສະມາຄົມແລກປ່ຽນຄວາມຄິດຄວາມເຫັນນຳກັນ ເພື່ອນຳໄປເຖິງບ່ອນເຂົ້າໃຈເຊິ່ງກັນແລະກັນ ລະຫວ່າງຄົນກັບຄົນ ແລະຢູ່ນອກສັງຄົມແມ່ນບໍ່ມີພາສາ. ສະນັ້ນພາສາຈຶ່ງແມ່ນປາກົດການຂອງສັງຄົມ.

ລັດທິມາກ-ເລນິນ ໄດ້ແບ່ງປາກົດການຂອງສັງຄົມອອກເປັນ ๔ ພາກສ່ວນ ຄືໂຄງບົນ ແລະ ໂຄງລ່າງ. ໂຄງລ່າງກວມເອົາບັນດາພື້ນຖານເສດກິດແລະສາຍພົວພັນການຜະລິດທັງໝົດໃນສັງຄົມ ເຊັ່ນ ການພົວພັນລະຫວ່າງຄົນກັບເຄື່ອງມືການຜະລິດ, ຄົນກັບເປົ້າໝາຍການຜະລິດ ແລະຄົນກັບຄົນທີ່ຢູ່ໃນການຜະລິດດັ່ງນີ້ ເປັນຕົ້ນ. ສ່ວນໂຄງບົນ ທ່ານສະຕາລິນໄດ້ນິຍາມໄວ້ວ່າ "ໂຄງບົນແມ່ນບັນດາທັດສະນະຂອງສັງຄົມກ່ຽວກັບການເມືອງ, ກົດໝາຍ, ສາສະໜາ, ປັດຊະຍາ ແລະຮູບການກຳນົດອື່ນໆທີ່ເທົ່າທຽມກັບກົດໝາຍ, ການເມືອງ ແລະອື່ນໆ.

ເມື່ອໂຄງບົນມີການປ່ຽນແປງໄວຫຼືຊ້າ ໂຄງ ລ່າງກໍຕ້ອງມີການປ່ຽນແປງ ແລະກົງກັນຂ້າມໂຄງ ລ່າງພັງທະລາຍ ກ ຈະເປັນຜົນສະທ້ອນເຮັດໃຫ້ໂຄງບົນພັງທະລາຍໄປຕາມກັນ ຕາມທຳມະດາແລ້ວ ທຸກໆປາກົດການສັງຄົມ ມັນ ຂຶ້ນກັບໂຄງຮ່າງໃດໜຶ່ງທີ່ແນ່ນອນ. ພາສາແມ່ນປາກົດການສັງຄົມອັນໜຶ່ງ, ສະນັ້ນພາສາຂຶ້ນກັບໂຄງບົນ ຫຼື ໂຄງລ່າງ? ບັນຫານີ້ເປັນບັນຫາສຳຄັນທີ່ສຸດໃນບັນຫາທາດແທ້ຂອງພາສາ. ພາສາມີຈຸດພິເສດຕ່າງຈາກວິທະຍາສາດສັງຄົມຂະແໜງອື່ນໆ ເພາະວ່າມັນບໍ່ຂຶ້ນກັບໂຄງບົນ ແລະກໍບໍ່ນອນໃນພື້ນຖານເສດຖະກິດ, ມັນມີໜ້າທີ່ຮັບໃຊ້ໃຫ້ແກ່ທົ່ວສັງຄົມ.

๘.๑ ພາສາບໍ່ຂຶ້ນກັບໂຄງບົນ

ພາສາເປັນພາຫະນະລວມໃຫ້ແກ່ສັງຄົມ, ມັນຢືນຍົງຄົງຕົວຜ່ານຫຼາຍໆລະບອບສັງຄົມທີ່ແຕກຕ່າງກັນ ເຊິ່ງເວລານັ້ນໂຄງບົນ ຫຼືໂຄງລ່າງ ແລະພື້ນຖານເສດຖະກິດໄດ້ປ່ຽນແປງໄປຫຼາຍລະບອບແລ້ວ, ແຕ່ພາສາບໍ່ຄ່ອຍປ່ຽນແປງໄປຫຼາຍປານໃດ. ອັນນີ້ສະແດງໃຫ້ເຮົາເຫັນວ່າ ລະຫວ່າງໂຄງບົນກັບພາສາບໍ່ຄືກັນ ເຊິ່ງສາມາດສັງເກດໄດ້ບາງຈຸດທີ່ແຕກຕ່າງກັນ ດັ່ງນີ້:

ກ. ພາສາບໍ່ພັງທະລາຍໄປຕາມພື້ນຖານເສດຖະກິດຄືໂຄງບົນ

ໝາຍຄວາມວ່າ ເມື່ອພື້ນຖານເສດຖະກິດປ່ຽນແປງ ຫຼື ພັງທະລາຍໄປ, ໄວຫຼືຊ້າໂຄງບົນກໍຈະປ່ຽນແປງ ແລະພັງທະລາຍໄປຕາມ. ພາສາກຳເນີດເກີດຂຶ້ນບໍ່ແມ່ນຍ້ອນພື້ຖານເສດຖະກິດໃດໆເລີຍ ມັນກຳເນີດພ້ອມກັບການກຳເນີດຂອງສັງຄົມມະນຸດ ໃນປະເທດໜຶ່ງໆ ພື້ນຖານເສດຖະກິດທີ່ເກົ່າແກ່ຖືກປ່ຽນແທນດ້ວຍພື້ນຖານເສດຖະກິດທີ່ກ້າວໜ້າກວ່າ, ແຕ່ເບິ່ງພາສາໂດຍພື້ນຖານແລ້ວ ແມ່ນບໍ່ມີຫຍັງປ່ຽນແປງ, ມີແຕ່ສັບໃໝ່ບາງສັບເກີດຂຶ້ນ ເພື່ອປ່ຽນແທນສັບເກົ່າທີ່ຫຼ້າຫຼັງເທົ່ານັ້ນ.

๒. ພາສາບໍ່ຮັບໃຊ້ຊົນຊັ້ນໃດໜຶ່ງສະເພາະຄືໂຄງບົນ

ທ່ານສະຕາລິນເວົ້າວ່າ "ພາຍຫຼັງທີ່ປາກົດຕົວແລ້ວ ໂຄງບົນໄດ້ກາຍເປັນກຳລັງອັນມະຫາສານ ເພື່ອຊ່ວຍໃຫ້ພື້ນຖານເສດຖະກິດທີ່ຫາກໍ່ກຳເນີດນັ້ນ ຄ່ອຍໆ ນັບມື້ເຂັ້ມແຂງ". ໂຄງບັນມັນຮັບໃຊ້ໃຫ້ ແກ່ສິດຜົນປະໂຫຍດຂອງຊົນຊັ້ນໃດໜຶ່ງແນ່ນອນ ແລະໃນຕົວຈິງເຮົາກໍເຫັນວ່າ ປັດ ຊະຍານາຍທຶນ ມັນກໍຮັບໃຊ້ໃຫ້ແກ່ຊົນຊັ້ນນາຍທຶນ. ສ່ວນວ່າພາສາບໍ່ຮັບໃຊ້ສະເພາະແຕ່ຊົນຊັ້ນໃດໜຶ່ງເທົ່ານັ້ນ, ມັນ ຮັບໃຊ້ລວມທົ່ວສັງຄົມ ແລະແຕ່ລະຄົນທີ່ຢູ່ໃນສັງຄົມ ລ້ວນແລ້ວແຕ່ໄດ້ນຳໃຊ້ພາສາທັງນັ້ນ.

๓. ພາສາຄົງຕົວດົນກວ່າໂຄງບົນ

ໂຄງບົນມັນພຽງແຕ່ຍືນຍົງຄົງຕົວໃນຍຸກສະໄໝໃດໜຶ່ງເທົ່ານັ້ນ, ສ່ວນພາສາຍືນຍົງຄົງຕົວຜ່ານ ຫຼາຍຍຸກສະໄໝ. ທ່ານສະຕາລິນເວົ້າວ່າ "ໂຄງບົນບໍ່ອາດຍືນຍົງຄົງຕົວຢ່າງອະມະຕະ ມັນຈະຕ້ອງ ຖືກດັບສູນໄປພ້ອມໆກັບພື້ນຖານເສດຖະກິດ.

ພາສາມັນຍືນຍົງຄົງຕົວຜ່ານຫຼາຍລະບອບສັງຄົມທີ່ແຕກຕ່າງກັນ, ມັນຄ່ອຍໆຂະຫຍາຍຕົວ ແລະນັບມື້ອຸດົມສົມບູນໄປຄຽງຄູ່ກັບສັງຄົມ.

๔. ພາສາຕ່າງຈາກໂຄງບົນອີກໜ່ອນໜຶ່ງແມ່ນພົວພັນກັບການຜະລິດໂດຍກົງ

ໃນວິວັດການເຄື່ອນໄຫວດຳລົງຊີວິດ, ຫາລ້ຽງຊີບຂອງຄົນເຮົານີ້, ພວກເຮົາໄດ້ໃຊ້ພາສາ ເພື່ອ ແລກປ່ຽນຄົບຄ້າສະມາຄົມນຳກັນຕະຫຼອດ. ການເຄື່ອນໄຫວການຜະລິດຂອງສັງຄົມ ນັບມື້ນັບຂະ ຫຍາຍຕົວ, ຂອບເຂດການເຄື່ອນໄຫວໃນສັງຄົມນັບມື້ຂະຫຍາຍຕົວ ແລະອຸດົມສົມບູນຂຶ້ນຊັກໄຊ, ແຕ່ກໍບໍ່ຄວນເຂົ້າໃຈວ່າ ບັນດາສັບທີ່ຫາກໍເກີດຂຶ້ນໃໝ່ນັ້ນ; ຂຶ້ນກັບພື້ນຖານເສດຖະກິດ, ບັນຫານີ້ມັນ ຂຶ້ນກັບການຕໍ່ສູ້ຢູ່ໃນວິວັດການຜະລິດ ໂດຍອາໄສການເຄື່ອນໄຫວຂອງຄົນເຮົາ. ທ່ານສະຕາລິນເວົ້າ ວ່າ: "ພາສາບໍ່ສະເພາະແຕ່ພົວພັນກັບການຜະລິດໂດຍກົງ, ມັນຍັງພົວພັນກັບການເຄື່ອນໄຫວອື່ນໆ ຂອງຄົນເຮົາອີກດ້ວຍ. ສະນັ້ນ, ພາສາຈຶ່ງສ່ອງແສງການປ່ຽນແປງໃນການຜະລິດຢ່າງທັນການແລະ ໂດຍກົງ. ບໍ່ແມ່ນວ່າຈະຖ້າໃຫ້ພື້ນຖານເສດຖະກິດປ່ຽນແປງໝົດຈຶ່ງສ່ອງແສງເຂົ້າໃນພາສາ. ຂອບ ເຂດຂອງພາສາແມ່ນກວ້າງຂວາງທີ່ສຸດ, ມັນມີຫຼາຍຮູບຫຼາຍແບບ, ບໍ່ອາດມີຂົງເຂດໃດທີ່ວ່າບໍ່ໃຊ້ພາ ສາ". ພວກເຮົາອາດສະຫຼຸບຄວາມແຕກຕ່າງລະຫວ່າງໂຄງບົນ ແລະພາສາດັ່ງນີ້:

ໂຄງບົນ	**ພາສາ**
- ປ່ຽນແປງຫຼືພັງທະລາຍໄປຕາມພື້ນຖານເສດ ຖະກິດ(ແບບປະຕິວັດ).	- ບໍ່ປ່ຽນແປງແລະພັງທະລາຍໄປຕາມພື້ນຖານ ເສດຖະກິດ(ຄ່ອຍໆຂະຫຍາຍຕົວ).
- ຕັ້ງໜ້າປົກປັກຮັກສາພື້ນຖານເສດຖະກິດ(ມີ ລັກສະນະຊົນຊັ້ນ).	- ຮັບໃຊ້ທົ່ວປວງຊົນ(ບໍ່ມີລັກສະນະຊົນຊັ້ນ).
- ແມ່ນຜະລິດຕະພັນຂອງຍຸກສະໄໝໃດໜຶ່ງ (ບໍ່ຄົງຕົວດົນ).	- ແມ່ນຜະລິດຕະພັນຂອງຫຼາຍຍຸກສະໄໝ(ຄົງ ຕົວດົນ).
- ພົວພັນກັບການຜະລິດໂດຍທາງອ້ອມ ຜ່ານ ພື້ນຖານເສດຖະກິດ.	- ພົວພັນກັບການຜະລິດໂດຍກົງ, ສ່ອງແສງ ທຸກການຜະລິດໃນສັງຄົມ.

ຍ້ອນວ່າພາສາ ແລະໂຄງບົນມີຄວາມແຕກຕ່າງກັນຄືແນວນັ້ນ. ສະນັ້ນ, ພວກເຮົາບໍ່ຄວນຖືວ່າ ພາສາຄືກັບໂຄງບົນອັນໜຶ່ງ ເຊິ່ງມີພື້ນຖານຂອງມັນສະເພາະ.

๘.๘ ພາສາບໍ່ມີລັກສະນະຊົນຊັ້ນ

ໃນສັງຄົມທີ່ມີຊົນຊັ້ນ ໂຄງບົນ ແລະພື້ນຖານເສດຖະກິດ ຕ້ອງຂຶ້ນກັບຊົນຊັ້ນໃດໜຶ່ງແນ່ນອນ, ສ່ວນວ່າພາສາມັນພັດເຮັດໜ້າທີ່ຮັບໃຊ້ລວມໃຫ້ແກ່ທຸກໆຊັ້ນຄົນໃນສັງຄົມ, ມັນມີລັກສະນະປວງຊົນທີ່ສຸດ ແລະມີລັກສະນະລວມ ເປັນເອກະພາບໃຫ້ແກ່ທຸກກຸ່ມຄົນໃນສັງຄົມນັ້ນ . ທ່ານສະຕາລິນ ໄດ້ເວົ້າວ່າ: "ພາສາແຫ່ງຊາດ ບໍ່ແມ່ນພາສາຊົນຊັ້ນ, ມັນແມ່ນພາຫະນະລວມໃຫ້ແກ່ທົ່ວປວງຊົນໃຫ້ແກ່ທຸກໆຄົນ, ທຸກໆພາກສ່ວນໃນຊາດນັ້ນ.

ຍ້ອນເງື່ອນໄຂການດຳລົງຊີວິດ, ພູມສັນຖານ, ວິຊາສະເພາະ ຫຼື ຕຳແໜ່ງຢູ່ໃນສັງຄົມ, ບັນດາກຸ່ມຄົນທີ່ຂຶ້ນກັບຊົນຊັ້ນຕ່າງກັນ, ນອກຈາກການນຳໃຊ້ປະມວນຄຳສັບຂອງສັງຄົມແລ້ວ, ເຂົາເຈົ້າອາດນຳໃຊ້ຄຳສັບຈຳນວນໜຶ່ງ ທີ່ເຂົາເຈົ້າໄດ້ກົດບັດນຳກັນຢູ່ນວົງແຄບນັ້ນມາໃຊ້ຕື່ມອີກ. ກ່ອນປະເທດຊາດໄດ້ຮັບການປົດປ່ອຍ, ຢູ່ລາວເຮົາກໍມີປະມວນຄຳສັບຂອງພວກເຈົ້າຂຸນມຸນນາຍ ເຊັ່ນ ສະເຫວີຍ, ຂ້າພະບາດ, ພະໂອດ, ສະເດັດ... ແຕ່ບັນຫາເຫຼົ່ານີ້, ພຽງແຕ່ເປັນແງ່ນ້ອຍໆອັນໜຶ່ງຂອງພາສາແຫ່ງຊາດ ແລະຂອບເຂດການນຳໃຊ້ ກໍຢູ່ໃນວົງແຄບ ແລະຈຳກັດທີ່ສຸດ . ສະນັ້ນ, ພວກເຮົາບໍ່ຄວນຫຼົງປົນເປກັນລະຫວ່າງ ພາສາແຫ່ງຊາດກັບປະເພດຄຳເວົ້າສະເພາະຂອງບັນດາກຸ່ມຄົນສ່ວນໜ້ອຍຢູ່ໃນສັງຄົມ.

๘.๙ ພາສາ ແລະວັດທະນະທຳບໍ່ແມ່ນອັນດຽວ

ໃນລະບອບສັງຄົມທີ່ມີຊົນຊັ້ນ ວັດທະນະທຳກໍຕ້ອງຮັບໃຊ້ຊົນຊັ້ນໃດໜຶ່ງແນ່ນອນ. ນັກປະພັນ, ນັກກະວີ ລ້ວນແລ້ວແຕ່ໃຊ້ປາຍປາກກາຂອງຕົນ ເພື່ອຮັບໃຊ້ໃຫ້ແກ່ຊົນຊັ້ນໃດໜຶ່ງ, ບໍ່ອາດມີວັດທະນະທຳ ຫຼືວັນນະຄະດີທີ່ຢືນຢູ່ເປັນກາງ ແລະຮັບໃຊ້ໃຫ້ແກ່ທຸກຊົນຊັ້ນຄົນ; ວັດທະນະທຳນາຍທຶນມັນກໍຮັບໃຊ້ຊົນຊັ້ນນາຍທຶນ, ວັດທະນະທຳສັກດິນາ ມັນກໍຮັບໃຊ້ຊົນຊັ້ນສັກດິນາ. ກ່ອນປະເທດຂອງພວກເຮົາໄດ້ຮັບການປົດປ່ອຍ ພວກນາຍທຶນໄດ້ນຳເອົາວັດທະນະທຳແບບຊົ່ວຊ້າລາມົກເຂົ້າມາເຜີຍແຜ່, ເບື່ອເມົາຊາວໜຸ່ມໃນເຂດທີ່ພວກເຂົາຄອບຄຸມ ເພື່ອຈຸດປະສົງຮັບໃຊ້ແຜນການ ອັນມືດມົນຂອງເຂົາ. ອັນນັ້ນກໍແມ່ນສິ່ງໜຶ່ງທີ່ຢັ້ງຢືນວ່າ ໃນສັງຄົມທີ່ມີຊົນຊັ້ນ ວັດທະນະທຳກໍມີລັກສະນະຊົນຊັ້ນຢ່າງຈະແຈ້ງ. ພາສາ ກໍແມ່ນພາຫະນະສຳລັບແລກປ່ຽນຄົບຄ້າລວມ ໃຫ້ແກ່ທຸກຊົນຊັ້ນຄົນໃນສັງຄົມໃດໜຶ່ງ ໂດຍບໍ່ຈຳແນກຊົນ ຊັ້ນໃດໜຶ່ງທັງສິ້ນ. ພາສາ ແລະວັດທະນະທຳມັນມີການພົວພັນກັນ, ພາສາແຫ່ງຊາດ ກໍແມ່ນຮູບການວັດທະນະທຳອັນໜຶ່ງຂອງຊາດ, ພວກມັນມີການພົວພັນກັນຢ່າງສະໜິດແໜ້ນ ແຕ່ຫາກບໍ່ແມ່ນອັນດຽວ . ພາສາບໍ່ແມ່ນລະບົບແນວຄິດ, ແຕ່ມັນພັດແມ່ນສິ່ງໜຶ່ງ ທີ່ຕັດສິນທຸກການສະແດງອອກຂອງວັດທະນະທຳ.

ຜ່ານການຈຳແນກມາຂ້າງເທິງນີ້, ເຮົາສາມາດສະຫຼຸບໄດ້ວ່າ ພາສາບໍ່ແມ່ນປາກົດການທຳມະຊາດ, ມັນແມ່ນປາກົດການຂອງສັງຄົມ ແຕ່ຫາກແມ່ນປາກົດການສັງຄົມແບບພິເສດ , ເພາະວ່າພາສາບໍ່ແມ່ນລັກສະນະຊົນຊັ້ນ, ບໍ່ຂຶ້ນກັບໂຄງບົນ ແລະກໍບໍ່ແນ່ນອນຢູ່ໃນພື້ນຖານເສດຖະກິດ ຄືປາກົດ

ການຂອງສັງຄົມອື່ນໆ.

II. ພາລະກຳຂອງພາສາ

ພາສາມີ ๓ ພາລະກຳຕົ້ນຕໍ ຄື ພາລະກຳສື່ສານ, ພາລະກຳສະແດງອາລົມຈິດ ແລະພາລະກຳສັ່ງບອກ.

๑. ພາລະກຳສື່ສານ

ພາລະກຳສື່ສານ ແມ່ນພາລະກຳໃຈກາງຂອງພາສາ, ດັ່ງທີ່ພວກເຮົາຮູ້ແລ້ວ່າ ພາສາກໍແມ່ນພາຫະນະສຳລັບຄົບຄ້າສະມາຄົມຢູ່ໃນສັງຄົມ. ໝາຍຄວາມວ່າ ເປັນເຄື່ອງມືສື່ສານລະຫວ່າງຄົນກັບຄົນຢູ່ໃນສັງຄົມ. ຖ້າພາສາເຮັດຫຼ້ອນໜ້າທີ່ດັ່ງກ່າວນັ້ນ, ກ່ອນອື່ນມັນຈະຕ້ອງເປັນພາຫະນະໃຫ້ແກ່ການຄົ້ນຄິດເສຍກ່ອນ ເພາະວ່າຄົນເຮົາຢາກສະແດງສິ່ງໃດສິ່ງໜຶ່ງອອກໃຫ້ຜູ້ອື່ນຮູ້ ຈະຕ້ອງໄດ້ພິນິດພິຈາລະນາ. ໃນການພິຈາລະນານີ້, ຈະຕ້ອງໄດ້ໃຊ້ພາສາເປັນພາຫະນະ. ດັ່ງນັ້ນພາສາບໍ່ແມ່ນສະເພາະແຕ່ມີພາລະກຳໃນການສື່ສານເທົ່ານັ້ນ, ແຕ່ຫາກຍັງມີພາລະກຳໃນການຄົ້ນຄິດອີກດ້ວຍ.

๘. ພາລະກຳສະແດງອາລົມຈິດ

ນີ້ແມ່ນພາລະກຳທີ່ໄປຊ້ອນແຝງກັບພາລະກຳສື່ສານ, ທັງສອງພາລະກຳນີ້ ບໍ່ສາມາດແຍກອອກຈາກກັນໄດ້, ເພາະວ່າເວລາຄົນເຮົາສະແດງຄວາມຄິດເຫັນອັນໃດອັນໜຶ່ງອອກ, ບໍ່ຕ້ອງການໃຫ້ຜູ້ຟັງເຂົ້າໃຈເນື້ອໃນໃຈຄວາມຂອງບັນຫາເທົ່ານັ້ນ, ແຕ່ຫາກຍັງສະແດງອາລົມຈິດໄປພ້ອມໆກັນ. ຕົວຢ່າງການໃຊ້ສັບສຳນວນກ່ຽວກັບການກິນ, ເມື່ອເວົ້າເປັນພິທີການ ເພິ່ນມັກໃຊ້ "ຮັບປະທານອາຫານ" ແຕ່ເວົ້າທົ່ວໆໄປເພິ່ນມັກເວົ້າ "ກິນເຂົ້າ" ດັ່ງນີ້ເປັນຕົ້ນ. ນີ້ສະແດງໃຫ້ເຫັນວ່າ ການໃຊ້ສັບພາສາລ້ວນແຕ່ແອບແຝງໄປພ້ອມໆກັບການໃຊ້ອາລົມຈິດ ບໍ່ສາມາດແຍກອອກຈາກກັນໄດ້.

๓. ພາລະກຳສັ່ງບອກ

ພາລະກຳນີ້, ໝາຍເຖິງການໃຊ້ສັບສຳນວນພາສາ ເພື່ອເປັນຄຳສັ່ງ ເຊັ່ນ ລະວັງ ! ຢຸດ! ລີ້!... ສັບສຳນວນໃນລັກສະນະນີ້ ສ່ວນຫຼາຍຈະມັກເປັນສັບສຳນວນກະທັດຮັດສັ້ນ ແຕ່ກໍມີຄວາມສຳຄັນແລະຈຳເປັນສຳລັບພາສາເຊັ່ນດຽວກັນ.

ຄຳຖາມ

๑. ເປັນຫຍັງຈຶ່ງເວົ້າວ່າ ພາສາບໍ່ມີລັກສະນະສືບເຊື້ອ? ໃຫ້ເຫດຜົນອ້າງອີງ.

๘.ເປັນຫຍັງຈຶ່ງເວົ້າວ່າພາສາແມ່ນປາກົດການຂອງສັງຄົມແບບພິເສດ? ມັນພິເສດຢູ່ບ່ອນໃດ? ອະທິບາຍ.

๓. ພາລະກຳຕົ້ນຕໍຂອງພາສາມີຫຍັງແດ່? ຈົ່ງອະທິບາຍ ແລະຍົກຕົວຢ່າງປະກອບ.

ບົດທີ ນ
ພາສາ ແລະຄວາມເວົ້າ

๑. ພາສາ ແລະຄວາມເວົ້າບໍ່ແມ່ນອັນດຽວກັນ

ການຈຳແນກພາສາ ແລະຄວາມເວົ້າບໍ່ແມ່ນການຕັດແບ່ງພວກມັນອອກຈາກກັນຢ່າງຂາດຂັ້ນ , ເປັນພຽງແຕ່ການຈຳແນກ ເພື່ອຄວາມເຂົ້າໃຈກ່ຽວກັບພາສາ ແລະຄຳເວົ້າເທົ່ານັ້ນ . ໃນໄລຍະຜ່ານມານີ້, ບາງທັດສະນະກໍໃຫ້ຄວາມເຫັນວ່າ ພາສາແລະຄວາມເວົ້າແມ່ນອັນດຽວກັນ , ແຕ່ບາງທັດສະນະກໍເຫັນວ່າ ພາສາ ແລະຄວາມເວົ້າບໍ່ແມ່ນອັນດຽວກັນ ແລະບໍ່ມີອັນໃດຄືກັນ.

ພວກທີ່ໄປຕາມຄວາມເຫັນທີ່ວ່າ "ພາສາແລະຄວາມເວົ້າແມ່ນອັນດຽວກັນ" ກໍຈະກ້າວໄປເຖິງບ່ອນວ່າ ພາສາມີລັກສະນະຊົນຊັ້ນ , ພວກທີ່ໄປຕາມຄວາມເຫັນທີ່ວ່າ "ພາສາ ແລະຄວາມເວົ້າບໍ່ແມ່ນອັນດຽວກັນ, ບໍ່ມີຫຍັງພົວພັນກັນ" ກໍຈະກ້າວໄປເຖິງບ່ອນປະຕິເສດຈຸດຕ່າງໆ ທີ່ພວກມັນຄ້າຍຄືກັນ. ໃນຕົວຈິງ, ພາສາ ແລະຄວາມເວົ້າບໍ່ແມ່ນອັນດຽວກັນ, ແຕ່ພວກມັນກໍມີສາຍກ່ຽວພັນກັນຢ່າງສະໜິດແໜ້ນ.

๑.๑ ພາສາແມ່ນຫຍັງ?

ພາສາແມ່ນພາຫະນະ ສຳລັບແລກປ່ຽນຄົບຄ້າອາລົມຈິດຢູ່ໃນສັງຄົມ ແມ່ນຜະລິດຕະພັນຂອງສັງຄົມ ແລະສັງຄົມເປັນຜູ້ກຳນົດໃຊ້ . ຖ້າພວກເຮົາເວົ້າເຖິງພາສາໃດໜຶ່ງແລ້ວ, ກໍແມ່ນຄົນໃນຊາດນັ້ນເປັນຜູ້ກຳນົດໃຊ້ ຢາກຄົ້ນຄິດວິວັດການກຳເນີດ , ການຂະຫຍາຍຕົວຂອງພາສາໃດ ກໍຕ້ອງຄົ້ນຄວ້າເຖິງປະຫວັດສາດການຂະຫຍາຍຕົວຂອງຊາດນັ້ນ. ພາສາມັນແມ່ນລະບົບອັນໜຶ່ງ ເຊິ່ງມີຫຼັກການສັບຊ້ອນຢ່າງຄັກແນ່ ແລະໂດຍທົ່ວໄປແລ້ວ , ພາກສ່ວນຕ່າງໆທີ່ປະກອບເປັນລະບົບນັ້ນມີ ອັກຂະຫຼະ, ວັດຈະນາ, ໄວຍາກອນ ແລະສັນທະສິນ. ແຕ່ອັນສຳຄັນແລະຕົ້ນຕໍແມ່ນອັກຂະຫຼະ, ວັດຈະນາແລະໄວຍາກອນ. ແຕ່ລະພາກສ່ວນທີ່ປະກອບເປັນລະບົບນີ້ ລ້ວນແຕ່ມີການພົວພັນເຊິ່ງກັນແລະກັນຢ່າງສະໜິດແໜ້ນ, ແຕ່ລະພາກສ່ວນນີ້ລ້ວນແຕ່ມີຫຼາການສັບຊ້ອນສະເພາະຂອງໃຜມັນ, ບັນດາຫຼັກການ ແລະຫົວໜ່ວຍທັງໝົດນີ້ ເອີ້ນວ່າ ພາສາ.

ເປັນຫຍັງສິ່ງທີ່ພວກເຮົາເວົ້າອອກ ຫຼືຂຽນອອກຈຶ່ງເຂົ້າໃຈກັນໄດ້ ? ພວກເຮົາເຂົ້າໃຈກັນໄດ້ຍ້ອນວ່າ:

- ສິ່ງທີ່ເວົ້າຫຼືຂຽນອອກນັ້ນ ປະກອບດ້ວຍບັນດາສັບ ຫຼືຖ້ອຍຄຳຕ່າງໆ ເຊິ່ງພວກເຮົາໄດ້ຮັບຮູ້ ແລະເຂົ້າໃຈກ່ອນແລ້ວ ນັບທັງຮູບການ ແລະເນື້ອໃນຂອງພວກມັນ.

- ຖ້ອຍຄຳສຳນວນເຫຼົ່ານັ້ນ ໄດ້ປະສົມເຂົ້າກັນຕາມຫຼັກການໃດໜຶ່ງ ເຊິ່ງທຸກຄົນໄດ້ຮັບຮູ້ແລະເຂົ້າໃຈແລ້ວເຊັ່ນກັນ. ປະມວນສັບ ແລະຫຼັກການຕ່າງໆນັ້ນແມ່ນພາສາ.

ສັງຮອມແລ້ວ, ພາສາທີ່ພວກເຮົາຈຳແນກມານີ້ແມ່ນຫົວໜ່ວຍ, ສາຍພົວພັນພວກມັນດ້ວຍກັນ ແລະບັນດາຫຼັກໄວຍາກອນ ທີ່ໄດ້ ສັງຮອມມາຈາກຄວາມເວົ້າໃນຕົວຈິງນັບເປັນພັນໆຄຳ. ພ້ອມກັນນັ້ນ, ເມື່ອເວົ້າເຖິງຫຼັກການກໍແນ່ນອນວ່າຕ້ອງມີການຜູກມັດ, ພາສາກໍມີລັກສະນະຜູກມັດ. ລັກສະ

ນະຜູກມັດຂອງພາສາ ແມ່ນບັນຫາທີ່ເຫັນໄດ້ງ່າຍ ເຊັ່ນວ່າ ພວກເຮົາລ້ວນແຕ່ເຂົ້າໃຈຄວາມໝາຍ ຂອງຄຳວ່າ "ກິນ ແລະດື່ມ"; ສັງຄົມລາວກຳນົດຮ່ວມກັນວ່າ "ດື່ມນ້ຳ", ໃຜຈະເວົ້າວ່າ "ດື່ມເຂົ້າ" ແມ່ນບໍ່ໄດ້ ຈະຕ້ອງເວົ້າວ່າ "ກິນເຂົ້າ".

໑.໘ ຄວາມເວົ້າແມ່ນຫຍັງ?

ຄວາມເວົ້າແມ່ນຜະລິດຕະພັນຂອງບຸກຄົນ, ເຈົ້າຂອງຄວາມເວົ້າແມ່ນບຸກຄົນ. ຢາກຄົ້ນຄວ້າ ຄຳເວົ້າ ຕ້ອງຄົ້ນຄວ້າກ່ຽວກັບຫຼັກໝັ້ນ, ທັດສະນະ, ຈຸດພິເສດ ແລະໄວອາຍຸຂອງຜູ້ເວົ້າໄປພ້ອມ. ຄວາມເວົ້າ ແມ່ນໝາກຜົນແຫ່ງການນຳໃຊ້ພາສາຂອງຄົນໃດໜຶ່ງ ບົນພື້ນຖານຫຼັກການຂອງພາສາ. ຄວາມເວົ້າເວລາໃດມັນກໍຕິດພັນກັບແນວຄິດຂອງຜູ້ເວົ້າ. ສະນັ້ນຄວາມເວົ້າຈຶ່ງມີລັກສະນະເອກະຊົນ.

໘. ສາຍພົວພັນລະຫວ່າງພາສາແລະຄວາມເວົ້າ

ເຖິງວ່າພາສາແລະຄວາມເວົ້າ ມັນ ອັນແຕກຕ່າງກັນບົນພື້ນຖານກໍຕາມ, ແຕ່ພວກມັນກໍມີສາຍ ພົວພັນນຳກັນຢ່າງສະໜິດແໜ້ນ, ສາມພົວພັນລະຫວ່າງພວກມັນດ້ວຍກັນ ແມ່ນຄ້າຍຄືສາຍພົວພັນ ລະຫວ່າງອັນລວມກັບອັນສະເພາະ. ພາສາປຽບເໝືອນພາຫະນະ, ສ່ວນຄຳເວົ້າປຽບເໝືອນການນຳ ໃຊ້ພາຫະນະ ແລະໝາກຜົນແຫ່ງການນຳໃຊ້ພາຫະນະນັ້ນ. ແນວຄິດທີ່ແຍກພາສາອອກຈາກຄວາມ ເວົ້າຢ່າງຂາດຂັ້ນ ຫຼືຮວມເອົາພາສາ ແລະຄວາມເວົ້າເຂົ້າເປັນອັນດຽວກັນ ລ້ວນແຕ່ຜິດພາດ.

໘.໑ ບ່ອນຄືກັນລະຫວ່າງພາສາ ແລະຄວາມເວົ້າ

ເຖິງວ່າພາສາ ແລະຄວາມເວົ້າຈະແມ່ນສອງປາກົດການທີ່ແຕກຕ່າງກັນກໍຕາມ, ແຕ່ພວກມັນກໍ ຍັງມີບາງຈຸດທີ່ຄືກັນດັ່ງນີ້:

- ພາສາ ແລະຄວາມເວົ້າ ລ້ວນແຕ່ພົວພັນກັນຢ່າງສະໜິດແໜ້ນກັບຈິນຕະນາການ, ນັ້ນກໍ ຍ້ອນວ່າ ພາສາ ແມ່ນຕົວຈິງໂດຍກົງຂອງແນວຄິດ, ພາສາແມ່ນພາຫະນະເພື່ອດຳເນີນຈິນຕະນາ ການ ແລະກ່ອນຈະເວົ້າ ກໍຕ້ອງໄດ້ຄົ້ນຄິດ.

- ພາສາແລະຄວາມເວົ້າ ລ້ວນແຕ່ແມ່ນພາຫະນະສຳລັບແລກປ່ຽນຄົບຄ້າແນວຄິດອາລົມຈິດ ໃນສັງຄົມ, ແຕ່ລະຄົນທີ່ໂອ້ລົມກັນລ້ວນແຕ່ໃຊ້ພາສາ.

- ພາສາແລະຄວາມເວົ້າ ລ້ວນແຕ່ນອນຢູ່ໃນປາກົດການຂອງສັງຄົມ, ສັງຄົມເປັນຜູ້ກຳນົດ ແລະນຳໃຊ້ພາສາ, ສ່ວນຄວາມເວົ້າກໍແມ່ນການໃຊ້ພາສາ, ແຕ່ການນຳໃຊ້ພາສານັ້ນ ກໍ ຕ້ອງບົນພື້ນ ຖານຫຼັກການທີ່ທ່ວສັງຄົມຮັບຮູ້.

໘.໒ ບ່ອນຕ່າງກັນລະຫວ່າງພາສາ ແລະຄວາມເວົ້າ

ເຖິງວ່າພາສາແລະຄວາມເວົ້າຈະມີບາງດ້ານທີ່ຄ້າຍຄືກັນກໍຕາມ ແຕ່ພວກມັນກໍມີອັນແຕກຕ່າງ ກັນ ເຊິ່ງສາມາດສະຫຼຸບໄດ້ ດັ່ງນີ້:

ພາສາ	ຄວາມເວົ້າ
- ແມ່ນຜະລິດຕະພັນຂອງສັງຄົມ, ປວງຊົນເປັນເຈົ້າຂອງ, ມີລັກສະນະທົ່ວໄປ.	- ແມ່ນຜະລິດຕະພັນຂອງບຸກຄົນ, ມີລັກສະນະເອກະຊົນ ແລະບຸກຄົນເປັນເຈົ້າຂອງ.
- ພາສາມີລັກສະນະຄົງຕົວ ແລະຜູກມັດ.	- ຄວາມເວົ້າມີການປ່ຽນແປງໄປເລື້ອຍໆ ໂດຍສະເພາະແມ່ນວິທີການໃນການນຳໃຊ້ສັບ.
- ພາສາບໍ່ມີລັກສະນະຊົນຊັ້ນ.	- ຄວາມເວົ້າມີລັກສະນະຊົນຊັ້ນຢ່າງຈະແຈ້ງ.

ງ. ຄວາມໝາຍໃນການຈຳແນກພາສາ ແລະຄວາມເວົ້າ

ການຈຳແນກພາສາ ແລະຄວາມເວົ້າ ແມ່ນມີຄວາມໝາຍສຳຄັນທີ່ສຸດ, ໂດຍສະເພາະແມ່ນຜູ້ທີ່ຄົ້ນຄວ້າພາສາ ຕ້ອງ ໄດ້ຮູ້ວ່າປາກົດການອັນໃດແມ່ນພາສາ ແລະປາກົດການອັນໃດແມ່ນຄວາມເວົ້າ. ພວກເຮົາຈຳແນກພາສາ ແລະຄວາມເວົ້າແມ່ນເພື່ອຄົ້ນຄວ້າ, ແຕ່ບໍ່ແມ່ນເພື່ອແຍກພວກມັນອອກຈາກກັນ. ຖ້າຫ່ວາວ່າພວກເຮົາບໍ່ຈຳແນກບັນຫານີ້ ມັນ ຈະນຳໄປເຖິງບ່ອນວ່າຮວມເອົາພາສາ ແລະຄວາມເວົ້າເຂົ້າເປັນອັນດຽວກັນ. ຫາກເປັນເຊັ່ນນີ້ ແມ່ນບໍ່ຖືກຕ້ອງ ແລະຝືນກັບຄວາມເປັນຈິງ.

✍ ສິ່ງທີ່ຄວນເອົາໃຈໃສ່

ເມື່ອຈຳແນກລັກສະນະສັງຄົມຂອງພາສາ ແລະລັກສະນະເອກະຊົນຂອງຄວາມເວົ້າ, ບໍ່ຄວນຕັດ ຫຼືແຍກພວກມັນອອກຈາກກັນແບບຂາດຕົວ ຄືທັດສະນະຂອງທ່ານ ຟ.ດ ຊົດເຊຍ(F.D Saus sure). ຊົດເຊຍເວົ້າວ່າ: ຄວາມເວົ້າບໍ່ແມ່ນເປົ້າໝາຍຄົ້ນຄວ້າຂອງພາສາ ເພາະມີລັກສະນະບຸກຄົນອ້ອຍຕ້ອຍ, ມັນບໍ່ລື້ມຄືນ, ບໍ່ມີລັກສະນະສັງຄົມ ແລະບໍ່ມີອັນລວມ.

ຕໍ່ທັດສະນະດັ່ງກ່າວນີ້ ນັກພາສາສາດປັດຈຸບັນໄດ້ຫັນປ່ຽນແລ້ວ, ເຂົາເຈົ້າໃຫ້ຄວາມເຫັນແບບເອກະພາບກັນວ່າ ໃນຄວາມເວົ້າມີທັງອັນລວມແລະອັນສະເພາະ. ຍ້ອນແນວນັ້ນຄວາມເວົ້າກໍແມ່ນເປົ້າໝາຍຄົ້ນຄວ້າຂອງພາສາສາດ. ໃນຕົວຈິງກໍຊີ້ບອກແຈ້ງທີ່ສຸດວ່າ ໃຜຈະເວົ້າ ຫຼື ຂຽນກໍລ້ວນແຕ່ຕ້ອງໄດ້ດຳເນີນຕາມຫຼັກການກຳນົດອັນໜຶ່ງ ທີ່ມີລັກສະນະທົ່ວໄປ ເຊິ່ງທຸກຄົນໃນສັງຄົມຮັບຮູ້ແລ້ວ, ນັ້ນຄືຫຼັກພາສາ.

ພາສາແລະຄວາມເວົ້າບໍ່ປະຕິເສດກັນ ນີ້ແມ່ນສັດຈະທຳອັນໜຶ່ງ ພາສາກໍນອນຢູ່ໃນຄວາມເວົ້າ ແລະຄວາມເວົ້າກໍຄົງຕົວຢູ່ບົນພື້ນຖານພາສາ; ອັນນີ້ມີລັກສະນະສັງຄົມ, ມັນກວມເອົາອັນທີ່ມີລັກສະນະເອກະຊົນພ້ອມ ແລະກົງກັນຂ້າມ. ທ່ານເລນິນໄດ້ເວົ້າກ່ຽວກັບບັນຫານີ້ວ່າ: "ໃນພາສາມີແຕ່ອັນສັງຮວມ..." ຈາກຄຳເວົ້ານີ້ກໍຈະເຫັນໄດ້ວ່າ ຄວາມ ເວົ້າແມ່ນການນຳໃຊ້ກົດເກນສັງຮວມຂອງບຸກຄົນ ເຊິ່ງກວມເອົາຫຼາຍຂົງເຂດ ເຊັ່ນ ການປາໄສ, ການໂອ້ລົມສົນທະນາ, ການຂີດຂຽນໃນບົດຕ່າງໆ ແລະຄວາມເວົ້າໃນເວລາຄົ້ນຄິດ ເປັນຕົ້ນ.

ເຖິງວ່າພາສາ ແລະຄວາມເວົ້າມີການພົວພັນກັນ ແຕ່ກໍບໍ່ຄວນຖືວ່າແມ່ນອັນດຽວກັນ. ນັກຈິດຕະສາດລັດເຊຍ ທ່ານ ອາຣູຣິກ ໃຫ້ຄວາມເຫັນຕໍ່ບັນຫານີ້ວ່າ: ເຖິງວ່າພາສາແລະຄວາມເວົ້າມີການພົວພັນກັນຢ່າງສະໜິດແໜ້ນ ແລະຜູກມັດກັນກໍຕາມ, ພວກມັນບໍ່ແມ່ນອັນດຽວກັນ. ພາສາແມ່ນ

ພາຫະນະແລກປ່ຽນຄົ້ນຄ້າແນວຄິດອາລົມຈິດໃນສັງຄົມ ສ່ວນຄວາມເວົ້າພັດແມ່ນວິວັດແຫ່ງການຮັບຮູ້ພາສາຢ່າງລະອຽດຂອງບຸກຄົນ ເພື່ອຈຸດປະສົງນຳໄປແລກປ່ຽນກັບຄົນອື່ນ.

ສາຍພົວພັນລະຫວ່າງພາສາແລະຄວາມເວົ້າ ຄ້າຍຄື ສາຍພົວພັນລະຫວ່າງອັນລວມກັບອັນສະເພາະ. ອັນລວມກຳນອນຢູ່ໃນອັນສະເພາະ ແລະອັນສະເພາະກໍຂຶ້ນກັບອັນລວມ; ເວລາໃດອັນສະເພາະກໍມີຫຼາຍຮູບຫຼາຍແບບທີ່ອຸດົມສົມບູນກວ່າ. ພາສາແມ່ນອັນລວມ, ສ່ວນຄຳເວົ້າແມ່ນອັນສະເພາະ; ພາສາປຽບຄືພາຫະນະ, ສ່ວນຄຳເວົ້າປຽບຄືການນຳໃຊ້ພາຫະນະ ເພື່ອຈຸດປະສົງໃດໜຶ່ງ.

ຄຳຖາມ

ຑ. ເປັນຫຍັງຈຶ່ງຕ້ອງຈຳແນກພາສາ ແລະຄວາມເວົ້າ?
ຒ. ຄຳວ່າ "ພາສາລາວ ແລະຄວາມລາວ" ຕ່າງກັນຫຼືຄືກັນ?
ຓ. ພາສາແລະຄວາມເວົ້າ ມີສາຍພົວພັນກັນແນວໃດ?

24/7 ห้ามจำหน่าย

ບົດທີ ๔
ພາສາ ແລະຈິນຕະນາການ

I. ພາສາແມ່ນພາຫະນະເພື່ອດຳເນີນຈິນຕະນາການ

๑. ຄວາມສຳນຶກກ່ຽວກັບຈິນຕະນາການ

ຈິນຕະນາການແມ່ນວິວັດຈິດຕະສາດອັນໜຶ່ງ ທີ່ສ່ອງແສງຕົວຈິງພາວະວິໄສໂດຍກົງ ມັນສ່ອງແສງແບບສັງຮອມກ່ຽວກັບລັກສະນະ, ທາດແທ້ ແລະສາຍພົວພັນທີ່ມີລັກສະນະກົດເກນ ໂດຍຜ່ານວັດຖຸ, ປາກົດການທີ່ບໍ່ສາມາດຮັບຮູ້ດ້ວຍສະຕິຮູ້ສຶກໄດ້. ໃນວິຊາຈິດຕະສາດໄດ້ແບ່ງຈິນຕະນາການອອກເປັນ ๓ ຊະນິດ ຄື

① ຈິນຕະນາການປະຈັກຕາເຄື່ອນໄຫວ: ໝາຍເອົາການເຄື່ອນໄຫວຕົວຈິງເປັນຕົ້ນຕໍ, ມັນດຳເນີນບົນພື້ນຖານສິ່ງປະຈັກຕາ.

ຕົວຢ່າງ: ເດັກນ້ອຍຫຼິ້ນເຄື່ອງຫຼິ້ນ.

② ຈິນຕະນາການປະຈັກຕາຮູບພາບ: ມັນເກີດຂຶ້ນບົນເງື່ອນໄຂທີ່ວ່າສິ່ງໃດກະທົບໃສ່ອິນຊີທັງຫ້າຂອງຄົນເຮົາ ແລ້ວຈຶ່ງເຮັດໃຫ້ຄົນເຮົາສຳນຶກເຫັນສິ່ງນັ້ນ, ແຕ່ຫາກຍັງບໍ່ທັນເຂົ້າໃຈເນື້ອແທ້ບັນຫາຂອງສິ່ງນັ້ນຢ່າງລະອຽດ.

ຕົວຢ່າງ: ເມື່ອເຮົາເຫັນຮູບຄວາຍ, ເຮົາກໍສຳນຶກເຫັນໂຕຄວາຍ.

③ ຈິນຕະນາການນາມທຳ: ແມ່ນຈິນຕະນາການຂັ້ນສູງຂອງຄົນເຮົາ ມາ ຮອດຂັ້ນນີ້ແລ້ວ, ຄົນເຮົາຮູ້ຈັກພິຈາລະນາຕຶກຕອງຄັກແນ່. ຈິນຕະນາການຊະນິດນີ້ ດຳ ເນີນໄດ້ກໍຕໍ່ເມື່ອມີພາສາເປັນພາຫະນະ ແລະມີພຽງແຕ່ຄົນເຮົາເທົ່ານັ້ນ.

๘. ຄວາມສຳນຶກກ່ຽວກັບວິວັດການຮັບຮູ້

ວິວັດການຮັບຮູ້ ມັນເລີ່ມຈາກຄວາມຮູ້ສຶກກ້າວເຖິງສະຕິຮູ້ສຶກ. ຄວາມຮູ້ສຶກພັດແມ່ນການສ່ອງແສງຕົວຈິງໂດຍກົງຕໍ່ໂລກວັດຖຸ, ຍ້ອນມີຄວາມຮູ້ສຶກ ຄົນ ເຮົາຈຶ່ງສາມາດຮັບຮູ້ລັກສະນະຕ່າງໆຂອງສິ່ງວັດຖຸທີ່ມີຢູ່ໃນໂລກພາວະວິໄສໄດ້ ເຊັ່ນ ສີສັນ, ຄວາມແຂງ, ຄວາມຮ້ອນ, ຄວາມອ່ອນ... ສະຕິຮູ້ສຶກມັນແມ່ນການສັງຮອມບັນດາກາຍະສຳຜັດ(ຄວາມຮູ້ສຶກ) ທີ່ມີສາຍພົວພັນນຳກັນ ໂດຍອີງຕາມສາຍພົວພັນກ່ຽວກັບຈຸດພິເສດຂອງວັດຖຸໃດໜຶ່ງ ແລ້ວສ່ອງແສງເຂົ້າໄປໃນຄວາມຮູ້ສຶກຂອງຄົນເຮົາ ໃນລັກສະນະເປັນວັດຖຸທີ່ຮອບຄອບອັນໜຶ່ງ. ເພິ່ນໄດ້ແບ່ງວິວັດທະນາການຮັບຮູ້ຂອງຄົນເຮົາອອກເປັນ ๘ ໄລຍະ ຄື ໄລຍະສຳຜັດຖານ ແລະໄລຍະຕັກກະຖານ.

๘.๑ ໄລຍະສຳຜັດຖານ

ໄລຍະສຳຜັດຖານ ແມ່ນໄລຍະຕ່ຳແຫ່ງການຮັບຮູ້, ໄລຍະນີ້ພຽງແຕ່ຮັບຮູ້ວັດຖຸຕົວຈິງແບບກະແຈກກະຈາຍເທົ່ານັ້ນ, ໄລຍະນີ້ມັນອາໄສແຕ່ຄວາມຮູ້ສຶກໂດຍກົງ ເຊິ່ງບໍ່ທັນໄດ້ຜ່ານພາສາ. ໄລຍະສຳຜັດຖານແມ່ນວິວັດການຈິດຕະສາດທີ່ງ່າຍດາຍ ມັນພຽງແຕ່ສ່ອງແສງລັກສະນະສະເພາະຂອງວັດຖຸເທົ່ານັ້ນ ເຊັ່ນວ່າ ຄົນເຮົາຮັບຮູ້ ອັນນີ້ແມ່ນ “ຄົນ” ອັນນັ້ນແມ່ນ “ສັດ, ຕົ້ນໄມ້, ສິ່ງຂອງ... ” ເປັນ

ຕົ້ນ. ໄລຍະນີ້ເກີດຂຶ້ນໄດ້ ຍ້ອນອາໄສວັດຖຸ, ປາກົດການກະຕຸກໃສ່ອິນຊີທັງຫ້າໂດຍກົງ ແລະໄລຍະນີ້ ຄົນແລະສັດລ້ອນແຕ່ມີຄືກັນ. ສັດທີ່ມີສະຕິຮູ້ສຶກສູງ ເຊັ່ນ ປາ ໂລມາ, ຊ້າງ, ລີງ, ໝາ... ມັນບໍ່ພຽງແຕ່ສ່ອງແສງລັກສະນະປີກຍ່ອຍຂອງວັດຖຸໄດ້ເທົ່ານັ້ນ, ແຕ່ມັນຍັງສາມາດສ່ອງແສງສິ່ງວັດຖຸໄດ້ຢ່າງຮອບຄອບອີກດ້ວຍ ແຕ່ຫາກແມ່ນການຮອບຄອບສະເພາະດ້ານນອກຂອງວັດຖຸເທົ່ານັ້ນ ເຊັ່ນ ວ່າ ໝາຈື່ເຈົ້າຂອງ ເປັນຕົ້ນ.

๔.๔ ໄລຍະຕັກກະຖານ

ໄລຍະນີ້ແມ່ນໄລຍະຂັ້ນສູງຂອງຄວາມຮັບຮູ້ ມັນແມ່ນວິວັດການຈິດຕະສາດ ທີ່ສ່ອງແສງຢ່າງຮອບຄອບ ໃຕ້ຮູບການຮູປະທຳຕໍ່ກັບບັນດາວັດຖຸ, ປາກົດການຢູ່ໃນໂລກພາວະວິໄສທີ່ກະທົບໃສ່ອິນຊີທັງຫ້າຂອງຄົນເຮົາໂດຍກົງ. ໄລຍະນີ້ສ້າງຂຶ້ນບົນພື້ນຖານໄລຍະສຳຜັດຖານ, ເອກະສານທີ່ໄດ້ຮັບຄັ້ງແຮກໃນໄລຍະສຳຜັດຖານໄດ້ນຳມາວິໄຈຢູ່ໃນໄລຍະຕັກກະຖານ ເຊິ່ງແມ່ນໄລຍະຈິນຕະນາການນາມທຳ ແລະກໍມີແຕ່ຄົນເຮົາເທົ່ານັ້ນ ຈຶ່ງມີຈິນຕະການນາມທຳ.

ໂດຍອີງອາໄສໄລຍະຕັກກະຖານນີ້, ຄົນເຮົາຈຶ່ງສາມາດຮັບຮູ້ ແລະເກັບກຳກົດເກນຕ່າງໆຂອງວັດຖຸໄດ້. ໄລຍະຈິນຕະນາການນາມທຳແມ່ນໄລຍະແຫ່ງການຄົ້ນຄິດ, ເມື່ອຄົ້ນຄິດກໍຕ້ອງໄດ້ໃຊ້ພາສາ, ບໍ່ໃຊ້ພາສາຈະບໍ່ສາມາດດຳເນີນການຄົ້ນຄິດໄດ້ ແລະການຄົ້ນຄິດຂອງຄົນເຮົາຈະຍືນຍົງຄົງຕົວໄດ້ກໍຍ້ອນອາໄສພາສາ.

II. ພາສາ ແລະຈິນຕະນາການບໍ່ສາມາດແຍກອອກຈາກກັນໄດ້

๑. ພາສາ ແລະຈິນຕະນາການກຳເນີດພ້ອມກັນ

ທັດສະນະຂອງລັດທິມາກ ໄດ້ໃຫ້ຄວາມເຫັນວ່າ: ພາສາ ແລະຈິນຕະນາການກຳເນີດພ້ອມກັບການປາກົດຕົວຂອງສັງຄົມມະນຸດ. ທ່ານມາກ(Karl Marx) ເວົ້າວ່າ: "ພາສາກໍຄືຄວາມຮັບຮູ້ແມ່ນມີມາແຕ່ເທິງນານ... ພາສາແມ່ນຄວາມຮັບຮູ້ຂອງຄວາມຮັບຮູ້. ພ້ອມກັບຄວາມຮັບຮູ້ນີ້, ພາສາປາກົດຕົວຂຶ້ນແມ່ນຍ້ອນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ໃນການແລກປ່ຽນຄົບຄ້າລະຫວ່າງຜູ້ນີ້ກັບຜູ້ອື່ນ". ລັດທິມາກໄດ້ສັ່ງສອນໄວ້ວ່າ: "ນັບແຕ່ມະນຸດເລີ່ມເປັນຮູບເປັນຮ່າງ ກໍ ແມ່ນເລີ່ມມີຈິນຕະນາການນາມທຳ ແລະພາສາທີ່ໃຊ້ສຽງກຳເນີດຂຶ້ນ, ສິ່ງນີ້ນັບເປັນຂີດໝາຍແຫ່ງການປາກົດຕົວຂອງສັງຄົມມະນຸດ".

ຈຸດພິເສດເດັ່ນຊັດຂອງຈິນຕະນາການແມ່ນມີສາຍພົວພັນກັບພາສາ, ສາຍພົວພັນນີ້ ບໍ່ສາມາດແຍກອອກຈາກກັນໄດ້; ຕໍ່ກັບບັນຫານີ້, ທ່ານສະຕາລິນເວົ້າວ່າ: "ບໍ່ມີຄວາມສຳນຶກໃດໆທີ່ກຳເນີດຢູ່ໃນຜົ້ງສະໝອງຂອງຄົນເຮົາ ເຖິງວ່າມັນຈະປາກົດຂຶ້ນເມື່ອໃດຍາມໃດກໍຕາມ, ບັນດາຄວາມສຳນຶກນັ້ນ ກໍ ມີແຕ່ປາກົດຂຶ້ນ ແລະອາໄສພາສາເປັນພາຫະນະເທົ່ານັ້ນ; ບັນດາຄວາມສຳນຶກ "ເປື່ອຍເຍື່ອຍ" ແຍກອອກຈາກທາດທຳມະຊາດຂອງພາສາແມ່ນບໍ່ມີ. ໝາຍຄວາມວ່າ ຖ້າບໍ່ມີພາສາກໍບໍ່ມີຈິນຕະນາການ ແລະຖ້າບໍ່ມີຈິນຕະນາການກໍບໍ່ມີພາສາ. ພາສາເປັນເຄື່ອງໝາຍບັນທຶກຄືນການເຮັດວຽກແບບນາມທຳຂອງຈິນຕະນາການເທົ່ານັ້ນ. ພາສາກໍແມ່ນເງື່ອນໄຂຄົງຕົວຂອງຈິນຕະນາການ ແລະຈິນຕະນາການກໍແມ່ນເງື່ອນໄຂຄົງຕົວຂອງພາສາ.

๔. ພາສາແມ່ນຕົວຈິງໂດຍກົງຂອງແນວຄິດ

ແນວຄິດ ແມ່ນການສ່ອງແສງຕົວຈິງຢູ່ໃນຄວາມຮັບຮູ້, ແນວຄິດແມ່ນການສະແດງອອກຂອງສາຍພົວພັນລະຫວ່າງຄົນກັບໂລກອ້ອມຂ້າງ, ບໍ່ວ່າຢູ່ໃນລະບອບສັງຄົມໃດກໍຕາມ, ແນວຄິດກໍລ້ວນແລ້ວແຕ່ນອນຢູ່ໃຕ້ການຕັດສິນຂອງລະບົບເສດຖະກິດ. ຍ້ອນແນວນັ້ນ, ແນວຄິດຈຶ່ງນອນໃນລະບົບສະຕິຮູ້ສຶກຂອງສັງຄົມ ແລະແນວຄິດຂອງຄົນເຮົາ ກໍ ສະແດງອອກຜ່ານພາສາ. ແນວຄິດແມ່ນເນື້ອໃນຂອງພາສາ, ສ່ວນວ່າພາສາຊໍ້າພັດແມ່ນຮູບການດ້ານນອກຂອງຈິນຕະນາການ. ທ່ານຊົດເຊຍໄດ້ເວົ້າວ່າ "ພາສາ ແລະຈິນຕະນາການ ມັນຄືສອງໜ້າຂອງເຈ້ຍໃບໜຶ່ງ, ໜ້າຂວາແມ່ນຈິນຕະນາການ ໜ້າຊ້າຍແມ່ນພາສາ, ບໍ່ສາມາດຕັດໜ້າຂວາອອກ ໂດຍວ່າບໍ່ໄດ້ຕັດໜ້າຊ້າຍອອກພ້ອມ". ໃນຕົວຈິງ ພວກເຮົາເຫັນວ່າ ເຖິງຈະແມ່ນແນວຄິດທີ່ເລິກລັບປານໃດກໍຕາມ, ຈະຕ້ອງໄດ້ໃຊ້ພາສາ ເພາະພາສາແມ່ນຕົວຈິງໂດຍກົງຂອງແນວຄິດ.

๕. ພາສາ ແລະຈິນຕະນາການຂະຫຍາຍຕົວພ້ອມກັນ

ພາສາ ແລະຈິນຕະນາການມັນພົວພັນກັນສະໜິດແໜ້ນ. ພາສາພາຍຫຼັງກຳເນີດແລ້ວ ມັນ ມີຜົນສະທ້ອນເຖິງທຸກໆຂົງເຂດການເຄື່ອນໄຫວຂອງຄົນເຮົາ ທີ່ນັບທັງກະໂຕຜູ້ເວົ້ານຳອີກດ້ວຍ. ການອອກແຮງງານເປັນມູນພາກຕົ້ນຕໍ ທີ່ຊ່ວຍໃຫ້ອອກປອງຂອງຄົນເຮົາຄ່ອຍໆຂະຫຍາຍສົມບູນ; ນອກຈາກນີ້, ການອອກແຮງງານ ຍັງ ຊ່ວຍໃຫ້ອິນຊີທັງຫ້າຂອງຄົນເຮົາຂະຫຍາຍຢ່າງສົມບູນຄືກັນ. ພາສາມີຜົນສະທ້ອນອັນໃຫຍ່ຫຼວງໃຫ້ແກ່ວິວັດການຂະຫຍາຍຕົວຂອງຈິນຕະນາການ, ຍ້ອນມີພາສາຄົນເຮົາຈຶ່ງສາມາດແລກປ່ຽນຄວາມຄິດຄວາມເຫັນ ແລະຖອດຖອນບົດຮຽນນຳກັນຢູ່ໃນການຕໍ່ສູ້ຕ້ານໄພທຳມະຊາດທັງປວງ. ດ້ວຍເຫດນັ້ນ, ສັງຄົມມະນຸດຈຶ່ງຂະຫຍາຍຕົວຢ່າງໄວວາ, ຄຽງຄູ່ກັນນັ້ນ ມັນກໍເຮັດໃຫ້ພາສາຂະຫຍາຍຕົວອຸດົມສົມບູນ, ຊັດເຈນ ແລະຮອບຄອບຂຶ້ນເລື້ອຍໆ.

ຮວມຄວາມແລ້ວ, ພວກເຮົາເຫັນວ່າພາສາ ແລະຈິນຕະນາການມັນກຳເນີດພ້ອມກັນ, ຜູກມັດເຊື່ອງກັນແລະກັນ ແລະພ້ອມກັນຂະຫຍາຍຕົວ. ສະນັ້ນ, ພາສາແລະຈິນຕະນາການ ຈຶ່ງ ມີສາຍພົວພັນກັນຢ່າງສະໜິດແໜ້ນ ບໍ່ສາມາດແຍກອອກຈາກກັນໄດ້ ແຕ່ຫາກບໍ່ແມ່ນອັນດຽວກັນ.

III. ພາສາ ແລະຈິນຕະນາການບໍ່ແມ່ນອັນດຽວກັນ

ພາສາແລະຈິນຕະນາການ ແມ່ນສອງປາກົດການທີ່ແຕກຕ່າງກັນ, ເຖິງວ່າພວກມັນຈະກຳເນີດພ້ອມກັນ, ພ້ອມກັນຄົງຕົວ, ຊຸກຍູ້ເຊື່ອງກັນແລະກັນ ເພື່ອພ້ອມກັນຂະຫຍາຍ, ພວກມັນມີການພົວພັນກັນຢ່າງສະໜິດແໜ້ນ ບໍ່ສາມາດແຍກອອກຈາກກັນໄດ້ກໍຕາມ ແຕ່ບໍ່ແມ່ນອັນດຽວກັນ. ມັນແມ່ນສອງປາກົດການທີ່ມີຈຸດພິເສດສະເພາະຂອງໃຜມັນ ໝາຍຄວາມວ່າ ມັນມີບ່ອນຄືກັນແລະຕ່າງກັນ.

๑. ຄວາມແຕກຕ່າງລະຫວ່າງພາສາ ແລະຈິນຕະນາການ

ເມື່ອຈິນຕະນາການຊັດເຈນ ຈະ ເຮັດໃຫ້ແນວຄິດຖືກຕ້ອງ, ເວລານັ້ນກໍຈະເຮັດໃຫ້ພາສາຊັດເຈນ ແລະກົງກັນຂ້າມ. ເມື່ອຈິນຕະນາການບໍ່ຊັດເຈນຈະເຮັດໃຫ້ແນວຄິດ, ພາສາບໍ່ຊັດເຈນ, ແຕ່ພວກເຮົາບໍ່ຄວນເຂົ້າໃຈແບບກົນຈັກວ່າ ບັນຫານີ້ຈະຄືກັນໃນທຸກກໍລະນີ, ເພາະວ່າແນວຄິດຖືກຫຼືຜິດນັ້ນ ມັນ ຍັງຂຶ້ນກັບຫຼັກໝັ້ນ, ທັດສະນະ ແລະຄວາມຮູ້ຂອງຄົນຕໍ່ໂລກພາວະວິໄສນຳອີກ. ສ່ວນວ່າ

ຈິນຕະນາການຈະຊັດເຈນຫຼືບໍ່ ມັນຍັງໄດ້ອາໄສວິທີຄົ້ນຄິດ ແລະກະຕວງຕື່ມອີກ. ສ່ວນພາສາຈະຊັດເຈນ ຫຼືບໍ່ນັ້ນພັດຍັງອີງໃສ່ວາດເວົ້າ, ວາດຂຽນຕື່ມອີກ. ຍ້ອນແນວນັ້ນ, ຈຶ່ງເກີດມີກໍລະນີປາກົດການຕົວະເນື້ອແທ້. ບາງເທື່ອແນວຄິດອາດຖືກຕ້ອງ, ແຕ່ຈິນຕະນາການບໍ່ຊັດເຈນ, ພາສາກໍບໍ່ຊັດເຈນ. ບັນຫານີ້, ດ້ານໜຶ່ງອາດແມ່ນຍ້ອນວິທີສະແດງອອກ, ບາງເທື່ອກໍອາດແມ່ນຍ້ອນລະດັບຄວາມຮູ້ ຫຼື ກຳພາສາບໍ່ແໜ້ນ ແລະບໍ່ຮູ້ນຳໃຊ້ພາສາເກັ່ງປານໃດ. ສະນັ້ນ, ການຮຽນ, ການຝຶກຝົນກ່ຽວກັບພາສາ ຈຶ່ງເປັນບັນຫາສຳຄັນ ແລະຈຳເປັນໃຫ້ແກ່ທຸກໆຄົນ.

ພາສາ	ຈິນຕະນາການ
- ມີລັກສະນະຊາດ, ມີການກຳນົດເຊິ່ງກັນ ແລະກັນ, ພ້ອມກັນນຳໃຊ້ໃນສັງຄົມໃດໜຶ່ງ.	- ມີລັກສະນະທົ່ວມະນຸດ, ເປັນກົດເກນລວມຂອງ ມະນຸດ. ສະນັ້ນແປພາສາຕ່າງປະເທດຈຶ່ງງ່າຍ.
- ແມ່ນພາຫະນະສຳລັບແລກປ່ຽນ ຄົບຄ້າ ແນວຄິດອາລົມຈິດໃນສັງຄົມ.	- ແມ່ນພະລັງຂອງສະໝອງ ເພື່ອສ່ອງແສງຕົວ ຈິງ.
- ນຳໃຊ້ສັບ, ປະໂຫຍກ.	- ນຳໃຊ້ການກະຕວງ, ການສຳນຶກ.
- ມີລັກສະນະວັດຖຸ(ຮູບທຳ).	- ມີລັກສະນະຈິດໃຈ(ນາມທຳ).

๔. ສັບແລະມະໂນພາບບໍ່ແມ່ນອັນດຽວກັນ

ສັບແມ່ນສັນຍະລັກຂອງມະໂນພາບທີ່ສ່ອງແສງວັດຖຸ, ປາກົດການໃນໂລກພາວະວິໄສ. ມະໂນພາບຢາກຍືນຍົງຄົງຕົວຕ້ອງອາໄສສັບ, ສັບແມ່ນເປືອກວັດຖຸຂອງມະໂນພາບ; ພວກມັນມີສາຍພົວພັນກັນຢ່າງສະໜິດແໜ້ນ ແຕ່ບໍ່ແມ່ນອັນດຽວກັນ. ມະໂນພາບສ່ອງແສງວັດຖຸໃນຕົວຈິງ, ສ່ວນສັບແມ່ນສິ່ງສະແດງ. ທ່ານມາກເວົ້າກ່ຽວກັບບັນຫານີ້ວ່າ: ຊື່ເອີ້ນຂອງວັດຖຸໃດໜຶ່ງ ບໍ່ ມີຫຍັງພົວພັນເຖິງທາດແທ້ຂອງວັດຖຸນັ້ນຈັກໜ້ອຍ... ເຖິງວ່າຂ້ອຍຈະຮູ້ຊື່ຂອງຄົນນັ້ນວ່າ "ຊັກ" ແຕ່ຂ້ອຍບໍ່ຮູ້ວ່າຄົນນັ້ນເປັນແນວໃດ". ທ່ານເລນິນກໍເວົ້າວ່າ: "ລະຫວ່າງຊື່ເອີ້ນ ແລະທາດແທ້ວັດຖຸ ບໍ່ມີຫຍັງພົວພັນກັນເລີຍ.

ຍ້ອນແນວນັ້ນ, ຢູ່ໃນສັບພາສາພວກເຮົາເຄີຍພົບເຫັນສອງກໍລະນີທີ່ແຕກຕ່າງກັນ. ກໍລະນີໜຶ່ງ ບາງເທື່ອສັບດຽວ ພັດມີຫຼາຍມະໂນພາບ ເຊັ່ນ "ເຂົ້າ" ປະກອບມີ: ເຂົ້າສຸກ, ເຂົ້າສານ, ເຂົ້າໜຽວ... ກໍລະນີທີສອງ, ບາງເທື່ອມະໂນພາບດຽວພັດມີຫຼາຍສັບສະແດງ ເຊັ່ນ ມະ ໂນພາບກ່ຽວກັບ "ການເອົາອາຫານປ່ອນເຂົ້າປາກ "ຫຍ້ຳ ຫຼືບໍ່ຫຍ້ຳ ແລ້ວກືນລົງທ້ອງ" ມີຄວາມໝາຍວ່າ ກິນ, ສັນ, ສະເຫວີຍ, ຮັບປະທານ, ຍັດ, ແດກ...

ຜ່ານຕົວຢ່າງຂ້າງເທິງນີ້, ມັນເຮັດໃຫ້ພວກເຮົາເຫັນແຈ້ງວ່າ ສັບ ແລະມະໂນພາບບໍ່ແມ່ນອັນດຽວກັນ ແລະກໍແມ່ນຍ້ອນສັບ ແລະມະໂນພາບບໍ່ແມ່ນອັນດຽວກັນ, ສະນັ້ນ ແຕ່ລະປະເທດຈຶ່ງມີສັບພາສາຕ່າງກັນ.

ง. ภาบะขะหยายตัวขอๆพาสา และจินตะนาภาบบ่ถืภัน

ละหว่างพาสา และจินตะนาภาบ มิภืดเภบขะหยายตัวสะเพาะขอๆใฒมัน, พวภเฮาบ่สามาดเอิาบันหาพาสาไปปินปภับบันหาจินตะนาภาบได้, หากถือว่า ภาบขะหยายตัวขอๆพาสา และจินตะนาภาบถืภัน, ก็จะก้าวไปเถิๆบ่อบว่าพาสาหล้าหลัๆ ก็ ย้อบจินตะนาภาบหล้าหลังบั้นเอๆ. บายทึบเถียอิๆใส่ทืดสะดีบี้ เพื่อติละดับภาบขะหยายตัวทางด้านจินตะบะภาบขอๆบันดาปะเหดด้อยพัดทะบา.

ตัวอย่างๆ: ซาตากำขอๆพาสาลาว และคบลาวในสะไพที่ปะเหดซาดขอๆพวกเฮาตืภเป็นหัวเมืองขึ้บขอๆจักกะพัดต่างด้าว, พาสาลาว และคบลาว ก็ถืภปะพาดว่าหล้าหลังๆ.

พวกเฮาบ่ถอบเข้าใจว่า ย้อบ พาสาขะหยายตัว, จินตะนาภาบจิ่งขะหยาย. ถ้าว่าเข้าใจเช่บบี้ แม่บผืดพาดที่สุด; เพาะว่าในตัวจิงแล้ว พาสา ขอๆซาดใดก็มีคอามสามาดรับใช้คบพายในซาดบั้บย่างพุงพ, ซาดมีคอามก้าวหน้าพุงใด พาสาก็ส่องแสงได้พุงบั้บ, แต่พวกเฮาก็บ่ปะติเสด ในภาบยืมสับพาสาขอๆซาดอื่บเข้ามาบำใช้ในพาสาขอๆซาดตบ เพาะปาภืดภาบบี้มันลอมมีให้แก่ทุกพาสา.

คำถาม

๑. เป็นหยังจิ่งเอ้าว่า พาสาแม่บพาหะบะแห่งภาบคิ้บคิด? ในเอลาคิ้บคิดผู้ดุอ ก็ต้อๆภาบใช้พาสาบ่? ด้อยเหดใด?

๘. เป็นหยังจิ่งเอ้าว่า พาสาและจินตะนาภาบ บ่สามาดแยภออภาจาภกันได้?

๙. สะหว่างพาสา และจินตะนาภาบต่างกันแบอใด? จิ่งอะทิบาย.

ບົດທີ ๔

ລັກສະນະລະບົບ ແລະສັນຍາຂອງພາສາ

I. ລັກສະນະລະບົບຂອງພາສາ

ມະໂນພາບກ່ຽວກັບ "ລະບົບພາສາ" ບໍ່ແມ່ນເລື່ອງທີ່ງ່າຍດາຍປານໃດ, ມັນບໍ່ຄືກັບຄວາມເປັນເອກະພາບຂອງປາກົດການຕ່າງໆ. ລະບົບຂອງພາສາມັນແມ່ນໂຄງປະກອບອັນໜຶ່ງ ເຊິ່ງມີລັກສະນະກົດເກນທີ່ໄດ້ປະກອບສ້າງຂຶ້ນຕາມກົດເກນພາຍໃນຂອງພາສາ. ແຕ່ລະພາສາແມ່ນມີໂຄງປະກອບສ້າງສະເພາະຂອງໃຜລາວ. ສະນັ້ນ, ໃນແຕ່ລະພາສາ ມະໂນພາບກ່ຽວກັບລະບົບ ອາດມີຈຸດພິເສດສະເພາະຂອງໃຜລາວ, ໝາຍຄວາມວ່າ ມີລະບົບສະເພາະ ແລະມີໂຄງສ້າງສະເພາະ.

๑. ຄວາມສຳນຶກກ່ຽວກັບລະບົບ

ວັດຖຸໃດໜຶ່ງທີ່ຢູ່ໂດດ່ຽວບໍ່ອາດເອີ້ນວ່າລະບົບໄດ້, ຢາກເອີ້ນວ່າລະບົບໄດ້ ວັດຖຸນັ້ນຢ່າງໜ້ອຍຕ້ອງມີຕັ້ງແຕ່ສອງພາກສ່ວນຂຶ້ນໄປ, ແຕ່ກໍບໍ່ໝາຍຄວາມວ່າ ວັດຖຸ ໃດປະກອບດ້ວຍສອງພາກສ່ວນຂຶ້ນໄປແລ້ວ ຈະເປັນລະບົບໝົດ. ຄຳວ່າລະບົບໝາຍເອົາການປະກອບຂອງຫຼາຍພາກສ່ວນ ເຊິ່ງແຕ່ລະພາກສ່ວນນັ້ນ ມີການພົວພັນເຊິ່ງກັນແລະກັນຢ່າງສະໜິດແໜ້ນ. ສະນັ້ນ, ພວກເຮົາອາດນິຍາມວ່າ "ລະບົບແມ່ນສົມບູນພາກອັນໜຶ່ງ ທີ່ປະກອບດ້ວຍມູນສານຕ່າງໆຜູກມັດກັນ, ກຳນົດກັນຢູ່ໃນຊຸດໂຮມນັ້ນ, ມູນພາກນີ້ມີຄຸນຄ່າໄດ້ ກໍຍ້ອນອາໄສມູນພາກອື່ນໃນຊຸດໂຮມນັ້ນກຳນົດ, ເມື່ອມູນພາກໜຶ່ງຫາກຫຼຸດອອກຈາກລະບົບນັ້ນແລ້ວ ກໍຈະເຮັດໃຫ້ລະບົບນັ້ນບໍ່ມີຄຸນຄ່າອີກ.

ຕົວຢ່າງ: ລະບົບເຄື່ອງປະກອບຂອງໂມງໜ່ວຍໜຶ່ງ ຫາກມີພາກສ່ວນໜຶ່ງໃນໂມງນັ້ນຫຼຸດອອກຫຼືເປ່ເພແລ້ວ ໂມງໜ່ວຍນັ້ນກໍຈະບໍ່ມີຄຸນຄ່າອີກ.

๒. ພາສາກໍແມ່ນລະບົບອັນໜຶ່ງ

ຜູ້ທຳອິດທີ່ໄດ້ຍົກບັນຫາລະບົບພາສາຂຶ້ນແມ່ນ ທ່ານ ຊິດເຊີ(Saussure) ນັກພາສາສາດຂອງປະເທດເຊີວິດ(Switzerland). ຈາກນັ້ນມາ, ກໍມີນັກພາສາສາດຫຼາຍທ່ານໄດ້ສືບຕໍ່ຄົ້ນຄວ້າ ແລະລົງເລິກໃນແຕ່ລະຂະແໜງຂອງລະບົບພາສາຕື່ມອີກ. ເມື່ອເວົ້າເຖິງລະບົບ, ພວກເຮົາເຄີຍໄດ້ຍິນວ່າລະບົບຫາຍໃຈ, ລະບົບລະລາຍ, ລະບົບສື່ສານ... ແຕ່ບັນຫາມີຢູ່ວ່າ ລະ ບົບພາສາມັນກໍຄືກັບລະບົບຕ່າງໆນັ້ນບໍ? ເວົ້າເຖິງດ້ານຫຼັກການແລ້ວ ແມ່ນຄືກັນ ໝາຍຄວາມວ່າຖ້າແມ່ນລະບົບແລ້ວ ຈະແມ່ນລົບໃດກໍຕາມ, ມັນພົວພັນນຳກັນຢ່າງສະໜິດແໜ້ນ ແລະຜູກພັນເຊິ່ງກັນແລະກັນ; ສ່ວນລະບົບຂອງພາສາ ມັນມີຈຸດພິເສດຕ່າງກັບລະບົບອື່ນໆ ຢູ່ບ່ອນວ່າ ແຕ່ລະມູນພາກທີ່ປະກອບເປັນລະບົບພາສານັ້ນ, ມັນຊ້ຳພັດມີລະບົບນ້ອຍຂອງມັນອີກ ແລະແຕ່ລະບົບນ້ອຍນີ້ ຍັງມີລະບົບນ້ອຍໆຂອງມັນອີກ.

ສະນັ້ນ, ພວກເຮົາອາດເວົ້າວ່າ ລະບົບ ພາສາແມ່ນ "ລະບົບຂອງລະບົບ" ໝາຍຄວາມວ່າ ລະບົບຂອງພາສາມັນກວມລວມເອົາລະບົບນ້ອຍຫຼາຍລະບົບທີ່ປະກອບເຂົ້າເປັນລະບົບພາສາ. ຍ້ອນແນວນັ້ນ, ພວກເຮົາຈຶ່ງເວົ້າວ່າ ລະບົບພາສາສັບສົນກວ່າລະບົບອື່ນໆ.

ສະຫຼຸບລວມແລ້ວ, ລະຫວ່າງອັກຂະຫຼະ, ວັດຈະນາ, ໄວຍາກອນ ແລະສັນທະສິນ ແມ່ນມີສາຍພົວພັນແບບຜູກມັດເຊິ່ງກັນແລະກັນ ໂດຍສະເພາະແມ່ນອັກຂະຫຼະ, ວັດຈະນາ ແລະໄວຍາກອນ. ຖ້າບໍ່ມີພາກສ່ວນທີໜຶ່ງ, ກໍຈະບໍ່ມີພາກສ່ວນທີສອງ ແລະທີສາມ. ໃນພາສາລາວເຮົາສັງເກດເຫັນວ່າ ແຕ່ລະພາກສ່ວນຕັ້ງແຕ່ນ້ອຍເຖິງໃຫຍ່ ລ້ວນແຕ່ພົວພັນກັນຢ່າງສະໜິດແໜ້ນ ແລະຜູກມັດເຊິ່ງກັນແລະກັນ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ ພາສາກໍແມ່ນລະບົບອັນໜຶ່ງ.

ຮູບສະແດງບາງພາກສ່ວນຂອງລະບົບໃນພາສາລາວ



ຜ່ານຕົວຢ່າງນີ້ເຮົາເຫັນວ່າ ລະບົບ ພາສາມີລັກສະນະສັບສົນກວ່າລະບົບອື່ນ ເພາະມູນພາກທີ່ປະກອບເປັນມູນພາກນີ້ ບາງເທື່ອກໍແມ່ນຊະນິດດຽວກັນ, ແຕ່ບາງເທື່ອກໍແມ່ນຊະນິດຕ່າງກັນ.

II. ລັກສະນະສັນຍານຂອງພາສາ

ຄົນເຮົາໄດ້ສະໜິດຕິດພັນກັບສະພາບແວດລ້ອມແຫ່ງສັນຍານ ທີ່ແຕກຕ່າງກັນຈົນນັບບໍ່ຖ້ວນ ເຊັ່ນວ່າ ເມື່ອໄດ້ຍິນສຽງລູກໄຫ້ ຜູ້ ເປັນແມ່ເປັນພໍ່ຈະຕ້ອງໄດ້ແລ່ນໄປຫາລູກ, ສຽງລູກໄຫ້ໄດ້ກາຍເປັນສັນຍານຕໍ່ກັບຜູ້ເປັນແມ່ເປັນພໍ່... ສຽງກະດິ່ງ, ສຽງໝາກຫວ້ຽ, ສຽງນົກຮ້ອງແລະອື່ນໆ ປາກົດການເຫຼົ່ານີ້ ກໍອາດກາຍເປັນສັນຍານໄດ້.

๑. ຄວາມສຳນຶກກ່ຽວກັບສັນຍານ

ເພື່ອແກ້ໄຂບັນຫາທີ່ວ່າສັນຍານແມ່ນຫຍັງ? ໃນໄລຍະຜ່ານມາ, ກໍມີຫຼາຍທັດສະນະແຕກຕ່າງກັນ ເຊັ່ນ ບາງຄົນໃຫ້ຄວາມເຫັນວ່າ ສັນຍານແມ່ນການກະຕຸກອັນໜຶ່ງທີ່ກະທົບໃສ່ອິນຊີທັງຫ້າຂອງຄົນເຮົາ ແລະເຮັດໃຫ້ຄົນເຮົາສາມາດສຳນຶກເຫັນວັດຖຸອື່ນ ເຊັ່ນ ເຫັນຄວັນເຮົາສຳນຶກເຫັນໄຟ, ເຫັນເມກດຳເຮົາສຳນຶກເຫັນຝົນຕົກ ເປັນຕົ້ນ. ບາງຄົນພັດເວົ້າວ່າ ສັນຍານ ແມ່ນວັດຖຸຫຼືເຫດການໃດໜຶ່ງ ເຊິ່ງເປັນຕົວແທນໃຫ້ແກ່ວັດຖຸ ຫຼືເຫດການອື່ນ ເຊັ່ນ ວັດຖຸ(ກ) ເປັນຕົວແທນໃຫ້ວັດຖຸ(ຂ), ຜ່ານ(ກ) ເຮົາເຂົ້າໃຈ(ຂ).

ໂດຍອີງໃສ່ຄຳເຫັນຕ່າງໆຂ້າງເທິງນີ້, ພວກເຮົາອາດເວົ້າໄດ້ວ່າ "ສັນຍານແມ່ນວັດຖຸ ຫຼື ເຫດການກະຕຸກເຂົ້າໄປໃນອອກປອງຂອງຄົນເຮົາ. ຈາກນັ້ນຈຶ່ງເຮັດໃຫ້ຄົນເຮົາສຳນຶກເຫັນວັດຖຸໃດໜຶ່ງ ທີ່ມີຄວາມໝາຍ ຫຼື ຮູບພາບຂອງວັດຖຸອື່ນທີ່ພົວພັນເຖິງມັນ" ເຊັ່ນ ເຫັນຄວັນເຮົາສຳນຶກເຫັນໄຟ, ເຫັນເມກດຳເຮົາສຳນຶກເຫັນຝົນ. ເພິ່ນແບ່ງສັນຍານອອກເປັນ ๘ ປະເພດ ຄື ສັນຍານລຳພັງ ແລະ ສັນຍານບັງຄັບ.

๑.๑ ສັນຍານລຳພັງ

ເຂົາເຈົ້າເອີ້ນສັນຍານຊະນິດນີ້ວ່າ "ສັນຍານໄຮ້ເຫດຜົນ ຫຼື ສັນຍານແບບທຳມະຊາດ". ຜ່ານການດຳລົງຊີວິດເປັນເວລາເທິງນານ ຄົນ ເຮົາໄດ້ປະສົບພົບພໍ້ກັບເຫດການຕ່າງໆ ທີ່ ເກີດມີໃນທຳມະຊາດ ແລ້ວກໍຮູ້ຈັກວ່າ ອັນໃດເປັນຕົວແທນໃຫ້ແກ່ອັນໃດ(ອັນໃດເປັນສັນຍະລັກໃຫ້ແກ່ອັນໃດ). ສາຍພົວພັນລະຫວ່າງສິ່ງທີ່ເປັນສັນຍານກັບເປົ້າໝາຍ(ສິ່ງສະແດງກັບສິ່ງທີ່ຖືກສະແດງ) ຂອງສັນຍານປະເພດນີ້ ແມ່ນສາຍພົວພັນແບບເຫດກັບຜົນ, ມັນບໍ່ນອນຢູ່ໃນລະບົບ ສະນັ້ນມັນຈຶ່ງບໍ່ມີຄຸນຄ່າໃນການແລກປ່ຽນຄົບຄ້າສູງປານໃດ ແລະສາຍພົວພັນລະຫວ່າງສິ່ງສະແດງກັບສິ່ງຖືກສະແດງກໍບໍ່ແນ່ນອນ.

ຕົວຢ່າງ:
- ເຫັນຄວັນ ບໍ່ແນ່ນອນວ່າຈະມີໄຟ.
- ເຫັນເມກດຳ ບໍ່ແນ່ນອນວ່າຈະມີຝົນ.
- ເຫັນໃບໜ້າຫຼ່າເຫຼືອງ ບໍ່ແນ່ນອນວ່າຈະເຈັບເປັນ.

๑.๘ ສັນຍານບັງຄັບ

ເຂົາເຈົ້າເອີ້ນສັນຍານນີ້ວ່າ "ສັນຍານມີເຫດຜົນ ຫຼື ສັນຍານທຽມ ທີ່ ຄົນເຮົາໄດ້ປະດິດຄິດສ້າງຂຶ້ນເອົາເອງ". ສັນຍານປະເພດນີ້, ມັນມີລັກສະນະສັງຄົມສູງ ແລະມີຄຸນຄ່າໃນການແລກປ່ຽນຄົບຄ້າ ອາລົມຈິດສູງ. ສາຍພົວພັນລະຫວ່າງສັນຍານກັບເປົ້າໝາຍ; ສັນຍານປະເພດນີ້ ແມ່ນຈະຖືກກຳນົດຈາກສັງຄົມ. ສະນັ້ນຈຶ່ງສາມາດອະທິບາຍກ່ຽວກັບສາຍພົວພັນລະຫວ່າງສິ່ງສະແດງ ກັບສິ່ງທີ່ຖືກສະແດງໄດ້.

ຕົວຢ່າງ: ໄຟສັນຍານຢູ່ຕາມທາງແຍກ
- ສີຂຽວ: ເຕືອນວ່າ ໄປໄດ້.
- ສີເຫຼືອງ: " ລໍຖ້າ.
- ສີແດງ: " ຫ້າມໄປ.

ບັນດາຮູບພາບ ແລະເຄື່ອງໝາຍຕ່າງໆ ທີ່ຄົນເຮົາກຳນົດຂຶ້ນນັ້ນ ກໍອາດຈັດເຂົ້າຢູ່ໃນສັນຍານບັງຄັບ ເຊັ່ນວ່າ ຮູບກະໂຫຼກຫົວຫຼ້ອນມີກະດູກໄຂວ່ຢູ່ພື້ນ ມັນສະ ແດງເຖິງໄພອັນຕະລາຍ ທີ່ ອາດ ເຖິງແກ່ຄວາມຕາຍ.

ສັນຍານທັງສອງປະເພດນີ້, ມີລັກສະນະສະເພາະຂອງໃຜມັນ, ແຕ່ວ່າສັນຍານບັງຄັບມີທ່າຂະ ຫຍາຍຕົວແຮງກວ່າສັນຍານລຳພັງ.

๘. ພາສາກໍແມ່ນສັນຍານຊະນິດໜຶ່ງ

ທ່ານ ປາບລົບ(ນັກປາດລັດເຊຍ) ໄດ້ເວົ້າວ່າ: "ບັນດາສັດສິ່ງ ແລະຈຳພວກຄົນປະຖົມບູຮານ ກ່ອນຈະກາຍເປັນຄົນສົມບູນ, ພວກເຂົາເຈົ້າໄດ້ປະເຊີນກັບສະພາບແວດລ້ອມຫຼາຍສິ່ງຫຼາຍຢ່າງຕ່າງ ກັນ ໂດຍຜ່ານອິນຊີທັງຫ້າ ດ້ວຍການກະຕຸກ ຄື ຟັງ , ເຫັນ ແລະຮັບຮູ້; ສຸດທ້າຍເມື່ອພວກຄົນ ປະຖົມບູຮານໄດ້ເປັນຄົນສົມບູນແລ້ວ, ບັນດາສັນຍານທຳອິດນັ້ນ ເຂົາເຈົ້າໄດ້ກຳນົດນຳກັນ ແລ້ວ ກາຍເປັນສັນຍານດ້ວຍພາສາ. ອັນນີ້ມັນເປັນອັນຈະແຈ້ງແລ້ວວ່າ ພື້ນຖານ ສັນຍານທຳອິດນັ້ນ ໄດ້ ຂະຫຍາຍໃຕ້ຮູບການສັນຍານພາສາ. ທ່ານຍັງເວົ້າຕື່ມອີກວ່າ ຈຸ ດດີອັນຍິ່ງໃຫຍ່ຂອງຄົນເຮົາລື່ນສັດ ຢູ່ບ່ອນວ່າ ຄົນ ເຮົາມີຈິນຕະນາການນາມທຳ ເຊິ່ງສັດບໍ່ອາດມີໄດ້". ຈາກບ່ອນີ້, ເພິ່ນຈຶ່ງເວົ້າວ່າ ພາ ສາກໍແມ່ນສັນຍານຊະນິດໜຶ່ງ ແລະຢູ່ໃນສັນຍານລະບົບພາສານີ້ ເພິ່ນຍັງໄດ້ແບ່ງອອກເປັນສອງຊະ ນິດ ຄື ສັນຍານບໍ່ໃຊ້ພາສາ ແລະສັນຍານໃຊ້ພາສາ.

ກ. ສັນຍານບໍ່ໃຊ້ພາສາ

ສັນຍານປະເພດນີ້, ສ່ວນຫຼວງຫຼາຍແລ້ວ ມີ ລັກສະນະກຳນົດໃນຂອບເຂດໃດໜຶ່ງ ມັນ ແມ່ນ ສັນຍານທີ່ໃຊ້ຮູບພາບ ຫຼືວັດຖຸຕ່າງໆເປັນເຄື່ອງໝາຍ, ສັນຍານແບບນີ້ໜ້ອຍຫຼືຫຼາຍ ກໍ ມີລັກສະນະ ການກຳນົດ ເຊັ່ນ ຮູບ ແຕ້ມ, ໄຟສັນຍານ, ການໂຮງໜ, ເຄື່ອງໝາຍຕາມເສັ້ນທາງຄົມມະນາຄົມ ເປັນຕົ້ນ. ທັງໝົດນີ້, ລ້ວນແຕ່ນອນຢູ່ສັນຍານບໍ່ໃຊ້ພາສາ ເຊິ່ງກຳນົດກັນຢູ່ໃນຂອບເຂດໃດໜຶ່ງ.

ຂ. ສັນຍານໃຊ້ພາສາ

ສັນຍານໃຊ້ພາສາ ແມ່ນລະບົບສັນຍານຕົ້ນຕໍ ແລະມີຄຸນຄ່າໃນການແລກປ່ຽນຄົບຄ້າອາລົມ ຈິດສູງໃນສັງຄົມ. ອັນນີ້ໝາຍເຖິງການປະມວນຄຳສັບທີ່ນອນຢູ່ໃນພາສາຂອງຊາດໜຶ່ງໆ.

ສັນຍານທັງ ๘ ຊະນິດນີ້, ສັນຍານບໍ່ໃຊ້ພາສາ ແລະສັນຍານໃຊ້ພາສາ ມີຈຸດຄືກັນ ແລະຕ່າງ ກັນດັ່ງນີ້:

+ ຈຸດຄືກັນ

- ສັນຍານທັງສອງຊະນິດ ລ້ວນແຕ່ຮັບໃຊ້ໃຫ້ແກ່ການແລກປ່ຽນຄົບຄ້າໃນສັງຄົມ.
- ສັນຍານທັງສອງຊະນິດ ລ້ວນແຕ່ມີລັກສະນະວັດຖຸ(ສັບ, ສຽງ, ເຄື່ອງໝາຍ...)
- ສັນຍານທັງສອງຊະນິດ ລ້ວນແຕ່ປະກອບດ້ວຍ ๘ ດ້ານ ຄື ສິ່ງສະແດງ ແລະສິ່ງຖືກສະ ແດງ.
- ສາຍພົວພັນລະຫວ່າງເຄື່ອງໝາຍສັນຍານກັບເນື້ອໃນຂອງສັນຍານ ລ້ວນແຕ່ໄດ້ມາຈາກ ການກຳນົດຂອງສັງຄົມ.

+ ຈຸດຕ່າງກັນ

- ລະຫວ່າງສັນຍານບໍ່ໃຊ້ພາສາ ແລະສັນຍານໃຊ້ພາສາ ມີ ຈຸດແຕກຕ່າງກັນອັນເປັນພື້ນຖານ ດັ່ງນີ້:

ບໍ່ໃຊ້ພາສາ	ໃຊ້ພາສາ
- ຈຳນວນໜ້ອຍ, ບໍ່ມີຄວາມສາມາດແຜ່ຂະຫຍາຍ ແລະບໍ່ສູ້ປ່ຽນແປງ, ຖ້າປ່ຽນແປງຢ່າງກະທັນຫັນຈະບໍ່ເຂົ້າໃຈ. ຕົວຢ່າງ: ໄຟແດງຢູ່ຕາມທາງແຍກຕ່າງໆ ບອກວ່າ: ຢຸດ, ຖ້າປ່ຽນສີອື່ນຈະບໍ່ເຂົ້າໃຈ.	- ຈຳນວນບໍ່ມີຂອບເຂດ, ມີຄວາມສາມາດແຜ່ຂະຫຍາຍ ແລະປ່ຽນແປງເລື້ອຍໆ. ແຕ່ກໍຍັງເຂົ້າໃຈໄດ້(ໂດຍສະເພາະການໃຊ້ສັບ). ຕົວຢ່າງ: ມະໂນພາບ "ບໍ່ເຄື່ອນໄຫວ" ຈະໃຊ້ຄຳວ່າ: ຢຸດ, ເຊົາ, ຢ່າຕີ່ງ... ກໍເຂົ້າໃຈ.
- ມີຄວາມໝາຍດຽວ, ງ່າຍດາຍ. ຕົວຢ່າງ: ເຄື່ອງໝາຍ Ⓟ ມີຄວາມໝາຍດຽວ ຄື "ຈອດລົດໄດ້".	- ມີຫຼາຍຄວາມໝາຍສັບສົນ, ບໍ່ສາມາດເອົາຮູບພາບອະທິບາຍໄດ້. ຕົວຢ່າງ: ສັບວ່າ "ເຂົ້າ" ມີຫຼາຍຄວາມໝາຍ.
- ໜ້າທີ່ຕົ້ນຕໍແມ່ນບອກເຕືອນ. ຕົວຢ່າງ: Ⓡ ກໍພຽງແຕ່ເຕືອນວ່າ "ຫ້າມຈອດ".	- ເປັນພາຫະນະເພື່ອຄົບຄ້າອາລົມຈິດ ແລະດຳເນີນຈິນຕະນາການ.
- ບໍ່ມີສີສັນອາລົມຈິດປົນເປນຳ.	- ເຈືອຈາມດ້ວຍສີສັນອາລົມຈິດ. ຕົວຢ່າງ: ຕາຍ, ເສຍ, ເສຍສະຫຼະ, ກິນ, ຮັບປະທານ, ຍັດ...

ງ. ລັກສະນະສອງດ້ານຂອງສັນຍານພາສາ

ທຸກໆສັນຍານທີ່ຄົນເຮົາປະດິດສ້າງເອງ(ສັນຍານບັງຄັບ) ລ້ວນແຕ່ປະກອບດ້ວຍ ๔ ດ້ານ ຄື ດ້ານວັດຖຸ(ສຽງ, ເຄື່ອງໝາຍ) ແລະດ້ານເນື້ອໃນ(ຄວາມໝາຍ) ຫຼືເວົ້າວ່າ ສິ່ງສະແດງກັບສິ່ງຖືກສະແດງ; ທັງສອງດ້ານນີ້, ມີການພົວພັນສົມທົບກັນຢ່າງສະໜິດແໜ້ນ. ທ່ານຊົດເຊຍ(Saussure) ເວົ້າວ່າ: "ພາສາມ່ນລະບົບເຄື່ອງໝາຍຊະນິດໜຶ່ງ ເຊິ່ງມີການປະສົມປະສານສົມທົບລະຫວ່າງສອງດ້ານ ແຕ່ວ່າການປະສານສົມທົບກັນນີ້ ບໍ່ ແມ່ນການປະສານສົມທົບກັນລະຫວ່າງວັດຖຸ, ເຫດການກັບຊື່ ເອີ້ນ, ມັນແມ່ນການປະສານສົມທົບກັນລະຫວ່າງຄວາມສຳນຶກກັບວັດຖຸ(ສຽງ, ເຄື່ອງໝາຍ).

ຕົວຢ່າງ: ຄຳວ່າ "ຄົນ" ສຽງນີ້ສະແດງເຖິງສັດຂັ້ນສູງຊະນິດໜຶ່ງທີ່ຮູ້ຄິ້ນຄິດ.

ສິ່ງສະແດງ = ຄົນ = ຄົນ

ສິ່ງຖືກສະແດງ = 🧍 = ຄົນ

ຄວາມແຕກຕ່າງທີ່ເປັນພື້ນຖານລະຫວ່າງສັນຍານລຳພັງກັບສັນຍານພາສາ ຢູ່ບ່ອນວ່າ ສັນຍານລຳພັງ ບໍ່ທັນມີເປົ້າໝາຍຊີ້ເຖິງສິ່ງໃດສິ່ງໜຶ່ງແນ່ນອນ ເຊັ່ນວ່າ "ຄວັນ" ບໍ່ທັນມີເປົ້າໝາຍຊີ້ເຖິງໄຟ ເພາະວ່າໃນຕົວຈິງແລ້ວ, "ຄວັນ" ບໍ່ອາດຈະແທນໃຫ້ "ໄຟ" ໄດ້ໃນທຸກກໍລະນີ ແລະ "ໄຟ" ກໍບໍ່

ແມ່ນສິ່ງຖືກສະແດງດ້ວຍຄວັນທຸກໆເທື່ອ. ຄວາມຈິງແລ້ວ, ສັບທີ່ວ່າ "ຄວັນ" ແມ່ນສິ່ງສະແດງໃຫ້ແກ່ທາດອາຍຊະນິດໜຶ່ງທີ່ມີສີຂາວ ຫຼືສີດຳ. ສ່ວນວ່າສັນຍານພາສາມັນຕ້ອງສະແດງ ຫຼືຊີ້ເຖິງເປົ້າໝາຍອັນແນ່ນອນ ເຊັ່ນ ສັບທີ່ວ່າ "ກິນ" ສະແດງໃຫ້ເຫັນການກະທຳເອົາອາຫານປ່ອນເຂົ້າປາກ, ຫຍ້ຳແລ້ວກືນລົງ.

ສະນັ້ນ, ຈຶ່ງເວົ້າໄດ້ວ່າ ສັນຍານ ພາສາແມ່ນສັນຍານທີ່ຮອບຄອບ ເຊິ່ງລວມມີສອງດ້ານ ຄື ດ້ານຮູບການ ແລະດ້ານເນື້ອໃນ.

๔. ລັກສະນະຕາງຂອງສັນຍານພາສາ

ສັນຍານພາສາມີລັກສະນະເສລີຕາມໃຈ, ສາຍພົວພັນລະຫວ່າງສິ່ງສະແດງກັບສິ່ງຖືກສະແດງແມ່ນບໍ່ມີເຫດຜົນຫຍັງເລີຍ, ສ່ວນຫຼາຍມີແຕ່ລັກສະນະກະຕວ ຫຼືກຳນົດແບບບໍ່ມີເຫດຜົນ. ທ່ານຊົດເຊຍ(Saussure) ເວົ້າວ່າ "ສັນຍານແມ່ນການກະຕວ" ພາສາມັນກໍແມ່ນສັນຍານຊະນິດໜຶ່ງ. ສະນັ້ນ, ມັນກໍມີລັກສະນະກະຕວ, ພຽງແຕ່ຕ້ອງການເງື່ອນໄຂທີ່ວ່າ ສັບ ນີ້ບໍ່ຕຳກັບສັບນັ້ນ ແລະທົ່ວສັງຄົມຮັບຮູ້ກໍພໍແລ້ວ. ຍ້ອນແນວນີ້, ໃນແຕ່ລະພາສາຈຶ່ງບໍ່ຄືກັນ.

ຕົວຢ່າງ: ພາສາລາວ = ຕົ້ນໄມ້
ພາສາຫວຽດ = Cây
ພາສາອັງກິດ = Tree
ພາສາຝຣັ່ງ = Arbre

ນອກຈາກນີ້, ພາສາກໍຍັງມີກໍລະນີສັບພ້ອມສຽງ ຄື ສັນຍານ ດຽວ ແຕ່ສະແດງເຖິງຈິດສຳນຶກຫຼາຍຢ່າງ ແລະກໍລະນີສັບພ້ອມຄວາມໝາຍ ຄືມີຫຼາຍສັນຍານ ແຕ່ສະແດງເຖິງຈິດສຳນຶກດຽວ ເຊັ່ນ

- ເຂົ້າ : ມີຫຼາຍຈິດສຳນຶກ(ເຂົ້າສຸກ, ເຂົ້າສານ, ເຂົ້າໃຈ...)
- ຕາຍ : ມັບ, ແຈບ, ເສຍຊີວິດ... ສະແດງເຖິງຈິດສຳນຶກດຽວ.

ຈາກບ່ອນນີ້, ຈຶ່ງເຫັນວ່າ ຊື່ເອີ້ນພຽງແຕ່ອີງຕາມຄວາມຊິນເຄີຍຂອງສັງຄົມເທົ່ານັ້ນ, ມັນລ້ວນແຕ່ແມ່ນການກຳນົດບໍ່ມີເຫດຜົນ ຫາກ ວ່າຊື່ເອີ້ນມີສາຍພົວພັນອັນແນ່ນອນກັບວັດຖຸສິ່ງຂອງ, ເຫດການ, ປາກົດການຕ່າງໆແລ້ວ ກໍເປັນອັນແນ່ນອນວ່າ ໝົດໂລກຈະມີແຕ່ພາສາດຽວ.

ເມື່ອເວົ້າເຖິງລັກສະນະບໍ່ມີເຫດຜົນຂອງພາສາ ບໍ່ ໝາຍວ່າຈະເດັດຖານສະເໝີໄປ ເພາະວ່າ ວິວັດທະນາການຂອງພາສາເວລາໃດມັນກໍມີທິດຂະຫຍາຍຕັ້ງແຕ່ບ່ອນບໍ່ມີເຫດຜົນ ແລະກົງກັນຂ້າມ ແຕ່ບ່ອນມີເຫດຜົນກັບການບໍ່ມີເຫດຜົນ ໃນເມື່ອມັນນອນຢູ່ໃນຫົວໜ່ວຍທີ່ໃຫຍ່ກວ່າ.

ຕົວຢ່າງ: ๑. "ຫ້ອງ" ບໍ່ມີເຫດຜົນ
⇨ ຫ້ອງຮຽນ(ມີເຫດຜົນ)
"ຮຽນ" ບໍ່ມີເຫດຜົນ

๘. ຫ້ອງຮຽນ + ລວມ = ຫ້ອງຮຽນລວມ(ມີເຫດຜົນ)
(ບໍ່ມີເຫດຜົນ) (ບໍ່ມີເຫດຜົນ)

ດັ່ງນັ້ນ, ພວກເຮົາອາດສະຫຼຸບໄດ້ວ່າ ລັກສະນະ ກະຕວງ ແລະກຳນົດບໍ່ມີເຫດຜົນນີ້ ມັນຍຶດປະລິມານສ່ວນຫຼາຍໃນພາສາ, ມັນແມ່ນຫຼັກການຕົ້ນຕໍ ແລະນຳໄປເຖິງບ່ອນລຶບຖິ້ມລັກສະນະມີເຫດຜົນ. ລັກສະນະມີເຫດຜົນພຽງແຕ່ພໍດ້ານ ແຕ່ວ່າທັງສອງຫຼັກການນີ້ ລ້ວນ ແຕ່ຕ້ອງການໃຫ້ແກ່ພາສາ. ຖ້າວ່າບໍ່ມີຫຼັກການກຳນົດ, ພາສາຈະບໍ່ຄົງຕົວ ແລະຖ້າວ່າບໍ່ມີຫຼັກການມີເຫດຜົນ ພາສາກໍຈະບໍ່ຂະຫຍາຍຕົວ.

ຄຳຖາມ

๑. ເປັນຫຍັງຈຶ່ງເວົ້າວ່າ "ພາສາກໍແມ່ນລະບົບອັນໜຶ່ງ" ອະທິບາຍ ແລະຊອກຕົວຢ່າງປະກອບ.
๘. ເປັນຫຍັງຈຶ່ງເວົ້າວ່າ "ພາສາກໍແມ່ນລະບົບສັນຍານຊະນິດໜຶ່ງ" ຈົ່ງອະທິບາຍແລະຊອກຕົວຢ່າງປະກອບ.
๙. ລັກສະນະສອງດ້ານຂອງສັນຍານພາສາມີແນວໃດ? ຊອກຕົວຢ່າງປະກອບ.
๔. ສັນຍານໃຊ້ພາສາແລະສັນຍານບໍ່ໃຊ້ພາສາຄືກັນ ແລະແຕກຕ່າງກັນຢູ່ບ່ອນໃດ? ຈົ່ງອະທິບາຍ.

ບົດທີ ७
ເຄົ້າກຳເນີດ ແລະການຂະຫຍາຍຕົວຂອງພາສາ

I. ເຄົ້າກຳເນີດຂອງພາສາ

ເຄົ້າກຳເນີດຂອງພາສາ ແມ່ນບັນຫາໜຶ່ງທີ່ສຳຄັນຂະແໜງພາສາສາດ, ນອກຈາກວິຊາພາສາສາດແລ້ວແລະວິຊາອື່ນໆ ເຊັ່ນ ປັດຊະຍາ, ຊົນຊາດວິທະຍາ, ປະຫວັດສາດ... ກໍໄດ້ເອົາໃຈໃສ່ບັນຫາເຄົ້າກຳເນີດຂອງພາສາຄືກັນ. ບັນຫາເຄົ້າກຳເນີດຂອງພາສາ ບໍ່ແມ່ນເລື່ອງທີ່ງ່າຍດາຍ, ເພາະບໍ່ມີເອກະສານຕົວຈິງຂອງຊາວບູຮານຢັ້ງຢືນ. ການຄົ້ນຄວ້າບັນຫານີ້, ມີແຕ່ອີງໃສ່ພື້ນຖານດ້ານພາສາສາດເພື່ອພິສູດ ແລະຢັ້ງຢືນ.

๑. ທິດສະດີຕ່າງໆວ່າດ້ວຍເຄົ້າກຳເນີດຂອງພາສາ

ໃນສະໄໝບູຮານ, ນັກທິດສະດີ, ນັກຄົ້ນຄວ້າຕ່າງໆກໍໄດ້ເອົາໃຈໃສ່ເຖິງບັນຫາເຄົ້າກຳເນີດຂອງພາສາຄືກັນ. ແຕ່ຍ້ອນໂລກະທັດຂອງເຂົາເຈົ້າເວລານັ້ນຢູ່ໃນຂອບເຂດຈຳກັດ. ສະນັ້ນເຂົາເຈົ້າພຽງແຕ່ແຕ່ງເປັນເທບນິຍາຍ ຫຼືນິຍາຍປະຫວັດສາດ ເພື່ອອະທິບາຍກ່ຽວກັບເຄົ້າກຳເນີດຂອງພາສາ. ໃນສະໄໝບູຮານໄດ້ມີ ๘ ພັກຝ່າຍ ເຊິ່ງມີ ๘ ທັດສະນະກົງກັນຂ້າມກັນ ຄື

- ພວກນັກສາສະໜາເວົ້າວ່າ: ເທບພະເຈົ້າເປັນຜູ້ສ້າງມະນຸດ, ສ້າງໂລກ ແລະປະທານພາສາແກ່ມະນຸດ. ບັນຫານີ້, ພວກເຮົາເຫັນວ່າຂາດບ່ອນອີງ, ເປັນເລື່ອງຈິດຕະນິຍົມ ແລະໄຝ່ຝັນ.
- ອີກພວກໜຶ່ງພັດເວົ້າວ່າ: ມະນຸດເປັນຜູ້ໃຫ້ກຳເນີດພາສາ. ແຕ່ພວກນີ້, ກໍຍັງໃຫ້ເຫດຜົນ ແລະຂໍ້ອ້າງອີງບໍ່ທັນພຽງພໍໃນການພິສູດບັນຫາດັ່ງກ່າວ.

ນັບຕັ້ງແຕ່ສະຕະວັດທີ XVII ເປັນຕົ້ນມາ, ນັກທິດສະດີທັງຫຼາຍ ຈຶ່ງ ໄດ້ເອົາໃຈໃສ່ຄົ້ນຄວ້າກ່ຽວກັບເຄົ້າກຳເນີດຂອງພາສາຢ່າງເອົາຈິງເອົາຈັງ. ສະນັ້ນຈຶ່ງມີທິດສະດີຕ່າງໆວ່າດ້ວຍເຄົ້າກຳເນີດຂອງພາສາ ຢ່າງເປັນກິ່ກເປັນປາຍຄັກແນ່ ຄື

๑.๑ ທິດສະດີລອກແບບຈາກທຳມະຊາດ

ເມື່ອມາຮອດກາງສະຕະວັດທີ XVII ໄດ້ມີນັກປັດຊະຍາຈິດຕະນິຍົມເຍຍລະມັນຫຼາຍຄົນ ຢັ້ງຢືນທິດສະນີ້. ຕົວແທນກໍແມ່ນທ່ານແຮຣ໌ເດີ(Herder) ລາວເວົ້າວ່າ: ເມື່ອຄົນເຮົາພົວພັນກັບທຳມະຊາດ ໄດ້ຍິນສຽງສັດຮ້ອງ, ນ້ຳໄຫຼ, ໄມ້ສີກັນ... ກໍຮຽກຊື່ຕາມສຽງນັ້ນ ເຊັ່ນວ່າ

- ສຽງແມວຮ້ອງວ່າ ແມວໆ ກໍເອີ້ນວ່າ ແມວ.
- ສຽງກັບແກ້ຮ້ອງວ່າ ກັບແກ້ໆ —"— ກັບແກ້.
- ສຽງກາຮ້ອງວ່າ ກາໆ —"— ກາ.
- ສຽງແບ້ຮ້ອງວ່າ ແບ້ໆ —"— ແບ້.

ທິດສະດີນີ້ໄດ້ສົ່ງຜົນສະທ້ອນ ແລ່ະຂະຫຍາຍແຮງກວ່າໝູ່ໃນສະຕະວັດທີ XIX ແລະມີນັກພາສາສາດຫຼາຍຄົນ ໄດ້ຊອກວິທີພິສູດໃຫ້ແກ່ຄວາມຖືກຕ້ອງຂອງທິດສະດີນີ້ຕະຫຼອດມາ. ພວກເຮົາກໍບໍ່ປະຕິເສດທິດສະດີນີ້ຢ່າງສິ້ນເຊີງ ເພາະວ່າໃນແຕ່ລະພາສາກໍມີຄຳສັບສຳນວນສອນສຽງຈຳນວນໜຶ່ງ,

ແຕ່ມີປະລິມານໜ້ອຍທີ່ສຸດ; ຊ້ຳບໍ່ໜຳບາງເທື່ອສັບນີ້ຢູ່ໃນພາສານີ້ແມ່ນສັບລອກແບບ ແຕ່ຢູ່ໃນສັບພາສາອື່ນພັດບໍ່ແມ່ນ. ສະນັ້ນ, ທິດສະດີນີ້ກໍບໍ່ທັນຊັດເຈນເທົ່າທີ່ຄວນ.

๑.๘ ทิดสะดิอุทาน(ทิดสะดิอาลົมจิด)

ເມື່ອຮອດສະຕະວັດທີ XVIII ມີນັກປັດຊະຍາຊາວຝຣັ່ງຜູ້ໜຶ່ງຊື່ວ່າ ກົງດີຍັກ(Condillac) ໄດ້ໃຫ້ຄວາມເຫັນວ່າ ເຄົ້າກຳເນີດຂອງພາສາແມ່ນມາຈາກການກະຕຸກ ເພາະໃນສະໄໝປະຖົມບູຮານນັ້ນ, ຄົນເຮົາໄດ້ຕິດພັນກັບໂລກອ້ອມຂ້າງ ເຊິ່ງມີບາງອັນກໍເປັນສິ່ງແປກປະຫຼາດ, ອັດສະຈັນ ແລະ ສູງກວ່າຄວາມຮັບຮູ້ຂອງຄົນສະໄໝນັ້ນ, ສິ່ງເຫຼົ່ານີ້ໄດ້ກະທົບໃສ່ເຂົາເຈົ້າ ແລ້ວເຮັດໃຫ້ເຂົາເຈົ້າເກີດມີຄວາມຮູ້ສຶກສະເທືອນໃຈ ແລ້ວເປັ່ງສຽງອຸທານອອກ ເຊັ່ນ ໂອ້, ໂຢວ້, ອ້າ!... ນີ້ແມ່ນສຽງພາສາເທື່ອທຳອິດຂອງມະນຸດ ແລະພາສາກໍກຳເນີດມາຈາກສຽງອຸທານຕ່າງໆນີ.

ທ່ານ ຣຸດໂຊ(Rousseau) ກໍໄດ້ສະໜັບສະໜູນທິດສະດີນີ້ຄືກັນ ທ່ານເວົ້າວ່າ: ອາລົມຈິດໃຫ້ກຳເນີດແກ່ສຽງເປັນເທື່ອທຳອິດ, ພາສາໃນຄັ້ງແຮກແມ່ນເຕັມໄປດ້ວຍສຽງເພງອາລົມຈິດ ພາຍລຸນມາຈຶ່ງກາຍເປັນພາສາທີ່ຫຼຸ່ນໄຫຼ. ພາສາຂອງມະນຸດປະຖົມບູຮານ ບໍ່ແມ່ນພາສາຂອງນັກຊ່ຽວຊານດ້ານຄະນິດສາດ, ມັນແມ່ນພາສາຂອງນັກກະວີ.

ທັງໝົດນີ້, ຢາກຢັ້ງຢືນວ່າ ຄົນເຮົາມີອາລົມຈິດກ່ອນຈຶ່ງມີສຽງ, ຈາກນັ້ນຈຶ່ງເກີດມີຄວາມເວົ້າທຳມະດາ. ພວກເຮົາເຫັນວ່າທິດສະດີນີ້ກໍຜິດພາດ ເພາະບໍ່ມີບ່ອນອີງຄັກແນ່, ຍັງບໍ່ທັນສາມາດແກ້ໄຂບັນຫາເຄົ້າກຳເນີດຂອງພາສາໄດ້.

๑.๙ ทิดสะดิภิดบัด

ຜູ້ວາງທິດສະດີນີ້ອອກແມ່ນ ທ່ານຮຸດ ໂຊ, ລາວເວົ້າວ່າ: ຊີວິດຂອງມະນຸດເຮົາແບ່ງອອກເປັນ ๘ ໄລຍະ ຄື

① ໄລຍະທີ ๑ ເອີ້ນວ່າໄລຍະທຳມະຊາດ ໝາຍ ເອົາໄລຍະມະນຸດຍັງແມ່ນພາກສ່ວນໜຶ່ງຂອງທຳມະຊາດ, ເວລານັ້ນຍັງບໍ່ທັນມີຕັກກະຖານເທື່ອ ແຕ່ອາລົມຈິດຂອງຄົນເຮົາພັດອຸດົມສົມບູນແລ້ວ. ສະນັ້ນ, ພາສາຈຶ່ງເລີ່ມເກີດມາຈາກອາລົມຈິດ.

② ໄລຍະທີ ๘ ແມ່ນໄລຍະສີວິໄລ ໝາຍ ເອົາໄລຍະຄົນເຮົາມີຕັກກະຖານ ເຊິ່ງເຂົ້າໃຈແບບມີເຫດຜົນແລ້ວ. ເວລານີ້, ຄົນເຮົາຈຶ່ງພ້ອມກັນກຳນົດກົດບັດພາສາຂຶ້ນມາໃຊ້.

ທິດສະດີນີ້ ກໍຍັງບໍ່ທັນສົມບູນແບບເທື່ອ, ເນື່ອງຈາກວ່າໄລຍະນັ້ນ ຊາວ ບູຮານຈະເອົາສິ່ງໃດມາປຶກສາຫາລືກັນ ເພື່ອກຳນົດກົດບັດພາສານັ້ນອອກ.

๑.๑๐ ทิดสะดิอ่าด้อยท่าที

ນັກປັດຊະຍາຈິດຕະນິຍົມຂອງເຢຍລະມັນ ຊື່ວ່າ ເຮແກນ(Hegel) ແລະນັກຈິດຕະສາດຂອງເຢຍລະມັນ ຊື່ວ່າ ວູນ(Wundt) ເປັນຜູ້ໃຫ້ກຳເນີດແກ່ທິດສະດີນີ້. ຈາກນັ້ນກໍມີນັກພາສາດລັດເຊຍ ຊື່ວ່າ ມາຣ໌(Marr) ເປັນຜູ້ສືບຕໍ່ຂະຫຍາຍທິດສະດີນີ້, ລາວເວົ້າວ່າໃນເບື້ອງຕົ້ນ ຄົນ ເຮົາຍັງບໍ່ທັນມີພາສາເປັນສຽງ ແລະຈິນຕະນາການນາມທຳ, ມີພຽງແຕ່ຈິນຕະນາການປະຈັກຕາ, ເວລາແລກປ່ຽນນຳກັນຄົນເຮົາຕ້ອງອາໄສທ່າທີ. ພາສາທ່າທີເກີດກ່ອນນີ້ປະມານ ๑.๐๐๐.๐๐๐-๑.๕๐๐.๐๐๐ ປີ. ສ່ວນ

ພາສາຫາກໍເປັນສຽງ ແລະຫາກໍເກີດກ່ອນນີ້ປະມານ ๕๐.๐๐๐-๕๐๐.๐๐๐ ປີ. ພວກເຮົາເຫັນວ່າທິດສະດີນີ້ແມ່ນຜິດພາດ ແລະຝືນກັບວິທະຍາສາດທີ່ສຸດ. ລັດທິມາກ-ເລນິນ ໄດ້ຢັ້ງຢືນວ່າ: ພາສາເປັນສຽງ ແມ່ນກຳເນີດພ້ອມກັບມະນຸດ.

ເມື່ອເບິ່ງລວມແລ້ວ, ພວກເຮົາເຫັນວ່າທິດສະດີຕ່າງໆ ທີ່ເວົ້າມາຂ້າງເທິງນີ້ ສ່ວນ ຫຼວງຫຼາຍ ແມ່ນຜິດພາດ ບໍ່ທັນສາມາດແກ້ໄຂກ່ຽວກັບບັນຫາເຄົ້າກຳເນີດຂອງພາສາໄດ້.

๘. ລັດທິມາກກ່ຽວກັບເຄົ້າກຳເນີດຂອງພາສາ

ຢາກແກ້ໄຂເຄົ້າກຳເນີດຂອງພາສາໄດ້ ຂແໜງພາສາສາດ ຕ້ອງໄດ້ສົມທົບກັບຫຼາຍຂະແໜງ ເຊັ່ນ ຊົນຊາດວິທະຍາ, ຊີວະສາດ ແລະຂະແໜງອື່ນໆອີກ.

ຫາກເວົ້າເຖິງພາສາຈະໄດ້ເວົ້າເຖິງມະນຸດ ເພາະມີແຕ່ມະນຸດຈຶ່ງມີພາສາ. ສະນັ້ນ, ເມື່ອເວົ້າເຖິງເຄົ້າກຳເນີດຂອງພາສາ ມັນກໍຕິດພັນກັບເຄົ້າກຳເນີດຂອງມະນຸດ.

๘.๑ ການອອກແຮງງານໃຫ້ກຳເນີດແກ່ມະນຸດ

ໃນສະຕະວັດທີ XIX ທ່ານດັກວິນ(Darwin) ໄດ້ຢັ້ງຢືນວ່າ ຄົນເຮົາມີເຄົ້າກຳເນີດມາຈາກທະນີຊະນິດໜຶ່ງ ເຊິ່ງເອີ້ນວ່າ "ທະນີຄົນ" ແລະທະນີຊະນິດນີ້ ກໍໄດ້ສູນພັນໄປຈາກໂລກນີ້ດົນແລ້ວ. ຈາກນັ້ນທ່ານອັງແກນກໍໄດ້ເວົ້າວ່າ "ການອອກແຮງງານ ແມ່ນເງື່ອນໄຂທຳອິດທີ່ໃຫ້ກຳເນີດແກ່ມະນຸດ ໝາຍຄວາມວ່າ ຜ່ານຂະບວນວິວັດແຫ່ງການອອກແຮງງານເປັນເວລາດົນນານ ທະນີ ຄົນຈຶ່ງຄ່ອຍໆ ຜັນປ່ຽນດ້ານສະລີລະ ເພື່ອກາຍມາເປັນຄົນທີ່ສົມບູນ ແລະວິວັດການຜັນປ່ຽນນີ້ໄດ້ດຳເນີນໄປຢ່າງ ສັບສົນ ແລະຍາວນານທີ່ສຸດ. ຍ້ອນວ່າການອອກແຮງງານໃຫ້ກຳເນີດແກ່ມະນຸດ. ສະນັ້ນ, ມັນກໍຈະ ມີແຕ່ການອອກແຮງງານອັນໜຶ່ງອັນດຽວເທົ່ານັ້ນ ທີ່ໃຫ້ກຳເນີດແກ່ພາສາຂອງມະນຸດ ແລະກໍແມ່ນ ຍ້ອນມີພາສາເປັນສຽງນີ້ ຈຶ່ງ ເຮັດໃຫ້ມະນຸດແຍກຕົວອອກຈາກໂລກແຫ່ງຄວາມເປັນສັດ ແລ້ວທ້ອນ ໂຮມມາເປັນສັງຄົມ.

๘.๘ ການອອກແຮງງານໃຫ້ກຳເນີດພາສາ

ທ່ານອັງແກນເວົ້າວ່າ: "ອອກປອງ ແລະບັນດາມູນພາກອື່ນໆ ທີ່ພົວພັນກັບອອກປອງນັບມື້ຂະຫຍາຍຄວາມຮັບຮູ້ ກໍ ນັບມື້ນັບເສາະໃສກວ່າເກົ່າ, ຄວາມສາມາດຮັບຮູ້ດ້ວຍນາມທຳ ແລະການຄົ້ນຄິດແບບນາມທຳກໍຄ່ອຍໆຂະຫຍາຍ, ສິ່ງເຫຼົ່ານີ້ໄດ້ກາຍເປັນພະລັງອັນໜຶ່ງ ເພື່ອຊຸກຍູ້ໃຫ້ແກ່ການອອກແຮງງານ ກໍ ຄືພາສາຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ" ແລະທ່ານຍັງເວົ້າຕື່ມອີກວ່າ "ພາສາເລີ່ມກຳເນີດຢູ່ໃນການອອກແຮງງານ ແລະຂະຫຍາຍພ້ອມກັບການອອກແຮງງານ, ນັ້ນແມ່ນວິທີອະທິບາຍອັນຖືກຕ້ອງທີ່ສຸດ ກ່ຽວກັບເຄົ້າກຳເນີດຂອງພາສາ".

ຜ່ານຄຳເວົ້າຂອງທ່ານອັງແກນທີ່ກ່າວມາຂ້າງເທິງນີ້, ເພິ່ນຢາກເວົ້າ ๘ ບັນຫາຕົ້ນຕໍ ຄື

❶ ການອອກແຮງງານ ມັນຕັດສິນຄວາມອາດສາມາດ ໃຫ້ແກ່ການກຳເນີດພາສາ: ໃນເວລາທີ່ທະນີຄົນຍັງຢູ່ເທິງງ່າໄມ້ນັ້ນ ມັນບໍ່ ທັນມີຈິນຕະນາການ, ເພດານ, ເຫືອກ ແລະຄໍ ມີລັກສະນະເປັນເສັ້ນຊື່, ລົມທີ່ອອກຈາກປອດບໍ່ຖືກກີດກັ້ນຫຼາຍປານໃດ. ພາຍຫຼັງທີ່ລົງມາຢູ່ໜ້າດິນ ແລະຜ່ານການອອກແຮງງານເປັນເວລາດົນນານ ຕີນ ແລະມືຄ່ອຍໆມີການຈຳແນກ, ທະນີຄົນກໍຄ່ອຍໆຢືນຊື່

ເທື່ອລະກ້າວ. ເມື່ອຢືນຊື່ກໍຈະເຮັດໃຫ້ຄໍ ແລະເພດານມີລັກສະນະຕັ້ງສາກ, ລົມອອກຈາກປອດຖືກກີດກັ້ນຊ້າລົງ, ສຽງທີ່ກະຈາຍອອກ ກໍມີຫຼາຍສຽງເພີ່ມຂຶ້ນ ແລະຄ່ອຍໆຈຳແນກສຽງໄດ້ແຈ້ງ.

ບັນຫານີ້ ແມ່ນເງື່ອນໄຂຕົ້ນຕໍທີ່ເຮັດໃຫ້ພາສາກຳເນີດ. ຜ່ານການອອກແຮງງານເປັນເວລາດົນນານ ໄດ້ເຮັດໃຫ້ສະລີລະຕ່າງໆຂອງທະນີຄົນ ຄ່ອຍໆ ເປັນສະລີລະຂອງຄົນໂດຍສົມບູນ, ອິນຊີທັງ ๕ ກໍຄ່ອຍຂະຫຍາຍ, ແສງຕາໄດ້ເຫັນໄກກວ່າເກົ່າ, ໄດ້ສຳຜັດກັບໂລກອ້ອມຂ້າງກວ້າງອອກ, ອອກປອງກັນນັບມື້ຂະຫຍາຍ, ຈິນຕະການນາມທຳກໍປາກົດມີ. ສິ່ງທັງໝົດເຫຼົ່ານີ້ ໄດ້ເປັນຂີດໝາຍຢ່າງຈະແຈ້ງ ແລະຢັ້ງຢືນວ່າ ຄົນເຮົາໄດ້ແຍກຕົວອອກຈາກໂລກແຫ່ງຄວາມເປັນສັດເດຍລະສານ ແລ້ວເຕົ້າໂຮມເປັນສັງຄົມ.

❷ ຜົນສະທ້ອນຂອງການອອກແຮງງານ ເປັນເງື່ອນໄຂໃຫ້ແກ່ການກຳເນີດພາສາ ຄື

ມະນຸດເຮົາສ້າງຫຍັງຂຶ້ນມາ ເຖິງວ່າມັນຈະໜ້ອຍຫຼືຫຼາຍປານໃດກໍຕາມ ກໍລ້ວນແຕ່ມີຈຸດປະສົງ ແລະຄາດໝາຍຄັກແນ່, ພາສາກຳເນີດຂຶ້ນກໍຍ້ອນຄວາມຮຽກຮ້ອງຕ້ອງການ ອັນຮີບດ່ວນຂອງສັງຄົມມະນຸດໃນສະໄໝນັ້ນ ເພື່ອແລກປ່ຽນຄົບຄ້າອາລົມຈິດນຳກັນ. ທ່ານອັງແກນເວົ້າວ່າ: "ການອອກແຮງງານ, ມັນໄດ້ນຳໄປເຖິງຜົນທີ່ຈຳເປັນອັນໜຶ່ງ, ນັ້ນກໍຄືການຜູກພັນກັນລະຫວ່າງຄົນກັບຄົນຢູ່ໃນສັງຄົມ ດ້ວຍວິທີສ້າງຫຼາຍກິດຈະກຳຂຶ້ນ ເພື່ອໃຫ້ຄົນເຮົາໄດ້ແລກປ່ຽນ, ຊ່ວຍເຫຼືອເຊິ່ງກັນແລະກັນ, ເຮັດໃຫ້ທຸກຄົນຮັບຮູ້ ແລະເຂົ້າໃຈຕໍ່ຜົນຂອງກິດຈະກຳເຫຼົ່ານັ້ນ".

ສະຫຼຸບລວມແລ້ວ, ພາສາເປັນສຽງແມ່ນກຳເນີດອອກມາຈາກການອອກແຮງງານ, ກຳເນີດພ້ອມຈິນຕະນາການ ແລະກຳເນີດພ້ອມກັບການກຳເນີດຂອງມະນຸດ. ຍ້ອນຜົນສະທ້ອນຂອງການອອກແຮງງານຈຶ່ງເຮັດໃຫ້ພາສາຄ່ອຍໆກຳເນີດ ພ້ອມກັບວິວັດການຫັນປ່ຽນແປງ ຕັ້ງແຕ່ທະນີຄົນມາເປັນຄົນ.

II. ການຂະຫຍາຍຕົວຂອງພາສາ

๑. ສາເຫດໃນການຂະຫຍາຍຕົວຂອງພາສາ

๑.๑ ສາເຫດດ້ານສັງຄົມ

- ຄວາມຈະເລີນກ້າວໜ້າຂອງສັງຄົມ ໄດ້ຊຸກດັນໃຫ້ພາສາຂະຫຍາຍຕົວ ຄື ສັງຄົມມີຄວາມຈະເລີນກ້າວໜ້າພຽງໃດ ພາສາ ກໍສ່ອງແສງໃຫ້ເຫັນໂລດ ເພາະໜ້າທີ່ຕົ້ນຕໍຂອງພາສາແມ່ນເປັນພາຫະນະສຳລັບແລກປ່ຽນຄົບຄ້າໃນສັງຄົມ, ຫາກພາສາບໍ່ສ່ອງແສງຄວາມກ້າວໜ້າຂອງສັງຄົມໄດ້ ມັນກໍຈະບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການແລກປ່ຽນຄົບຄ້າອາລົມຈິດໄດ້.

ເວລາສັງຄົມກ້າວໜ້າຂະຫຍາຍຕົວນັ້ນ ພາສາ ກໍຄ່ອຍໆຂະຫຍາຍຕົວໄປນຳ ແລະສ່ອງແສງໃຫ້ເຫັນໂລດ ດ້ວຍ ຮູບການທີ່ວ່າ ມູນ ສານໃໝ່ທີ່ກ້າວໜ້າຂອງພາສາປາກົດຕົວຂຶ້ນ, ມູນສານເກົ່າທີ່ຫຼ້າຫຼັງກໍຈະໝົດໄປ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນລະດັບໃໝ່. ການຂະຫຍາຍຕົວຂອງພາສານີ້, ພວກເຮົາເຫັນແຈ້ງກວ່າໝູ່ຢູ່ໃນອັດຈະນານຸກົມ. ຢູ່ລາວເຮົາປັດຈຸບັນໄດ້ມີຄຳສັບໃໝ່ເກີດຂຶ້ນຢ່າງຫຼວງຫຼາຍ ເຊັ່ນ ຄອມພິວເຕີ, ເຕັກໂນໂລຊີ, ວິທະຍາສາດ...

- ການພົວພັນລະຫວ່າງສັງຄົມດ້ວຍກັນໄດ້ຊຸກດັນໃຫ້ພາສາຂະຫຍາຍຕົວ ມາຮອດປັດຈຸບັນນີ້, ສາຍພົວພັນລະຫວ່າງ ສັງຄົມດ້ວຍກັນ ແມ່ນກວ້າງຂວາງທີ່ສຸດ ເງື່ອນໄຂອັນນີ້ ກໍໄດ້ເຮັດໃຫ້ພາສາ

ຂະຫຍາຍຕົວຄືກັນ. ຄືດັ່ງພວກເຮົາຮູ້ໃນປັດຈຸບັນ ວິທະຍາສາດ ກ່ຽວກັບໂລກ ມັນ ໄດ້ກ້າວໄປເຖິງ ບ່ອນວ່າ ມີລັກສະນະສາກົນ ແລະຜົນສຳເລັດທາງດ້ານວິທະຍາສາດນີ້ ມັນໄດ້ນຳໄປເຖິງບ່ອນວ່າມີ ການແລກປ່ຽນເທັກໂນໂລຊີ, ວັດທະນະທຳລະຫວ່າງຊາດ. ບັນຫານີ້ມັນກໍເຮັດໃຫ້ພາສາຂອງແຕ່ລະ ຊາດນັ້ນຂະຫຍາຍຕົວຂຶ້ນຕື່ມ. ມາຮອດເວລານີ້, ການຢືມສັບພາສາຂອງກັນແລະກັນ ກໍເກີດມີຂຶ້ນ ແລະກາຍເປັນຫຼັກການລວມໃຫ້ແກ່ທຸກໆພາສາ. ການຢືມສັບພາສາອື່ນທີ່ຈຳເປັນເຂົ້າມາໃຊ້ໃນພາສາ ຕົນ ກໍແມ່ນເງື່ອນໄຂໜຶ່ງທີ່ເຮັດໃຫ້ພາສາຂອງຊາດມີຄວາມອຸດົມສົມບູນຂຶ້ນຕື່ມ ແລະມັນທັງແມ່ນປາ ກົດການແຫ່ງການຂະຫຍາຍຕົວຂອງພາສາຊາດຕົນອີກດ້ວຍ.

๑.๘ ສາເຫດໃນຕົວຂອງພາສາ

ປາກົດການແຫ່ງການຂະຫຍາຍຕົວຂອງພາສາ ແມ່ນມີຫຼາຍຮູບຫຼາຍແບບ ໜຽງ ແຕ່ອີງໃສ່ສັງ ຄົມຢ່າງດຽວແມ່ນພວກເຮົາບໍ່ສາມາດອະທິບາຍໄດ້. ທ່ານອັງແກນເວົ້າວ່າ "ຖ້າບໍ່ຢາກເປັນຕົວຕະຫຼົກ ກໍເປັນການຍາກທີ່ຈະເອົາສາເຫດດ້ານເສດຖະກິດ ມາອະທິບາຍປາກົດການຜັນປ່ຽນພະຍັນຊະນະຢູ່ ໃນພາສາເຢຍລະມັນບູຮານ". ໝາຍຄວາມວ່າການຂະຫຍາຍຕົວຂອງພາສາ ມັນ ກໍມີການຂະຫຍາຍ ຕົວແບບໜຶ່ງຕ່າງຫາກ ເຊິ່ງມີທັງກົດເກນລວມໃຫ້ແກ່ພາສາທົ່ວໄປ ແລະກົດເກນສະເພາະຂອງພາ ສາໃດໜຶ່ງ.

+ ກົດເກນລວມ

- ພາສາບໍ່ຂະຫຍາຍຕົວໄປຕາມເສັ້ນທາງແບບປະຕິວັດກະໂດດຂັ້ນ, ມັນຄ່ອຍໆຂະຫຍາຍຕັ້ງ ແຕ່ພາສາຊົນກົມຈົນຮອດພາສາແຫ່ງຊາດ. ທຸກໆພາສາລ້ວນແຕ່ຂະຫຍາຍໄປຕາມແບບທີ່ວ່າຄ່ອຍໆ ລຶບຖິ້ມບັນດາມູນພາກທີ່ເກົ່າແກ່ຫຼ້າຫຼັງ ແລະປ່ຽນແທນດ້ວຍບັນດາມູນພາກໃໝ່ທີ່ເໝາະສົມກວ່າ ເຊິ່ງຄ່ອຍໆເຮັດໃຫ້ພາສາອຸດົມສົມບູນຂຶ້ນ.
- ການຂະຫຍາຍຕົວຂອງພາສາມັນບໍ່ສະໝ່ຳສະເໝີກັນທຸກດ້ານ, ພາກສ່ວນໜຶ່ງຂະຫຍາຍຕົວ ກໍໝາຍຄວາມວ່າ ມັນມີການປ່ຽນແປງ ແລະຂະຫຍາຍຕົວ. ຕາມທຳມະດາພາກສ່ວນວັດຈະນາເປັນ ພາກສ່ວນຂະຫາຍຕົວໄວ ແລະເຫັນແຈ້ງກວ່າໝູ່, ສ່ວນອັກຂະຫຼະປ່ຽນແປງຊ້າກວ່າ ແລະໄວຍາ ກອນຍັງປ່ຽນແປງຊ້າກວ່າວັດຈະນາພື້ນຖານ(ປະມວນຄຳສັບພື້ນຖານ) ອີກ.

+ ກົດເກນສະເພາະ

ກົດເກນການຂະຫຍາຍພາຍໃນຂອງແຕ່ລະພາສາແມ່ນບໍ່ຄືກັນ, ມັນອີງຕາມສະພາບຕົວຈິງ ເຊິ່ງສະແດງອອກໃນແຕ່ລະດ້ານ ຄື ອັກຂະຫຼະ , ວັດຈະນາ ແລະໄວຍາກອນ ເປັນຕົ້ນ. ໃນພາສາ ໃດໜຶ່ງຈຸດພິເສດດ້ານນີ້ ອາດເປັນຜົນສະທ້ອນເຖິງດ້ານນັ້ນ ແລະແຕ່ລະດ້ານຊຸກຍູ້ກັນ ເພື່ອເຮັດໃຫ້ ພາສາຂະຫຍາຍຕົວ. ບາງກໍລະນີ, ຫຼາຍພາສາອາດມີກົດເກນຂະຫຍາຍພາຍໃນຄືກັນ, ອັນນີ້ແນ່ ນອນແລ້ວວ່າ ຕ້ອງ ແມ່ນພາສາຕະກຸນດຽວກັນ. ກົດເກນການຂະຫຍາຍຕົວພາຍໃນຂອງແຕ່ລະພາ ສາ ແມ່ນກົດເກນພາວະວິໄສ ໂດຍອີງໃສ່ເງື່ອນໄຂປະຫວັດສາດຂອງປວງຊົນພາຍໃນຊາດທີ່ໃຊ້ພາ ສານັ້ນເປັນສິ່ງຕັດສິນ. ຍ້ອນແນວນັ້ນ, ເວລາຄົ້ນຄວ້າການຂະຫຍາຍຂອງພາສາ ຈຶ່ງຕ້ອງອີງໃສ່ຈຸດ ພິເສດຂອງພາສານັ້ນເປັນຕົ້ນຕໍ.

๘. ຂະບວນວິວັດຕົ້ນຕໍແຫ່ງການຂະຫຍາຍຕົວຂອງພາສາ

ສັງຄົມມະນຸດໄດ້ຂະຫຍາຍຕັ້ງແຕ່ກົກເຫົ່າຂຶ້ນເປັນຊົນເຜົ່າ, ແຕ່ຊົນເຜົ່າຂຶ້ນເປັນຊົນຊາດ, ແຕ່ຊົນຊາດແລ້ວຈຶ່ງຂຶ້ນເປັນຊາດ. ຍ້ອນແນວນັ້ນ, ທ່ານສະຕາລິນຈຶ່ງເວົ້າວ່າ: "ພາສາກໍຂະຫຍາຍຕົວຕັ້ງແຕ່ພາສາກົກເຫົ່າຮອດພາສາຊົນເຜົ່າ, ແຕ່ພາສາຊົນເຜົ່າຮອດພາສາຊົນຊາດ ແລະແຕ່ພາສາຊົນຊາດຮອດພາສາແຫ່ງຊາດ".

ໃນສະໄໝສັກດິນາ, ປະເທດໃຫຍ່ອາດຖືກຕັດແບ່ງເປັນຫຼາຍປະເທດນ້ອຍຂັດແຍ່ງກັນ, ຍ້ອນແນວນັ້ນຈຶ່ງພາໃຫ້ເກີດມີພາສາທ້ອງຖິ່ນຫຼາຍພາສາຕ່າງກັນ ເຊິ່ງໃນນັ້ນມີພາສາທ້ອງຖິ່ນຈຳນວນໜຶ່ງຢາກຄ້າຍຄືກັນ ແລະພາສາທ້ອງຖິ່ນບາງພາສາກໍຕ່າງກັນຈະແຈ້ງ.

ໂດຍອີງໃສ່ເງື່ອນໄຂປະຫວັດສາດ, ອາດມີພາສາທ້ອງຖິ່ນໃດໜຶ່ງຄ່ອຍໆຂະຫຍາຍແລ້ວ ກາຍເປັນພາສາແຫ່ງຊາດເອກະພາບ ເຊັ່ນ ພາສາ ທ້ອງຖິ່ນປາຣີ ເປັນພື້ນຖານໃຫ້ແກ່ພາສາແຫ່ງຊາດຝຣັ່ງ, ພາສາທ້ອງຖິ່ນມົດສະກູ ແລະທ້ອງຖິ່ນອ້ອມຂ້າງມົດສະກູ ໄດ້ກາຍເປັນພື້ນຖານໃຫ້ແກ່ພາສາແຫ່ງຊາດຂອງສະຫະພັນລັດເຊຍ.

ການຂະຫຍາຍຕົວຂອງພາສາ ແມ່ນຜ່ານວິວັດການທີ່ສັບສົນລະອຽດລະອໍ້ງວຕາມສັງຄົມ ການ ຂະຫຍາຍຕົວຂອງພາສາ ແມ່ນບໍ່ສາມາດຕັດແຍກອອກຈາກການຂະຫຍາຍຕົວຂອງສັງຄົມ ເຖິງວ່າພາສາຈະຜ່ານຂະບວນວິວັດການຂະຫຍາຍຕົວທີ່ສັບສົນກໍຕາມ ແຕ່ເມື່ອສັງຮວມແລ້ວ ກໍ ເຫັນວ່າມີ ๘ ໄລຍະຕົ້ນຕໍ ຄື ໄລຍະຜັນແຍກ ແລະໄລຍະເອກະພາບ.

๘.๑ ໄລຍະຜັນແຍກ

ໃນໄລຍະນີ້ ແມ່ນໄລຍະວິວັດແຫ່ງການກຳເນີດພາສາທ້ອງຖິ່ນ ຫຼືພາສາທີ່ມາຈາກຕະກຸນດຽວກັນ ແລະການຜັນແຍກຂອງພາສາແມ່ນຍ້ອນການຜັນແຍກຂອງສັງຄົມເປັນສິ່ງຕັດສິນ. ເມື່ອສັງຄົມແຍກອອກຈາກກັນ, ພາສາກໍຄ່ອຍໆແຍກອອກຈາກກັນ ແລະໄລຍະຜັນແຍກນີ້ ກໍ ເຄີຍມີຢູ່ໃນທຸກໆພາສາ. ມັນສະແດງອອກແຈ້ງໃນສຳນຽງສຽງປາກຂອງທ້ອງຖິ່ນ. ນອກຈາກນັ້ນ, ການໃຊ້ສັບພາສາກໍບໍ່ເອກະພາບກັນໃນບາງສັບ ເຊັ່ນວ່າ ຢູ່ທ້ອງຖິ່ນນີ້ມີຄຳສັບນີ້ ແຕ່ຢູ່ທ້ອງຖິ່ນອື່ນພັດບໍ່ມີ. ບັນຫານີ້ແມ່ນຜົນສະທ້ອນມາຈາກການຜັນແຍກຂອງພາສາທີ່ມີມາແຕ່ບູຮານນະການ.

๘.๑ ໄລຍະເອກະພາບ

ໄລຍະນີ້ ແມ່ນໄລຍະເຕົ້າໂຮມພາສາຢູ່ໃນຕະກຸນດຽວກັນ ໃຫ້ເປັນພາສາແຫ່ງຊາດເອກະພາບ ຫຼືວ່າແມ່ນໄລຍະທີ່ເຮັດໃຫ້ພາສາທີ່ຕະກຸນຕ່າງກັນຄ່ອຍໆຫຍັບເຂົ້າຫາກັນ. ວິວັດການທ້ອນໂຮມພາສາໃຫ້ເປັນເອກະພາບນີ້ ແມ່ນຫຍຸ້ງຍາກສັບສົນທີ່ສຸດ. ກ່ອນພາສາຈະເຕົ້າໂຮມເປັນພາສາແຫ່ງຊາດເອກະພາບນັ້ນ, ຕາມທຳມະດາຕ້ອງຜ່ານ ๘ ໄລຍະຕື່ມອີກ ຄື ໄລຍະສົມທົບ ແລະໄລຍະປະສົມ.

- ໄລຍະສົມທົບ: ໝາຍເຖິງໄລຍະທີ່ໃຊ້ພາສາທ້ອງຖິ່ນຕ່າງໆຄວບຄູ່ກັນໄປ ໄລຍະນີ້ເປັນໄລຍະຕົ້ນຂອງວິວັດການທ້ອນໂຮມພາສາທ້ອງຖິ່ນໃຫ້ເປັນເອກະພາບ.
- ໄລຍະປະສົມ: ໃນໄລຍະໃຊ້ພາສາທ້ອງຖິ່ນຕ່າງໆຄວບຄູ່ໄປນັ້ນ, ແຕ່ລະພາສາທ້ອງຖິ່ນນັ້ນຄ່ອຍໆປະສົມເຂົ້າກັນ ແລ້ວກໍ່ໃຫ້ເກີດພາສາໜຶ່ງເອກະພາບ.

ວິວັດການທ້ອນໂຮມພາສາທ້ອງຖິ່ນຕ່າງໆເຂົ້າເປັນເອກະພາບນີ້ ໄດ້ດຳເນີນໄປຢ່າງລະອຽດລະອຽ ແລະໃຊ້ເວລາເທິງນານ ເຊິ່ງວິວັດອັນນີ້ມັນໄດ້ດຳເນີນໄປຄຽງຄູ່ກັບວິວັດແຫ່ງຄວາມເປັນເອກະພາບທາງດ້ານເສດຖະກິດ, ສັງຄົມ ແລະການເມືອງ.

ສະຫຼຸບ: ການຂະຫຍາຍຕົວຂອງພາສາ ແມ່ນໄດ້ຜ່ານວິວັດແຫ່ງການຜັນແຍກ ແລະເອກະພາບທີ່ສັບສົນທີ່ສຸດ. ໄລະຍະຜັນແຍກມັນໄດ້ດຳເນີນຢ່າງຮຸນແຮງຢູ່ໃນລະບອບສັງຄົມບູຮານ ໂດຍສະເພາະແມ່ນໄລຍະທີ່ສັງຄົມບໍ່ທັນມີຊົນຊັ້ນ. ເມື່ອສັງຄົມມີຊົນຊັ້ນ, ວິວັດການຜັນແຍກຂອງພາສາກໍຍັງໄດ້ຊ້ອນແຝງໄປນຳໄລຍະເອກະພາບ. ກົດເກນຂະຫຍາຍຕົວຂອງພາສາ ແມ່ນກົດເກນນອກຕົວ. ສະນັ້ນ, ພວກເຮົາອາດເວົ້າໄດ້ວ່າ ການຂະຫຍາຍຕົວຂອງພາສາແມ່ນສັງຄົມເປັນຜູ້ຕັດສິນ.

ຄຳຖາມ

1. ເມື່ອເວົ້າເຖິງເຄົ້າກຳເນີດຂອງພາສາ ມີທິດສະດີໃດແດ່? ແຕ່ລະທິດສະດີນັ້ນເປັນແນວໃດ?
2. ເປັນຫຍັງຈຶ່ງເວົ້າວ່າ ພາສາກຳເນີດມາຈາກການອອກແຮງງານ? ຈົ່ງອະທິບາຍ.
3. ສາເຫດໃດແດ່ ທີ່ພາໃຫ້ພາສາຂະຫຍາຍຕົວ ແລະສາເຫດໃດສຳຄັນຕັດສິນ?
4. ຂະບວນວິວັດຕົ້ນຕໍແຫ່ງການຂະຫຍາຍຕົວຂອງພາສາມີຈັກໄລຍະ? ແຕ່ລະໄລຍະເປັນຄືແນວໃດ? ຈົ່ງອະທິບາຍ.

ພາກທີ II
ອັກຂະຫຼະວິທະຍາ

ບົດທີ ๑
ອັກຂະຫຼະ ແລະອັກຂະຫຼະວິທະຍາ

I. ອັກຂະຫຼະ

๑. ໄຂຫົວເລື່ອງ

ກ່ອນອື່ນໝົດ, ພວກເຮົາຕ້ອງຮັບຮູ້ວ່າ ໃນໂລກມະນຸດທີ່ພວກເຮົາອາໄສຢູ່ນີ້ ແມ່ນບໍ່ມີພາສາໃດທີ່ມີດຽບ ໝາຍຄວາມວ່າ ເມື່ອເວົ້າເຖິງພາສາຈະຕ້ອງເວົ້າເຖິງສຽງ ເພາະວ່າລຳພັງແຕ່ຄິດຢູ່ໃນໃຈເທົ່ານັ້ນ, ຄົນເຮົາຈະບໍ່ສາມາດແລກປ່ຽນຄົບຄ້າອາລົມຈິດນຳກັນໄດ້; ຢາກແລກປ່ຽນຄົບຄ້າອາລົມຈິດນຳກັນໄດ້ ຕ້ອງ ອາໄສພາສາທີ່ໃຊ້ສຽງເປັນພາຫະນະຕົ້ນຕໍ ໃນການແລກປ່ຽນຄົບຄ້າສະມາຄົມລະຫວ່າງຄົນກັບຄົນ, ບໍ່ມີພາສາທີ່ໃຊ້ສຽງ ຄົນເຮົາບໍ່ມີມື້ຈະເຂົ້າໃຈກັນໄດ້. ນອກຈາກວິວັດແຫ່ງການແລກປ່ຽນຄົບຄ້າສະມາຄົມນຳກັນແລ້ວ, ໃນການຄົ້ນຄິດຄົນເຮົາກໍຍັງໃຊ້ພາສາອື່ນ ເພື່ອບັນທຶກເຮັດວຽກແບບນາມທຳຂອງມັນສະໜອງຂອງຄົນເຮົາ. ພາສາແມ່ນພາຫະນະອັນໜຶ່ງອັນດຽວເພື່ອດຳເນີນການຄົ້ນຄິດ ຫຼືດຳເນີນຈິນຕະນາການຂອງຄົນເຮົາ, ເມື່ອບໍ່ມີພາສາ ຄົນເຮົາຈະບໍ່ສາມາດຄົ້ນຄິດໄດ້.

ປັດຈຸບັນ, ວິທະຍາສາດທຸກຂະແໜງໄດ້ມີຄວາມກ້າວໜ້າ ແລະທັນສະໄໝທີ່ສຸດ, ມະນຸດໄດ້ດັດແປງທຳມະຊາດມາຮັບໃຊ້ຊີວິດການເປັນຢູ່ຢ່າງມີຜົນສຳເລັດ. ອາດຈະເວົ້າໄດ້ວ່າ ມະນຸດສາມາດປະດິດສ້າງທຸກສິ່ງທຸກຢ່າງໄດ້ຕາມຄວາມຕ້ອງການ ເຊັ່ນ ການປະດິດຕົວອັກສອນຟູ ສຳລັບຄົນຕາບອດ ກໍແມ່ນໜຶ່ງໃນຜົນສຳເລັດທາງດ້ານວິທະຍາສາດ. ມະນຸດເຮົາບາງຄົນເກີດມາມີອະໄວຍະວະບໍ່ຄົບຖ້ວນ ຫຼືບໍ່ ສົມປະກອບ ເຊັ່ນ ຕາບອດ, ຫູໜວກ, ເປ້ຍລ່ອຍ... ຄວາມກ້າວໜ້າທາງດ້ານວິທະຍາສາດໄດ້ຊ່ວຍຄົນຕາບອດອ່ານໜັງສືໄດ້ດ້ວຍການນຳໃຊ້ໜັງສືຟູ. ທຸກມື້ໆ ຄົນເຮົາໄດ້ນຳໃຊ້ເຄື່ອງໂທລະຄົມມະນາຄົມທີ່ທັນສະໄໝຫຼາຍຢ່າງ ເຊັ່ນ ໂທລະສານ(Fax), ເຄື່ອງຕິດຕໍ່ຫາກັນ (Phone link) ແລະອື່ນໆ. ເມື່ອເບິ່ງທົ່ວໄປແລ້ວ, ອຸປະກອນເຫຼົ່ານີ້ຄືຈັ່ງວ່າ ບໍ່ຕ້ອງການສຽງພາສາກໍອາດຄົ້ງຕົວ ແລະໃຊ້ເປັນພາຫະນະຄົບຄ້າສະມາຄົມນຳກັນໄດ້, ແຕ່ພວກເຮົາຄວນເຂົ້າໃຈວ່າ ບັນດາ ເຄື່ອງໝາຍ ຫຼືຕົວອັກສອນຕ່າງໆນັ້ນ ກໍຕ້ອງອີງໃສ່ສຽງຈຶ່ງຄົ້ງຕົວໄດ້.

ການນຳໃຊ້ສັນຍານດ້ວຍມື, ທ່າທີ, ຮູບພາບ ແລະເຄື່ອງໝາຍອື່ນໆ ອາດຈະບໍ່ຕ້ອງການສຽງແທ້, ແຕ່ຕ້ອງຮັບຮູ້ວ່າ ອັນນັ້ນເປັນພຽງການສະແດງແນວຄິດອາລົມຈິດທີ່ອັບຈົນ ແລະຈຳກັດທີ່ສຸດ, ມັນບໍ່ສາມາດແທນໃຫ້ແກ່ພາສາເປັນສຽງໄດ້; ການສັນຍານດ້ວຍມື ຫຼືທ່າທີນັ້ນ ບໍ່ ສະເພາະແຕ່ອັບຈົນ ແລະຈຳກັດເທົ່ານັ້ນ, ແຕ່ກໍມີລັກສະນະແຫ້ງແລ້ງ ແລະບໍ່ມີຊີວິດຊີວາຫຍັງໝົດ. ຍ້ອນແນວນັ້ນ, ຖ້າເວົ້າເຖິງພາສາຈະຕ້ອງໄດ້ເວົ້າເຖິງພາສາເປັນສຽງ, ບໍ່ມີຮູບການທາງດ້ານສຽງ ແມ່ນບໍ່ມີພາສາໄດ້. ດັ່ງນັ້ນ, ທ່ານສະຕາລິນຈຶ່ງເວົ້າວ່າ: "ພາສາເປັນສຽງເວລາໃດ ມັນ ກໍເປັນອັນໜຶ່ງອັນດຽວຂອງມະນຸດ. ມັນມີຄວາມສາມາດພຽງພໍ ເພື່ອເປັນພາຫະນະຄົບຄ້າສະມາຄົມອັນແທ້ຈິງລະຫວ່າງຄົນກັບ

ຄົນ. ປະຫວັດສາດຍັງບໍ່ທັນຮັບຮູ້ວ່າ ມີສັງຄົມມະນຸດໃດ ເຖິງວ່າຈະຫຼ້າຫຼັງປານໃດກໍຕາມ ທີ່ວ່າບໍ່ໃຊ້ພາສາເປັນສຽງ..."

ພວກເຮົາອາດເວົ້າໂດຍສັງເຂບວ່າ ມະນຸ ດທຸກຄົນຢາກເຂົ້າໃຈເຊິ່ງກັນແລະກັນໄດ້ ກໍຕ້ອງມີແຕ່ອາໄສພາສາເປັນສຽງ ເພື່ອເປັນພາຫະນະແລກປ່ຽນນຳກັນເທົ່ານັ້ນ; ສຽງຂອງພາສານີ້ເອງທີ່ເພີ່ນວ່າ "ອັກຂະຫຼະ" ຍ້ອນແນວນັ້ນ, ພວກເຮົາຈຶ່ງເວົ້າວ່າ ວຽກງານຄົ້ນຄວ້າອັກຂະຫຼະເປັນວຽກທີ່ສຳຄັນທຳອິດ ກ່ອນຈະກ້າວໄປຄົ້ນຄວ້າພາສາຢ່າງເລິກເຊິ່ງ.

๔. ອັກຂະຫຼະແມ່ນຫຍັງ?

ອັກຂະຫຼະແມ່ນການສ້ຽຮອມສຽງທັງໝົດໃນພາສາໃດໜຶ່ງ, ຫຼືເວົ້າວ່າ ອັກຂະຫຼະແມ່ນເປືອກວັດຖຸຂອງພາສາ. ມັນແມ່ນສຽງຂອງສະຫຼະ, ສຽງພະຍັນຊະນະ ແລະການປະສົມສຽງສະຫຼະກັບພະຍັນຊະນະ, ສະເພາະໃນພາສາລາວເຮົາ ຍັງ ມີສຽງວັນນະຍຸດຕື່ມອີກ. ສຽງຂອງພາສາຕ່າງໆມັນມີການພົວພັນນຳກັນຢ່າງສະໜິດແໜ້ນ ບົນຫຼັກການໃດໜຶ່ງແນ່ນອນ ແລະໄດ້ສັບຊ້ອນຕາມຫຼັກເກນໃດໜຶ່ງ ເຊິ່ງກາຍເປັນໂຄງປະກອບສ້າງອັກຂະຫຼະຂອງພາສາໃດໜຶ່ງສະເພາະ.

ຕົວຢ່າງ: ການປະສົມອັກສອນໃນພາສາລາວ. ສະຫຼະບາງໂຕວາງຢູ່ຂ້າງຫຼັງ, ໜ້າ, ເທິງ, ລຸ່ມ ຫຼືຢູ່ອ້ອມພະຍັນຊະນະກໍມີ ເຊັ່ນ

- ປະກອບສະຫຼະເຂົ້າຂ້າງຫຼັງ: ກາ, ຂາ, ຄາ...
- ປະກອບສະຫຼະເຂົ້າຂ້າງໜ້າ: ໄປ, ໃນ ແພ...
- ປະກອບສະຫຼະຢູ່ຂ້າງລຸ່ມ: ພູ, ຄູ, ງູ...
- ປະກອບສະຫຼະຢູ່ຂ້າງເທິງ: ມິ, ດີ, ຄຶ...
- ປະກອບສະຫຼະເຂົ້າຂ້າງໜ້າ ແລະຂ້າງຫຼັງ: ເມຍ, ເສຍ, ເບຍ...
- ປະກອບສະຫຼະເຂົ້າຂ້າງໜ້າ ແລະຂ້າງເທິງ: ເນີ, ເອີ, ເທີ...
- ປະກອບສະຫຼະເຂົ້າຂ້າງໜ້າ ເທິງ ແລະຫຼັງ: ເກົາ, ເສືອ, ເຊົາ...

ນອກຈາກກໍລະນີຕ່າງໆທີ່ກ່າວມາຂ້າງເທິງນີ້ແລ້ວ, ໃນພາສາລາວກໍຍັງມີກໍລະນີພິເສດອີກ ຄື ທຸກໆພະຍາງຈະຕ້ອງມີຕົວແທນ(ໝາຍຄວາມວ່າ ມີພະຍັນຊະນະປະກອບ) ເມື່ອສຽງໃດອອກສຽງສະຫຼະ ຕ້ອງເອົາຕົວ "ອ" ເປັນຕົວແທນໃນເວລາຂຽນ ເຊັ່ນ

ะ	ຫຼື	ิ	ເວລາເວົ້າແມ່ ຄືກັ	ແຕ່ເວລາຂຽ	ຕ້ອງມີ "ອ"
ไ	ຫຼື	ไ	"	"	"ອ"
เ◌ือย	ຫຼື	เ◌ือย	"	"	"ອ"

ອັນນີ້ແມ່ນຫຼັກການປະກອບສ້າງຂອງພະຍາງໃນພາສາລາວ, ຖ້າພວກເຮົາທຽບກັບພາສາອື່ນໆ ກໍຈະເຫັນວ່າ ແຕກຕ່າງກັນຫຼາຍ, ນີ້ສະແດງໃຫ້ພວກເຮົາເຫັນວ່າ ແຕ່ລະພາສາຍ່ອມມີລະບົບສຽງ ແລະອັກຂະຫຼະແຕກຕ່າງກັນໄປ ໂດຍອີງຕາມຈຸດພິເສດ ແລະລັກສະນະສະເພາະຂອງພາສານັ້ນໆ.

II. ອັກຂະຫຼະວິທະຍາ

๑. ຄວາມສຳນຶກກ່ຽວກັບອັກຂະຫຼະວິທະຍາ

ອັກຂະຫຼະວິທະຍາ ແມ່ນວິຊາການຂະແໜງໜຶ່ງ ທີ່ຄົ້ນຄວ້າສຽງຂອງພາສາ, ມັນແມ່ນພາກສ່ວນໜຶ່ງທີ່ສຳຄັນໃນຂະແໜງພາສາສາດ ເພາະວ່າກ່ອນຈະກ້າວເຂົ້າໄປຄົ້ນຄວ້າພາສາຢ່າງເລິກເຊິ່ງນັ້ນ, ກ່ອນອື່ນໝົດຈະຕ້ອງຄົ້ນຄວ້າອັກຂະຫຼະນີ້ເສຍກ່ອນ ຖ້າສົມທຽບພາສາຄືກັນກັບສາງໃຫຍ່ແຫ່ງໜຶ່ງ ເຊິ່ງບັນຈຸວັດຖຸຫຼາຍຊະນິດ , ຢາກຮູ້ວ່າໃນສາງນັ້ນມີຫຍັງແດ່? ກ່ອນອື່ນໝົດຕ້ອງມີລູກກະແຈເພື່ອໄຂສາງນັ້ນ. ຈາກນັ້ນພວກເຮົາຈຶ່ງສາມາດຊອກຫາວັດສະດຸຕ່າງໆທີ່ມີຢູ່ໃນສາງນັ້ນ. ເວົ້າແນວນີ້, ກໍເພື່ອໃຫ້ຮູ້ວ່າ ອັກຂະຫຼະມີຄວາມສຳຄັນເປັນພິເສດ . ແຕ່ກໍບໍ່ໝາຍຄວາມວ່າ ເມື່ອຮູ້ທາງດ້ານອັກຂະຫຼະວິທະຍາຢ່າງເລິກເຊິ່ງແລ້ວ ຈະມີຄວາມຮູ້ກ່ຽວ ກັບພາສາເລິກເຊິ່ງ, ເພາະວ່າອັນນີ້ມັນເປັນພຽງແຕ່ຜົນສຳເລັດໃນເບື້ອງຕົ້ນ ແຫ່ງການກ້າວໄປຄົ້ນຄວ້າພາສາຢ່າງມີວິທະຍາສາດ ແລະໄດ້ຮັບໝາກຜົນດີກວ່າ.

ສິ່ງສຳຄັນຄວນເຂົ້າໃຈວ່າ ອັກຂະຫຼະວິທະຍາບໍ່ແມ່ນຄົ້ນຄວ້າທຸກໆສຽງທີ່ຄົນເຮົາກະຈາຍອອກເຊັ່ນ ສຽງໄຫ້, ສຽງຫົວ, ສຽງຕົບມື... ມັນຈະຄົ້ນຄວ້າແຕ່ຈຳພວກສຽງທີ່ມີຄຸນຄ່າໃນການແລກປ່ຽນຄົບຄ້າສູງ ແລະເປັນເຄື່ອງໝາຍສັນຍານເທົ່ານັ້ນ. ໝາຍຄວາມວ່າສຽງອັກຂະຫຼະທີ່ໄດ້ຈັດຕັ້ງເປັນລະບົບ, ມີໂຄງປະກອບສ້າງອັນແນ່ນອນ ເຊິ່ງເພີ່ນເອີ້ນວ່າ ສຽງຂອງພ າສາ. ສ່ວນວ່າການຄົ້ນຄວ້າສຽງທົ່ວໄປນັ້ນ ບໍ່ແມ່ນໜ້າທີ່ຂອງອັກຂະຫຼະ ວິທະຍາ, ມັນແມ່ນໜ້າທີ່ຂອງວິຊາສຽງຢູ່ໃນປະມວນວິຊາຟິສິກສາດ ເປັນຜູ້ຄົ້ນຄວ້າ.

๘. ຂະແໜງຕ່າງໆຂອງອັກຂະຫຼະວິທະຍາ

ອັກຂະຫຼະວິທະຍາລວມມີ ๔ ຂະແໜງ ຄືອັກຂະຫຼະວິທະຍາສາມັນ, ອັກຂະຫຼະວິທະຍາວາດພາບ, ປະຫວັດອັກຂະຫຼະວິທະຍາ ແລະອັກຂະຫຼະວິທະຍາສົມທຽບ.

๑. ອັກຂະຫຼະວິທະຍາສາມັນ: ໄດ້ແກ່ທິດສະດີພື້ນຖານກ່ຽວກັບການປະກອບສ້າງ ແລະປະສົມຂອງອັກຂະຫຼະ. ພ້ອມນີ້, ກໍຍັງຄົ້ນຄວ້າເຖິງການຜັນປ່ຽນ ແລະກົດເກນຜັນປ່ຽນຂອງອັກຂະຫຼະນຳອີກ.

๘. ອັກຂະຫຼະວິທະຍາວາດພາບ: ແມ່ນຂະແໜງວິຊາທີ່ຄົ້ນຄວ້າສະເພາະພາກສ່ວນອັກຂະຫຼະຂອງພາສາໃດໜຶ່ງ ທີ່ນອນຢູ່ໃນແຕ່ລະໄລຍະປະຫວັດສາດຂອງຊາດນັ້ນເປັນແນວໃດ ໝາຍຄວາມວ່າ ມີໜ້າທີ່ວາດພາບການຜັນປ່ຽນຂອງອັກຂະຫຼະໃນແຕ່ລະໄລຍະປະຫວັດສາດຂອງພາສາ.

๑. ປະຫວັດອັກຂະຫຼະວິທະຍາແມ່ນຂະແໜງວິຊາທີ່ຄົ້ນຄ້ວາເຖິງເຄົ້າກຳເນີດ, ການຂະຫຍາຍຕົວຂອງອັກຂະຫຼະ ຕະຫຼອດໄລຍະປະຫວັດສາດຂອງພາສານັ້ນ.

๔. ອັກຂະຫຼະວິທະຍາສົມທຽບ: ແມ່ນຂະແໜງວິຊາທີ່ຄົ້ນຄ້ວາເຖິງອັກຂະຫຼະຢູ່ໃນຫຼາຍພາສາຕ່າງກັນ ເພື່ອຊອກຫາປະຫວັດການຜັນປ່ຽນຂອງອັກຂະຫຼະໃນພາສາທີ່ຕ່າງກັນນັ້ນ ແລ້ວເອົາມາສົມທຽບກັນເບິ່ງວ່າ ພວກມັນມີສາຍສຳພັນແນວໃດນຳກັນ ແລະມີຄວາມແຕກຕ່າງກັນແນວໃດ.

ສຳລັບການຮຽນຮູ້ໃນທີ່ນີ້ ຈະໄດ້ຄົ້ນຄວ້າສະເພາະແຕ່ອັກຂະຫຼະວິທະຍາສາມັນເທົ່ານັ້ນ ເພາະວ່າ ອັກຂະຫຼະວິທະຍາສາມັນ ແມ່ນທິດສະດີທີ່ເປັນພື້ນຖານໃຫ້ແກ່ການຄົ້ນຄວ້າອັກຂະຫຼະຂະແໜງຕ່າງໆ.

ນ. ຜົນປະໂຫຍດຂອງອັກຂະຫຼະ

ກ່ອນອື່ນໝົດ, ອັກຂະຫຼະວິທະຍາຊ່ວຍໃຫ້ເຮົາມີຄວາມຮູ້, ມີທັດສະນະຖືກຕ້ອງໃນການເບິ່ງ ແລະຄົ້ນຄວ້າອັກຂະຫຼະພາສາແມ່ເກີດຂອງຕົນຢ່າງມີວິທະຍາສາດໃນໄລຍະຜ່ານມາ.

ການທີ່ເຮົາຮູ້ປາກ, ຮູ້ເວົ້າພາສາລາວໄດ້ຢ່າງລ່ຽນໄຫຼນັ້ນ ມັນບໍ່ຕ່າງຫຍັງກັບນັກຮ້ອງສຽງດີ ທີ່ມີແຕ່ຮູ້ຮ້ອງເພງມ່ວນ, ແຕ່ບໍ່ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບນິດຕິແຕ່ຢ່າງໃດເລີຍ.

- ອັກຂະຫຼະວິທະຍາ ຊ່ວຍໃຫ້ເຮົາຈຳແນກພາສາທ້ອງຖິ່ນຕ່າງໆໄດ້, ຈາກນັ້ນກໍຊ່ວຍໃຫ້ເຮົາຄ່ອຍໆຜັນສຽງຖືກຕ້ອງຕາມພາສາກາງ ເພື່ອປະກອບສ່ວນເຂົ້າໃນພາລະກິດ ເຮັດໃຫ້ພາສາແຫ່ງຊາດເປັນເອກະພາບກັນ.
- ອັກຂະຫຼະວິທະຍາຊ່ວຍໃຫ້ເຮົາຮຽນພາສາຕ່າງປະເທດໄດ້ໄວ, ເລິກເຊິ່ງແລະງ່າຍກວ່າເກົ່າ ເພາະວ່າກໍາອິດໃນການຮຽນພາສາຕ່າງປະເທດ ແມ່ນເລີ່ມຈາກການຜັນສຽງອັກຂະຫຼະ.
- ສະເພາະນັກຄົ້ນຄວ້າພາສາ ເຖິງວ່າຈະຄົ້ນຄວ້າວັດຈະນາ, ໄວຍາກອນ... ອັກຂະຫຼະຍິ່ງມີບົດບາດສຳຄັນເປັນພິເສດ ເພາະແມ່ນວິຊາພື້ນຖານທີ່ມີລັກສະນະເປັນຂໍກະແຈໃຫ້ແກ່ວິຊາອື່ນໆໃນຂະແໜງພາສາສາດ.
- ການຄົ້ນຄວ້າພາສາທ້ອງຖິ່ນ, ການດັດແປງສຽງໃຫ້ແກ່ຜູ້ຜັນສຽງຜິດ, ນັບທັງການສອນພາສາແມ່ເກີດຂອງຕົນໃຫ້ແກ່ຄົນຕ່າງປະເທດແລ້ວ ກໍຈະເປັນບັນຫາທີ່ຫຍຸ້ງຍາກທີ່ສຸດຫຼືເວົ້າວ່າມັນແມ່ນເລື່ອງທີ່ເປັນໄປໄດ້ຍາກ.

ນອກຈາກ, ຜູ້ທີ່ຄົ້ນຄວ້າວັນນະຄະດີ, ປະຫວັດສາດ, ບູຮານຄະດີ, ວິທະຍາສາດການແພດ... ຖ້າຫາກບໍ່ມີຄວາມຮູ້ທາງດ້ານອັກຂະຫຼະວິທະຍາແລ້ວ, ຜົນທີ່ຈະໄດ້ຮັບອາດຈະບໍ່ສູງ ແລະບໍ່ຮອບຄອບເທົ່າທີ່ຄວນ.

+ ສະຫຼຸບລວມ: ອັກຂະຫຼະວິທະຍາແມ່ນຂະແໜງໜຶ່ງທີ່ມີຄວາມສຳຄັນຢູ່ໃນພາສາດ, ຖ້າຂາດພາກສ່ວນນີ້ກໍບໍ່ມີພາສາໄດ້. ສະນັ້ນ, ຈຶ່ງຈຳເປັນຕ້ອງສຶກສາຄົ້ນຄວ້າອັກຂະຫຼະວິທະຍາຢ່າງລະອຽດຖີ່ຖ້ວນ, ຖ້າບໍ່ມີຄວາມຮູ້ທາງດ້ານອັກຂະຫຼະວິທະຍາ ຈະບໍ່ມີຄວາມສາມາດໃນການຄົ້ນຄວ້າພາສາໄດ້.

ຄຳຖາມ

1. ອັກຂະຫຼະ ແລະອັກຂະຫຼະວິທະຍາແມ່ນຫຍັງ? ແລະມີຄວາມແຕກຕ່າງກັນແນວໃດ?
2. ຜົນປະໂຫຍດຂອງອັກຂະຫຼະວິທະຍາມີຫຍັງແດ່? ຖ້າບໍ່ມີຄວາມຮູ້ດ້ານອັກຂະຫຼະວິທະຍາ ຈະມີຜົນສະທ້ອນຕໍ່ພາສາແຫ່ງຊາດແນວໃດ?

ບົດທີ ๘
ພື້ນຖານຂອງອັກຂະຫຼະວິທະຍາ

I. ພື້ນຖານທຳມະຊາດຂອງອັກຂະຫຼະ

๑. ພື້ນຖານດ້ານຟິຊິກສາດ

ພວກເຮົາຮູ້ນຳກັນແລ້ວວ່າ ອັກຂະຫຼະແມ່ນສຽງຂອງພາສາ, ແຕ່ເມື່ອເວົ້າເຖິງສຽງທີ່ມີຢູ່ໃນຈັກກະວານນີ້, ມັນກໍມີຫຼາຍສີສັນຕ່າງກັນ ແຕ່ພວກມັນກໍມີລັກສະນະລວມຂອງມັນ . ຢູ່ໃນຂະແໜງຟິສິກສາດກໍມີວິຊາໜຶ່ງທີ່ຄົ້ນຄວ້າກ່ຽວກັບສຽງໂດຍສະເພາະ, ວິຊານັ້ນເອີ້ນວ່າ "ວິຊາສຽງ". ສະນັ້ນ, ກ່ອນຈະກ້າວໄປຄົ້ນຄວ້າສຽງຂອງພາສາ, ພວກເຮົາຈະຕ້ອງໄດ້ສັງເກດສຽງຕາມວິຊາສຽງໃນວິຊາຟິຊິກສາດເສຍກ່ອນ. ເພາະອັນນັ້ນ, ມັນຈະເປັນພື້ນຖານຄວາມຮູ້ ແລະເປັນເອກະສານສຳຄັນທີ່ສຸດໃຫ້ແກ່ການກ້າວໄປສູ່ການວິໄຈອັກຂະຫຼະ. ກ່ອນອື່ນຄວນຮູ້ວ່າ "ສຽງເກີດມາຈາກໃສ?".

ເພື່ອຢາກແກ້ໄຂບັນຫານີ້ໄດ້, ເຮົາອາດນຳໃຊ້ການທົດລອງແບບງ່າຍໆ ເຊັ່ນເຮົາລອງດີດສາຍກີຕ້າທີ່ເຄັ່ງ, ຈະສັງເກດເຫັນວ່າສາຍຂອງມັນສັ່ນ ແລ້ວເກີດເປັນ ສຽງດັງອອກມາ ຫຼືວ່າເຮົາລອງເອົາມືວາງໄວ້ເທິງໜ້າກອງ ແລ້ວເຄາะໜ້າກອງນັ້ນດ້ວຍມືອີກເບື້ອງໜຶ່ງ ຈະຮູ້ສຶກວ່າໜ້າກອງນັ້ນສັ່ນສະເທືອນ ແລ້ວເກີດມີສຽງດັງຄືກັນ . ຍ້ອນແນວນັ້ນ, ເພິ່ນຈຶ່ງເວົ້າວ່າ ບໍ່ວ່າສຽງໃດໆກໍຕາມ ລ້ວນແຕ່ໄດ້ມາຈາກການສັ່ນສະເທືອນຂອງວັດຖຸໃດໜຶ່ງ.

ສຽງອາດກຳເນີດຈາກທຸກໆວັດຖຸໄດ້, ຫາກວັດຖຸນັ້ນຖືກກະທົບ ເຊັ່ນ ລົມພັດສາຍເຫຼັກລວດເຄັ່ງ ກໍອາດເກີດເປັນສຽງໄດ້ , ເວລາເປົ່າແຄນລົມໄດ້ພັດຜ່ານລີ້ນແຄນທີ່ເຮັດດ້ວຍແຜ່ນທອງບາງໆ, ເຮັດໃຫ້ແຜ່ນທອງສັ່ນ ແລ້ວເກີດເປັນສຽງ. ນອກນັ້ນ, ເວລາໃນໄຫຼຜ່ານຮ່ອມຫ້ວຍ ຫຼືໂຕນຕາດ ກໍເກີດສຽງໄດ້ຄືກັນ ແລະອື່ນໆ.

ສຽງທີ່ກຳເນີດອອກ ແລ້ວນຳ ໄປເຖິງຫູຂອງຜູ້ຟັງ ຫຼື ເຄື່ອງຮັບສຽງຕ່າງໆໄດ້ແນວໃດ? ເຮົາຮູ້ແລ້ວວ່າ ທຸກໆວັດຖຸລ້ວນແຕ່ໃຫ້ກຳເນີດສຽງໄດ້ ຫາກວັດຖຸນັ້ນມີການກະທົບ ; ເມື່ອມີການກະທົບຈະເຮັດໃຫ້ວັດຖຸນັ້ນສັ່ນ. ພ້ອມດຽວກັນນັ້ນ, ອາກາດຢູ່ອ້ອມຂ້າງວັດຖຸນັ້ນກໍສັ່ນຕາມ ເກີດເປັນຄື້ນສຽງ ແລ້ວນຳໄປເຖິງເຄື່ອງຮັບສຽງ ຫຼືຫູຜູ້ຟັງ. ຢາກຮັບຮູ້ບັນຫານີ້, ເຮົາອາດເຮັດການທົດລອງງ່າຍໆ ເຊັ່ນ ເອົາໂມງປຸກ(ທີ່ມີສຽງກະດິງປຸກຍັງດັງຢູ່) ຍັດເຂົ້າໂຖແກ້ວ ແລ້ວຄ່ອຍໆອັດໃຫ້ແຈບ , ເມື່ອໃດອັດໂຖແກ້ວແຈບ ສຽງໂມງປຸກຈະມິດທັນທີ ທັງໆທີ່ວ່າຕາເຮົາຍັງເຫັນດຸມຕັ້ງໂມງປຸກປົ່ນຢູ່(ໝາຍວ່າສຽງຍັງດັງຢູ່) ນີ້ສະແດງໃຫ້ເຫັນວ່າ ຝາກະດອນແກ້ວໄດ້ເປັນສິ່ງກີດກັ້ນບໍ່ໃຫ້ຄື້ນສຽງລອດອອກມາທາງນອກໄດ້. ຈາກບ່ອນນີ້, ຈຶ່ງສະຫຼຸບໄດ້ວ່າ ມີແຕ່ວັດຖຸກະຈາຍສຽງຍັງບໍ່ທັນພຽງພໍ , ມັນຍັງຕ້ອງການອາກາດອີກ ເພື່ອສົ່ງສຽງນັ້ນໄປ.

ທຸກໆສຽງລ້ວນແລ້ວແຕ່ແມ່ນຜົນແຫ່ງການສັ່ນສະເທືອນຂອງໂມລະກຸນອາກາດ ທີ່ເລີ່ມຈາກວັດຖຸກະຈາຍສຽງໃດໜຶ່ງ. ການສັ່ນສະເທືອນບາງເທື່ອກໍມີຮອບວຽນ, ແຕ່ບາງເທື່ອກໍບໍ່ມີຮອບວຽນ. ການສັ່ນສະເທືອນທີ່ງ່າຍດາຍກວ່າໝູ່ໝົດແມ່ນເປັນຮູບຊິນ(Sin).



ສຽງຂອງພາສາມັນຕ່າງກັບສຽງອື່ນໆຢູ່ບ່ອນວ່າ ສຽງຂອງພາສາແມ່ນໄດ້ມາຈາກອາກາດທີ່ໄປຜ່ານອະໄວຍະຜັນສຽງຂອງຄົນເຮົາ ໝາຍຄວາມວ່າ ອາກາດອອກມາຈາກປອດ ຜ່ານອະໄວຍະວະກຳເນີດສຽງໃນຄໍ ແລ້ວຂຶ້ນມາຜ່ານບັນດາຈຸດຜະລິດສຽງຢູ່ໃນຜົ້ງປາກ ແລະຜົ້ງດັງ ຈຶ່ງເກີດເປັນຫຼາຍສຽງແຕກຕ່າງກັນ.

๔. ບັນດາມູນພາກເພື່ອຈຳແນກສຽງ

ໃນຈັກກະວານອັນກວ້າງໃຫຍ່ໄພສານທີ່ພວກເຮົາອາໄສຢູ່ ແມ່ນມີສຽງຫຼາຍຊະນິດທີ່ແຕກຕ່າງກັນ. ສຽງເຫຼົ່ານັ້ນແຕກຕ່າງກັນແມ່ນຍ້ອນ: ຄວາມສູງ, ຄວາມແຮງ, ຄວາມຍາວ ແລະສີສັນຂອງສຽງຕ່າງກັນ.

ກ. ຄວາມສູງຂອງສຽງ

ຄວາມສູງຂອງສຽງ ແມ່ນຂຶ້ນກັບຄວາມຖີ່ຂອງຄື້ນສັ່ນສະເທືອນເປັນສິ່ງຕັດສິນ. ຄວາມຖີ່ແມ່ນຈຳນວນຮອບວຽນການສັ່ນສະເທືອນຢູ່ໃນໄລຍະເວລາໃດໜຶ່ງທີ່ແນ່ນອນ, ເພິ່ນເຄີຍໃຊ້ວິນາທີເປັນສິ່ງວັດແທກ.

ເມື່ອຮອບວຽນຢູ່ໃນໄລຍະເວລາໃດໜຶ່ງນັ້ນ, ຫຼາຍແລະສັ້ນເທົ່າໃດ ຈະເຮັດໃຫ້ສຽງນັ້ນມີຄວາມສູງເທົ່ານັ້ນ. ກົງກັນຂ້າມ, ຖ້າຈຳນວນຮອບວຽນຢູ່ໃນໄລຍະເວລາໃດໜຶ່ງນັ້ນ ຫາກໜ້ອຍ ແລະຫ່າງເທົ່າໃດ ຈະເຮັດໃຫ້ສຽງນັ້ນ ມີຄວາມຕ່ຳເທົ່ານັ້ນ.

ຄວາມຖີ່ຕັ້ງແຕ່ ๗๐-๘๐.๐๐๐ ແຮັກຕ໋ວິນາທີ ແມ່ນຄົນເຮົາສາມາດຟັງໄດ້, ຖ້າຄວາມຖີ່ກາຍ ๘๐.๐๐๐ ແຮັກຂຶ້ນໄປ ແມ່ນຄົນເຮົາບໍ່ສາມາດໄດ້ຍິນ ຫຼືເພິ່ນເອີ້ນກັນວ່າ "ອະພິສຽງ" ເຊິ່ງຄົນເຮົາບໍ່ສາມາດຟັງໄດ້ ມີແຕ່ໃຊ້ເຄື່ອງຈັກພິເສດເທົ່ານັ້ນຈຶ່ງຮັບຟັງໄດ້ ຄວາມຖີ່ຕັ້ງແຕ່ ๑.๕๐๐-๓.๐๐๐ ແຮັກຟັງງ່າຍກວ່າໝູ່. ສຽງວັດຖຸຕ່າງໆທີ່ໃຫຍ່, ໜາ, ຍານ ແລະຍາວແມ່ນມີສຽງຕ່ຳກວ່າສຽງຈຳພວກວັດຖຸທີ່ນ້ອຍ, ບາງ, ເຄ້ຽ ແລະສັ້ນ. ຫາກວ່າການສັ່ນສະເທືອນຊ້າຈະເຮັດໃຫ້ຄວາມຖີ່ຕ່ຳ.

ຂ. ຄວາມແຮງຂອງສຽງ

ສຽງຈະຄ່ອຍ ຫຼືແຮງແມ່ນຂຶ້ນກັບຈຸດສູງຂອງຮອບວຽນ (ຄື້ນສຽງ) ເປັນສິ່ງຕັດສິນ. ຖ້າຈຸດສູງຂອງຮອບວຽນຫາກຕ່ຳເທົ່າໃດ ຈະເຮັດໃຫ້ສຽງນັ້ນຄ່ອຍເທົ່ານັ້ນ. ບັນຫານີ້ຈະສັງເກດເຫັນວ່າ ເວລາ

ເຮົາດີດສາຍກີຕາ ເມື່ອໃດສາຍຂອງມັນສັ່ນອອກກວ້າງເທົ່າໃດ ເຮົາຈະໄດ້ຍິນສຽງຂອງມັນແຮງເທົ່ານັ້ນ.

ຄ. ຄວາມຍາວຂອງສຽງ

ຄວາມຍາວຂອງສຽງ ແມ່ນຂຶ້ນກັ ບການສັ່ນສະເທືອນເປັນສິ່ງຕັດສິນ. ເວລາສັ່ນສະເທືອນດົນເທົ່າໃດ ຈະເຮັດໃຫ້ສຽງຍາວອອກເທົ່ານັ້ນ ແລະກົງກັນຂ້າມ. ບັນຫານີ້, ພວກເຮົາສັງເກດເຫັນຢູ່ກັບສຽງກີຕາ, ສຽງກອງ, ສຽງຄ້ອງ... ມັນກ້ອງດົນເທົ່າໃດ, ສຽງຂອງມັນຈະຍາວເທົ່ານັ້ນ.

ງ. ສີສັນຂອງສຽງ

ສຽງປີອາໂນ, ອໍແກນ, ກະຈັບປີ, ສີຊໍ... ເຊິ່ງລ້ວນແຕ່ໃຊ້ນິດ La ແຕ່ເວລາຟັງ ເຮົາກໍຍັງສາມາດຈຳແນກໄດ້ຢູ່ວ່າອັນໃດເປັນສຽງຂອງອັນໃດ. ທັງນີ້ກໍຍ້ອນວ່າ ເຄື່ອງຫຼິ້ນດົນຕີແຕ່ລະຊະນິດນັ້ນມີສີສັນແຕກຕ່າງກັນ. ສີສັນຂອງສຽງແມ່ນຈຸດພິເສດສະເພາະຂອງສຽງ, ສີສັນຂອງສຽງແຕກຕ່າງກັນແມ່ນຍ້ອນ:

- ວັດຖຸກະຈາຍສຽງແຕກຕ່າງກັນ ເຊັ່ນ ສາຍສີຊໍເຮັດດ້ວຍຂົນຫາງມ້າ ແລະເຮັດດ້ວຍສາຍເຫຼັກລວດ ແມ່ນມີສຽງບໍ່ຄືກັນ.
- ວິທີເຮັດໃຫ້ສຽງເຫຼົ່ານັ້ນກະຈາຍອອກຕ່າງກັນ ສຽງທີ່ດັງອອກມາກໍຕ່າງກັນ ເຊັ່ນ ດີດກີຕາດ້ວຍນິ້ວມືກັບເອົາໄມ້ ຫຼືເຫຼັກດີດ ສຽງມັນກໍຈະຕ່າງກັນ.
- ສຽງທີ່ກະຈາຍອອກໃນສະພາບແວດລ້ອມຕ່າງກັນ, ສຽງນັ້ນຈະຕ່າງກັນ ເຊັ່ນ ເຮົາຮ້ອງຢູ່ທົ່ງກວ້າງກັບຮ້ອງຢູ່ຮ່ອມຫ້ວຍ ສຽງດັງກໍຈະບໍ່ຄືກັນ ຫຼືສຽງຮ້ອງຢູ່ນອກຖ້ຳກັບໃນຖ້ຳກໍຕ່າງກັນ.

ນອກນີ້, ເມື່ອພວກເຮົາສັງເກດເບິ່ງລັກສະນະລວມຂອງສຽງຕ່າງໆແລ້ວ ຈະເຫັນວ່າ ມີສຽງຢູ່ ๘ ປະເພດ ຄື ສຽງທຳມະດາ ແລະສຽງແຕກ. **ສຽງແຕກ** ແມ່ນປະເພດສຽງທີ່ໄດ້ມາຈາກການປະກອບສ້າງຂອງການສັ່ນສະເທືອນທີ່ບໍ່ມີລັກສະນະຮອບອຽນ ເຊັ່ນ ສຽງລະເບີດ , ສຽງປືນ, ສຽງຕົບມື... ສຽງແຕກແມ່ນປະເພດສຽງທີ່ມີຄື່ນສຽງບໍ່ແນ່ນອນ, ການສັ່ນສະເທືອນບໍ່ມີກົດເກນ, ຄວາມສູງຂອງສຽງກໍພໍດ້ານ. ສ່ວນປະເພດ**ສຽງທຳມະດາ** ແມ່ນປະເພດສຽງທີ່ມີຄື່ນອັນແນ່ນອນ, ການສັ່ນສະເທືອນ ມີລັກສະນະກົດເກນ, ມີຄວາມສູງ-ຕ່ຳອັນແນ່ນອນ ແລະເດັດຖານ.



ง. ພື້ນຖານດ້ານສະລິລະສາດຂອງອັກຂະຫຼະ

ສຽງຂອງພາສາກະຈາຍອອກໄດ້ ແມ່ນຍ້ອນອາໄສການເຄື່ອນໄຫວຂອງອະໄວຍະວະຜັນສຽງ ສຽງຂອງຄົນເຮົາ. ໝາຍຄວາມວ່າ ສຽງທີ່ກະຈາຍອອກນັ້ນ ຕ້ອງໄດ້ຜ່ານສະພາບແວດລ້ອມຕ່າງໆ ຄື ໂກ້ງຄໍ, ຜົ້ງປາກ ແລະຜົ້ງດັງ ຈຶ່ງສາມາດເກີດເປັນສຽງໄດ້ . ອະໄວຍະວະຜະລິດສຽງຂອງຄົນເຮົາລວມມີ ง ພາກສ່ວນໃຫຍ່ ຄື ພາກສ່ວນລະບາຍລົມ , ໂກ້ງຄໍ ແລະເສັ້ນສຽງ, ຜົ້ງປາກແລະຜົ້ງດັງ.

ก. ພາກສ່ວນລະບາຍລົມ

ພາກສ່ວນລະບາຍລົມ ມັນຄ້າຍຄືກັບສາງພະລັງງານສຳລັບການຜັນສຽງພະລັງງານ ນັ້ນແມ່ນປະລິມານອາກາດທີ່ໄດ້ສູບເຂົ້າໄປໃນພວງປອດທັງໝົດ. ປອດມີບົດບາດເປັນ "ສາງບັນຈຸອາກາດ" ມັນເຮັດໜ້າທີ່ຄ້າຍຄື "ຫີບລົມ" ຂຂງອາກັອກດີອົງຫຼືປີອາໂນ. ປະລິມານອາກາດທີ່ຕ້ອງການໃຫ້ແກ່ການຜັນສຽງຂອງຄົນເຮົາ ກໍຄ້າຍຄືກັນກັບປະລິມານອາກາດ ທີ່ຕ້ອງການໃຫ້ແກ່ເຄື່ອງດົນຕີທີ່ໃຊ້ດ້ວຍລົມ. ເວລາອາກາດເລີ່ມອອກຈາກປອດ ແລ້ວຂຶ້ນມາຕຳໃສ່ເສັ້ນສຽງ(ລີ້ນປີ່) ຢູ່ໃນໂກ້ງຄໍ, ຈາກນັ້ນກໍຜ່ານເຂົ້າມາຮຸກຖຸກັບພາກສ່ວນຕ່າງໆໆຢູ່ໃນຜົ້ງປາກ ແລະຜົ້ງດັງ ຈຶ່ງພາໃຫ້ເກີດເປັນຫຼາຍສຽງທີ່ແຕກຕ່າງກັນ.

ຂ. ໂກ້ງຄໍ ແລະເສັ້ນສຽງ(ລີ້ນປີ່)

ໂກ້ງຄໍແມ່ນບພວກເຮົາເຄີຍເອີ້ນ ແລະຮູ້ຈັກກັນໂດຍທົ່ວໄປວ່າ "ຄໍຫອຍ" ເບື້ອງເທິງແມ່ນບ້ອງຄໍ ແລະໃຕ້ມັນລົງໄປແມ່ນທໍ່ລົມ . ໂກ້ງຄໍຄ້າຍຄືກັບ "ກັບ" ອັນໜຶ່ງທີ່ຫຸ້ມຫໍ່ດ້ວຍດູກອ່ອນ ๔ ແຜ່ນ, ແຜ່ນໜ້າໃຫຍ່ກວ່າໝູ່ ແລະ ສວດອອກມາໃຫ້ພວກເຮົາເຫັນ ເຊິ່ງ ເອີ້ນກັນວ່າ "ຄໍຫອຍ". ແຜ່ນຫຼັງແມ່ນດູກທີ່ມີລັກສະນະແຫວນກາ. ລະຫວ່າງກາງດູກແຜ່ນໜ້າ ແລະແຜ່ນຫຼັງນັ້ນ ແມ່ນດູກອ່ອນ ๔ ແຜ່ນ ທີ່ຄ້າຍຄືຮູບເລັບ ເຊິ່ງຢູ່ຂ້າງຊ້າຍແຜ່ນໜຶ່ງ ແລະຢູ່ຂ້າງຂວາ ອີກແຜ່ນໜຶ່ງ. ຢູ່ໃນ "ກັບ" ນັ້ນແມ່ນເສັ້ນສຽງ(ລີ້ນປີ່). ເສັ້ນສຽງ ໃນຕົວຈິງແມ່ນ ໜັງບາງສອງແຜ່ນຄ້າຍຄືຮິມສົບ ແລະ ນອນຂວາງຢູ່ໃນໂກ້ງຄໍນັ້ນ, ມັນມີຄວາມສາມດສັ່ນສະເທືອນໄດ້ງ່າຍ, ສາມາດອ້າອອກ ຫຼືງັບເຂົ້າ , ເຄັ່ງຂຶ້ນຫຼືຍານລົງຕາມ ການບັນຊາຂອງລະບົບປະສາດ. ເສັ້ນສຽງມັນຕິດກັບແຜ່ນດູກທີ່ມີລັກສະນະຮູບເລັບ ເຊິ່ງສາມາດຍະອອກ ຫຼືຫຸບເຂົ້າໄດ້ ໂດຍອາໄສກ້າມຊີ້ນທີ່ຕິດກັບມັນ.

ຮູບໂກ້ງຄໍເບິ່ງດ້ານໜ້າ



ຮູບໂກ້ງຄໍຜ່າຕັດທາງຕັ້ງ





① ເວລາກັ້ນ, ກ່ອນຈະໄອ ຫຼືເວລາເບັ່ງ: ລິ້ນປີ່ ແລະປີກລິ້ນປີ່ອັດແຈບ, ລົມເຂົ້າອອກບໍ່ໄດ້.

② ເວລາຫາຍໃຈເຂົ້າ-ອອກ: ລິ້ນປີ່ ແລະຝາລີ້ປີ່ອ້າອອກໝົດ.

③ ເວລາຊິ່ມ ຫຼືເວົ້າຄ່ອຍໆ: ຈະມີແຕ່ປີກລິ້ນປີ່ອ້າອອກ ເພື່ອໃຫ້ລົມທີ່ອອກມາຈາກປອດລອດຜ່ານ ຈຸດໃຕ້ຂອງລິ້ນປີ່ເບົາໆ.

④ ເວລາປາກເວົ້າທຳມະດາ: ລິ້ນປີ່ອ້າອອກເພື່ອກຽມພ້ອມຮັບການສັ່ນສະເທືອນ, ສ່ວນປີກລິ້ນປີ່ ອັດແຈບ ເພື່ອຄຶງໃຫ້ລິ້ນປີ່ເຄັ່ງສະເໝີ.

ເສັ້ນສຽງຂອງແມ່ຍິງ ແລະຜູ້ຊາຍບໍ່ຄືກັນ, ເສັ້ນສຽງຂອງຜູ້ຊາຍສ່ວນຫຼາຍແມ່ນໜາ ແລະຍາວ ກວ່າເສັ້ນສຽງຂອງແມ່ຍິງ. ເສັ້ນສຽງຂອງຜູ້ຊາຍຍາວປະມານ ๘๐-๘๔ ມິລິແມັດ. ເສັ້ນສຽງຂອງແມ່ ຍິງຍາວປະມານ ๑๗-๘๐ ມິລິແມັດ. ເສັ້ນສຽງຂະຫຍາຍ ແລະໜາຂຶ້ນຕາມໄວອາຍຸ, ອາຍຸແຕ່ ๑๔-๑๔ ປີ ເສັ້ນສຽງຂະຫຍາຍໄວເປັນພິເສດ. ຕາມທຳມະດາແລ້ວ, ເສັ້ນສຽງຂອງແມ່ຍິງ ແລະເດັກ ນ້ອຍນັ້ນບາງ ແລະສັ້ນ ທັງເຄັ່ງນຳອີກ. ສະນັ້ນ, ສຽງຈຶ່ງນ້ອຍ, ແຫຼມ ແລະສູງກວ່າຜູ້ຊາຍ. ເສັ້ນ ສຽງຜູ້ເຖົ້າຍານກວ່າເສັ້ນສຽງຜູ້ໜຸ່ມ, ຍ້ອນແນວນັ້ນ ຜູ້ເຖົ້າຈຶ່ງປາກສຽງສັ່ນ.

ຄ. ຜົ້ງປາກ ແລະຜົ້ງດັ່ງ

ສະພາບແວດລ້ອມສະທ້ອນສຽງຂອງຄົນເຮົາສັບສົນຫຼາຍ, ແຕ່ຫາກມີລັກສະນະແນບນຽນ ສະພາບແວດລ້ອມສະທ້ອນສຽງມີ ๓ ພາກສ່ວນ ແຕ່ພາກສ່ວນທີ່ສຳຄັນກວ່າໝູ່ແມ່ນຜົ້ງປາກ. ສຽງທີ່ກຳເນີດຈາກເສັ້ນສຽງ ແລ້ວສົ່ງຂຶ້ນມາຄັດເລືອກຢູ່ຜົ້ງປາກ. ຜົ້ງປາກ(ພາກສ່ວນທີ່ມີການກ່ຽວພັນເຖິງການຜັນສຽງ) ລວມມີ: ຮິບສິບ, ແຂ້ວ, ເຫືອກ, ເພດານ, ລີ້ນ, ລີ້ນໄກ່ ແລະບ້ອງຄໍ.

ເພດານ(ປູມເຫືອກ) ຍັງໄດ້ແບ່ງອອກເປັນ ๔ ພາກສ່ວນຕື່ມອີກ ຄື ເພດານແຂງ ແລະເພດານອ່ອນ. ຕໍ່ຈາກເພດານອ່ອນເຂົ້າໄປໃນແມ່ນໄກ່ລີ້ນ, ລີ້ນໄກ່ສາມາດຫົດຂຶ້ນ ຫຼືຍ່ອນລົງໄດ້, ມັນເຮັດໜ້າທີ່ເປັນຝາປິດເປີດລະຫວ່າງຜົ້ງປາກ ແລະຜົ້ງດັ່ງ.

ລີ້ນແມ່ນພາກສ່ວນທີ່ເຄື່ອນໄຫວຫຼາຍກວ່າໝູ່ ໃນ ພາກສ່ວນຕ່າງໆທີ່ມີຢູ່ໃນຜົ້ງປາກ. ຍ້ອນການເຄື່ອນໄຫວ, ເໜັ້ງຕົ້ງຂອງລີ້ນ ຈຶ່ງເຮັດໃຫ້ສະພາບແວດລ້ອມສະທ້ອນສຽງຢູ່ໃນຜົ້ງປາກ ມີການປ່ຽນແປງ ເພື່ອເຮັດໃຫ້ມີຫຼາຍສຽງແຕກຕ່າງກັນ . ຍ້ອນວ່າລີ້ນມີຄວາມສຳຄັນຫຼາຍ, ເວລາເອີ່ຍເຖິງ "ຄວາມເວົ້າ" ປະຊາຊົນເຮົາເຄີຍເວົ້າວ່າ "ລີ້ນບໍ່ມີກະດູກ" ຫຼືອື່ນໆ. ໃນໂລກນີ້ມີຫຼາຍພາສາທີ່ໃຊ້ສັບ "ລີ້ນ" ເພື່ອເປັນເຄື່ອງໝາຍຂອງພາສາ ເຊັ່ນວ່າ:

ພາສາຣັດເຊຍ : ЯЗЫК
ພາສາຝຣັ່ງ : Langue
ພາສາອັງກິດ : Tongue
ພາສາລາແຕ້ງ : Lingua

ສຳລັບລີ້ນ, ຍັງແບ່ງອອກເປັນ ๔ ພາກສ່ວນໃຫຍ່ ຄື ປາຍລີ້ນ, ພາກສ່ວນຖັດປາຍລີ້ນ, ກາງລີ້ນ, ແລະກົກລີ້ນ. ສະເພາະກາງລີ້ນ, ເພີ່ນພັດຍັງແບ່ງອອກເປັນ ๔ ພາກສ່ວນ ຄື ກາງລີ້ນໜ້າ ແລະກາງລີ້ນຫຼັງ.

ທ້າຍຜົ້ງປາກຂ້າງໃນມີຮູລົ່ງກັບຜົ້ງດັ່ງ, ຍ້ອນມີຮູນ້ອຍ ແລະເວລາເຮົາສະມັກນ້ຳ ຫຼືເຂົ້າ ຈຶ່ງເຮັດໃຫ້ນ້ຳ ຫຼືເຂົ້າອອກມາທາງດັ່ງ. ຜົ້ງປາກ ແລະຜົ້ງດັ່ງແມ່ນສະພາບແວດລ້ອມສະທ້ອນສຽງຂອງຄົນເຮົາ ເຊິ່ງຊ້ອນກັນຢູ່. ໃນເວລາເຮົາປາກ; ເວລານັ້ນ, ພວກເຮົາກໍຈະໄດ້ສະຫຼະ ຫຼືພະຍັນຊະນະທາງປາກ. ຖ້າວ່າເພດານອ່ອນ ແລະລີ້ນໄກ່ຍ່ອນລົງມາອັດຮູທາງຜົ້ງປາກໄວ້ , ອາກາດກໍຈະອອກໄປທາງດັ່ງ ແລະພວກເຮົາກໍຈະໄດ້ພະຍັນຊະນະໝວດທາງດັ່ງ. ຫາກວ່າເພດານອ່ອນ ແລະລີ້ໄກ່ຢູ່ຫວ່າງກາງ, ພວກເຮົາຈະໄດ້ສະຫຼະ ຫຼືພະຍັນຊະນະທີ່ມີສຽງປະສົມທາງປາກ ແລະດັ່ງ.

ໃນອະໄວຍະວະຜັນສຽງຂອງຄົນເຮົາທັງໝົດນີ້, ເພີ່ນຍັງແບ່ງອອກເປັນ ๔ ພາກສ່ວນຄື ພາກສ່ວນເຄື່ອນໄຫວໄດ້ ແລະພາກສ່ວນເຄື່ອນໄຫວບໍ່ໄດ້. ພາກສ່ວນເຄື່ອນໄຫວໄດ້ລວມມີ: ເສັ້ນສຽງ, ລີ້ນໄກ່, ລີ້ນ, ເພດານອ່ອນ ແລະຮິມສິບ. ພາກສ່ວນເຄື່ອນໄຫວບໍ່ໄດ້ລວມມີ: ເພດານແຂງ, ເຫືອກ ແລະແຂ້ວ. ຍ້ອນວ່າມີການປະສົມປະສານກັນລະຫວ່າງອະໄວຍະວະທັງສອງພາກສ່ວນນີ້ ຈຶ່ງເຮັດໃຫ້ຄົນເຮົາປາກເວົ້າໄດ້ຈະແຈ້ງລ່ຽນໄຫຼດີ.



II. ພື້ນຖານດ້ານສັງຄົມຂອງອັກຂະຫຼະ

ຫາກພວກເຮົາເອົາເດັກນ້ອຍຫາກໍເກີດໃໝ່ໄປລ້ຽງໄວ້ຢູ່ຫ່າງໄກຄົນ ຕັດການພົວພັນທັງໝົດກັບຄົນ, ເມື່ອເດັກນ້ອຍຄົນນັ້ນໃຫຍ່ຂຶ້ນມາ ມັນກໍຈະບໍ່ຮູ້ປາກຢ່າງເດັດຂາດ . ບັນຫານີ້ຢັ້ງຢືນໃຫ້ພວກເຮົາເຫັນວ່າ ຖ້າແຍກອອກຈາກສັງຄົມມະນຸດແລ້ວ ແມ່ນບໍ່ມີອັກຂະຫຼະໄດ້ ; ດັ່ງນັ້ນ, ເມື່ອເວົ້າເຖິງສຽງຂອງອັກຂະຫຼະຂອງພາສານີ້, ນອກຈາກພື້ນຖານທຳມະຊາດແລ້ວ ຍັງຈະຕ້ອງໄດ້ເບິ່ງພື້ນຖານດ້ານສັງຄົມຂອງອັກຂະຫຼະອີກ; ດ້ານສັງຄົມຂອງອັກຂະຫຼະ ສະແດງອອກບາງດ້ານ ດັ່ງນີ້:

๑. ການປະສົມອັກຂະຫຼະ

ອັກຂະຫຼະປະສົມເຂົ້າກັນກາຍເປັນຄຳສັບ ໃຫ້ມະນຸດໃຊ້ເປັນພາຫະນະແລກປ່ຽນຄົບຄ້າສະມາຄົມແນວຄິດອາລົມຈິດນຳກັນຢູ່ໃນສັງຄົມ. ສະນັ້ນ, ມັນຈຶ່ງມີຄວາມແຕກຕ່າງຈາກສຽງອື່ນໆ ທີ່ມີຢູ່ໃນຈັກກະວານ ແລະກໍແມ່ນຍ້ອນແນວນັ້ນແຫຼະ ເພິ່ນຈຶ່ງເວົ້າວ່າ ອັກຂະຫຼະແມ່ນເປືອກ ວັດຖຸຂອງພາສາ.

ຕົວຢ່າງ: ງ; ນ; xา

ລຳພັງແຕ່ສະເພາະຕົວຂອງມັນແລ້ວ, ແຕ່ລະຕົວບໍ່ມີຄວາມໝາຍຫຍັງໝົດ, ມັນຈະມີຄວາມໝາຍໄດ້ ກໍຕໍ່ເມື່ອພວກມັນໄດ້ປະສົມເຂົ້າກັນ ກາຍເປັນຄຳສັບ ເຊັ່ນ

ງ + xา = ງา ບໍ່ແມ່ນ xา + ງ = xาง

ເຖິງວ່າເປັນເຈົ້າຂອງພາສາລາວແທ້ໆ ແຕ່ເມື່ອເຫັນ "าຂ", "พเ" ແມ່ນບໍ່ມີໃຜສາມາດອ່ານແລະເຂົ້າໃຈໄດ້, ເພາະຮູບການນີ້ບໍ່ມີຢູ່ໃນລະບຽບການຈັດວາງອັກຂະຫຼະພາສາລາວ.

๘. ການປະດິດແຕ່ງອັກຂະຫຼະ

ຜູ້ໃດຜູ້ໜຶ່ງຈະປະດິດແຕ່ງອັກຂະຫຼະຂຶ້ນຕາມໃຈຕົນເອງແມ່ນບໍ່ໄດ້, ຫາກວ່າທຸກໆຄົນໃຜກໍສ້າງອັກຂະຫຼະຂອງຕົນເອງຂຶ້ນໄດ້ ກໍໝາຍຄວາມວ່າຈະມີພາສາຂອງຕົນເອງ, ເມື່ອເປັນແນວນັ້ນ ສັງຄົມຈະມີຄວາມສັບສົນທີ່ສຸດ, ເພາະມີພຽງສອງຄົນກໍຈະຕ້ອງໄດ້ຮຽນພາສາຂອງກັນແລະກັນ. ໃນຕົວຈິງ ພວກເຮົາເຫັນວ່າ ແຕ່ລະສັງຄົມລ້ວນແຕ່ມີອັກຂະ ຫຼະລວມທີ່ຮັບໃຊ້ທົ່ວສັງຄົມນັ້ນໆ. ບັນຫານີ້ຢັ້ງຢືນໃຫ້ເຮົາເຫັນວ່າ ອັກຂະຫຼະມີຂຶ້ນໄດ້ກໍຍ້ອນທົ່ວສັງຄົມຮັບຮູ້, ໃຜຈະສ້າງອັກຂະຫຼະຂຶ້ນຕາມໃຈຕົນເອງແມ່ນບໍ່ໄດ້.

ນອກນັ້ນ, ດ້ານສັງຄົມຂອງອັກຂະຫຼະນີ້, ມັນຮຽກຮ້ອງໃຫ້ບັນດາສຽງພາສາຕ້ອງມີການຈັດຕັ້ງສັບຊ້ອນເປັນລະບົບອັນໜຶ່ງທີ່ແນ່ນອນ. ເຮັດແນວນັ້ນ, ພາສາຈຶ່ງຈະເຮັດສຳເລັດໜ້າທີ່ເປັນພາຫະນະແລກປ່ຽນຄົບຄ້າສະມາຄົມຢູ່ໃນສັງຄົມໄດ້. ຫາກວ່າອັກຂະຫຼະບໍ່ມີການຈັດຕັ້ງສັບຊ້ອນເປັນລະບົບຄັກແນ່, ຈະເຮັດໃຫ້ຜູ້ໃຊ້ຫຼົງໜ້າຫຼົງຫຼັງ. ສະເພາະພາສາລາວຂອງພວກເຮົາມີປະລິມານຄຳສັບເປັນໝື່ນໆຄຳ; ແຕ່ວ່າອັນນີ້ມັນເປັນພຽງແຕ່ໝາກຜົນແຫ່ງການສັບໄປສັບມາຂອງອັກຂະຫຼະ (ສະຫຼະ, ພະຍັນຊະນະ ແລະວັນນະຍຸດ) ທີ່ມີຈຳນວນຈຳກັດໃດໜຶ່ງ ແຕ່ຫາກມີຫຼັກການອັນແນ່ນອນເທົ່ານັ້ນ.

ສະຫຼຸບລວມ:

ພື້ນຖານຂອງອັກຂະຫຼະທັງສອງດ້ານນີ້(ດ້ານທຳມະຊາດ ແລະດ້ານສັງຄົມ) ມັນໂຮມເຂົ້າເປັນກ້ອນເອກະພາບອັນໜຶ່ງ. ພວກເຮົາແຍກພວກມັນອອກຈາກກັນເປັນແຕ່ລະດ້ານ ກໍເພື່ອຄົ້ນຄວ້າເທົ່ານັ້ນ, ໃນຕົວຈິງແລ້ວ ທັງສອງດ້ານນີ້ມີການພົວພັນກັນຢ່າງສະໜິດແໜ້ນ . ສະນັ້ນ, ໃນເວລາຄົ້ນຄວ້າຕ້ອງເອົາໃຈໃສ່ຄົ້ນຄວ້າສົມທົບກັນທັງສອງດ້ານ. ເພາະບັນຫານີ້, ມັນມີຄວາມຈຳເປັນ ແລະສຳຄັນທີ່ສຸດໃນເມື່ອກ້າວໄປການຄົ້ນຄວ້າສຽງ, ຕົວສຽງ ຫຼືບັນຫາອື່ນອີກ ທີ່ແນ່ນອນຢູ່ໃນຂະແໜງອັກຂະຫຼະວິທະຍາ.

ຄຳຖາມ

๑. ພື້ນຖານຂອງອັກຂະຫຼະປະກອບມີຈັກດ້ານ? ແຕ່ລະດ້ານເປັນແນວໃດ?
๘. ມີມູນພາກໃດແດ່ ທີ່ພາໃຫ້ສຽງຕ່າງໆໃນຈັກກະວານນີ້ແຕກຕ່າງກັນ?
๙. ສຽງຂອງພາສາ ແລະສຽງອື່ນໆໃນຈັກກະວານນີ້ແຕກຕ່າງກັນຢູ່ບ່ອນໃດ? ຍ້ອນຫຍັງ?

ບົດທີ ນ

ການວິໄຈອັກຂະຫຼະ

ຕາມທຳມະດາແລ້ວ, ເມື່ອເວລາຄົນເຮົາເວົ້ານັ້ນ, ເຄີຍເວົ້າເປັນປະໂຫຍກ ຫຼືເປັນເນື້ອຄວາມ ຍືດຍາວຕິດຕໍ່ກັນ, ຄ້າຍຄືກັບເສັ້ນສຽງອັນໜຶ່ງ. ສະນັ້ນ, ເພິ່ນເຄີຍອີງໃສ່ພື້ນຖານດ້ານທຳມະຊາດ ແລະສັງຄົມຂອງອັກຂະຫຼະ ເພື່ອວິໄຈເສັ້ນສຽງດັ່ງກ່າວນັ້ນ ອອກເປັນຫຼາຍພາກສ່ວນ ຄື ສຽງ , ຕົວ ສຽງ, ພະຍາງ, ສຽງວັນນະຍຸດ ແລະທຳນອງສຽງ.

I. ສຽງ(Sound)

๑. ສຽງແມ່ນຫຍັງ?

ສຽງແມ່ນຫົວໜ່ວຍນ້ອຍສຸດຂອງອັກຂະຫຼະ ເຊິ່ງບໍ່ສາມາດໄຈ້ແຍກອອກໄປໄດ້ອີກ, ສຽງມັນ ແມ່ນຮູບການສະແດງຕົວຈິງຂອງຕົວສຽງ, ມັນມີລັກສະນຕົວຈິງ, ຮູບປະທຳ ແລະເຄີຍສົມຄູ່ກັບຕົວ ສຽງ.

ຕົວຢ່າງ: “ເຮົາເຮັດວຽກເພື່ອຊາດ”

ອັນນີ້ມັນແມ່ນເນື້ອຄວາມທີ່ຍາວ ແຕ່ພວກເຮົາກໍສາມາດຕັດແຍກອອກເປັນແຕ່ລະສັບ, ແຕ່ລະ ພະຍາງໄດ້ ເຊັ່ນ ເຮົາ / ເຮັດ / ວຽກ / ເພື່ອ / ຊາດ.

ຖ້າພວກເຮົາສືບຕໍ່ແຍກມັນອອກອີກ, ພວກເຮົາຈະໄດ້ເປັນແຕ່ລະຕົວອັກສອນ ເຊິ່ງເພິ່ນ ເອີ້ນ ວ່າ “ຕົວສຽງ”(Phoneme) ເຊັ່ນ (ເຮົາສືບຕໍ່ແຍກພະຍາງສຸດທ້າຍ).

“ຊາດ” [sa:t]

/s/ - /a:/ - /t/ ນີ້ເອີ້ນວ່າ “ຕົວສຽງ”.

ຫາກວ່າພວກເຮົາສືບຕໍ່ແຍກຕົວສຽງ ພວກ ເຮົາຈະໄດ້ “ສຽງ” ເຊັ່ນສຽງ “ຊ” /s/ ແຕ່ລະຄົນ ອອກສຽງບໍ່ຄືກັນ ອາດສັ້ນ, ຍາວ, ໃຫຍ່, ນ້ອຍ... ແຕກຕ່າງກັນໄປ. ຮອດບ່ອນນີ້, ພວກເຮົາບໍ່ສາ ມາດແຍກອອກໄດ້ອີກ, ອັນນີ້ເພິ່ນເອີ້ນວ່າ “ສຽງ”(Sound).

[sa:t] ⇨ ພະຍາງ

/s/ /a:/ /t/ ⇨ ຕົວສຽງ

[s_1], [s_2], [s_3], [s_4]... [s_n] ⇨ ສຽງ

“ສຽງ” ມັນນອນຢູ່ໃນຂົງເຂດຂອງຄວາມເວົ້າ, ສຽງດຽວນັ້ນ ແຕ່ເມື່ອປະສົມກັບສຽງອື່ນ ສຽງທີ່ ກະຈາຍອອກກໍບໍ່ຄືກັນ ເຊັ່ນສຽງ “ຊ” ໃນ “ຊູ”[su:], “ຊາ”[sa:], “ໂຊ”[so:]. ສຽງຂອງ “ຊ” ທັງ ສາມນີ້ ແມ່ນກະຈາຍອອກບໍ່ຄືກັນ.

- ກໍລະນີສຽງດຽວນັ້ນ ແຕ່ວ່າແຕ່ລະຄົນຜັນສຽງບໍ່ຄືກັນ ເຊັ່ນສຽງ "ກ" ແຕ່ລະຄົນອ່ານແມ່ນບໍ່ຄືກັນ ອາດສັ້ນ, ຍາວ, ນ້ອຍ, ໃຫຍ່, ຄ່ອຍ, ແຮງ... ຕ່າງກັນ. ບັນຫານີ້ເພີ່ນເວົ້າວ່າ ການຜິດບ່ຽງທີ່ອະນຸໂລມໄດ້.

- ກໍລະນີສຽງດຽວນັ້ນ ແຕ່ມີຕົວອັກສອນຫຼາຍຕົວເພື່ອຈົດ ເຊັ່ນ

+ ພາສາລາວ: ຂ, ຄ = [kh]
ສ, ຊ = [s]
ໜ, ນ = [n]
+ ພາສາຫວຽດ: c, k, q = [k]
ng, ngh = [ŋ]

- ບາງກໍລະນີ, ຕົວອັກສຽງດຽວ ພັດແທນໃຫ້ແກ່ຫຼາຍສຽງ ເຊັ່ນວ່າ ພາສາລາວໃນເມື່ອກ່ອນເຄີຍໃຊ້ຕົວສະກົດກາງຄຳ ເຊິ່ງເວລາອ່ານແມ່ນແທນໃຫ້ຫຼາຍສຽງ ເຊັ່ນ "ອັສຈັນ" ອ່ານວ່າ "ອັດສະຈັນ". ສຽງ "ສ" ຢູ່ນີ້ແມ່ນແທນໃຫ້ແກ່ ᔕ ສຽງຄື "ດ" [d], "ສ" [s], ແລະສຽງສະຫຼະ "xະ" [a].

ກໍລະນີສຽງດຽວນັ້ນ ແຕ່ຕົວໜັງສືຂອງແຕ່ລະຊາດບໍ່ຄືກັນ, ໝາຍຄວາມວ່າສຽງດຽວນັ້ນ ແຕ່ຮູບຕົວອັກສອນຂອງແຕ່ລະຊາດບໍ່ຄືກັນ ເຊັ່ນ

[d] ← ລາວ: ດ
ຫວຽດ: đ
ລັດເຊຍ: g
ຝຣັ່ງ: d

- ກໍລະນີ ແຕ່ລະຊາດມີຮູບຕົວອັກສອນຄືກັນ ແຕ່ຊ້ຳພັດອອກສຽງຕ່າງກັນ ເຊັ່ນ

ພາສາຫວຽດ: "ch" [c] ໃນຄຳວ່າ: chúng tôi
ພາສາອັງກິດ: "ch" [tʃ] ໃນຄຳວ່າ: chair
ພາສາຝຣັ່ງ: "ch" [ʃ] ໃນຄຳວ່າ: chou

ເພື່ອເປັນການຫຼີກລ່ຽງບັນດາກໍລະນີທີ່ຫຍຸ້ງຍາກສັບສົນດັ່ງກ່າວມາຂ້າງເທິງນີ້, ນັກພາສາສາດທັ່ງຫຼາຍ ຈຶ່ງ ໄດ້ຄົ້ນຄວ້າວິທີຈົດສຽງໃຫ້ເປັນເອກະພາບກັນໃນທົ່ວໂລກ. ເຂົາເຈົ້າໄດ້ກຳນົດເຄື່ອງໝາຍແບບສາກົນຂຶ້ນ ຫຼືຍັງເອີ້ນກັນວ່າ "ຕົວອັກສອນ Phonetics". ເຄື່ອງໝາຍອັກສອນເຫຼົ່ານີ້ສ່ວນຫຼາຍແມ່ນເອົາມາຈາກຕົວໜັງສືລາແຕ໋ງ(Latin) ໂດຍກຳນົດເອົາແບບຕົວພິມນ້ອຍ ແລ້ວຂຽນໄວ້ຢູ່ໃນວົງຂໍ[...] ເຊັ່ນ [p], [d], [t]... ນອກຈາກນີ້, ເຂົາເຈົ້າຍັງກຳນົດນຳກັນອີກວ່າ ຕົວ ໜັງສືໜຶ່ງແມ່ນໃຊ້ຈົດແຕ່ສຽງດຽວ, ໝາຍຄວາມວ່າ ເຄື່ອງໝາຍໜຶ່ງແມ່ນແທນໃຫ້ແກ່ສຽງດຽວເທົ່ານັ້ນ.

ຕົວຢ່າງ: "ການ" [ka:n]
/ | \
lkl la:l lnl

ນັກພາສາສາດທັງຫຼາຍ, ໄດ້ອີງໃສ່ພື້ນຖານດ້ານທຳມະຊາດຂອງອັກຂະຫຼະ ເພື່ອແບ່ງອັກຂະຫຼະອອກເປັນສອງໝວດ ໃນເວລາຜັນສຽງອັກຂະຫຼະນັ້ນ, ຖ້າວ່າລົມອອກຈາກປອດຖືກກີດກັ້ນໜ້ອຍກວ່າ ພວກ ເຮົາຈະໄດ້ສຽງຂອງອັກຂະຫຼະ ແລະກົງກັນຂ້າມຖ້າລົມອອກມາຈາກປອດຖືກກີດກັ້ນ ຫຼື ຮຸກຮຸກັບຈຸດໃດຈຸດໜຶ່ງໃນຜົ້ງປາກ ຫຼື ຜົ້ງດັ້ງຫຼາຍກວ່າ ພວກເຮົາຈະໄດ້ສຽງຂອງພະຍັນຊະນະ. ນີ້ແມ່ນຈຸດແຕກຕ່າງກັນອັນເປັນພື້ນຖານລະຫວ່າງສະຫຼະ ແລະພະຍັນຊະນະ.

๔. ຄວາມແຕກຕ່າງກັນລະຫວ່າງສຽງສະຫຼະ ແລະສຽງພະຍັນຊະນະ.

ສະຫຼະ	**ພະຍັນຊະນະ**
- ມີສຽງກ້ອງຫຼາຍ ເພາະເສັ້ນສຽງສັ່ນສະເທືອນຫຼາຍກວ່າ ເຊັ່ນ xา[a:], x̄[i:], xู[u:]	- ມີສຽງແຕກ(ບໍ່ກ້ອງ) ເພາະເສັ້ນສຽງເຄັ່ງຕຶງບໍ່ສະເໝີກັນ ເຊັ່ນ ก[k], ป[p], ด[d]...
- ອາກາດອອກມາຈາກປອດເສລີ, ບໍ່ຖືກກີດກັ້ນ ເຊັ່ນ โx[o:], x̊[ɔ:], x̄[ɯ:]	- ອາກາດອອກຈາກປອດຖືກກີດກັ້ນ, ຢູ່ຈຸດໃດຈຸດໜຶ່ງຂອງອະໄວຍະວະຜະລິດສຽງ ເຊັ່ນ ต[t],จ[c], น[n]...
-ອາກາດອອກມາຈາກປອດບໍ່ແຮງ, ຖ້າທຽບກັບພະຍັນຊະນະ ເຊັ່ນ เx[e:], แx[ɛ:], เx̄[ɤ:] ...	- ອາກາດອອກຈາກປອດແຮງ ຖ້າທຽບກັບສະຫຼະ ເຊັ່ນ ฟ[f], ม[m], ท[th]...
- ອະໄວຍະວະຜັນສຽງເຄື່ອນໄຫວໝົດທຸກຈຸດ, ເຄັ່ງຕຶງສະເໝີ ເຊັ່ນ xา[a:], x̄[i:]...	- ອະໄວຍະວະຜັນສຽງເຄັ່ງຢູ່ຈຸດໃດໜຶ່ງ ບໍ່ ສະເໝີ ເຊັ່ນ พ[ph], ง[ŋ], ซ[s]...

ຮວມຄວາມແລ້ວ, ພວກເຮົາເຫັນວ່າ ສະຫຼະ ແລະພະຍັນຊະນະມີຄວາມແຕກຕ່າງກັນ ຕົ້ນຕໍແມ່ນບ່ອນປະກອບສ້າງສຽງ ຄື ດ້ານທຳຊາດ(ສະລິລະສາດ) ຂອງອັກຂະຫຼະ ໝາຍຄວາມວ່າ ພື້ນຖານດ້ານທຳມະຊາດຂອງອັກຂະຫຼະ ມັນຊ່ວຍໃຫ້ພວກເຮົາສາມາດຈຳແນກຈຸດແຕກລະຫວ່າງ ສະຫຼະ ແລະພະຍັນຊະນະ.

๓. ການວິໄຈສະຫຼະ

ก. ຈຸພິເສດຂອງສະຫຼະ

ເວລາພວກເຮົາຜັນສຽງສະຫຼະ, ພວກເຮົາຈະເຫັນວ່າມັນມີຈຸດພິເສດຢູ່ ๓ ຢ່າງ ຄື

- ລົມອອກຈາກປອດເສລີ ບໍ່ຖືກກີດກັ້ນ.
- ອະໄວຍະວະຜັນສຽງທຸກພາກສ່ວນເຄັ່ງຕຶງສະເໝີ.
- ສ່ວນຫຼາຍແມ່ນມີສຽງກ້ອງ ແລະລົມພົ່ນອອກນອກບໍ່ແຮງ.

ເວົ້າລວມແລ້ວ, ສະຫຼະແມ່ນມີສຽງສະເໝີ, ເວລາຜັນສຽງພວກເຮົາອາດຜັນສຽງນີ້ຕໍ່ໃສ່ສຽງນັ້ນໄດ້ງ່າຍ, ໝາຍຄວາມວ່າ ຈຸດຜະລິດສຽງຂອງສະຫຼະແຕ່ລະຕົວບໍ່ໂຕນກັນຫຼາຍ , ຖ້າທຽບກັບພະຍັນຊະນະ.

ພ້ອມນັ້ນ, ພວກເຮົາກໍສັງເກດເຫັນວ່າ ມີສຽງສະຫຼະ ແລະພະຍັນຊະນະ ບາງຕົວກໍບໍ່ແຕກຕ່າງກັນຫຼາຍ ເພາະວ່າມີຕົວອັກສອນບາງຕົວມີສຽງເຄິ່ງສະຫຼະເຄິ່ງພະຍັນຊະນະ(ໝາຍວ່າເຮັດສອງໜ້າທີ່ ທັງເປັນສະຫຼະ ແລະບາງເທື່ອກໍເປັນພະຍັນຊະນະ) ເຊັ່ນ "ວ" [v], "ຍ"[ñ] ໃນພາສາລາວ.

ຂ. ບ່ອນອີງໃນການວິໄຈສະຫຼະ

ໃນເວລາວິໄຈສຽງສະຫຼະ ເພິ່ນເຄີຍອີງໃສ່ ໓ ດ້ານ ຄື ທີ່ຕັ້ງຂອງລີ້ນ , ລະດັບອ້າຂອງປາກ ແລະຮູບຊົງຂອງສົບ.

- ທີ່ຕັ້ງຂອງລີ້ນ: ຖ້າລີ້ນປ່ຽນທີ່ຕັ້ງຈະເຮັດໃຫ້ສຽງສະຫຼະແຕກຕ່າງກັນຫຼາຍ. ອີງໃສ່ຕັ້ງຂອງລີ້ນ, ເພິ່ນໄດ້ແບ່ງສະຫຼະອອກເປັນ ໓ ໝວດ ຄື ສະຫຼະແຖວໜ້າ, ແຖວກາງ ແລະແຖວຫຼັງ.

ຕົວຢ່າງ: ໝວດສະຫຼະແຖວໜ້າ: x̄[i:], ɛx[e:], ɑx[ɛ:], xา[a:].

ໝວດສະຫຼະແຖວກາງ(ສະຫຼະໃນພາສາລາວບໍ່ມີ)

ໝວດສະຫຼະແຖວຫຼັງ: x̄̈[ɯ:], x̱[u:], ɔx[o:], ɛx̄[ə:], x̊[ɔ:].

- ລະດັບອ້າຂອງປາກ: ລະດັບອ້າຂອງປາກມັນເປັນອັດຕາສ່ວນກົງກັບລະດັບຂອງລີ້ນ, ໝາຍຄວາມວ່າລີ້ນຢູ່ສູງ, ປາກຈະແຄບ ແລະລີ້ນຄ່ອຍໆຕ່ຳລົງ ປາກຈະຄ່ອຍກວ້າງອອກ. ອີງໃສ່ລະດັບອ້າຂອງປາກ ເພິ່ນແບ່ງສະຫຼະອອກເປັນ ๔ ໝວດ ຄື ສະຫຼະໝວດແຄບ, ແຄບແດ່, ກວ້າງແດ່ ແລະ ກວ້າງ.

ຕົວຢ່າງ: ສະຫຼະໝວດແຄບ : x̄[i:], x̱[u:], x̄̈[ɯ:]

ສະຫຼະໝວດແຄບແດ່ : ɛx [e:], ɛx̄ [ə:], ɔx[o:]

ສະຫຼະໝວດກວ້າງແດ່ : ɑx[ɛ:], x̊[ɔ:]

ສະຫຼະໝວດກວ້າງ : xา[a:]

- ຮູບຊົງຂອງສົບ: ສົບມົນຫຼືບໍ່ມົນ ກໍຈະເຮັດໃຫ້ສຽງສະ ຫຼະແຕກຕ່າງກັນ, ອີໃສ່ຮູບຊົງຂອງສົບ, ເພິ່ນແບ່ງອອກເປັນ ๘ ໝວດຄື ໝວດສະຫຼະສົບມົນ ແລະບໍ່ມົນ.

ຕົວຢ່າງ: ໝວດສະຫຼະໝວດສົບມົນ: x̱[u:], ɔx[o:], x̊[ɔ:]

ສະຫຼະໝວດສົບບໍ່ມົນ: x̄ [i:], x̄̈ [ɯ:], ɛx[e:], ɑx[ɛ:], ɛx̄[ə:], xา[a:]

- ເພື່ອສະດວກໃຫ້ແກ່ການວິໄຈສຽງສະຫຼະນີ້, ບັນດານັກພາສາດທັງຫຼາຍໄດ້ເອກະພາບກັນ ໃຊ້ຮູບຄາງໝູປີ້ນ ເພື່ອສະແດງເຖິງສະຫຼະຂອງພາສາຕ່າງໆໃນການວິໄຈສະຫຼະ ເຊັ່ນ ລະດັບອ້າຂອງປາກ, ທີ່ຕັ້ງຂອງລີ້ນ ແລະຮູບຊົງຂອງສົບ.

ຮູບຄາງໝູປີ້ນ ສະແດງເຄື່ອງໝາຍຈົດສຽງສະຫຼະສາກົນ



ອີງຕາມຈຸດພິເສດຂອງພາສາລາວເຮົາ ເຊິ່ງສະຫຼະລາວບໍ່ຄົບຕາມບ່ອນຢູ່ຂອງເຄື່ອງໝາຍຈົດສຽງສະຫຼະສາກົນໃນຮູບຄາງໝູປີ້ນນີ້. ພວກເຮົາກຳມາດນຳໃຊ້ຮູບສາມແຈປີ້ນ ເພື່ອສະແດງເຖິງທີ່ຕັ້ງຂອງສະຫຼະລາວດັ່ງນີ້(ໃນແຜນວາດສະແດງເຄື່ອງໝາຍຈົດສຽງສະຫຼະຂອງລາວ ນີ້ແມ່ ພວກເຮົາໄດ້ຄັດເລືອກເອົາເຄື່ອງໝາຍຈົດສຽງສະຫຼະສາກົ ຕົວໃດທີ່ເຫັນວ່າແທດເໝາະກັບສຽງສະຫຼະລາວຂອງພວກເຮົາ ແລະຢາຍໄວ້ຕາມທີ່ຕັ້ງຈຸດຜະລິດສຽງ).



+ ສະຫຼະແຖວໜ້າສົບບໍ່ມົນລວມມີ: x̊[i], x̊[i:], ɛxะ[e], ɛx[e:], แxะ[ɛ], แx[ɛ:], xะ[a], xา[a:]

+ ສະຫຼະແຖວຫຼັງສົບບໍ່ມົນລວມມີ: x̊[ɯ], x̊[ɯ:], เx̊[ə], เx̊[ə:]

+ ສະຫຼະແຖວຫຼັງສົບມີ ɯ ລວມມີ: ɤ̱[u], ɣ̱[u:], ɛxะ[o], ɛ̱x[o:], ɤxาะ[ɔ], ɤ̱̊[ɔ:]

+ ສະຫຼະປາກແຄບໃ ɲ ເວລາຜັ ɲ ສຽງລວມມີ: ɤ̱̊[i], ɤ̱̊[i:], ɤ̱̊[ɯ], ɤ̱̊[ɯ:], ɤ̱[u], ɣ̱[u:]

+ ສະຫຼະປາກແຄບແດ່ເວລາຜັ ɲ ສຽງລວມມີ: ɤxะ[e], ɤx[e:], ɤ̱̊[ə], ɤ̱̊[ə:], ɛxะ[o], ɛ̱x[o:]

+ ສະຫຼະປາກກວ້າງແດ່ໃ ɲ ເວລາຜັ ɲ ສຽງລວມມີ: ɯxะ[ɛ], ɯx[ɛ:], ɤxาะ[ɔ], ɤ̱̊[ɔ:]

+ ສະຫຼະປາກກວ້າງ ໃ ɲ ເວລາຜັ ɲ ສຽງລວມມີ: xะ[a], xา[a:]

+ ສະຫຼະປະສົມຈາກປາກແຄບຫາປາກກວ້າງແດ່ລວມມີ: ɤ̱ัย[xie], ɤxย[xie:], ɤ̱ัอ[xɯə], ɤ̱ือ [xɯə:], ɤ̱ัอะ[xuo], ɤ̱ัอ[xuo:].

✍ ສິ່ງທີ່ຄວນເອົາໃຈໃສ່

ເນື່ອງຈາກວ່າ, ພາສາລາວຂອງພວກເຮົາມີສະຫຼະສຽງຄູ່: ສັ້ນ-ຍາວ. ສະນັ້ນ, ເພື່ອໃຫ້ສະດວກ ໃ ɲ ການ ɲ ຈົດສຽງໃຫ້ເປັ ɲ ເອກະພາບ, ພວກເຮົາໄດ້ກ ɲ ົດ ɲ ໍ ɲ ັ ɲ ວ່າ ຕົວໃດສຽງຍາວແ ɲ ່ ໃຊ້ສອງຈ ɲ ້ (:) ຢູ່ຂ້າງຫຼັງທຸກໆສຽງສະຫຼະ; ສ ɲ ວນສຽງສັ້ນບ ɲ ່ ມີເຄື ɲ ່ ອງໝາຍຫຍັງ ແລະສະຫຼະປະສົມໃຊ້ເຄື ɲ ່ ອງໝາຍ(xx) ໂ ɲ ບເຂົ ɲ ້ າ ɲ ັ ɲ ຢູ ɲ ່ ກ ɲ ້ ອງ.

ຕ ɲ ວຢ ɲ ່ າງ: xา[a:], ɤ̱̊[i:], ɤ̱̊ɯ:]...

xะ[a], ɤ̱̊[i], ɤ̱̊[ɯ]...

ɤxย[ie:], ɤ̱̊ือ[ɯə:], ɤ̱̊อ[ɯo:]

ຄ. ຕ ɲ ວຢ ɲ ່ າງການວິໄຈສະຫຼະບາງຕ ɲ ວ

ການວິໄຈສະຫຼະລາວຂອງພວກເຮົາ ກ ɲ ໍ ɲ ແ ɲ ່ ນໄ ɲ ດ ɲ ້ ອີງໃສ ɲ ່ ຕາມຫຼັກເກນທ ɲ ີ ɲ ່ ພວກເຮົາໄ ɲ ດ ɲ ້ ວິໄຈຜ ɲ ່ ານມາ ແ ɲ ລ ɲ ້ ວ ɲ ັ ɲ ນ ຄ ɲ ື ທ ɲ ີ ɲ ່ ຕ ɲ ັ ɲ ງຂ ɲ ອ ɲ ງລ ɲ ິ ɲ ນ , ລ ɲ ະ ɲ ດ ɲ ັ ɲ ບອ ɲ ້ າ ɲ ຂ ɲ ອ ɲ ງປ ɲ າ ɲ ກ ແ ɲ ລ ɲ ະ ɲ ຮ ɲ ູ ɲ ບ ɲ ່ ɲ ຮ ɲ ່ າ ɲ ງ ɲ ຂ ɲ ອ ɲ ງ ɲ ສ ɲ ິ ɲ ບ. ເ ɲ ພ ɲ ື ɲ ່ ອ ɲ ໃ ɲ ຫ ɲ ້ ɲ ເ ɲ ຂ ɲ ົ ɲ ້ ɲ າ ɲ ໃ ɲ ຈ ɲ ແ ɲ ຈ ɲ ້ ɲ ງ ɲ ກ ɲ ່ ɲ ງ ɲ ວ ɲ ກ ɲ ັ ɲ ບ ɲ ບ ɲ ັ ɲ ນ ɲ ຫ ɲ າ ɲ ນ ɲ ີ ɲ , ພ ɲ ວ ɲ ກ ɲ ເ ɲ ຮ ɲ ົ ɲ າ ɲ ຈ ɲ ະ ɲ ວ ɲ ິ ɲ ໄ ɲ ຈ ɲ ສ ɲ ະ ɲ ຫ ɲ ຼ ɲ ະ ɲ ບ ɲ າ ɲ ງ ɲ ຕ ɲ ວ ɲ ພ ɲ ໍ ɲ ເ ɲ ປ ɲ ັ ɲ ນ ɲ ຕ ɲ ວ ɲ ຢ ɲ ່ ɲ າ ɲ ງ ɲ ດ ɲ ັ ɲ ່ ɲ ງ ɲ ນ ɲ ີ ɲ :

๑. ɤ̱̊ [i:] - ທ ɲ ີ ɲ ່ ຕ ɲ ັ ɲ ງຂ ɲ ອ ɲ ງ ɲ ລ ɲ ິ ɲ ນ ɲ ຢ ɲ ູ ɲ ່ ɲ ແ ɲ ຖ ɲ ວ ɲ ໜ ɲ ້ ɲ າ.
- ລ ɲ ະ ɲ ດ ɲ ັ ɲ ບອ ɲ ້ າ ɲ ຂ ɲ ອ ɲ ງ ɲ ປ ɲ າ ɲ ກ ɲ ແ ɲ ຄ ɲ ບ ເ ɲ ພ ɲ າ ɲ ະ ɲ ລ ɲ ິ ɲ ນ ɲ ຍ ɲ ິ ɲ ກ ɲ ຂ ɲ ຶ ɲ ້ ɲ ນ ɲ ສ ɲ ູ ɲ ງ.
- ຮ ɲ ູ ɲ ບ ɲ ຮ ɲ ่ ɲ າ ɲ ງ ɲ ຂ ɲ ອ ɲ ງ ɲ ສ ɲ ິ ɲ ບ ɲ ບ ɲ ่ ɲ ມ ɲ ິ ɲ ນ.

๒. ɤ̱̊ [ɯ:] - ທ ɲ ີ ɲ ่ ຕ ɲ ັ ɲ ງຂ ɲ ອ ɲ ງ ɲ ລ ɲ ິ ɲ ນ ɲ ຢ ɲ ູ ɲ ່ ɲ ແ ɲ ຖ ɲ ວ ɲ ຫ ɲ ັ ɲ ງ.
- ລ ɲ ະ ɲ ດ ɲ ັ ɲ ບອ ɲ ້ າ ɲ ຂ ɲ ອ ɲ ງ ɲ ປ ɲ າ ɲ ກ ɲ ແ ɲ ຄ ɲ ບ.
- ຮ ɲ ູ ɲ ບ ɲ ຮ ɲ ่ ɲ າ ɲ ງ ɲ ຂ ɲ ອ ɲ ງ ɲ ສ ɲ ິ ɲ ບ ɲ ມ ɲ ິ ɲ ນ.

๓. ɣ̱ [u:] - ທ ɲ ີ ɲ ่ ຕ ɲ ັ ɲ ງຂ ɲ ອ ɲ ງ ɲ ລ ɲ ິ ɲ ນ ɲ ຢ ɲ ູ ɲ ่ ɲ ແ ɲ ຖ ɲ ວ ɲ ຫ ɲ ັ ɲ ງ.
- ລ ɲ ະ ɲ ດ ɲ ັ ɲ ບອ ɲ ້ າ ɲ ຂ ɲ ອ ɲ ງ ɲ ປ ɲ າ ɲ ກ ɲ ແ ɲ ຄ ɲ ບ.
- ຮ ɲ ູ ɲ ບ ɲ ຮ ɲ ่ ɲ າ ɲ ງ ɲ ຂ ɲ ອ ɲ ງ ɲ ສ ɲ ິ ɲ ບ ɲ ມ ɲ ິ ɲ ນ.

๔. ɯx [ɛ:] - ທ ɲ ີ ɲ ่ ຕ ɲ ັ ɲ ງຂ ɲ ອ ɲ ງ ɲ ລ ɲ ິ ɲ ນ ɲ ຢ ɲ ູ ɲ ่ ɲ ແ ɲ ຖ ɲ ວ ɲ ໜ ɲ ້ ɲ າ.
- ລ ɲ ະ ɲ ດ ɲ ັ ɲ ບອ ɲ ້ າ ɲ ຂ ɲ ອ ɲ ງ ɲ ປ ɲ າ ɲ ກ ɲ ກ ɲ ວ ɲ ້ ɲ າ ɲ ງ ɲ ແ ɲ ດ ɲ ່ .

- ຮູບຮ່າງຂອງສົບບໍ່ມົນ.

๔. ◌ิ [อ:] - ທີ່ຕັ້ງຂອງລີ້ນຢູ່ແຖວຫຼັງ.
- ລະດັບອ້າຂອງປາກແຄບແດ່.
- ຮູບຮ່າງຂອງສົບບໍ່ມົນ.

๑. ເຄິ່ງສະຫຼະ ແລະເຄິ່ງພະຍັນຊະນະ

ຄືພວກເຮົາໄດ້ສະເໜີມາໃນເບື້ອງຕົ້ນນັ້ນແລ້ວວ່າ ມີສະຫຼະບາງຕົວເຮັດໜ້າທີ່ສອງຢ່າງ, ໝາຍຄວາມວ່າ ບາງກໍລະນີມັນເຮັດໜ້າທີ່ເປັນສະຫຼະ ແລະມີບາງກໍລະນີພັດເຮັດໜ້າທີ່ເປັນພະຍັນຊະນະ. ຢູ່ໃນພາສາລາວຂອງພວກເຮົາ ຈຳພວກຕົວອັກສອນທີ່ເຮັດວຽກສອງໜ້າທີ່ ດັ່ງກ່າວມານັ້ນ ລວມມີ ๓ ຕົວ ຄື "ຍ", "ວ", "ອ".

✷ ຕົວ "ຍ"

- ມັນເຮັດໜ້າທີ່ເປັນພະຍັນຊະນະ ແມ່ນ ໃນກໍລະນີເປັນຕົວແທນຂອງພະຍາງ ເຊັ່ນ "ຍ◌ົ◌ໍ◌ງ" [ñaːŋ].

- ມັນເຮັດໜ້າທີ່ເປັນສະຫຼະ ແມ່ນໃນກໍລະນີມັນປະສົມກັບສະຫຼະບາງຕົວ ເພື່ອໄດ້ສຽງສະຫຼະອີກສຽງໜຶ່ງ ເຊັ່ນ "ໄx" (ไx) [ai], "xອຍ" [ɔːi]... ເວລາມັນເຮັດໜ້າທີ່ເປັນສະຫຼະນີ້, ເຄື່ອງໝາຍຈົດສຽງສາກົນແມ່ນ [i].

✷ ຕົວ "ວ"

- ເວລາມັນເຮັດໜ້າທີ່ເປັນຕົວແທນ, ເຄື່ອງໝາຍຈົດສຽງສາກົນແມ່ນ[v] ເຊັ່ນ "ວອນ" [vɔːn]
- ເວລາມັນເຮັດໜ້າທີ່ເປັນສະຫຼະ, ເຄື່ອງໝາຍຈົດສຽງສາກົນເພີ່ນໃຊ້[o] ຫຼື [u].

ຕົວຢ່າງ: ◌ເ◌ົ◌ໍ◌ າ[ao], xຽວ[ie:o] ຫຼື [ie:u].

- ເວລາເປັນຕົວຄວບ ເພີ່ນໃຊ້[w]

ຕົວຢ່າງ: ກວ່າ[kwaː], ຄວາຍ[khwaːi].

✷ ຕົວ "ອ"

- ເວລາມັນເຮັດໜ້າທີ່ເປັນຕົວແທນ, ເວລາຈົດສຽງບໍ່ໃຊ້ເຄື່ອງໝາຍຫຍັງ.

ຕົວຢ່າງ: ອ້າຍ[aːi], ເອື້ອຍ[ɯəːi].

- ເວລາມັນເຮັດໜ້າທີ່ເປັນສະຫຼະແມ່ນໃຊ້[ɔ]

ຕົວຢ່າງ: ນອນ[nɔːn], ມອງ[mɔːŋ].

๔. ການວິໄຈພະຍັນຊະນະ

ກ. ຈຸດພິເສດຂອງພະຍັນຊະນະ

ຈຸດພິເສດທາງດ້ານໂຄງສ້າງຂອງພະຍັນຊະນະ ກັບໂຄງສ້າງຂອງສະຫຼະຕົ້ນຕໍແມ່ນບ່ອນການຜັນສຽງ. ເວລາຜັນສຽງພະຍັນຊະນະນັ້ນ ມີຈຸດພິເສດຕົ້ນຕໍດັ່ງນີ້:

- ລົມອອກຈາກປອດບໍ່ເສລີ, ຖືກກີດກັ້ນຢູ່ຈຸດໃດຈຸດໜຶ່ງ ແລ້ວຈຶ່ງປ່ອຍອອກ.

- ອະໄວຍະວະຜັນສຽງເຄັ່ງຕຶງບໍ່ສະໝ່ຳສະເໝີ, ບາງເທື່ອເຄັ່ງບາງເທື່ອຍານ.
- ລົມພົ່ນອອກນອກແຮງກວ່າສະຫຼະ.
- ສຽງພະຍັນຂະນະສ່ວນຫຼາຍແມ່ນສຽງແຕກ, ເວລາອ່ານພະຍັນຂະນະຕົວນີ້ ແລ້ວຢາກຍ້າຍໄປອ່ານພະຍັນຂະນະຕົວອື່ນ ກໍຕ້ອງໄດ້ປ່ຽນຈຸດຜະລິດສຽງ ເຊັ່ນ ເວລາເຮົາຜັນສຽງ ຫຼືອ່ານ "ປ" [p] ເຮົາຈະສັງເກດເຫັນວ່າ ຈຸດຜະລິດສຽງຂອງມັນແມ່ນຮິບສົບຄູ່, ເມື່ອເຮົາປ່ຽນໄປຜັນສຽງ ຫຼືອ່ານ "ຕ"[t] ຈຸດຜະລິດສຽງນັ້ນ ຈະຕ້ອງຍ້າຍໄປເປັນປາຍລີ້ນກັບແຂ້ວເທິງ.

ຂ. ບ່ອນອີງໃນການວິໄຈພະຍັນຂະນະ

ການວິໄຈພະຍັນຂະນະນັ້ນ ເພິ່ນອີງໃສ່ມາດຖານ ຂ ຢ່າງຕົ້ນຕໍ ຄື ອີງຕາມວິທີຜັນສຽງ ແລະ ອີງຕາມຈຸດຜະລິດສຽງ. ເພື່ອເປັນການສະດວກໃນການວິໄຈພະຍັນຂະນະ, ພວກເຮົາກໍຕ້ອງໄດ້ອີງໃສ່ພະຍັນຂະນະລາວຂອງພວກເຮົາເປັນຕົ້ນຕໍ.

ຂ.ຑ ອີງຕາມວິທີຜັນສຽງ

ອີງຕາມວິທີນີ້, ເພິ່ນສັງເກດເບິ່ງວ່າ ເວລາຜັນສຽງພະຍັນຂະນະນັ້ນ, ລົມອອກຈາກປອດແລ້ວຖືກກີດກັ້ນໄວ້ແນວໃດ. ຜ່ານການສັງເກດ ແລະທົດລອງ ເພິ່ນໄດ້ພົບເຫັນພະຍັນຂະນະ ໓ ກໍລະນີ ດັ່ງນີ້:

❖ ກໍລະນີທີ໑: ພະຍັນຂະນະອັດ, ໝາຍຄວາມວ່າ ລົມອອກຈາກປອດອັດໄວ້ໜ້ອຍໜຶ່ງ ແລ້ວຈຶ່ງປ່ອຍອອກທາງປາກ ຫຼືທາງດັງ, ລວມມີ ຂ ໝວດ ຄື ໝວດອັດ-ຜ່ອ ແລະໝວດອັດບໍ່ຜ່ອ.

ຕົວຢ່າງ:

- ພະຍັນຂະນະອັດ-ຜ່ອ, ໝາຍຄວາມວ່າ ລົມອອກມາຈາກປອດຖືກອັດໄວ້ບໍ່ແຈບປານໃດ ເຊັ່ນ ຜ, ພ[p], ຖ, ທ[th], ຂ, ຄ[kh].
- ພະຍັນຂະນະອັດບໍ່ຜ່ອ, ໝາຍຄວາມວ່າ ລົມອອກມາຈາກປອດຖືກອັດໄວ້ແໜ້ນ ແລ້ວຈຶ່ງປ່ອຍອອກ(ສັງເກດຊ້າໆຈຶ່ງຮູ້ສຶກ) ເຊັ່ນ

ປ[p], ຕ[t], ຈ[c], ກ[k] (ຈຳນວນນີ້ແມ່ນອັດ-ບໍ່ກ້ອງ).

ບ[p], ດ[t] (ອັດກ້ອງ).

ມ[m], ນ[n], ຍ[ɲ], ງ[ŋ] (ອັດ-ປ່ອຍສຽງອອກທາງດັງຫຼາຍກວ່າ).

❖ ກໍລະນີທີ໒: ພະຍັນຂະນະຖູ(ປັ່ນ) ໝາຍຄວາມວ່າລົມອອກຈາກປອດຈະຕ້ອງໄດ້ຜ່ານຊ່ອງແຄບໆ, ລົມຕ້ອງໄດ້ຖູອອກ ຫຼືເວົ້າວ່າລົມພົ່ນອອກ ມີລັກສະນະປັ່ນ.

ຕົວຢ່າງ:

- ພະຍັນຂະນະຖູ-ບໍ່ກ້ອງ: ຝ, ຟ[f], ສ, ຊ[s], ຫ, ຮ[h]...
- ພະຍັນຂະນະຖູ-ກ້ອງ: ຫວ, ວ[v]
- ພະຍັນຂະນະຖູອອກທາງສອງຂ້າງລີ້ນ: ຫຼ, ລ[l]

❖ ກໍລະນີທີ3: ພະຍັນຊະນະສຽງສັ່ນ, ໝາຍຄວາມວ່າ ລົມອອກຈາກປອດຖືກອັດ-ໄຂຫຼາຍເທື່ອ ແລ້ວຈຶ່ງພົ່ນອອກມາ, ແລ້ວກາຍເປັນສຽງສັ່ນ ເຊັ່ນ ຣ[r] (ພະຍັນຊະນະຕົວນີ້ໃນພາສາລາວ ແມ່ນໃຊ້ເປັນພະຍັນຊະນະພິເສດ).

ຂ.ຄ ວິໄຈຕາມຈຸດຜະລິດສຽງ

ອີງຕາມວິທີນີ້, ເພິ່ນສັງເກດເບິ່ງວ່າ ແມ່ນພາກສ່ວນໃດຢູ່ໃນອະໄວຍະວະຜັນສຽງຂອງຄົນເຮົານັ້ນ ເປັນບ່ອນກີດກັ້ນລົມອອກມາຈາກປອດ ແລ້ວໃຫ້ກຳເນີດສຽງພະຍັນຊະນະ. ໂດຍອີງຕາມວິທີນີ້, ເພິ່ນໄດ້ພົບເຫັນບາງຈຸດດັ່ງນີ້: ຮີມສົບຄູ່, ຮີມສົບ-ແຂ້ວ, ປາຍລີ້ນ-ເຫືອກ, ປາຍລີ້ນ-ເພດານ ແຂ,... ລາຍລະອຽດພວກເຮົາຈະເຫັນແຈ້ງຢູ່ໃນຕາຕະລາງເຄື່ອງໝາຍຈົດສຽງພະຍັນຊະນະສາກົນ ຕົວຢ່າງ:

- **ໝວດພະຍັນຊະນະຮີມສົບ:**
  - + ຮີມສົບຄູ່: ຜ, ພ[ph], ປ[p], ບ[b], ໝ, ມ[m]
  - + ຮີມສົບລຸ່ມ-ແຂ້ວເທິງ: ຝ, ຟ[f], ຫວ, ວ[v]
- **ໝວດພະຍັນຊະນະລີ້ນ:**
  - + ປາຍລີ້ນ-ແຂ້ວເທິງ: ຕ[t]
  - + ປາຍລີ້ນ-ເຫືອກ: ຖ, ທ[th], ດ[d], ໜ, ນ[n], ຫຼ, ລ[l], ຣ[r]
  - + ກາງລີ້ນ: ຈ[c], ຫຍ, ຍ[ɲ], ສ, ຊ[s], ຢ[y]
  - + ກີກລີ້ນ: ຂ, ຄ[kh], ກ[k], ຫງ, ງ[ŋ]
- ພະຍັນຊະນະບ້ອງຄໍຫອຍ: ຫ, ຮ[h]
- ພະຍັນຊະນະໂກ້ງຄໍ-ຮູຄໍ: ອ[?]

ห้ามจำหน่าย

ก [k] ข ฃ ค ฅ ฆ ง = [ŋ], [น, ณ]
จ, ฉ, ช, ฌ ช ฉ → c
ญ, ฐ, ฒ, ท, ธ, น, บ, ป, ผ, ฝ, พ, ฟ, ภ, ม, ย, ร, ล, ว, ส, ห, ฬ, อ, ฮ
ฎ, ด → t
ต, ถ, ฑ, ฒ, ท, ธ th
ฏ, ต t
ป p
ผ, พ, ภ ph
ฝ, ฟ f
ม m
ย y
ร r
ล l
ว w
ส, ศ, ษ s
ห h
อ ʔ
ฤ [rɯ]
ฤๅ [rɯː]
ฦ [lɯ]
ฦๅ [lɯː]
ะ ◌ั a
า ◌า aː
ิ ◌ิ i
ี ◌ี iː
ึ ◌ึ ɯ
ื ◌ื ɯː
ุ ◌ุ u
ู ◌ู uː
เ◌ e
แ◌ ɛ
โ◌ o
ไ◌ ai
ใ◌ ai
เ◌า ao
◌ำ am
◌็ -ʔ
◌่ ◌้ ◌๊ ◌๋ ◌ˍ ◌ˍ◌ ◌ˍ◌ ◌ˍ◌

CONSONANTS

	Bilabial	Labiodental	Dental	Alveolar	Postalveolar	Retroflex	Palatal	Velar	Uvular	Pharyngeal	Glottal
Plosive	p b			t d		ʈ ɖ	c ɟ	k g	q ɢ		ʔ
Nasal	m	ɱ		n		ɳ	ɲ	ŋ	ɴ		
Trill	ʙ			r					ʀ		
Tap or Flap				ɾ		ɽ					
Fricative	ɸ β	f v	θ ð	s z	ʃ ʒ	ʂ ʐ	ç ʝ	x ɣ	χ ʁ	ħ ʕ	h ɦ
Lateral fricative				ɬ ɮ							
Approximant		ʋ		ɹ		ɻ	j	ɰ			
Lateral approximant				l		ɭ	ʎ	ʟ			
Ejective stop	pʼ			tʼ		ʈʼ	cʼ	kʼ	qʼ		
Implosive	ɓ ɗ			ɠ ɗ			ʄ ʃ	ɠ ɠ	ʛ ɠ		

Where symbols appear in pairs, the one to the right represents a voiced consonant. Shaded areas denote articulations judged impossible.

VOWELS



Where symbols appear in pairs, the one to the right represents a rounded vowel.

OTHER SYMBOLS

- ʍ Voiceless labial-velar fricative
- w Voiced labial-velar approximant
- ɥ Voiced labial-palatal approximant
- ʜ Voiceless epiglottal fricative
- ʢ Voiced epiglottal fricative
- ʡ Epiglottal plosive
- ʖ Simultaneous ʃ and X
- ʒ Additional mid central vowel
- ʘ Bilabial click
- ǀ Dental click
- ǃ (Post)alveolar click
- ǂ Palatoalveolar click
- ǁ Alveolar lateral click
- ʗ Alveolar lateral flap
- ʛ ʠ Alveolo-palatal fricatives

Affricates and double articulations can be represented by two symbols joined by a tie bar if necessary.

k͡p t͡s

DIACRITICS

̥ Voiceless	n̥ d̥	̹ More rounded	ɔ̹	ʷ Labialized	tʷ dʷ
̬ Voiced	s̬ l̬	̜ Less rounded	ɔ̜	ʲ Palatalized	tʲ dʲ
ʰ Aspirated	tʰ dʰ	̟ Advanced	u̟	ˠ Velarized	tˠ dˠ
̤ Breathy voiced	b̤ a̤	̠ Retracted	i̠	ˤ Pharyngealized	tˤ dˤ
̰ Creaky voiced	b̰ a̰	̽ Centralized	e̽	~ Velarized or pharyngealized	ɫ
̼ Linguolabial	t̼ d̼	̈ Mid-centralized	ë	̝ Raised (ɹ̝ = voiced alveolar fricative)	e̝ ɹ̝
̪ Dental	t̪ d̪	̘ Advanced Tongue Root	e̘	̞ Lowered (β̞ = voiced bilabial approximant)	e̞ β̞
̺ Apical	t̺ d̺	̙ Retracted Tongue Root	e̙		
̻ Laminal	t̻ d̻	˞ Rhoticity	ə˞	̩ Syllabic	n̩
				̯ Non-syllabic	e̯

SUPRASEGMENTALS

- ˈ Primary stress ˌfoʊnəˈtɪʃən
- ˌ Secondary stress
- ː Long eː
- ˑ Half long eˑ
- ̆ Extra short ĕ
- . Syllable break ɹi.ækt
- | Minor (foot) group
- ‖ Major (intonation) group
- ‿ Linking (absence of a break)

LEVEL TONES

- ˥ or ̋ Extra high
- ˦ or ́ High
- ˧ or ̄ Mid
- ˨ or ̀ Low
- ˩ or ̏ Extra low
- ↓ Downstep
- ↑ Upstep

CONTOUR TONES

- ˩˥ or ̌ Rise
- ˥˩ or ̂ Fall
- ˧˥ ↗ High rise
- ˨˩ ↘ Low rise
- ˥˩˥ ↗↘ Rise fall
- etc.

The International Phonetic Alphabet (revised in 1979)

		Bilabial	Labiodental	Dental, Alveolar, or Post-alveolar	Retroflex	Palato-alveolar	Palatal	Velar	Uvular	Labial-Palatal	Labial-Velar	Pharyngeal	Glottal
PULMONIC (pulmonic air-stream mechanism)	Nasal	m	ɱ	n	ɳ		ɲ	ŋ	ɴ				
	Plosive	p b		t d	ʈ ɖ		c ɟ	k ɡ	q ɢ		k͡p ɡ͡b		ʔ
	(Median) Fricative	ɸ β	f v	θ ð s z ʃ ʒ ʂ ʐ	ç ʝ	ʃ ʒ	ɕ ʑ	x ɣ	χ ʁ		ʍ	ħ ʕ	h ɦ
	(Median) Approximant		ʋ	ɹ	ɻ		j	ɰ		ɥ	w		
	Lateral Fricative			ɬ ɮ									
	Lateral (Approximant)			l	ɭ		ʎ	ʟ					
	Trill			r					ʀ				
	Tap or Flap			ɾ	ɽ								
NON-PULMONIC (non-pulmonic air-stream)	Ejective	pʼ		tʼ				kʼ	qʼ				
	Implosive	ɓ		ɗ			ʄ	ɠ	ʛ				
	(Median) Click	ʘ		ǀ									
	Lateral Click			ǁ									

DIACRITICS

ˌ Voiceless n̥ d̥
ˬ Voiced s̬ t̬
ʰ Aspirated tʰ
ʱ Breathy-voiced bʱ
̪ Dental t̪
ʷ Labialized tʷ
ʲ Palatized tʲ
ˠ Velarized or Pharyngealized tˠ, lˠ
̩ Syllabic n̩
‿ or ͡ Simultaneous ʃʒ (but see also under the heading Affricates)

˖ or ̟ Raised e˖ (ɹ̝, e̝, β̞)
˗ or ̠ Lowered e˗ (ɹ̞, ɸ̞, ɣ̞)
̟ Advanced u̟ (ɯ̟, ɣ̟)
˗ or ̠ Retracted i̠ (y̠, ɪ̠)
̈ Centralized ë
̃ Nasalized ẽ
ˤ or ̴ Pharyngealized tˤ, dˤ
ː Long aː
ˑ Half-long aˑ
̆ Non-syllabic ŭ
˖ More rounded ɔ˖
˗ Less rounded y˗

OTHER SYMBOLS

ɕ, ʑ Alveolo-palatal fricatives
ʃ, ʒ Palatalized ʃ, ʒ
ɾ Alveolar fricative trill
ɺ Alveolar lateral flap
ɧ Simultaneous ʃ and x
ʃ˕ Variety of ʃ resembling s, etc.
ɪ = ɪ
ʊ = ɒ
ɜ = Variety of ɔ
ɚ = ɹ-coloured ə

VOWELS



STRESS, TONE (PITCH)

ˈ stress, placed at beginning of stressed syllable: ˌ secondary stress: ˥ high level pitch, high tone; ˦ low level; ˧ high rising; ˨ low rising; ˥˩ high falling; ˩˥ low falling; ˧˥ rise-fall; ˥˧ fall-rise.

AFFRICATES can be written as digraphs, as ligatures, or with slur marks; thus ts, t͡ʃ, d͡ʒ: ʦ ʧ ʤ; t͡s d͡ʒ; c, ɟ may occasionally be used for tʃ, dʒ.

ตารางเถื่องพายจิดสรงพะยันชะนะลาว

วิธีผันสรง \ จุดผะลิดสรง			ธีมสีบ		ลิ้น				ย้องคำขอย	โก้งคำธูคำ
					ปายลิ้น		กางลิ้น	กึกลิ้น		
			ถู	ฉุมแล้วเพิ่ง	แอ่วเพิ่ง	เพื่อก				
อัด	ผื่อ	บ่ก้อง	ph			th		kh		
	บ่ผื่อ	บ่ก้อง	p		t		c	k		
		ก้อง	b			d				
	สรงออกหางถ้ำ		m			n	ñ	ŋ		
ฎู	บ่ก้อง			f			s		h	
	ก้อง			v			y			
	ข้างลิ้น (ก้อง)					l				
สรงสั่น						r				
เถิงสะหละเถิงพะยันชะนะ			ลงบ w				ย j			ʔ

ค. ตัวอย่างการวิไจพะยันชะนะหลายตัว

ในเอลาวิไจพะยันชะนะนี้, พวกเราจะต้องได้อิงใส่หลักการ ที่พวกเราได้รับรู้แล้วนั้น คือ อิงใส่วิทีผันสรง และจุดผะลิดสรง. ดั่งตัวอย่าง การวิไจพะยันชะนะลาวบางตัวต่อไปนี้:

- ❖ ต, พ - เป็นพะยันชะนะที่มีสรงอัด-ผื่อ, บ่มีสรงก้อง(อิงตามวิทีผันสรง).
  - อิงตามจุดผะลิดสรง แม่นเป็นพะยันชะนะธีมสีบคู่, หมายว่าใช้ธีบสีบทางเทิง และลุ่มจุ้มเข้ากัน.
- ❖ หอ, อ - อิงตามวิทีผันสรงแม่นพะยันชะนะปั่น หื้อ, มีสรงก้อง.
  - อิงใส่จุดผะลิดสรงแม่นพะยันชะนะที่ใช้ธีมสีบลุ่มกับแอ้วเทิง.
- ❖ ห, ล - วิทีผันสรงแม่นเป็นพะยันชะนะที่มีสรงห หมายถามว่าลิ้มหออกมาหางสองข้างของลิ้น. สะนั้น เพิ่นเอิ้นพะยันชะนะตัวนี้ว่า พะยันชะนะข้างลิ้น และมีสรงก้อง.
  - ส่วนจุดผะลิดสรงแม่นใช้ปายลิ้น กั่งขึ้นติดกับปูมเหือกหน้า.

ง. สะหะ และพะยันชะนะปะสม

ก. ถามสำนึกห่วงกับสะหะ และพะยันชะนะปะสม

นอกจากสะหะ และพะยันชะนะปั่ว(โดด) ที่พวกเราได้ฮ่ำมาแล้วนั้น, ยู่ในอักขะหะยังมีปากิดการที่ว่า สะหะ และพะยันชะนะหายตัวปะสมเข้ากันอีก. หมายถามว่า

ລຳພັງແຕ່ສະຫຼະ ແລະພະຍັນຊະນະປ່ຽວນັ້ນ ແມ່ນບໍ່ອາດພຽງພໍໃຫ້ແກ່ການຈົດສຽງຄົບຖ້ວນສົມບູນ ໄດ້. ມັນຈະຕ້ອງຮຽກຮ້ອງໃຫ້ມີສະຫຼະ ແລະພະຍັນຊະນະປະສົມຕື່ມອີກ. ສະຫຼະ ຫຼືພະຍັນຊະນະປະສົມ ແມ່ນການໂຮມສະຫຼະ ຫຼືພະຍັນຊະນະຕັ້ງແຕ່ສອງຕົວຂຶ້ນໄປ ແລ້ວໄດ້ສຽງໃໝ່ທີ່ມີສຽງຂອງ ສະຫຼະ ຫຼື ພະຍັນຊະນະ ທີ່ ເອົາມາປະສົມເຂົ້າກັນນັ້ນປົນເປນຳກັນ ສຽງ ກໍອອກສະເໝີກັນຫຼືເວົ້າວ່າ ອັກສອນທີ່ເອົາມາປະສົມເຂົ້າກັນນັ້ນຈະຕ້ອງອອກສຽງພ້ອມກັນ ແລະລະດັບສຽງກໍສະເໝີກັນທຸກຕົວ ເຊັ່ນ ɪxɤ[iɐ̯:], x̄ɔ[uɔ:].

ນັກພາສາສາດຫຼາຍຄົນໄດ້ໃຫ້ຄວາມເຫັນວ່າ ໃນພາສາລາວເຮົາແມ່ນບໍ່ມີພະຍັນຊະນະປະສົມ, ເພາະວ່າຖ້າແມ່ນພະຍັນຊະນະປະສົມແລ້ວ ສຽງຂອງມັນຈະຕ້ອງແມ່ນສຽງສັງຮວມ ເຊິ່ງໄດ້ມາຈາກ ສຽງຂອງບັນດາຕົວອັກສອນທີ່ປະກອບເປັນອັກສອນປະສົມນັ້ນ. ໝາຍຄວາມວ່າ ພວກມັນຈະອອກ ສຽງສະເໝີກັນທຸກຕົວ ເຊັ່ນ ɪxɤ[iɐ̯:] ແລະ “ch” [tʃ] ໃນພາສາອັງກິດ.

- ɪxɤ[iɐ̯:] ໄດ້ມາຈາກສຽງ[i:] ແລະ[e:] ໝາຍຄວາມວ່າ [i:] ແລະ[e:] ປະສົມເຂົ້າກັນ ແລ້ວເກີດເປັນສຽງໃໝ່ ເຊິ່ງສຽງນັ້ນບໍ່ແມ່ນ [i:] ຫຼື[e:] ແຕ່ຫາກແມ່ນສຽງທີ່ໄດ້ມາຈາກສະຫຼະ ທັງ ສອງຕົວນີ້ປະສົມເຂົ້າກັນ ແລ້ວອອກສຽງສະເໝີກັນທັງສອງຕົວ.

- ໃນພາສາອັງກິດເມື່ອ(c) ປະສົມກັບ(h) ແລ້ວ ສຽງຂອງມັນຈະກາຍເປັນ [tʃ] ເຊິ່ງ ສຽງ ຂອງມັນຕ່າງກັບສຽງ(c) ຫຼື(h) ເພາະຈຸດຜະລິດສຽງຂອງມັນ ຈະຢູ່ກົງກັນຂ້າມກັບເພດານແຂງ.

ສຳລັບພາສາລາວເຮົາແລ້ວ, ອັນທີ່ເອີ້ນວ່າພະຍັນຊະນະປະສົມພັດຕ່າງ, ເພາະໃນຕົວຈິງສຽງ ຂອງມັນແມ່ນຄືກັນກັບພະຍັນຊະນະຕົວທີ ๘ ຕ່າງແຕ່ວ່າລະດັບສຽງຕ່ຳກວ່າ. ສະນັ້ນພວກເຮົາອາດ ເວົ້າໄດ້ວ່າ ພະຍັນຊະນະປະສົມໃນພາສາລາວພວກເຮົາ ພຽງແຕ່ເປັນພະຍັນຊະນະປະສົມທາງດ້ານ ຮູບການເທົ່ານັ້ນ ເຊັ່ນ ห +ย = หย ພວກເຮົາເຫັນວ່າ ລະຫວ່າງຕົວ “หย” ແລະ“ย” ແມ່ນຄືກັນ ນັບທັງວິທີຜັນສຽງ ແລະ ຈຸດຜະລິດສຽງ, ຕ່າງແຕ່ລະດັບ “ຕ່ຳ-ສູງ” ເທົ່ານັ້ນ. ບັນດາລະດັບຂອງ ສຽງຕ່ຳ, ສູງ, ສັ້ນ, ຍາວ ແມ່ນຂຶ້ນກັບບັນຫາສຽງວັນນະຍຸດຕ່າງຫາກ. ສະນັ້ນ, ຢູ່ໃນເຄື່ອງໝາຍ ຈົດສຽງແບບສາກົນ ຈຶ່ງ ໃຊ້ແຕ່ເຄື່ອງໝາຍດຽວ ຄື [ก], ສ່ວນວ່າຕົວໃດແທນໃຫ້ອັກສອນສູງ ແລະຕົວໃດແທນໃຫ້ອັກສອນຕ່ຳນັ້ນ ແມ່ນຂຶ້ນກັບສຽງວັນນະຍຸດ. ສະນັ້ນ, ພວກເຈົ້າຈະ ຕ້ອງໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ຈຶ່ງເຫັນໄດ້ບັນຫານີ້. ພະຍັນຊະນະປະສົມອື່ນໆໃນພາສາ ລາວ ກໍຢູ່ໃນລະດັບດຽວກັນນີ້.

ທ່ານ ແຊຣບານ ນັກພາສາດລັດເຊຍ ໄດ້ໃຫ້ຄວາມເຫັນກ່ຽວກັບຊະນິດຂອງສະຫຼະ ແລະພະຍັນປະສົມວ່າມີ ๘ ຊະນິດ ຄື ສະຫຼະແລະພະຍັນຊະນະປະສົມແທ້. ສະຫຼະ ແລະ ພະຍັນຊະນະປະສົມປອມ.

✶ ຈຳພວກປະສົມແທ້ ໄດ້ແກ່ຈຳພວກຕົວອັກສອນ ທີ່ໄດ້ມາຈາກການປະສົມຂອງສະ ຫຼະ ຫຼືພະຍັນຊະນະຫຼາຍຕົວ ແຕ່ສຽງອອກບໍ່ສະເໝີກັນ ມີຕົວແຮງຕົວຄ່ອຍ ເຊັ່ນ

ɪxɤ[iɐ̯:], ɪx̄ɤ[ɯɐ:], x̄ɔ[uɔ:]

[tʃ] ใ ຄຳ(child) [เดัก ้อย], ใ ພາສາອັງກິດຈົດສຽງດ້ວຍ[tʃaild].

★ ຈຳພວກປະສົມປອມ ໄດ້ແກ່ຈຳພວກຕົວອັກສອນ ທີ່ໄດ້ມາຈາກການປະສົມຂອງສະຫຼະ ຫຼືພະຍັນຊະນະຫຼາຍຕົວ ແຕ່ສຽງອອກບໍ່ສະເໝີກັນ ມີຕົວແຮງຕົວຄ່ອຍ ເຊັ່ນ

ເxอ[e:o], xาย[a:i], แxอ[ɛ:o], ิxอ[iu],...

II. ຕົວສຽງ(Phoneme)

๑. ຕົວສຽງແມ່ນຫຍັງ?

ເມື່ອພວກເຮົາເວົ້າເຖິງຕົວສຽງ ແມ່ນພວກເຮົາເວົ້າເຖິງດ້ານສັງຄົມຂອງອັກຂະຫຼະ ແລະກໍອີງໃສ່ດ້ານສັງຄົມຂອງອັກຂະຫຼະນີ້ເອງ ມັນໄດ້ອະນຸມັດໃຫ້ພວກເຮົາສາມາດສັງຮອມເອົາຫຼາຍສຽງ ທີ່ມີຈຸດຜະລິດສຽງໃກ້ຄຽງກັນເຂົ້າເປັນຕົວສຽງໃດໜຶ່ງ. ພວກເຮົາເຫັນວ່າສຽງຂອງພາສາໃດໜຶ່ງ ແມ່ນມີຈຳນວນຫຼວງຫຼາຍ, ບໍ່ສາມາດນັບໃຫ້ຄົບຖ້ວນໄດ້ ເພາະມັນຂຶ້ນກັບສຽງແຕ່ລະຄົນທີ່ໃຊ້ພາສານັ້ນ . ສະນັ້ນ, ເພື່ອໃຫ້ເປັນເອກະພາບກັນ, ເຂົາເຈົ້າຈຶ່ງອີງໃສ່ພື້ນຖານດ້ານສັງຄົມຂອງອັກຂະຫຼະນີ້ ເພື່ອໂຮມເອົາຫຼາຍສຽງເຂົ້າມາເປັນຫົວໜ່ວຍເອກະພາບອັນໜຶ່ງ ເຊິ່ງເອີ້ນວ່າ "ຕົວສຽງ" ແລະວິຊາຄົ້ນຄວ້າກ່ຽວກັບສຽງນີ້ ເພີ່ນເອີ້ນວ່າຕົວສຽງວິທະຍາ(phonologie).

ຜ່ານການອະທິບາຍຂ້າງເທິງນີ້, ພວກເຮົາສາມາດສະຫຼຸບໄດ້ວ່າ ຕົວສຽງແມ່ນຫົວໜ່ວຍອັກຂະຫຼະນ້ອຍທີ່ສຸດຂອງພາສາໃດໜຶ່ງ ເຊິ່ງມີຄວາມສາມາດຈຳແນກຄວາມໝາຍຂອງຄຳສັບໄດ້.

ຕົວຢ່າງ: "ກา" [ka] ຕ່າງ "มา" [ma:] ຍ້ອນວ່າ |k| ≠ |m|
"ນ" [nɔ:] ຕ່າງ "ນู" [nu:] ຍ້ອນວ່າ |ɔ:| ≠ |u:|
"บาง" [ba:ŋ] ຕ່າງ "ซาง" [sa:ŋ] ຍ້ອນວ່າ |b| ≠ |s|
"บิน" [bin] ຕ່າງ "บิด" [bit] ຍ້ອນວ່າ |n| ≠ |t|

๘. ສາຍພົວພັນລະຫວ່າງສຽງກັບຕົວສຽງ

ຕົວສຽງແມ່ນໄດ້ມາຈາກການສັງຮອມຈາກຫຼາຍສຽງ ແລະພາລະກຳຕົ້ນຕໍຂອງຕົວສຽງ ແມ່ນຈຳແນກຄວາມໝາຍຂອງສັບ. ສະນັ້ນ, ເຫັນວ່າຕົວສຽງມີລັກສະນະສັງຮອມ, ນາມທຳ ສ່ວນສຽງມັນພຽງແຕ່ແມ່ນຮູບການຜັນປ່ຽນຂອງຕົວສຽງ, ມັນມີລັກສະນະສະເພາະ, ຕົວຈິງ, ຮູບປະທຳ. ເຖິງວ່າສຽງ ແລະຕົວສຽງມີຄວາມແຕກຕ່າງກັນກໍຕາມ ແຕ່ມັນພັດມີການພົວພັນກັນຢ່າງສະໜິດແໜ້ນ, ຕົວສຽງຕ້ອງສະແດງອອກຜ່ານສຽງ ແລະກົງກັນຂ້າມ ສຽງພັດແມ່ນເງື່ອນໄຂຄົງຕົວຂອງຕົວສຽງ . ສຽງເພີ່ນຈົດໄວ້ໃນວົງຂໍ[...], ສ່ວນຕົວສຽງເພີ່ນຈົດໄວ້ໃນວົງຂີດຂັ້ນ ...

ຕົວຢ່າງ:	**ສຽງ**	**ຕົວສຽງ**
	[a:]	|a:|
	[k]	|k|
	[t]	|t|

ຮວມຄວາມແລ້ວ, ສຽງແລະຕົວສຽງ ມີການພົວພັນກັນຢ່າງສະໜິດແໜ້ນ. ສາຍພົວພັນຂອງພວກມັນແມ່ນຄືກັນກັບສາຍພົວພັນລະຫວ່າງອັນລວມກັບອັນສະເພາະ, ອັນສັງຮວມກັບອັນລະອຽດ ເຊິ່ງມີສາຍພົວພັນແບບຜູກມັດ ເຊິ່ງກັນແລະກັນ.

ง. ສາຍພົວພັນລະຫວ່າງສຽງດ້ວຍກັນຢູ່ໃນລະບົບຕົວສຽງຂອງພາສາໃດໜຶ່ງ

ก. ສາຍພົວພັນລະຫວ່າງຕົວສຽງດ້ວຍກັນ

ຕົວສຽງທັງໝົດຢູ່ໃນພາສາໃດໜຶ່ງ ມັນຍືນຍົງຄົງຕົວໄດ້ກໍຍ້ອນເງື່ອນໄຂທີ່ວ່າ ພວກມັນມີສາຍພົວພັນແບບກຳນົດເຊິ່ງກັນແລະກັນ ແລ້ວກາຍເປັນລະບົບໜຶ່ງ . ພວກເຮົາກຳນົດຈຸດພິເສດຂອງຕົວສຽງຕົວນີ້ໄດ້ ກໍຍ້ອນວ່າມີຈຸດພິເສດຂອງຕົວສຽງອື່ນຢູ່ໃນລະບົບນັ້ນ ຫຼືເວົ້າວ່າ ຕົວສຽງຕົວນີ້ຄົງຕົວຢູ່ໄດ້ກໍຍ້ອນວ່າ ມີຕົວສຽງອື່ນກຳນົດມັນ. ທ່ານແຊັຣບານ ໄດ້ເວົ້າວ່າ: "ຕົວສຽງແຕ່ລະຕົວຖືກກຳນົດກໍຍ້ອນບັນດາຈຸດຈຳແນກຂອງມັນກັບຕົວສຽງອື່ນໃນພາສາໃດໜຶ່ງ". ໝາຍຄວາມວ່າ ຖ້າພວກເຮົາຢາກກຳນົດຈຸດພິເສດຂອງຕົວສຽງໜຶ່ງໄດ້ ກໍຕ້ອງອີງໃສ່ຈຸດພິເສດຂອງຕົວສຽງອື່ນ ເພື່ອກຳນົດ.

ຕົວຢ່າງ: [p] ແລະ |m| ທັງສອງນີ້ ລ້ວນແຕ່ມີຈຸດພິເສດຄືກັນ ຄື ຣິມສົບຄູ່, ແຕ່ວ່າ

- |p| ແມ່ນພະຍັນຊະນະອັດ, ສຽງອອກທາງປາກ ແລະມີສຽງບໍ່ກ້ອງ.
- |m| ແມ່ນພະຍັນຊະນະອັດຄືກັນ, ແຕ່ສຽງອອກທາງດັງຫຼາຍກວ່າ ແລະມີສຽງກ້ອງ.

ຂ. ລະບົບຕົວສຽງ

ຕົວສຽງຕ່າງໆໂຮມເຂົ້າກັນເປັນລະບົບປິດອັນໜຶ່ງ ເຊິ່ງຮວມເອົາຕົວສຽງທີ່ມີຈຳນວນຈຳກັດໃດໜຶ່ງທີ່ໄດ້ກຳນົດແລ້ວ. ຕົວສຽງແຕ່ລະຕົວລ້ວນແຕ່ມີຈຸດຈຳແນກຂອງມັນ ເພື່ອຈຳແນກຈຸດພິເສດຂອງຕົວສຽງອື່ນຢູ່ໃນລະບົບນັ້ນ. ເພື່ອໃຫ້ເຫັນແຈ້ງກ່ຽວກັບບັນຫານີ້ ຈົ່ງສັງເກດຕົວສຽງຈຳນວນຕໍ່ໄປນີ້ວ່າ ພວກມັນມີການພົວພັນກັນແນວໃດ?.

ຕົວຢ່າງ: |m|, |c|, |k|, |m|, |ñ|, |ŋ|.

ພວກເຮົາເຫັນສາຍພົວພັນຂອງຕົວສຽງຈຳພວກນີ້ ໂດຍສັງເກດຢູ່ຕາລາງເຄື່ອງໝາຍ ຈົດສຽງພາຍໃຕ້ເງື່ອນໄຂທີ່ວ່າ ເບິ່ງຕາມລວງຕັ້ງ ແລະລວງຂວາງລຸ່ມນີ້:



ຫາກພວກເຮົາກຳນົດວ່າ A ແມ່ນແທນຊີ້ເຖິງວິທີຜັນສຽງຂອງພວກມັນ ແລະ B ແທນຊີ້ເຖິງຈຸດຜະລິດສຽງຂອງພວກມັນ. ພວກເຮົາຈະເຫັນສາຍພົວພັນລະຫວ່າງ A ແລະ B ຕາມແຜນວາດລຸ່ມນີ້:



ອີງຕາມແຜນວາດຂ້າງເທິງນີ້, ພວກເຮົາສາມາດສະຫຼຸບສັງຮວມໄດ້:

★ ອີງຕາມແທນ A ພວກເຮົາຈະເຫັນວ່າ:

|p|= |c| =|k| ລ້ວນແຕ່ແມ່ນພະຍັນຊະນະສຽງອັດ-ບໍ່ຜິວ ແລະບໍ່ມີສຽງກ້ອງ.

|m|= |ñ| =|ŋ| ລ້ວນແຕ່ແມ່ນພະຍັນຊະນະສຽງອັດ ແຕ່ປ່ອຍສຽງອອກທາງດັງແລະ

ມີສຽງກ້ອງຄືກັນ.

★ ອີງຕາມແກນ B ພວກເຮົາຈະເຫັນວ່າ:

|p|= |m| ລ້ອນແຕ່ມີຈຸດຜະລິດສຽງດຽວກັນ ຄື ຮີມສົບຄູ່.

|c|= |ñ| ລ້ອນແຕ່ມີຈຸດຜະລິດສຽງ: ກາງລີ້ນ-ເພດານແຂງ

|k|= |ŋ| ລ້ອນແຕ່ມີຈຸດຜະລິດສຽງ: ກິກລີ້ນ-ເພດານອ່ອນ.

III. ພະຍາງ(Syllable)

๑. ພະຍາງແມ່ນຫຍັງ?

ພະຍາງແມ່ນຫົວໜ່ວຍຜັນສຽງນ້ອຍສຸດຂອງຄຳເວົ້າ, ມັນອາດຈະມີຄວາມໝາຍ ຫຼື ບໍ່ມີຄວາມໝາຍ, ມັນແມ່ນອັກໜຶ່ງ ຫຼື ຕອນໜຶ່ງຂອງສຳນວນຄຳເວົ້າ ເຊິ່ງກົງກັບການເຄ່ັງຂຶ້ນ ຫຼື ຍານລົງຂອງກ້າມຊີ້ນໃນອະໄວຍະວະຜັນສຽງ ຢູ່ໃນໄລຍະເວລາໃດໜຶ່ງແນ່ນອນ ເຊັ່ນ

- ໂຮງແຮມ(๔ ພະຍາງ)
- ຄຳແທນນາມ(๓ ພະຍາງ)
- ສັງຄົມນິຍົມ(๔ ພະຍາງ)
- ລັດຖະທຳມະນູນ(๕ ພະຍາງ)
- ມະຫາວິທະຍາໄລ(๗ ພະຍາງ)

๔. ຈຸດພິເສດຂອງພະຍາງ

ก. ດ້ານທຳມະຊາດ(ສະລິລະສາດ-ວັດຖຸ)

ພະຍາງແມ່ນວັກໜຶ່ງ ຫຼືຕອນໜຶ່ງຂອງຄຳເວົ້າ ເວລາຜັນສຽງກ້າມຊີ້ນຢູ່ໃນອະໄວຍະວະຜັນສຽງອາດຈະເຄ່ັງ ຫຼືຍານລົງ. ພະຍາງໜຶ່ງໃນເວລາຜັນສຽງນັ້ນຕ້ອງຜ່ານ ๓ ໄລຍະ ຄື ຈຸດເລີ່ມຕົ້ນ, ຈຸດສູງ ແລະຈຸດສຸດຂອງພະຍາງ ເຊິ່ງພວກເຮົາສາມາດແຕ້ມເປັນແຜນວາດ ສະແດງໄດ້ດັ່ງນີ້:



o: ຈຸດເລີ່ມຕົ້ນຂອງພະຍາງ

ch: ຈຸດສູງຂອງພະຍາງ

x: ຈຸດສຸດຂອງພະຍາງ

ຕົວຢ່າງ:

- ກິນ[kin]



ຂ. ດ້ານສັງຄົມ

ດ້ານສັງຄົມຂອງພະຍາງ ໝາຍເຖິງດ້ານຄວາມໝາຍຂອງມັນ. ພະຍາງແມ່ນຫົວໜ່ວຍອັກຂະຫຼະທີ່ສຳຄັນທີ່ສຸດ. ມັນເປັນເປັນຫົວໜ່ວຍພື້ນຖານຂອງອັກຂະຫຼະ, ອາດຈະມີຫຼືບໍ່ມີຄວາມໝາຍ. ພາສາລາວເດີມ, ພະຍາງສ່ວນຫຼາຍແມ່ນມີຄວາມໝາຍ, ໝາຍຄວາມວ່າ ພະຍາງໜຶ່ງແມ່ນເທົ່າທຽມກັບຄຳສັບໜຶ່ງ ເຊັ່ນ ດິນ, ນ້ຳ, ລົມ,... ແຕ່ຄຳສັບທີ່ໄດ້ເຄົ້າມາຈາກພາສາອື່ນ, ຄຳສັບໜຶ່ງອາດມີ ๔, ๓ ຫຼື ๔ ພະຍາງ ໂຮມເຂົ້າກັນຈຶ່ງມີຄວາມໝາຍໜຶ່ງ, ແຕ່ລະຄຳສັບເມື່ອແຍກອອກເປັນພະຍາງນັ້ນ ຈະບໍ່ມີຄວາມໝາຍ ຫຼືມີຄວາມໝາຍອື່ນ ເຊັ່ນ

- ປະເທດ ມີ ๔ ພະຍາງ
- ອຸປະກອນ ມີ ๓ ພະຍາງ
- ສາທາລະນະ ມີ ๔ ພະຍາງ
- ສາທາລະນະລັດ ມີ ๕ ພະຍາງ

๓. ຊະນິດພະຍາງ

ພວກເຮົາຮູ້ນຳກັນແລ້ວວ່າ ພະຍາງແມ່ນຫົວໜ່ວຍພື້ນຖານຂອງອັກຂະຫຼະ, ທ່ານແຊມບານ ໄດ້ໃຫ້ຄວາມເຫັນກ່ຽວກັບພະຍາງວ່າ: ໃນເວລາຜັນສຽງນັ້ນກ້ານຊີ້ນໃນອະໄວຍະວະຜັນສຽງຂອງຄົນເຮົາເຄັ່ງຂຶ້ນ ແລ້ວຍານລົງ ກົງກັບພະຍາງໜຶ່ງໆ, ຊາຍແດນຂີດຂັ້ນລະຫວ່າງພະຍາງນັ້ນ ແມ່ນຢູ່ບ່ອນກ້ານຊີ້ນຍານລົງ ແລະຈະເລີ່ມເຄັ່ງຂຶ້ນນັ້ນເອງ, ບ່ອນເຄັ່ງກວ່າໝູ່ຂອງກ້ານຊີ້ນໃນອະໄວຍະວະຜັນສຽງຂອງຄົນເຮົານັ້ນ ເປັນຈຸດສູງຂອງພະຍາງ ຫຼືຈຸດໃຈກາງຂອງພະຍາງ. ຕາມທ່ານແຊມບານ ໄດ້ແບ່ງພະຍາງອອກເປັນ ๘ ຊະນິດ ຄື ພະຍາງໄຂ ແລະພະຍາງອັດ.

★ ພະຍາງໄຂ ໄດ້ແກ່ບັນດາພະຍາງທີ່ບໍ່ມີຕົວສະກົດທ້າຍຫຼາຍ ເຊັ່ນ ກາ,ດີ, ດູ, ...

★ ພະຍາງອັດ ໄດ້ແກ່ບັນດາພະຍາງທີ່ມີຕົວສະກົດ ເຊັ່ນ ການ, ກິນ, ເກີນ, ...

IV. ສຽງວັນນະຍຸດ(Tone)

๑. ຄວາມສຳນຶກກ່ຽວກັບວັນນະຍຸດ

ສຽງ, ຕົວສຽງ ແມ່ນຫົວໜ່ວຍອັກຂະຫຼະທີ່ສາມາດຕັດແຍກອອກໄດ້ ເຊິ່ງຮຽກວ່າ ບັນດາຫົວໜ່ວຍທີ່ມີລັກສະນະຕັດແຍກ(Segmental) ນອກຈາກຫົວໜ່ວຍດັ່ງກ່າວມາແລ້ວ, ຢູ່ບາງພາສາຍັງ

ມີຫົວໜ່ວຍໜຶ່ງທີ່ບໍ່ສາມາດຕັດແຍກໄດ້, ມັນຄົງຕົວຢູ່ເອກະລາດບໍ່ໄດ້, ແຕ່ມັນພັດມີບົດບາດໃນການຈຳແນກຄວາມໝາຍຂອງພະຍາງ ຫຼືຄຳສັບໄດ້; ຫົວໜ່ວຍນັ້ນ, ເພິ່ນເອີ້ນວ່າ "ສຽງອັນນະຍຸດ".

ເມື່ອເວົ້າເຖິງອັນນະຍຸດ, ພວກເຮົາຄວນຈຳແນກລະຫວ່າງເຄື່ອງໝາຍອັນນະຍຸດ ແລະສຽງອັນນະຍຸດ. ເຄື່ອງໝາຍອັນນະຍຸດໝາຍເອົາ: ໄມ້ເອກ(ˊ), ໄມ້ໂທ(ˇ), ໄມ້ຕີ(ˆ) ແລະໄມ້ຈັດຕະວາ(˙), ສ່ວນສຽງອັນນະຍຸດໝາຍເຖິງບັນດາສຽງຂຶ້ນ, ລົງ, ຕ່ຳສູງ,... ທີ່ມີຄວາມແຕກຕ່າງກັນທາງດ້ານຄວາມໝາຍ ກໍຄືສຽງຂອງພະຍາງ ຫຼືຄຳສັບ.

ຕົວຢ່າງ:

ບານ ≠ ບ້ານ

ກິນ ≠ ກໍ່ນ ≠ ກ໊ິນ

ການ ≠ ກ່ານ ≠ ກ້ານ

ສຽງອັນນະຍຸດມັນຕິດແໜ້ນກັບພະຍາງ ມັນກາຍເປັນຈຸດພິເສດຂອງພະຍາງ ໜ້າທີ່ຕົ້ນຕໍຂອງສຽງອັນນະຍຸດ ແມ່ນເພື່ອຈຳແນກສຽງ ແລະຄວາມໝາຍຂອງພະຍາງ ຫຼືຄຳສັບຕ່າງໆ.

ປະລິມານສຽງອັນນະຍຸດຂອງແຕ່ລະພາສາມີຈຳນວນບໍ່ເທົ່າກັນ ເຊັ່ນ ພາສາຫວຽດນາມມີ ໒ ສຽງ, ພາສາຈີນມີ ๔ ສຽງ, ພາສາໄທມີ ๕ ສຽງ,...

๘. ສຽງອັນນະຍຸດໃນພາສາລາວ

ຕາມທຳມະດາແລ້ວ, ການຈັດລະດັບສຽງຂອງພາສາ ກໍເປັນບັນຫາສຳຄັນອັນໜຶ່ງ. ສຳລັບພາສາລາວຂອງພວກເຮົານີ້, ບັນຫາສຽງອັນນະຍຸດຍັງເປັນບັນຫາທີ່ສັບສົນ ແລະຖົກຖຽງກັນກ່ຽວກັບປະລິມານສຽງອັນນະຍຸດໃນພາສາລາວ. ໃນໄລຍະຜ່ານມາ, ພວກເຮົາເຄີຍເຫັນສອງທັດສະນະກ່ຽວກັບການຈັດສຽງອັນນະຍຸດຂອງພາສາລາວ. ທັດສະນະໜຶ່ງເວົ້າວ່າ: ພາສາລາວມີ ๕ ສຽງ. ເປັນຕົວແທນກວ່າໝູ່ແມ່ນຢູ່ໃນປະລິນຍານິພົນຂອງ ທ່ານ ຟ້ຳມດຶກ ເຍືອງ(Phạm Đúc Dương) ຄົນຫວຽດນາມ. ๕ ສຽງດັ່ງກ່າວນັ້ນ ຄື

ສຽງທີ๑: ອັກສອນສູງປະສົມກັບສະຫຼະສຽງສັ້ນ-ຍາວ ມີ ຕົວສະກົດເປັນ, ບໍ່ມີໄມ້ຫຍັງ ແລະ ອັກສອນສູງປະສົມກັບສະຫຼະສຽງຍາວບໍ່ມີຕົວສະກົດ ແລະບໍ່ມີໄມ້ຫຍັງ ເຊັ່ນ ສີ, ຫາ, ສິນ, ຫາງ,...

ສຽງທີ๘: ອັກສອນກາງ-ຕ່ຳ ປະສົມກັບສະຫຼະສຽງສັ້ນ-ຍາວ ມີຕົວສະກົດເປັນ ແລະອັກສອນກາງ-ຕ່ຳ ປະສົມກັບສະຫຼະສຽງຍາວ ບໍ່ມີໄມ້ຫຍັງ ເຊັ່ນ ກາ, ກາ, ການ, ຊາມ, ມານ,...

ສຽງທີ໓: ອັກສອນກາງ-ຕ່ຳ ມີໄມ້ໂທ ເຊັ່ນ ກ້າ, ນ້າ, ພີ້,...

ສຽງທີ๔: ອັກສອນກາງ-ຕ່ຳ-ສູງ ມີໄມ້ເອກ, ມີຕົວສະກົດຕາຍ ເຊັ່ນ ຊ່ຳ, ຊາດ, ຊະ ກ່ຳ, ກາດ, ກະ, ສະ, ສ່ຳ, ສາດ,...

ສຽງທີ๕: ອັກສອນສູງ ມີໄມ້ໂທ ເຊັ່ນ ສ້ຳ, ສູ້, ເສື້ອ,...

ຕາມທັດສະນະທີ່ເວົ້າວ່າ ພາສາລາວມີ ໒ ສຽງ ໄດ້ແກ່ທັດສະນະຂອງ ທ່ານ ພູມີ ວົງວິຈິດ; ໃນປຶ້ມ "ໄວຍາກອນລາວ" ແລະ ທ່ານ ລ.ນ ໂມເຣຍ(L.N Morie) ທ່ານ ປລາມ(Plam), ທ່ານ ໂມສະກາc]a[(Moskaliev) "ໃນປຶ້ມພາສາລາວ" (Lao Language).

ໃນປຶ້ມໄວຍາກອນລາວຂອງ ທ່ານ ພູມີ ວົງ ວິຈິດ ເພີ່ນໄດ້ສັງຮວມ ໙ ສຽງໄວ້ ຕາມແບບດັ່ງ ລຸ່ມນີ້:

- ອັກສອນສູງ: ສາ① ສ່າ⑤ ສ້າ⑥
- ອັກສອນກາງ: ປາ② ປ່າ⑤ ປ້າ③ ປ໊າ④ ປ໋າ①
- ອັກສອນຕ່ຳ: ຊາ② ຊ່າ④ ຊ້າ③

◈ ບັນຫາຄວນເອົາໃຈໃສ່

- ອີງຕາມຫຼັກການທີ່ວໄປແລ້ວ, ໃນພາສາມີພະຍັນຊະນະຈຳນວນໜຶ່ງເຮັດໜ້າທີ່ ທັງ ເປັນຕົວ ແກນແລະຕົວສະກົດ. ສຳລັບພາສາລາວຂອງພວກເຮົາ ກໍ ມີລັກສະນະເຊັ່ນດຽວກັນ, ແຕ່ເມື່ອຈົດ ສຽງດ້ວຍເຄື່ອງໝາຍຈົດສຽງແບບສາກົນ, ມີຕົວສະກົດບາງຕົວອາດຈະປ່ຽນດ້ວຍຕົວອື່ນ ໂດຍອີງ ຕາມສຽງຂອງມັນ ເຊັ່ນ

+ "ບ" ເປັນຕົວແກນແມ່ນໃຊ້ເຄື່ອງໝາຍ|b|, ແຕ່ເປັນຕົວສະກົດແມ່ນໃຊ້ |p| ແທນ.

ຕົວຢ່າງ: "ບາບ" [bap]^{7} "ກັບ"[kap]^{7}...

+ "ດ" ເປັນຕົວແກນແມ່ນໃຊ້ເຄື່ອງໝາຍ|d|, ເວລາເປັນຕົວສະກົດແມ່ນໃຊ້ |t| ແທນ.

ຕົວຢ່າງ: "ດາດ" [da:t]^{6} "ຊາດ"[sa:t]^{5}...

+ "ຍ" ເປັນຕົວແກນແມ່ນໃຊ້ເຄື່ອງໝາຍ|ɲ|, ເວລາເປັນຕົວສະກົດແມ່ນໃຊ້ |i| ແທນ.

ຕົວຢ່າງ: "ຍາຍ" [ɲa:i]^{3} "ເອີ້ຍ"[ʔɯə:i]^{5}...

+ "ວ" ເປັນຕົວແກນແມ່ນໃຊ້ເຄື່ອງໝາຍ|v|, ເວລາເປັນຕົວສະກົດແມ່ນໃຊ້ເຄື່ອງໝາຍ|o|, |u| ເວລາເປັນຕົວຄວບໃຊ້ເຄື່ອງໝາຍ|w|.

ຕົວຢ່າງ: "ເວົ້າ" [vao]^{5} "ກວ່າ"[kwa:]^{2} "ຄວາຍ"[kwa:i]^{3}

✹ ສຽງວັນນະຍຸດໜ້ອງຖິ່ນວຽງຈັນ

ສຽງວຽງຈັນມີ ໘ ສຽງ (ອີງຕາມກອງປະຊຸມສຳມະນາຂອງຄະນາຈານພາສາສາດ ອະດີດ ມ.ສ.ຄ ວຽງຈັນ, ເດືອນມັງກອນ ປີ ໑໙໙໗) ດັ່ງນີ້:

ສະຫຼະ+ວັນນະຍຸດ / ພະຍັນຊະນະ	ສະຫຼະຍາວ+ຕົວສະກົດເປັນ: ງ ນ ມ ຍ ວ	ສະຫຼະສັ້ນ+ຕົວສະກົດຕາຍ: ກ ດ ບ	ສະຫຼະສັ້ນ ຫຼື ສະຫຼະສັ້ນ+ຕົວສະກົດຕາຍ ກ ດ ບ	ˊ	ˇ	ˉ / ສຽງສັ້ນ ຍາວ / ກ ດ ບ		ˋ
ອັກສອນກາງ	1	5	7	2	5	8	5	4
ອັກສອນຕ່ຳ	3	5	8	2	5	-	-	-
ອັກສອນສູງ	4	6	7	2	6	-	-	-

① ~~ສຽງ~~ກາງ: ໄດ້ແກ່ອັກສອນກາງທັງ ๗ ມີສະຫຼະສຽງຍາວ ຫຼືຕົວສະກົດເປັນ: ง, น, ม, ย, อ ເຊັ່ນ ກາ, ປີ, ບາງ, ໄປ, ຢາມ, ຕອນ...

② ~~ສຽງເອກ~~: ໄດ້ແກ່ສຽງອັກສອນສູງ, ກາງ: ຕ່ຳ ມີ ສະຫຼະສຽງຍາວ ຫຼື ຕົວສະກົດເປັນ: ง ແລ້ວໃສ່ໄມ້ເອກ ເຊັ່ນ ຄ່າ, ກ່າ, ສ່າ, ຄ່າງ, ກ່າງ, ຊ່າງ...

③ ~~ສຽງ~~ຕ່ຳ: ໄດ້ແກ່ອັກສອນຕ່ຳ ມີ ສະຫຼະສຽງຍາວ ຫຼື ຕົວສະກົດເປັນ ບໍ່ໄດ້ໃສ່ໄມ້ຫຍັງ ເຊັ່ນ ນາ, ມີ, ນານ, ງາມ, ນອນ,...

④ ~~ສຽງ~~ສູງ: ໄດ້ແກ່ອັກສອນສູງ ມີ ສະຫຼະສຽງຍາວ ຫຼື ຕົວສະກົດເປັນ ບໍ່ ໃສ່ໄມ້ຫຍັງ ແລະ ອັກສອນກາງໃສ່ໄມ້ຈັດຕະວາ ເຊັ່ນ ສາ, ໜີ, ຫານ, ຝົນ, ຈ່ອມ, ປຸ່ມ...

⑤ ~~ສຽງ~~ໂທຕ່ຳ: ໄດ້ແກ່ອັກສອນຕ່ຳມີສະຫຼະສຽງຍາວ + ຕົວສະກົດຕາຍ ແລະອັກສອນຕ່ຳມີ ໄມ້ໂທ, ອັກສອນກາງໃສ່ໄມ້ໂທ ຫຼືອັກສອນກາງມີສະຫຼະສຽງຍາວ, ມີຕົວສະກົດຕາຍ + ໃສ່ໄມ້ຕີ ເຊັ່ນ ຄາດ, ຄ້າ, ກ້າ, ກ້ານ, ກ໊າບໆ...

⑥ ~~ສຽງ~~ໂທສູງ: ໄດ້ແກ່ອັກສອນກາງ-ສູງ ມີ ສະຫຼະສຽງຍາວ + ຕົວສະກົດຕາຍ ແລະອັກ ສອນສູງມີໄມ້ໂທ ເຊັ່ນ ກາດ, ຂາດ, ສ້າ, ສ້າງ,...

⑦ ~~ສຽງ~~ສູງອັດ: ໄດ້ແກ່ອັກສອນກາງ-ສູງ ມີ ສະຫຼະສຽງສັ້ນ ຫຼື ສະຫຼະສຽງສັ້ນ + ຕົວສະກົດ ຕາຍ ເຊັ່ນ ກະ, ກັດ, ສະ, ສັດ,...

⑧ ~~ສຽງ~~ຕ່ຳອັດ: ໄດ້ແກ່ອັກສອນຕ່ຳ ມີ ສະຫຼະສຽງສັ້ນ ຫຼື ສະຫຼະສຽງສັ້ນ + ຕົວສະກົດຕາຍ ແລະອັກສອນກາງມີສະຫຼະສຽງສັ້ນ + ຕົວສະກົດຕາຍ ແລະໃສ່ໄມ້ຕີ ເຊັ່ນ ຄະ, ຄັດ, ກ໊ັດ, ປ໊ັດ,...

ໝວດພະຍັນຊະນະ ສູງ, ກາງ, ຕ່ຳ	ກາ	ຂ່າ ກ່າ ຄ່າ	ຄາ	ຂາ ກ໋າ	ກ້າ ຄ້າ ຄາດ ກ໊າດ	ຂ້າ ຂາດ ກາດ	ກະ ຂະ ກັດ ຂັດ	ຄະ ຄັດ
ເສັ້ນ ລະດັບສຽງ	—	—	◝	◟	◝	◟	◝	◝
ຊື່ຂອງເສັ້ນ ລະດັບສຽງ ວັນນະຍຸດ	① ຕ່ຳ	② ກາງ	③ ສູງ	④ ຕ່ຳຂຶ້ນ	⑤ ສູງຕົກ	⑥ ກາງຕົກ	⑦ ກາງອັດ	⑧ ສູງອັດ

V. ທຳນອງສຽງ(Intonation)

๑. ທຳນອງສຽງ

ສຽງທີ່ພວກເຮົາກະຈາຍອອກແຕ່ລະເທື່ອນັ້ນ, ບໍ່ສະໝ່ຳສະເໝີກັນ ໂດຍອີງຕາມສຽງຂອງຜູ້ ເວົ້າ ຄື ບາງເທື່ອຕ່ຳ, ບາງທີ່ອສູງ, ບາງເທື່ອໄວ, ບາງເທື່ອຊ້າ ຫຼືບາງເທື່ອກໍເວົ້າແບບລວາດໆໄປ. ປາກົດການຕ່າງໆເຫຼົ່ານີ້, ເພີ່ນເອີ້ນວ່າທຳນອງສຽງ. ທຳນອງສຽງບໍ່ອາດຕັດແຍກອອອກຈາກຄວາມ

ເວົ້າໄດ້, ເວລາໃດມັນກໍຕິດແໜ້ນຢູ່ກັບຄວາມເວົ້າ. ທຳນອງສຽງມັນຍັງແມ່ນມູນພາກໜຶ່ງ ເພື່ອປະກອບສ້າງປະໂຫຍກ, ມັນແມ່ນຈຸດພິເສດອັນໜຶ່ງຂອງປະໂຫຍກ. ຖ້າເວົ້າກວ້າງໄປກວ່ານີ້, ທຳນອງສຽງມັນກໍພຽງແຕ່ແມ່ນການຂຶ້ນສຽງ ຫຼືລົງສຽງຂອງປະໂຫຍກ. ແຕ່ໃນຕົວຈິງແລ້ວ, ທຳນອງສຽງມັນກວມເອົາຫຼາຍບັນຫາ ເຊັ່ນ ຄວາມແຮງ, ຄວາມຍາວ, ຄວາມໄວ ແລະສີສັນຂອງສຽງອີກດ້ວຍ ແຕ່ລະພາສາມີທຳນອງສຽງສະເພາະ.

ສຳລັບພາສາທີ່ມີສຽງວັນນະຍຸດ ຄືພາສາລາວຂອງພວກເຮົານີ້, ທຳນອງສຽງແມ່ນຖືກຈຳກັດກວ່າພາສາທີ່ບໍ່ຖືບັນຫາສຽງວັນນະຍຸດເປັນບັນຫາສຳຄັນ, ດັ່ງພາສາອິນໂດ-ຢູລົບ; ເພາະວ່າພາສາລາວຂອງພວກເຮົາ ການຂຶ້ນສຽງ, ລົງສຽງ ຖືກຈຳກັດດ້ວຍວັນນະຍຸດ; ຖ້າຂຶ້ນສຽງ, ລົງສຽງຕາມໃຈຜູ້ເວົ້າຈະເຮັດໃຫ້ຄຳສັບມີການປ່ຽນແປງຄວາມໝາຍເດີມຂອງມັນ.

ຕົວຢ່າງ: - ເຈົ້າຈະໄປໃສ?
- ຂ້ອຍມາແຕ່ຕະຫຼາດ.
- ອັນນັ້ນແມ່ນຫຍັງ?

๘. ພາລະກຳຂອງທຳນອງສຽງ

ເມື່ອເວົ້າເຖິງທຳນອງສຽງແລ້ວ ຈະແມ່ນພາສາໃດກໍດີ ລ້ວນແຕ່ມີພາລະກຳຢູ່ ๘ ຢ່າງ: ພາລະກຳສະແດງອາລົມຈິດ ແລະພາລະກຳວາກະຍະສຳພັນ.

ก. ພາລະກຳສະແດງອາລົມຈິດ

ການສະແດງແນວຄິດອາລົມຈິດ ຢູ່ ໃນການຄົບຄ້າສະມາຄົມຢູ່ໃນສັງຄົມ ເປັນບັນຫາສຳຄັນແລະຈຳເປັນທີ່ສຸດ. ພາລະກຳສະແດງອາລົມຈິດເປັນພາລະກຳຕົ້ນຕໍຂອງທຳນອງສຽງ. ເພາະວ່າອາລົມຈິດເປັນແນວໃດ ກໍເຄີຍສະແດງອອກຜ່ານຄວາມເວົ້າ ໝາຍຄວາມວ່າອາລົມມ່ວນຊື່ນ, ໂສກເສົ້າ ຫງ່ວມເຫງົາ, ຢາກຮ້າຍ,... ຂອງຄົນເຮົາສ່ວນຫຼາຍແມ່ນສະແດງອອກຜ່ານຄວາມເວົ້າ.

ຕົວຢ່າງ:

- "ເຈົ້າຊິໄປໃສ?" ຖ້າເວົ້າທຳມະດາ ກໍຈະເປັນປະໂຫຍກຄຳຖາມທຳມະດາ, ຖ້າຫາກແກ່ຍາວ "ໃສ" ອອກໄປກໍຈະເປັນຄຳເຍາະເຍີ້ຍສຸດສີ, ຖ້າເວົ້າ "ໃສ" ແຮງແລະສັ້ນ ກໍຈະກາຍເປັນການນາບຂູ່ ແລະອື່ນໆ.
- "ງາມຫຼາຍນໍ" ຖ້າເວົ້າທຳມະດາ ກໍຈະເປັນການຍ້ອງຍໍຊົມເຊີຍແທ້, ແຕ່ເວົ້າ "ນໍ" ຍາວອອກກໍຈະກາຍເປັນການເຍາະເຍີ້ຍສຸດສີ, ແຕ່ເວົ້າ "ນໍ" ສັ້ນແລະແຮງກໍຈະກາຍເປັນການຕິຕຽນ ຫຼືສັ່ງສອນ ແລະອື່ນໆ.

ข. ພາລະກຳວາກະຍະສຳພັນ

ຍ້ອນຜົນປະໂຫຍດທາງດ້ານວາກະຍະສຳພັນຂອງທຳນອງສຽງ ຈຶ່ງເຮັດໃຫ້ພວກເຮົາສາມາດຈຳແນກຊະນິດຂອງປະໂຫຍກໄດ້. ອີງຕາມຈຸດພິເສດທາງດ້ານທຳນອງສຽງຂອງແຕ່ລະພາສາ, ເຂົາເຈົ້າສາມາດຈຳແນກຊາຍແດນລະຫວ່າງປະໂຫຍກ ຫຼື ພາກສ່ວນຕ່າງໆຂອງປະໂຫຍກໄດ້. ພິເສດ, ອີງໃສ່ທຳນອງສຽງນີ້ ເພີ່ນສາມາດຈຳແນກປະໂຫຍກໄດ້ວ່າ ອັນໃດແມ່ນປະໂຫຍກສັ່ງ, ອັນໃດແມ່ນປະໂຫຍກຖາມ ແລະອື່ນໆ.

ຕົວຢ່າງ:

- "ເພິ່ນຕາຍແລ້ວ" ເວົ້າທຳມະດາແມ່ນປະໂຫຍກແຈ້ງການທຳມະດາ.
- "ເພິ່ນຕາຍແລ້ວ?" ຖ້າເວົ້າເນັ້ນສຽງລົງຈັກໜ່ອຍ ຈະກາຍເປັນປະໂຫຍກຄຳຖາມ.
- "ເພິ່ນຕາຍແລ້ວ!" ຖ້າເວົ້າເນັ້ນສຽງລົງແຮງ ແລະສັ້ນຈະເປັນປະໂຫຍກທ້ວງ.

ຄຳຖາມ

๑. ສຽງແມ່ນຫຍັງ? ສຽງສະຫຼະ ແລະສຽງພະຍັນຊະນະມັນຕ່າງກັນຢູ່ບ່ອນໃດ? ຈົ່ງຈຳແນກ.

- ການວິໄຈສະຫຼະ ເພິ່ນອີງໃສ່ຈັກດ້ານ?, ແຕ່ລະດ້ານຄືແນວໃດ?
- ການວິໄຈພະຍັນຊະນະ ເພິ່ນອີງໃສ່ຈັກດ້ານ?, ແຕ່ລະດ້ານຄືແນວໃດ?

๘. ຕົວສຽງແມ່ນຫຍັງ? ລະຫວ່າງສຽງ ແລະຕົວສຽງມັນມີສາຍພົວພັນແນວໃດນຳກັນ?

๙. ພະຍາງແມ່ນຫຍັງ? ເພິ່ນແບ່ງພະຍາງອອກເປັນຈັກຊະນິດ? ແຕ່ລະຊະນິດຄືແນວໃດ? ຍົກຕົວຢ່າງ.

๔. ອີງໃສ່ປຶ້ມໄວຍາກອນລາວຂອງ ທ່ານ ພູມີ ວົງວິຈິດ ເພິ່ນໄດ້ແບ່ງສຽງວັນນະຍຸດອອກເປັນຈັກສຽງ? ຄືສຽງໃດແດ່?

๕. ທຳນອງສຽງແມ່ນຫຍັງ? ແລະມັນມີພາລະກຳຫຍັງແດ່?

๗. ຈົ່ງຈົດສຽງປະມວນຄຳເວົ້າລຸ່ມນີ້ ດ້ວຍເຄື່ອງໝາຍຈົດສຽງແບບສາກົນ ແລ້ວໃສ່ໝາຍເລກເຄື່ອງໝາຍວັນນະຍຸດພ້ອມ.

"ສິ່ງທີ່ປະເສີດທີ່ສຸດຂອງຄົນເຮົາແມ່ນຊີວິດ. ຄົນເຮົາມີຊີວິດໄດ້ພຽງແຕ່ຄັ້ງດຽວ, ສະນັ້ນກໍດຳລົງຊີວິດແບບໃດ ເພື່ອບໍ່ໃຫ້ກົນແໜງພາຍຫຼັງ; ຍ້ອນໄດ້ປະຊີວິດຜ່ານໄປ ໂດຍໄຮ້ປະໂຫຍດ ແລະເພື່ອບໍ່ໃຫ້ອັບອາຍ, ຍ້ອນໄດ້ດຳລົງຊີວິດແບບຄັບແຄບ ແລະຕ່ຳຕ້ອຍ. ກ່ອນຈະຫຼັບຕາອຳລາໂລກໄປໃຫ້ສາມາດເວົ້າໄດ້ວ່າ ຕະຫຼອດ ຊີວິດ ແລະເຫື່ອແຮງຂອງເຮົາໄດ້ອຸທິດໃຫ້ແກ່ພາລະກິດອັງສູງສົ່ງ ແລະສວຍງາມທີ່ສຸດ ນັ້ນແມ່ນການຕໍ່ສູ້ ເພື່ອປົດປ່ອຍມວນມະນຸດ".

- "ປັດຈຸບັນປະເທດຊາດຂອງພວກເຮົາ ພວມ ຢູ່ໃນໄລຍະປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ, ອັນນີ້ມັນໄດ້ສ້າງເງື່ອນໄຂອັນສະດວກທີ່ສຸດໃຫ້ແກ່ນັກພາສາສາດລາວຜູ້ໜຸ່ມນ້ອຍ ເພື່ອຟື້ນຟູວຽກງານການຄົ້ນຄວ້າພາສາແມ່ເກີດຂອງຕົນເອງ ເພື່ອປະກອບສ່ວນເຮັດໃຫ້ພາສາລາວ ເຊິ່ງເປັນພາສາທີ່ອຸດົມຮັ່ງມີມາແລ້ວນັ້ນນັບມື້ກ້າວໜ້າ ແລະອຸດົມສົມບູນຍິ່ງຂຶ້ນ".

ພາກທີ III
ວັດຈະນາວິທະຍາ
ບົດທີ ๑
ເປົ້າໝາຍ ແລະໜ້າທີ່ຂອງວັດຈະນາວິທະຍາ

I. ຄຳສັບວັດຈະນາວິທະຍາ

๑. ສັບ(ຖ້ອຍຄຳ)

ກ. ມະໂນພາບກ່ຽວກັບສັບ

ຖ້ອຍຄຳແມ່ນຫົວໜ່ວຍພື້ນຖານຂອງພາສາ, ບໍ່ມີຖ້ອຍຄຳແມ່ນບໍ່ມີພາສາ. ພາສາຂອງມະນຸດແມ່ນພາສາທີ່ເປັນຖ້ອຍຄຳ. ທ່ານສະຕາລິນ ເວົ້າວ່າ: ພາສາເປັນຄວາມ ແລະພາສາເປັນສັບເວລາໃດມັນກໍເປັນພາສາອັນໜຶ່ງອັນດຽວຂອງມະນຸດ ທີ່ມີຄວາມສາມາດເປັນພາຫະນະໃຫ້ແກ່ການແລກປ່ຽນ ຄົບຄ້າອັນແທ້ຈິງລະຫວ່າງຄົນກັບຄົນ.

ຖ້ອຍຄຳ ແມ່ນຫົວໜ່ວຍທີ່ຄົງຕົວທັງທາງດ້ານເນື້ອໃນ ແລະຮູບການ, ບໍ່ສູ້ປ່ຽນແປງ; ຖ້າປ່ຽນແປງກໍເປັນເວລາຍາວນານ. ມັນແມ່ນຫົວໜ່ວຍທີ່ມີມາແຕ່ເດີມ ແລະມີລັກສະນະບັງຄັບ.

ຕົວຢ່າງ: "ນອນ" ມີມາແຕ່ເທິງນານ, ມັນບັງຄັບໃຫ້ສັງຄົມລາວ ກໍ ຄືຄົນລາວຕ້ອງເວົ້າແນວນັ້ນ. ສະນັ້ນ, ພວກເຮົາຈຶ່ງເວົ້າໄດ້ວ່າ: ຖ້ອຍຄຳແມ່ນຮູບການອັກຂະຫຼະອັນໜຶ່ງ ເຊິ່ງມີຄວາມໝາຍປະກອບສ້າງເປັນປະໂຫຍກ.

ຂ. ພາລະກຳຖ້ອຍຄຳ

ຖ້ອຍຄຳມີພາລະກຳຕົ້ນຕໍ ๓ ຢ່າງ ຄື ພາລະກຳສະແດງຄວາມໝາຍ, ພາລະກຳປະກອບສ້າງປະໂຫຍກ ແລະພາລະກຳສະສົມ. ຢູ່ພາລະກຳສະແດງຄວາມໝາຍຍັງແບ່ງອອກເປັນ ๘ ພາກສ່ວນອີກ ຄື ພາລະກຳສະແດງມະໂນພາບ ແລະພາລະກຳສະແດງອາລົມຈິດ.

★ ພາລະກຳສະແດງຄວາມໝາຍ

① ພາລະກຳສະແດງມະໂນພາບຂອງຖ້ອຍຄຳ

ເນື້ອແທ້ຂອງພາລະກຳນີ້, ແມ່ນເນື້ອໃນຂອງພາສາທີ່ໄດ້ສ່ອງແສງໂລກພາວະວິໄສ, ສິ່ງວັດຖຸ ແລະປາກົດການຕ່າງໆໃນໂລກພາວະວິໄສ ທີ່ໄດ້ສ່ອງແສງເຂົ້າມາໃນພາສານັ້ນ. ຄວາມຈິງແລ້ວມັນແມ່ນເນື້ອໃນຂອງສັບ. ບັນຫານີ້, ມັນສະແດງອອກຢູ່ໃນຊື່ເອີ້ນຂອງວັດຖຸສິ່ງຂອງ, ສັດສາວາສິ່ງ, ເຫດການ ແລະປາກົດການຕ່າງໆທີ່ມີຢູ່ໃນທຳມະຊາດ ແລະສັງຄົມ.

ຕົວຢ່າງ: ປຶ້ມ, ສໍ, ດິນ, ໄຟ, ອາກາດ...

ສັບເຫຼົ່ານີ້, ລ້ວນແຕ່ເວົ້າເຖິງໂລກພາວະວິໄສ ແລະພວກເຮົາກໍຕ້ອງເຂົ້າໃຈວ່າ ການ ສ່ອງແສງໂລກພາວະວິໄສຂອງສັບ ມັນບໍ່ຂຶ້ນກັບຈິດໃຈຂອງໃຜໝົດ ແລະແຕ່ລະພາສາກໍບໍ່ຄືກັນ.

② ພາລະກຳສະແດງອາລົມຈິດຂອງຖ້ອຍຄຳ

ພວກເຮົາບໍ່ສາມາດແຍກພາລະກຳສະແດງມະໂນພາບ ແລະພາລະກຳສະແດງອາລົມຈິດ ອອກຈາກກັນໄດ້; ທັງສອງພາລະກຳນີ້, ເວລາໃດມັນກໍພົວພັນກັນຢ່າງສະໜິດແໜ້ນ ໃນການແລກປ່ຽນຄົບຄ້າຢູ່ໃນຊີວິດສັງຄົມມະນຸດເຮົາ ລ້ວນແຕ່ໄດ້ບັນຈຸເອົາອາລົມຈິດໄວ້ນຳ.

ຕົວຢ່າງ: ມ່ວນ, ໂສກ, ທຸກ, ຮັ່ງ, ເສຍສະຫຼະ, ຕາຍ...

ສັບເຫຼົ່ານີ້, ລ້ວນແຕ່ໄດ້ບັນຈຸດ້ວຍອາລົມຈິດທັງນັ້ນ, ເພາະຄົນເຮົາເຄີຍເລືອກໃຊ້ໃຫ້ຖືກກາລະເທສະ.

★ ພາລະກຳປະກອບສ້າງປະໂຫຍກ

ພວກເຮົາຮູ້ແລ້ວວ່າ ສັບ ແມ່ນຫົວໜ່ວຍສຳຄັນຕົ້ນຕໍຂອງພາສາ ແຕ່ວ່າໃນເວລາເຮົາໂອ້ລົມສົນທະນາແລກປ່ຽນຄົບຄ້ານຳກັນນັ້ນ, ພວກເຮົາພັດບໍ່ໄດ້ເວົ້າເທື່ອລະສັບ. ກົງກັນຂ້າມແມ່ນພວກເຮົາໄດ້ເວົ້າລົມກັນເປັນປະໂຫຍກ. ສະນັ້ນ, ສັບຈຶ່ງມີພາລະກຳປະກອບສ້າງເປັນປະໂຫຍກ, ບໍ່ມີສັບກໍບໍ່ມີຫຍັງປະກອບສ້າງປະໂຫຍກ ແລະນຳໄປເຖິງບ່ອນວ່າບໍ່ມີພາສາ.

★ ພາລະກຳສະສົມ

ສັບແມ່ນສິ່ງທ້ອນໂຮມເອົາແນວຄິດຂອງສັງຄົມໄປແຕ່ລະກ້າວ ຕາມ ກາລະເວລາຂອງຍຸກສະໄໝ. ທ່ານ ຊົດ ເຊຍ ໄດ້ເວົ້າວ່າ: "ພາສາແມ່ນມູນມັງມໍລະດົກມາຈາກການໃຊ້ຖ້ອຍຄຳ ທີ່ໄດ້ຝາກຝັງໄວ້ໃນສະໝອງຂອງກຸ່ມຄົນທີ່ໃຊ້ພາສານັ້ນ.

ຕົວຢ່າງ: "ກິນ" ເຖິງແມ່ນວ່າ ບໍ່ໄດ້ບັນທຶກໃສ່ປຶ້ມໄວ້ ແຕ່ຄົນລາວກໍບັນທຶກມັນໄວ້ຢູ່ໃນສະໝອງຂອງຕົນແລ້ວ.

ຜ່ານຫຼາຍຍຸກຫຼາຍສະໄໝ ແລະອີງໃສ່ພາລະກຳສະສົມນີ້, ພາສາຈຶ່ງປ່ຽບຄືເຊືອກເສັ້ນໜຶ່ງທີ່ຕໍ່ແຕ່ອະດີດມາຮອດປັດຈຸບັນ ແລະເປັນຂວາຕໍ່ເຖິງອະນາຄົດ. ສັບໄດ້ສະສົມທ້ອນໂຮມມູນເຊື້ອ ແລະຮີດຄອງປະເພນີອັນດີງາມທັງໝົດຂອງສັງຄົມພວກເຮົາ.

ສະຫຼຸບແລ້ວ, ພາລະກຳໃນການສະສົມຖ້ອຍຄຳນີ້ ມັນໄດ້ທ້ອນໂຮມເອົາແນວຄິດຈິດໃຈ, ນິດຮຽນແຫ່ງຊີວິດ ຜ່ານຫຼາຍຍຸກສະໄໝຂອງລະບອບສັງຄົມ; ຈາກຄົນຮຸ່ນນີ້ຕໍ່ໃສ່ຮຸ່ນໜ້າ, ຈາກບ່ອນນີ້ມັນຈະເຮັດໃຫ້ສາງວັດຈະນານຸກົມແຫ່ງຊາດອຸດົມສົມບູນ.

๔. ວັດຈະນາວິທະຍາ

ວັດຈະນາວິທະຍາແມ່ນການສັງຮວມສັບ ແລະບັນດາຫົວໜ່ວຍທີ່ເທົ່າທຽມກັບສັບ ເອີ້ນວ່າ ວັດຈະນາວິທະຍາ. ບັນດາສັບ ແລະບັນດາຫົວໜ່ວຍທີ່ເທົ່າທຽມກັບສັບນີ້ ບໍ່ພຽງແຕ່ເປັນເປົ້າໝາຍຄົ້ນຄວ້າຂອງວັດຈະນາວິທະຍາເທົ່ານັ້ນ ມັນຍັງເປັນເປົ້າໝາຍການຄົ້ນຄວ້າຂອງໄວຍາກອນວິທະຍາຕື່ມອີກ. ເພາະວ່າສັບແມ່ນຫົວໜ່ວຍຂອງພາສາ. ສະນັ້ນ, ແຕ່ລະຂະແໜງທີ່ນອນໃນພາສາຕ້ອງໄດ້ຄົ້ນຄວ້າກ່ຽວກັບສັບ, ຕ່າງແຕ່ວ່າການຄົ້ນຄວ້ານັ້ນຄົນລະແງ່. ພາກສ່ວນໜຶ່ງອາດຈະລົງເລິກຄົ້ນຄວ້າຄວາມໝາຍ ແລະພາກສ່ວນອື່ນອາດຈະລົງເລິກດ້ານໂຄງສ້າງຂອງມັນ ຫຼືບັນຫາອື່ນໆ.

ຕົວຢ່າງ: ກິນ [kin]

- ສັກຂະຫຼະວິທະຍາ ແມ່ນຄົ້ນຄວ້າລົງເລິກກ່ຽວກັບສຽງ, ການປະກອບສ້າງສຽງ.
- ວັດຈະນາວິທະຍາ ແມ່ນຄົ້ນຄວ້າລົງເລິກກ່ຽວກັບຄວາມໝາຍ ວ່າມັນມີຈັກຄວາມໝາຍ.

⊕ ໄວຍາກອນວິທະຍາ ແມ່ນຄົ້ນຄວ້າລົງເລິກກ່ຽວກັບຄຳ ວ່າມັນເປັນຄຳຊະນິດໃດ.

⊕ ສັນທະສິນສາດ ແມ່ນຄົ້ນຄວ້າລົງເລິກກ່ຽວກັບການໃຊ້ສັບ ເຮັດແນວໃດຈຶ່ງມ່ວນ, ໃຊ້ສັບອື່ນແທນບໍ.

ງ. ຂະແໜງຕ່າງໆຢູ່ໃນວັດຈະນາວິທະຍາ

① ວັດຈະນາວິທະຍາສັງເຂບ ແມ່ນຂະແໜງວິຊາທີ່ຄົ້ນຄວ້າກ່ຽວກັບທິດສະດີທົ່ວໄປ ເຊັ່ນ ຄົ້ນຄວ້າກ່ຽວກັບວັດຈະນາວິທະຍາ, ຄົ້ນຄວ້າລະບົບລວມຂອງວັດຈະນາ.

② ວັດຈະນາວິທະຍາປະຫວັດສາດ(ປະຫວັດວິທະຍາ) ມັນຄົ້ນຄວ້າກ່ຽວກັບເຄົ້າກຳເນີດ ແລະ ການຂະຫຍາຍຂອງວັດຈະນາວິທະຍາ ໂດຍຜ່ານຫຼາຍສະຕະວັດ.

③ ວັດຈະນາວິທະຍາວາດພາບ ມັນຄົ້ນຄວ້າສັບ ແລະບັນດາຫົວໜ່ວຍທີ່ເທົ່າທຽມກັບສັບທີ່ນອນຢູ່ໃນໄລຍະປະຫວັດສາດໃດໜຶ່ງ.

④ ວັດຈະນາວິທະຍາສົມທຽບ ມັນ ຄົ້ນຄວ້າສັບ ແລະບັນດາຫົວໜ່ວຍທີ່ເທົ່າທຽມກັບສັບທີ່ນອນຢູ່ໃນພາສາຕ່າງກັນ(ງ່າຍໃນການແປພາສາ).

⑤ ປະຫານຸກົມວິທະຍາ ມັນຄົ້ນຄວ້າການຈັດຮຽງຄຳສັບຕາມລຳດັບຕົວອັກສອນໃດໜຶ່ງ. ໃນປະຫານຸກົມອາດຈະມີການອະທິບາຍ ແລະການຍົກຕົວຢ່າງປະກອບນຳ.

⑥ ວັດຈະນານຸກົມວິທະຍາ ມັນ ຄົ້ນຄວ້າການຈັດຮຽງຄຳສັບ ພ້ອມ ຄວາມໝາຍຂອງຄຳສັບຕາມລຳດັບຕົວໜັງສື, ຄົ້ນຄວ້າການສັບຊ້ອນສັບພາສາໃຫ້ເປັນລະບົບ.

⑦ ຄວາມໝາຍວິທະຍາ ຂະ ແໜງວິຊານີ້ແມ່ນມີໜ້າທີ່ຄົ້ນຄວ້າສະເພາະຄວາມໝາຍຂອງຄຳສັບເປັນຕົ້ນຕໍ.

II. ວິທີຄົ້ນຄວ້າວັດຈະນາວິທະຍາ

ການຄົ້ນຄ້ວາວັດຈະນາວິທະຍາ ແມ່ນບັນຫາທີ່ມີຄວາມຫຍຸ້ງຍາກສັບສົນສົມຄວນ ແຕ່ຕາມທຳມະດາແລ້ວ, ເວລາຄົ້ນຄວ້າວັດຈະນາວິທະຍາ ເພິ່ນອີງໃສ່ ๘ ດ້ານຄື ດ້ານລະບົບ ແລະພາລະກຳ.

໑. ຄົ້ນຄວ້າຕາມລະບົບ

ວິທະຍາສາດທຳມະຊາດ ຫຼືວິທະຍາສາດສັງຄົມ ກໍ ລ້ວນແຕ່ມີລະບົບສະເພາະຂອງມັນ, ພາສາກໍມີລະບົບຂອງມັນ. ວັດຈະນາກໍແມ່ນບັນຫາໜຶ່ງທີ່ນອນໃນພາສາ. ສະນັ້ນ, ມັນກໍມີລະບົບຂອງມັນ ເຊິ່ງເວົ້າເຖິງວັດຈະນາແມ່ນເຮົາເວົ້າເຖິງສັບ; ສັບແມ່ນຫົວໜ່ວຍທີ່ກະແຈກກະຈາຍ, ແຕ່ລະສັບມີສາຍພົວພັນອັນແນ່ນອນຂອງມັນ. ມັນອາດຈະມີສາຍກ່ຽວພັນກັນດ້ານເນື້ອໃນ ຫຼື ບໍ່ກໍແມ່ນດ້ານດ້ານຮູບການ. ສະນັ້ນ, ເວລາຄົ້ນຄວ້າສັບ ເຮົາຕ້ອງເອົາໃຈໃສ່ເຖິງລັກສະນະລະບົບຂອງມັນ. ເຮົາຕ້ອງສັງເກດເບິ່ງຢູ່ໃນລະບົບຂອງສັບນັ້ນ ມັນຄືກັນດ້ານເນື້ອໃນ ຫຼືດ້ານຮູບການ.

ຕົວຢ່າງ:

① ໂຮງຮຽນ
ໂຮງໝໍ
ໂຮງແຮມ
ໂຮງລະຄອນ
ໂຮງຮູບເງົາ

} ສັບເຫຼົ່ານີ້ມັນຄືກັນ ເພາະວ່າ [ໂຮງ + x]

② ຈຸດ, ໜ່ວຍ, ໝວດ, ໝູ່, ກອງ, ກຸ່ມ... ຄືກັນດ້ານຄວາມໝາຍ; ເພາະວ່າເວົ້າເຖິງ<u>ຊຸມໂຮມອັນໜຶ່ງ</u>.

③ ໄປ, ມາ, ບິນ, ຄານ, ແລ່ນ... ຄືກັນດ້ານຄວາມໝາຍ, ເພາະວ່າເວົ້າເຖິງ<u>ການເຄື່ອນທີ່</u>.

④ ນອກຈາກນີ້, ພວດເຮົາຕ້ອງສັງເກດອີກວ່າ ບາງເທື່ອ ສັບດຽວ ມັນກໍມີລັກສະນະລະບົບຂອງມັນ. ດ້ານຮູບການ ແລະໂຄງປະກອບແມ່ນຄືກັນ ແລະດ້ານຄວາມໝາຍກໍຄືກັນ.

ຕົວຢ່າງ ๑:

ນ້ຳ ๑ ດື່ມ
ນ້ຳ ๘ ຕາ
ນ້ຳ ๓ ຕານ
ນ້ຳ ๔ ນົມ
ນ້ຳ ๕ ເຫື່ອ
ນ້ຳ ๖ ລາຍ -
ນ້ຳ ๗ ຫອມ
ນ້ຳ ๘ ໝອກ -
ນ້ຳ ๙ ຝົນ

ຮູບການ ແລະໂຄງປະກອບສ້າງ

[ນ້ຳ + x]

ດ້ານຄວາມໝາຍ

ທາດແຫຼວ

ຕົວຢ່າງ ๘:

ຕົນ ๑ ຄົນ
ຕົນ ๘ ສັດ
ຕົນ ๓ ພູ
ຕົນ ๔ ຜົມ
ຕົນ ๕ ແຫ -
ຕົນ ๖ ລົດ
ຕົນ ๗ ສົ້ນ

} ຮູບການຄືກັນ

[ຕົນ + x]

ດ້ານຄວາມໝາຍຄືກັນ

[ບ່ອນສຸດດ້ານລຸ່ມ]

ຮວມຄວາມແລ້ວ, ພວກເຮົາເຫັນວ່າການຄົ້ນຄວ້າວັດຈະນາ ຫຼືເວົ້າໃຫ້ແຈ້ງກວ່ານີ້ ແມ່ນ ການຄົ້ນຄວ້າຄຳສັບ. ພວກເຮົາຕ້ອງຈັດມັນເຂົ້າເປັນລະບົບໃດໜຶ່ງ ເພື່ອຄົ້ນຄວ້າ, ເພື່ອຊອກຫາ ສາຍພົວພັນມັນກັບສັບອື່ນທີ່ນອນໃນລະບົບນັ້ນ ແລະພ້ອມກັນນີ້ , ພວກເຮົາກໍຕ້ອງຮູ້ວ່າ ແຕ່ລະສັບ ມັນກໍມີລະບົບນ້ອຍຂອງມັນ ເຊິ່ງມີຫຼາຍມູນພາກພົວພັນນຳກັນ.

๘. ຄົ້ນຄວ້າຕາມພາລະກຳ

ການສະແດງຄວາມໝາຍ ແມ່ນພາລະກຳໜຶ່ງຂອງສັບ. ສະນັ້ນ, ເວລາຄົ້ນຄວ້າສັບ ພວກເຮົາ ຕ້ອງໄດ້ຄົ້ນຄວ້າເບິ່ງພາລະໜ້າທີ່ ແລະອີງໃສ່ໜ້າທີ່ຂອງມັນເວລາໃຊ້, ເວລາເຄື່ອນໄຫວຢູ່ໃນລະບົບ ນັ້ນ.

ຕົວຢ່າງ: ລະດູບານໃໝ່. ພາລະກຳຂອງມັນສະແດງໃຫ້ພວກເຮົາຮູ້ວ່າ ແມ່ນລະດູໜຶ່ງທີ່ນອນ ຢູ່ໃນປີໜຶ່ງ ເຊິ່ງມີຄວາມຈົບງາມກວ່າລະດູອື່ນໆ. ໃນຕົວຈິງພວກເຮົາບໍ່ໄດ້ນຳໃຊ້ມັນ ພຽງແຕ່ເປັນ ເຄື່ອງໝາຍລະດູເທົ່ານັ້ນ; ເຮົາຍັງນຳໃຊ້ສັບນີ້ເຂົ້າໃນຊີວິດຂອງຄົນເຮົານຳອີກ ເຊັ່ນ ລະດູບານໃໝ່ ຂອງຊີວິດ.

ຢູ່ບ່ອນນີ້ພາລະກຳຂອງມັນແມ່ນໄວໜຸ່ມທີ່ພວມຂະຫຍາຍຕົວຮອບດ້ານ. ນອກຈາກນີ້, ເວລາ ເວົ້າເຖິງດອກໄມ້ ພວກເຮົາເຄີຍເວົ້າວ່າ : ດອກຈຳປາ, ດອກກຸຫຼາບ ດອກຄາຍ ແລະດອກໄມ້ຊະ ນິດອື່ນໆ. ພາລະກຳຂອງມັນແມ່ນດອກໄມ້ແຕ່ລະຊະນິດ ແຕ່ບາງເທື່ອມັນກໍຍັງໝາຍເຖິງຄົນ ເຊັ່ນ

- ດອກຄາຍເມືອງພວນ ⇨ ຍິງສາວງາມທີ່ມີຖິ່ນກຳເນີດຢູ່ແຂວງຊຽງຂວາງ.
- ກຸຫຼາບເມືອງເໜືອ ⇨ ຍິງສາວງາມທີ່ມີຖິ່ນກຳເນີດຢູ່ພາກເໜືອ.
- ກຸຫຼາບປາກເຊ ⇨ ຍິງສາວງາມທີ່ມີຖິ່ນກຳເນີດຢູ່ພາກໃຕ້.

ສະນັ້ນ, ເວລາຄົ້ນຄວ້າວັດຈະນາ ພວກເຮົາຕ້ອງເອົາໃຈໃສ່ ๔ ດ້ານ ຄື ດ້ານລະບົບ ແລະ ດ້ານພາລະກຳຂອງມັນ.

ຄຳຖາມ

๑. ຖ້ອຍຄຳແມ່ນຫຍັງ? ມັນມີພາລະກຳແນວໃດແດ່? ຈົ່ງອະທິບາຍ.
๘. ການຄົ້ນຄວ້າວັດຈະນາ, ເພິ່ນອີງໃສ່ດ້ານໃດແດ່? ແຕ່ລະດ້ານເປັນແນວໃດ? ອະທິບາຍ ແລະຍົກຕົວຢ່າງປະກອບ
๓. ອີງໃສ່ໂຄງປະກອບສ້າງຂອງ | ນ້ຳ + x | ຈົ່ງຊອກຫາຄຳເວົ້າທີ່ມີໂຄງສ້າງ ຄືລະບົບ

ດັ່ງກ່າວ ໃຫ້ໄດ້ຢ່າງໜ້ອຍ ๑๐ ຄຳ.

ບົດທີ ๔

ສັບ ແລະສຳນວນ(ຄຳເວົ້າ ແລະອະລິຄົງຕິ)

I. ບັນດາຫົວໜ່ວຍທີ່ປະກອບສ້າງສັບ

ທຸກພາສາໃນໂລກນີ້, ເມື່ອເວົ້າເຖິງຮູບການຂອງຄຳເວົ້າແລ້ວ ມັນບໍ່ແມ່ນຫົວໜ່ວຍອັນໜຶ່ງທີ່ຢູ່ໂດດ່ຽວ. ສັບມັນມີລັກສະນະສັບສົນຢູ່ໃນຕົວຂອງມັນ, ເພາະວ່າມັນໄດ້ຖືກປະກອບສ້າງຂຶ້ນດ້ວຍບັນດາຫົວໜ່ວຍທີ່ນ້ອຍກວ່າມັນ, ແຕ່ຫົວໜ່ວຍເຫຼົ່ານັ້ນລ້ວນແລ້ວແຕ່ມີຄວາມໝາຍ. ຫົວໜ່ວຍທີ່ປະກອບເປັນສັບນີ້ແຫຼະ ເອີ້ນວ່າ "ຕົວຄຳ".

ຕົວຢ່າງ: ອ້າຍເຂີຍ = ອ້າຍ + ເຂີຍ
ເອື້ອຍໃພ້ = ເອື້ອຍ+ ໃພ້
ທ້ອງຮຽນ = ທ້ອງ + ຮຽນ

๑. ຕົວຄຳ(Morpheme)

ຕົວຄຳແມ່ນຫົວໜ່ວຍອັກຂະຫຼະ ຫຼືຮູບການອັກຂະຫຼະອັນໜຶ່ງທີ່ນ້ອຍສຸດ , ແຕ່ຫາກມີຄວາມໝາຍແທ້ ແລະເຄີຍຊ້ຳໄປຊ້ຳມາຫຼາຍເທື່ອຢູ່ໃນຫຼາຍສັບ . ຫົວໜ່ວຍທທີ່ນ້ອຍສຸດ ແລະບໍ່ມີຄວາມໝາຍແທ້ ເພີ່ນບໍ່ໄດ້ຈັດເປັນຫົວໜ່ວຍປະກອບສ້າງສັບ.

ຕົວຢ່າງ: [kin] [dɯ:m]

/k/ /i/ /n/ /d/ /ɯ: / /m/

ສະເພາະສຽງແມ່ນບໍ່ສາມາດປະກອບສ້າງເປັນສັບໄດ້, ເພາະວ່າມັນບໍ່ມີຄວາມໝາຍແທ້. ມັນພຽງແຕ່ມີຄວາມສາມາດຈຳແນກຄວາມໝາຍຂອງສັບເທົ່ານັ້ນ, ມັນເປັນເຄື່ອງໝາຍສຳຮອງ. ຫາກເວົ້າເຖິງຫົວໜ່ວຍປະກອບສ້າງເປັນສັບ ຕ້ອງເວົ້າເຖິງກິນ ແລະດື່ມ [kin][1] - [dɯm][2] ໂລດ ເພາະທັງສອງສັບນີ້ມີຄວາມໝາຍແທ້, ສະເພາະພາສາປ່ຽນຮູບ ເຊັ່ນ ພາສາຝຣັ່ງ , ອັງກິດ, ລັດເຊຍ... ຫົວໜ່ວຍທີ່ປະກອບສ້າງເປັນສັບ ບາງເທື່ອກໍມີຄວາມໝາຍແທ້ ແລະບາງເທື່ອກໍບໍ່ມີຄວາມໝາຍແທ້. ມັນພຽງແຕ່ມີຄຸນຄ່າດ້ານຄວາມໝາຍ ຫຼືເວົ້າວ່າມີຄວາມໝາຍແບບສັງຮວມນາມທຳ.

ຕົວຢ່າງ: meanless

ນາຍະກະ(ນາຍົກ)

Less ບໍ່ມີຄວາມໝາຍແທ້ ມີພຽງແຕ່ມີຄຸນຄ່າດ້ານຄວາມໝາຍເທົ່ານັ້ນ ; ຄືເຮັດໃຫ້ຄວາມໝາຍໄວຍາກອນຂອງສັບປ່ຽນ, ແຕ່ຄວາມໝາຍວັດຈະນານຍັງຄືເກົ່າ. ສະນັ້ນ, ໃນພາສາປ່ຽນຮູບເຂົາເຈົ້າຖືວ່າບັນດາຄຳອຸປະສັກ(Prefix) ແລະປັດໄຈ(Subfix) ກໍຖືວ່າແມ່ນຫົວໜ່ວຍປະກອບສ້າງສັບຄືກັນ.

ຕົວຢ່າງ: Movement (ment ແມ່ນປັດໄຈ)

Impolite (Im ແມ່ນອຸປະສັກ)

She speaks Japanese (s ແມ່ນວິພັດ)

ໃນບາງກໍລະນີ, ກໍມີຫົວໜ່ວຍປະກອບສ້າງເປັນຄຳເວົ້າຈຳນວນໜຶ່ງ ທີ່ປາກົດຂຶ້ນເທື່ອດຽວ , ມັນບໍ່ຊ້ຳໄປຊ້ຳມາຫຼາຍເທື່ອ ເຊັ່ນ

- ແມງກະເບື້ອ, ແມງແຄງ, ແມງດາ,...
- ໂຕປາ, ໂຕນົກ, ໂຕມ້າ,...
- ໝາກນັດ, ໝາກນາວ, ໝາກພ້າວ,...
- ກົດໜ່ວງ, ກົດຂີ້, ກົດເກນ,...

ຄຳຈຳພວກ ແມງ, ໂຕ, ໝາກ, ກົດ ແມ່ນຕົວຄຳທີ່ປາກົດຫຼາຍເທື່ອ; ແຕ່ຄຳຈຳພວກ: ກະ ເບື້ອ, ແຄງ, ປາ, ນົກ, ນັດ, ນາວ, ຂີ້, ເກນ ແມ່ນຕົວຄຳທີ່ປາກົດຂຶ້ນເທື່ອດຽວ ມັນບໍ່ຊ້ຳໄປຊ້ຳ ມາຫຼາຍເທື່ອ.

๔. ຊະນິດຕົວຄຳ

ກ. ຕົວຄຳທີ່ເປັນຕົວແກນ

ຕົວຄຳທີ່ເປັນຕົວແກນ ແມ່ນຄຳທີ່ມີຄວາມໝາຍແທ້ ແລະເປັນພາກສ່ວນສຳຄັນ, ເປັນພື້ນຖານ ໃນຕົວສັບ, ເປັນຕົວຢືມສຳລັບປະກອບກັບຕົວຄຳຊະນິດອື່ນ.

ຕົວຢ່າງ: ເດີ່ນບິນ → ເດີ່ນ
Teacher → Teach } ແມ່ນຕົວແກນ

ຂ. ຕົວຄຳສ່ວຍ

ຕົວຄຳສ່ວຍ ແມ່ນຈຳພວກຕົວຄຳທີ່ເອົາຕົ້ນໄປປະກອບກັບຕົວແກນ ເພື່ອອະທິບາຍຄວາມ ໝາຍຂອງຕົວແກນໃຫ້ແຈ້ງຕື່ມ; ພ້ອມນີ້ມັນຍັງເປັນສິ່ງກຳນົດດ້ານໄວຍາກອນນຳອີກວ່າ ເປັນຄຳນາມ ຄຳຄຸນນາມ, ຄຳກິລິຍາ...

ຕົວຢ່າງ: ຫ້ອງຮຽນ → ຮຽນ
Action → ion } ແມ່ນຄຳສ່ວຍ

ຈຳພວກຕົວຄຳສ່ວຍນີ້, ມັນອາດຈະປະກອບເຂົ້າຂ້າງໜ້າ, ກາງ ແລະຂ້າງຫຼັງຕາມທີ່ຕັ້ງ ແລະບົບາດຂອງມັນ.

ຕົວຢ່າງ: ພາສາອັງກິດ: ປະກອບເຂົ້າຂ້າງໜ້າ Dislike
ປະກອບເຂົ້າຂ້າງຫຼັງ Goodness

ຄ. ຕົວຄຳປະກອບທ້າຍ

ຕົວຄຳປະກອບທ້າຍ ແມ່ນຈຳພວກຄຳທີ່ບໍ່ໄດ້ຕື່ມຄວາມໝາຍທາງດ້ານວັດຈະນາໃຫ້ຕົວແກນ; ມັນພຽງແຕ່ເປັນພາກສ່ວນຜັນປ່ຽນທາງດ້ານຮູບການອັກຂະຫຼະ ເພື່ອສະແດງຄວາມໝາຍຂອງໄວຍາ ກອນເທົ່ານັ້ນ.

๑. ຕົວຄຳເອກະລາດ

ຕົວຄຳເອກະລາດ ໄດ້ແກ່ຕົວຄຳຈຳພວກທີ່ເຄື່ອນໄຫວເປັນເອກະລາດໄດ້ . ຕົວຄຳໃນພາສາທີ່ບໍ່ປ່ຽນຮູບ ສ່ວນຫຼາຍແລ້ວແມ່ນມີຄວາມໝາຍເປັນເອກະລາດ.

ຕົວຢ່າງ: ໄປ, ມາ, ກິນ, ນອນ, ນັ່ງ...

House, nhà, maison, gom

๒. ຕົວຄຳບໍ່ເອກະລາດ

ຕົວຄຳບໍ່ເອກະລາດ ໄດ້ແກ່ຕົວຄຳຈຳພວກທີ່ບໍ່ສາມາດເຄື່ອນໄຫວ ດ້ວຍຕົນເອງຢ່າງເອກະລາດໄດ້, ບັນດາຕົວຄຳປະກອບທ້າຍ ລ້ວນແຕ່ແມ່ນຕົວຄຳບໍ່ເອກະລາດ.

ຕົວຢ່າງ: Action ⟶ ion ບໍ່ສາມາດຢູ່ຢ່າງເອກະລາດໄດ້.

Bookish ⟶ ish ບໍ່ສາມາດຢູ່ຢ່າງເອກະລາດໄດ້.

ສະເພາະໃນພາສາລາວຂອງພວກເຮົາ ກໍເຄີຍມີປາກົດການຂອງຕົວຄຳທີ່ເປັນເອກະລາດ ແລະ ບໍ່ເປັນເອກະລາດ ຄືກັນເຊັ່ນ

ຕົວຢ່າງ: ໂງເງ ⟶ ເງ ບໍ່ສາມາດຢູ່ຢ່າງເອກະລາດໄດ້.

ໂງກເງກ ⟶ ເງກ ບໍ່ສາມາດຢູ່ຢ່າງເອກະລາດໄດ້.

II. ວິທີປະກອບສ້າງສັບ

๑. ວິທີໃຊ້ຕົວຄຳແທນຄຳສັບ

ວິທີນີ້ສ່ວນຫຼາຍ ແມ່ນໃຊ້ກັບພາສາທີ່ເປັນຄຳໂດດ, ໝາຍຄວາມວ່າຕົວຄຳໜຶ່ງເທົ່າກັບສັບໜຶ່ງ.

ຕົວຢ່າງ: ເຮືອນ, ເຂົ້າ, ນັ່ງ, ນອນ...

๒. ວິທີປະສົມຄຳສັບ

ວິທີປະສົມຄຳສັບ ໄດ້ແກ່ການເອົາຕົວຄຳທີ່ເປັນຕົວແທນມາປະສົມເຂົ້າກັນ ເພື່ອສະແດງຄວາມໝາຍໃໝ່.

ຕົວຢ່າງ: ອັດຕະໂນ + ມະຕິ = ອັດຕະໂນມັດ

ເຮືອນ + ນອນ = ເຮືອນນອນ

ເຮືອ + ບິນ = ເຮືອນບິນ

๓. ວິທີເພີ່ມຄຳ

ວິທີເພີ່ມຄຳ ໄດ້ແກ່ການເອົາຕົວຄຳສຳຮອງ ມາເພີ່ມໃສ່ຕົວຄຳທີ່ເປັນຕົວແທນ . ອາດຈະເພີ່ມເຂົ້າໜ້າ, ເພີ່ມເຂົ້າກາງ ແລະເພີ່ມເຂົ້າຫຼັງຕາມຈຸດພິເສດຂອງແຕ່ລະພາສາ.

ຕົວຢ່າງ: appear reappear (ປາກົດ/ປາກົດໃໝ່)

Cycle recycle (ສະພາບເດີມ/ຄືນສູ່ສະພາບເດີມ)

๔. ວິທີຊ້ຳຄຳ

ວິທີຊ້ຳຄຳ ແມ່ນການເວົ້າຫຼືຂຽນຕົວແທນຊ້ຳຄືນອີກເທື່ອໜຶ່ງ ແລະການຊ້ຳຄືນນີ້ບາງເທື່ອ ອາດຈະຊ້ຳຄືນທັງໝົດ ແຕ່ບາງເທື່ອກໍຊ້ຳຄືນບາງພາກສ່ວນ.

ຕົວຢ່າງ: - ຊ້ຳຄືນທັງໝົດ: ດຳ → ດຳດຳ

ງາມ → ງາມງາມ

- ຊ້ຳຄືນບາງພາກສ່ວນ: ງ່າຍ → ງ່າຍດາຍ

ສະອາດ → ສະອາດສະອ້ານ

๕. ວິທີສອນສຽງ

ວິທີສອນສຽງ ແມ່ນການໃຊ້ຮູບການເອົາອັກຂະຫຼະບັນທຶກ ຫຼືຈົດເອົາສຽງຂອງວັດຖຸສິ່ງຂອງຕ່າງໆ ທີ່ມີຢູ່ໃນທຳມະຊາດ.

ຕົວຢ່າງ: ແມວໆ ເອີ້ນວ່າ ແມວ

ແບ້ໆ " ແບ້

ກາໆ " ກາ

๖. ວິທີກູ້ຢືມ(ວິທີທັບສັບ)

ວິທີກູ້ຢືມ ອາດຈະຢືມທາງດ້ານຄວາມໝາຍ ຫຼືຮູບການອັກຂະຫຼະເຂົ້າມາໃຊ້ໃນພາສາຂອງຕົນ ແຕ່ການຢືມຕ້ອງບົ່ນຮູບການອັກຂະຫຼະຂອງຕົນເອງ.

ຕົວຢ່າງ: ເຮັ້ງ ຢືມຈາກພາສາ ຈີນ

ສະບູ " ປັອກຕຸຍການ(Sapu)

ກາເຟ " ຝຣັ່ງ(Café)

ສິວິໄລ " ອັງກິດ(Civilize)

๗. ວິທີຍ້າຍຄວາມໝາຍ

ວິທີຍ້າຍຄວາມໝາຍ ແມ່ນການຍ້າຍຄວາມໝາຍເດີມຂອງສັບ ມັນແມ່ນການເອົາຊື່ເອີ້ນຂອງວັດຖຸນີ້ໄປໃສ່ຊື່ໃຫ້ວັດຖຸອື່ນ.

ຕົວຢ່າງ: ໄສ້ເສືອ ບໍ່ແມ່ນໄສ້ຂອງເສືອ ແມ່ນລໍຊໍ

ມ້າຂາວ ບໍ່ແມ່ນມ້າສີຂາວ ມັນແມ່ນລົດຈັກສຳລັບແຫ່ແຂກເມືອງ

ກົບ ບໍ່ແມ່ນໂຕກົບ ແມ່ນເຄື່ອງວັດຖຸສຳລັບກົບໄມ້

III. ຂະນິດຄຳເວົ້າ

ຂະນິດຄຳເວົ້າແມ່ນອີງຕາມວິທີປະກອບສ້າງສັບ, ມີວິທີໃນການສ້າງສັບເທົ່າໃດ ກໍມີຂະນິດຄຳເວົ້າເທົ່ານັ້ນ.

๑. ຄຳປ່ຽວ

ຄຳປ່ຽວໄດ້ມາຈາກການໃຊ້ຕົວຄຳແທນຄຳເວົ້າ(ຄຳສັບ). ສັບປ່ຽວນີ້ກໍມີພະຍາງດຽວ, ແຕ່ບາງເທື່ອກໍມະຫຼາຍພະຍາງ.

ຕົວຢ່າງ: ໄປ,
ປະເທດ
ອັກສອນສາດ...

๘. ຄຳປະສົມ(ສັບປະສົມ)

ຄຳປະສົມໄດ້ມາຈາກການປະສົມຫຼາຍຄຳທີ່ເປັນຕົວແກນ. ການປະສົມນີ້ອາດຈະແມ່ນແບບຂະໜານ ຫຼືແບບຕົ້ນຕໍ-ສຳຮອງ.

ຕົວຢ່າງ: - ແບບຂະໜານ: ໄປມາ, ກິນຢູ່, ນຸ່ງຖື...
- ແບບຕົ້ນຕໍ-ສຳຮອງ: ເຮືອນຄົວ, ລົດຖີບ, ຈັກຫຍິບ...

๙. ຄຳກຳເນີດໃໝ່(ສັບເກີດໃໝ່)

ຄຳກຳເນີດໃໝ່ ແມ່ນໄດ້ມາຈາກການເພີ່ມຄຳ, ເພາະການເພີ່ມຄຳມັນກໍແມ່ນວິທີການປະກອບສ້າງສັບຢ່າງໜຶ່ງຢູ່ໃນພາສາ.

ຕົວຢ່າງ: ໃນພາສາອັງກິດ: quick
quicken ເຮັດໃຫ້ໄວ
quickly ໂດຍໄວ
quickness ຄວາມໄວ

๔. ຄຳຊ້ຳ

ຄຳຊ້ຳ ແມ່ນຄຳທີ່ໄດ້ມາຈາກວິທີຊ້ຳຄຳ.

ຕົວຢ່າງ: ແດງໆ
ດຳໆ
ງາມໆ...

๕. ຄຳສອນສຽງ(ສັບສອນສຽງ)

ຄຳສອນສຽງ ໄດ້ມາຈາກການສອນສຽງໃນທຳມະຊາດ ແລະວັດຖຸອ້ອມຂ້າງ.

ຕົວຢ່າງ: ກັບແກ້
ແບ້
ແມວ
ກາ...

๗. ຄຳຢືມ(ທັບສັບ)

ຄຳຢືມ ແມ່ນຄຳທີ່ໄດ້ມາຈາກການຢືມຄຳສັບໃນພາສາອື່ນ.

ຕົວຢ່າງ: ກາເຟ
ສະບູ
ເອກະລາດ...

ກ. ຄຳເລື່ອນຄວາມໝາຍ

ຄຳເລື່ອນຄວາມໝາຍ ໄດ້ແກ່ຄຳຈຳພວກທີ່ຖືກຍ້າຍຄວາມໝາຍ.

ຕົວຢ່າງ: ໄສ້ໄກ່

ໄມ້ສາກ

ຕາກົບ...

IV. ອະລິຄົງຕົວ

๑. ຄວາມສຳນຶກກ່ຽວກັບອະລິ

ໃນພາສາຍັງມີປາກົດການທີ່ວ່າ ຫຼາຍຄຳເວົ້າປະສົມເຂົ້າກັນເພື່ອກາຍເປັ ນອະລິ ແລະຄຳທີ່ປະກອບເຂົ້າເປັນອະລິນີ້ ມີການພົວພັນກັນ, ມັນອາດຈະພົວພັນດ້ານຄວາມໝາຍວັດຈະນາ ຫຼືດ້ານໄວຍາກອນ. ອະລິແມ່ນການສັງຮວມສັບຕັ້ງແຕ່ສອງສັບແທ້ຂຶ້ນໄປ. ໃນນັ້ນມີມູນພາກໜຶ່ງເປັນໃຈກາງ ແລະມູນພາກໜຶ່ງເປັນສຳຮອງ. ໃນບັນດາສັບທີ່ປະກອບເປັນອະລິນັ້ນ ມັນພົວພັນກັນໃນດ້ານໃດດ້ານໜຶ່ງ, ບໍ່ແມ່ນດ້ານເນື້ອໃນ ກໍແມ່ນດ້ານຮູບການ.

๘. ອະລິເສລິ

ອະລິເສລິ ແມ່ນໝວດຄຳເວົ້າທີ່ມີສາຍພົວພັນນຳກັນຊໍ່ຄາວ ຕາມຫຼັກການວາກະຍະສຳພັນ ຕັ້ງແຕ່ສອງສັບຂຶ້ນໄປ. ທຸກຄຳທີ່ປະກອບເປັນອະລິເສລິນີ້, ມັນຍັງຮັກສາຄວາມເປັນເອກະລາດຂອງມັນໄວ້ຢູ່ ແລະຄວາມໝາຍຂອງອະລິເສລິນີ້ ແມ່ນໄດ້ປະກອບການປະສົມຄວາມໝາຍຂອງແຕ່ລະຄຳທີ່ປະກອບເຂົ້ານັ້ນ, ພາຍຫຼັງທີ່ໃຊ້ແລ້ວ ເຮົາສາມາດນຳເອົາຄຳໃດຄຳໜຶ່ງ ໃນອະລິນີ້ໄປປະກອບເປັນອະລິອື່ນໄດ້ຕາມໃຈມັກ.

ຕົວຢ່າງ: - ນົກເຂົາຕູ້ → ຄອາຍເຂົາຕູ້ → ຕູ້ຈັນລາ → ຕູ້ລຳໂພງ...

- ນົກເຂົາທອງ → ນົກອັ້ງໂມ່ງ → ນົກອີ່ອັ້ງ → ນົກອັ້ງແກ້ວ...

- ກອງໄຊ → ກອງຊຸມ → ກອງເຊຍ → ກອງທາງ...

๙. ອະລິຄົງຕົວ(ສຳນວນຄຳເວົ້າ)

ອະລິຄົງຕົວແມ່ນສຳນວນຄຳເວົ້າທີ່ມີມາແຕ່ເທິງນານ, ມັນຜ່ານຫຼາຍໄລຍະປະຫວັດສາດແຕກຕ່າງກັນ, ອະລິຄົງຕົວມັນບໍ່ຂຶ້ນກັບໃຈມັກຂອງຜູ້ໃດ, ມັນເທົ່າທຽມກັບສັບ, ມັນມີມາແຕ່ເທິງນານ, ມັນຄົງຕົວທັງດ້ານເນື້ອໃນ ແລະຮູບການ.

ຕົວຢ່າງ: - ເສນາໝາກຂີ້ກາ - ຫູໜວກກິນຝານ - ໝາກິນຄວາມຄຶດ

- ຫົວລ້ານລື່ນຄູ - ຊ້າຄືເຕົ່າ - ໄວປານຈາຫຼວດ

- ງາມປານແຕ້ມ - ສຸກກ່ອນເທີ່ມ - ເຫຼືອງຄືປູຈີ່

ໝວດຄຳເວົ້າເຫຼົ່ານີ້ ມີຄຸນຄ່າເທົ່າທຽມກັບສັບ , ສາມາດເປັນຫົວໜ່ວຍປະກອບສ້າງເປັນປະໂຫຍກໄດ້; ປະມວນອະລິຄົງຕົວບໍ່ສູ້ປ່ຽນແປງ, ຜູ້ໃຊ້ບໍ່ສາມາດຈະຕັດ ຫຼືຕື່ມເຂົ້າຕາມໃຈຕົນເອງ . ເພິ່ນແບ່ງອະລິຄົງຕົວອອກເປັນ ๘ ປະເພດ ຄື

✷ ສຳນວນໄວຍາກອນ ແມ່ນປະມວນຄຳເວົ້າທີ່ພວກເຮົາເຄີຍເວົ້າຊ້ຳໄປຊ້ຳມາຫຼາຍເທື່ອ ເຊັ່ນ ໝາຍຄວາມວ່າ, ເພາະສະນັ້ນ, ດ້ວຍເຫດນີ້, ໂດຍຫຼັກການແລ້ວ, ໂດຍສະເພາະແມ່ນ...

✷ ສຳນວນບູຮານ(ສຳນວນດັ້ງເດີມ) ແມ່ນປະມວນຄຳເວົ້າທີ່ມີມາແຕ່ເທິງນານ ຜ່ານຫຼາຍຍຸກສະໄໝ. ພວກເຮົາບໍ່ສາມາດຈະອະທິບາຍຄວາມໝາຍຂອງມັນຕາມແຕ່ລະສັບ ທີ່ປະກອບເປັນຄຳເວົ້ານັ້ນໄດ້. ຢາກຮູ້ຄວາມໝາຍຂອງມັນ ຕ້ອງໃຊ້ຄວາມຮູ້ສັ່ງຮ ວມເພື່ອໄຈແຍກ ແລະວິເຄາະຄຳເວົ້ານັ້ນ. ອະລິຄົງຕົວປະກອບດ້ວຍລັກສະນະ ๓ ຢ່າງ ຄື

- ອະທິບາຍຄວາມໝາຍຕາມແຕ່ລະສັບ ທີ່ປະກອບເຂົ້າເປັນອະລິຄົງຕົວນັ້ນບໍ່ໄດ້.
- ມັນມີລັກສະນະຮູບປະທຳ(ຕົວຈິງ).
- ມັນມີລັກສະນະອາລົມຈິດ.

ຕົວຢ່າງ: ໝາກິນຄວາມຄຶດ = ໂງ່
ຊ້າຄືເຕົ່າ = ຊ້າທີ່ສຸດ
ສຸກກ່ອນເທີ່ມ = ຜິດປົກກະຕິ

ຄຳຖາມ

๑. ຫົວໜ່ວຍປະກອບສ້າງສັບແມ່ນຫຍັງ? ມີຈັກຊະນິດ? ແຕ່ລະຊະນິດເປັນໃດ?
๘. ການປະກອບສ້າງສັບມີຈັກວິທີ? ແຕ່ລະວິທີເປັນແນວໃດ?
๙. ອະລິເສລີ ແລະອະລິຄົງຕົວມັນຕ່າງກັນ ແລະຄືກັນຢູ່ບ່ອນໃດ? ອະທິບາຍ.
๔. ເປັນຫຍັງອະລິຄົງຕົວ ຈຶ່ງເປັນເປົ້າໝາຍຄົ້ນຄວ້າຂອງວັດຈະນາວິທະຍາ?
๕. ຈົ່ງຊອກຄຳສັບ: ສັບສອນສຽງ, ສັບກູ້ຢືມ, ແລະຄຳສັບຍ້າຍຄວາມໝາຍ ວິທີລະ ๑๐ ຄຳ.

ບົດທີ ນ
ຄວາມໝາຍຂອງສັບ

ບັນຫາຄວາມໝາຍຂອງສັບ ບໍ່ແມ່ນເລື່ອງທີ່ງ່າຍດາຍ ເພາະຂອບເຂດຄວາມໝາຍຂອງສັບ ມັນກວ້າງຂວາງເລິກເຊິ່ງ ແລະສັບສົນ . ເວົ້າເຖິງຄວາມໝາຍຂອງສັບ ຕ້ອງເວົ້າເຖິງຄວາມໝາຍ ຂອງຕົວຄຳ, ວະລີ ແລະປະໂຫຍກ ວ່າຄວາມໝາຍຂອງສັບຕ່າງຈາກຄວາມໝາຍຂອງຄຳແນວໃດ? ຄວາມໝາຍຂອງວະລີ ແລະຄວາມໝາຍຂອງປະໂຫຍກຕ່າງກັນແນວໃດ?

ຕົວຢ່າງ: - ເຮືອນ, ໂຕະ, ຕັ່ງ, ໂມງ...

- ເຮືອນຂອງໃຜ?.
- ໂຕະຂອງລາວ.
- ຂ້ອຍນັ່ງຕັ່ງ.
- ລາວແປງໂມງ.

ພວກເຮົາເຫັນວ່າ ຄວາມໝາຍຂອງພວກມັນບໍ່ຄົງທີ່, ມັນຂຶ້ນກັບຈຸດປະສົງຂອງຜູ້ເວົ້າທັງໝົດ. ນີ້ແມ່ນໜ້າທີ່ຂອງຄວາມໝາຍວິທະຍາເປັນຜູ້ຄົ້ນຄວ້າ. ສຳລັບພວກເຮົາຈະໄດ້ຄົ້ນຄວ້າແຕ່ສະເພາະ ຄວາມໝາຍຂອງສັບເປັນບັນຫາຕົ້ນຕໍ. ຕົວຈິງແລ້ວ, ຄວາມໝາຍອັດຈະນາ ແລະຄວາມໝາຍຂອງ ຄຳເວົ້າມັນຢາກຄ້າຍຄືກັນ(ມັນຄືກັນຢູ່ຈຸດໃດຈຸດໜຶ່ງ).

ສົມມຸດ "ແມ່" ຄວາມໝາຍອັດຈະນາ: ແມ່ຍິງ, ມີລູກ, ລູກເປັນຜູ້ເອີ້ນ. ນີ້ແມ່ນຄວາມໝາຍ ເດີມຂອງມັນ.

ໃນການດຳລົງຊີວິດຂອງຄົນເຮົາ ຊ້ຳພັດເຄີຍມີຫຼາຍຄຳວ່າ "ແມ່" ເຊັ່ນວ່າແມ່ນ້ຳ, ແມ່ແຮງ, ແມ່ທັບ, ແມ່ຮ້າງ, ແມ່ໝ້າຍ... ຢູ່ໃນນີ້, ພວກເຮົາເຫັນວ່າ "ແມ່" ບໍ່ມີຄວາມໝາຍຄື "ແມ່" ໃນ ອັດຈະນາ, ມັນມີຄວາມໝາຍໃໝ່. ຄວາມໝາຍຂອງມັນໄດ້ປ່ຽນຈາກຮູບທຳມາເປັນນາມທຳ. ,

ຕົວຢ່າງອີກອັນໜຶ່ງ: "ໄປ" ຄົນໄປ, ຄວາຍໄປ, ລົດໄປ... ຄຳວ່າ "ໄປ" ໃນທີ່ນີ້ມັນກໍບໍ່ຄືກັນ. ສະນັ້ນ, ຈຶ່ງເວົ້າວ່າຄວາມໝາຍອັດຈະນາ ແລະຄວາມໝາຍຂອງຕົວສັບໃນຄວາມເວົ້າ ເຖິງວ່າມັນມີ ຫຼາຍອັນພົວພັນນຳກັນ ແຕ່ກໍບໍ່ແມ່ຄືກັນອ້ອຍຕ້ອຍ.

I. ພາກສ່ວນຄວາມໝາຍຂອງຄຳສັບ

ໂດຍທົ່ວໄປແລ້ວ, ເພິ່ນໄດ້ແບ່ງຄວາມໝາຍຂອງສັບອອກເປັນ ๔ ພາກສ່ວນໃຫຍ່ ຄື ຄວາມ ໝາຍສະແດງວັດຖຸ, ຄວາມໝາຍສະແດງມະໂນພາບ, ຄວາມໝາຍສະແດງອາລົມຈິດ ແລະຄວາມ ໝາຍໄວຍາກອນ.

๑. ຄວາມໝາຍສະແດງວັດຖຸ

ຄວາມໝາຍສະແດງວັດຖຸ ແມ່ນຄວາມໝາຍທີ່ສະແດງເຖິງວັດຖຸ, ເຫດການ, ປາກົດການ ຕ່າງໆທີ່ມີຢູ່ໃນໂລກພາວະວິໄສ ເຊິ່ງສັບເປັນຜູ້ສະແດງ; ສິ່ງທີ່ສະແດງນີ້ແຫຼະ ເອີ້ນວ່າ ຄວາມໝາຍ ສະແດງວັດຖຸ.

ຕົວຢ່າງ: ໂຕະ, ຕັ່ງ, ປື້ມ, ເຮືອນ, ເດືອນ, ດາວ...

ກ. ຄວາມໝາຍສະແດງວັດຖຸລວມ

ຄວາມໝາຍສະແດງວັດຖຸລວມ ແມ່ນຊື່ເອີ້ນວັດຖຸສິ່ງຂອງທີ່ມີຈຸດລວມ, ບໍ່ໄດ້ເຈາະຈົງລົງເລິກໃສ່ວ່າ ແມ່ນຂອງຜູ້ໃດຜູ້ໜຶ່ງ ຫຼືສິ່ງໃດສິ່ງໜຶ່ງ. ສະຫຼຸບແລ້ວຄວາມໝາຍສະແດງວັດຖຸຂອງສັບ ແມ່ນຄວາມໝາຍລວມຊະນິດ. ທ່ານ ເລນິນ ເວົ້າວ່າ: "ຢູ່ໃນພາສາມີແຕ່ອັນລວມເທົ່ານັ້ນ" ມັນໂຮມເອົາວັດຖຸທັງໝົດ.

ຕົວຢ່າງ: ດິນ, ນ້ຳ, ລົມ, ໄຟ...

ຂ. ຄວາມໝາຍສະແດງວັດຖຸສະເພາະ

ຄວາມໝາຍສະແດງວັດຖຸສະເພາະ ແມ່ນຊື່ເອີ້ນວັດຖຸສິ່ງຂອງທີ່ສະເພາະເຈາະຈົງ, ບໍ່ແມ່ນບັນຫາລວມໆອີກ.

ຕົວຢ່າງ: ໂຕະຂອງຂ້ອຍ, ເຮືອນຂອງຂ້ອຍ, ປາກກາຂອງຂ້ອຍ. ໃນບັນດາຄຳສັບທີ່ສະແດງເຖິງ ໂຕະ, ປາກກາ ແມ່ນສິ່ງສະເພາະຂອງວັດຖຸໃດໜຶ່ງ.

ຄ. ຄວາມໝາຍສະແດງມະໂນພາບ

ຄວາມໝາຍສະແດງມະໂນພາບ ມັນໂຮມເອົາບັນຫາທັງໝົດ ທີ່ຄົນເຮົາເຂົ້າໃຈກ່ຽວກັບວັດຖຸ, ປາກົດການ, ເຫດການ, ການເຄື່ອນໄຫວ, ເນື້ອແທ້ຂອງວັດຖຸ ແລະປາກົດການຕ່າງໆ ທີ່ຄຳສັບສະແດງເຖິງ ຫຼືເວົ້າແບບອື່ນ ຄວາມໝາຍສະແດງມະໂນພາບແມ່ນຄວາມຮັບຮູ້ ແລະຄວາມເຂົ້າໃຈຂອງຄົນເຮົາຕໍ່ກັບຄວາມໝາຍສະແດງວັດຖຸ.

ກ. ຄວາມໝາຍສະແດງມະໂນພາບລວມ

ຄວາມໝາຍສະແດງມະໂນພາບລວມ ແມ່ນຄວາມເຂົ້າໃຈຂອງຄົນເຮົາກ່ຽວກັບຄວາມໝາຍສະແດງວັດຖຸລວມ, ແມ່ນຄວາມຮັບຮູ້ລວມເຊິ່ງຖືວ່າ ຄວາມໝາຍລວມຂອງສັງຄົມ ເປັນຄວາມໝາຍເຄົ້າ.

ຕົວຢ່າງ: ໂມງແມ່ນຫຍັງ? ໂມງແມ່ນເຄື່ອງບອກເວລາ.
ຄົນແມ່ນຫຍັງ? ຄົນແມ່ນສັດປະເສີດຊະນິດໜຶ່ງ.

ຂ. ຄວາມໝາຍສະແດງມະໂນພາບສະເພາະ

ຄວາມໝາຍສະແດງມະໂນພາບສະເພາະ ແມ່ນຄວາມເຂົ້າໃຈຮັບຮູ້ວັດຖຸສະເພາະຂອງແຕ່ລະຄົນ, ແຕ່ລະໄວອາຍຸ, ແຕ່ລະລະດັບ; ແມ່ນບັນດາມະໂນພາບກ່ຽວກັບວັດຖຸ, ການເຄື່ອນໄຫວ ແລະທາດແທ້ຂອງວັດຖຸໃດໜຶ່ງ ໂດຍສະເພາະ.

ຕົວຢ່າງ: ໂມງຂອງເຈົ້າເປັນແນວໃດ?
ລົດຂອງເຈົ້າເປັນແນວໃດ?
ປາກກາຂອງເຈົ້າເປັນແນວໃດ?

(ອີງຕາມຈິດຕະສາດແລ້ວ ແມ່ນເຄີຍຍ້ອງຂອງຕົນເອງ).

ง. ຄວາມໝາຍສະແດງອາລົມຈິດ

ຄວາມໝາຍສະແດງອາລົມຈິດ ແມ່ນບັນດາທ່າທີການຕີລາຄາວັດຖຸ, ປາກົດການ ແລະເຫດການຕ່າງໆທີ່ຄຳສັບສະແດງ.

ຕົວຢ່າງ: - ອ້າຍນັກຮົບເສຍສະຫຼະເພື່ອຊາດ.

- ພວກຫຸ່ນຕາຍຍ້ອນໂດລາ.

ນັກຮົບ/ຫຸ່ນ ເສຍສະຫຼະ/ຕາຍ ເພື່ອຊາດ/ຍ້ອນໂດລາ

"ນັກຮົບ" ມີລັກສະນະນັບຖື, "ຫຸ່ນ" ມີລັກສະນະຢຽບຫຍາມ ສ່ວນຄຳວ່າ "ເສຍສະຫຼະ" ແລະ "ຕາຍ" ຄວາມໝາຍວັດຈະນາແມ່ນອັນດຽວ(ບໍ່ມີຊີວິດ) ແຕ່ເມື່ອເວົ້າເຖິງອາລົມຈິດແລ້ວ ມັນມີລະດັບຕ່າງກັນ. ສະນັ້ນເວົ້າລວມແລ້ວ, ສັບທີ່ເວົ້າອອກມາລ້ວນແຕ່ເຈືອຈານໄປດ້ວຍອາລົມຈິດ.

๔. ຄວາມໝາຍໄວຍາກອນ

ຄວາມໝາຍໄວຍາກອນ ແມ່ນຄວາມໝາຍທີ່ຊ້ອນແຝງໄປນຳຄວາມໝາຍອື່ນໆຂອງສັບ . ສັບນີ້ມັນສະແດງຮູບພາບອັນໃດ? ມີລັກສະນະແນວໃດ? ເຄື່ອນໄຫວແນວໃດ? ແລະມັນສ້າງສາຍພົວພັນແນວໃດນຳກັນ.

ຕົວຢ່າງ: **ຄົນ** ຄຳນາມ **ໄປ** ຄຳກຳມະ.

ເຈົ້າ ຄຳແທນນາມ **ງາມ** ຄຳຄຸນນາມ.

ລວມຄວາມແລ້ວ, ຄວາມໝາຍສະແດງວັດຖຸ, ຄວາມໝາຍສະແດງມະໂນພາບ, ຄວາມໝາຍສະແດງອາລົມຈິດ ເອີ້ນວ່າ ຄວາມໝາຍວັດຈະນາ ແລະມັນກໍແມ່ນເປົ້າໝາຍຄົ້ນຄວ້າຂອງວັດຈະນາວິທະຍາ.

II. ຄວາມໝາຍວັດຈະນາວິທະຍາ

๑. ຄວາມໝາຍສະແດງວັດຖຸແມ່ນຫຍັງ?

ຢາກເຂົ້າໃຈບັນຫາທີ່ວ່າ ຄວາມໝາຍສະແດງວັດຖຸແມ່ນຫຍັງ, ພວກເຮົາຕ້ອງໄດ້ຮັບຮູ້ ແລະຄົ້ນຄວ້າເບິ່ງວ່າ

- ຄວາມໝາຍສະແດງວັດຖຸຢູ່ໃນທຸກໆພາສາ ມັນກໍແມ່ນວັດຖຸ , ປາກົດການ, ເຫດການຕົວຈິງຢູ່ໃນໂລກພາວະວິໄສນັ້ນບໍ?

- ຄວາມໝາຍສະແດງວັດຖຸຢູ່ໃນໂລກນີ້ຄືກັນບໍ?

ຄວາມໝາຍສະແດງວັດຖຸມັນບໍ່ແມ່ນວັດຖຸ ຫຼືປາກົດການຕົວຈິງທີ່ມີຢູ່ໃນໂລກພາວະວິໄສ ແລະແຕ່ລະພາສາກໍບໍ່ຄືກັນ. ສະນັ້ນ, ພວກເຮົາຈຶ່ງເວົ້າໄດ້ວ່າ ຄວາມໝາຍສະແດງວັດຖຸ ມັນພຽງແຕ່ແມ່ນການຕັດແບ່ງໂລກພາວະວິໄສ, ມັນບໍ່ເອກະພາບກັບວັດຖຸ ຫຼືປາກົດການຕົວຈິງຕ່າງໆ . ວັດຖຸ ຫຼືປາກົດການທີ່ມີຢູ່ໃນໂລກພາວະວິໄສນີ້, ຢູ່ບ່ອນໃດມັນກໍຄົງຕົວຢູ່ແນວນັ້ນ, ແຕ່ມັນຖືກຄວາມໝາຍສະແດງວັດຖຸຂອງແຕ່ລະພາສາຕັດແບ່ງມັນອອກໃຫ້ຕ່າງກັນ.

ຕົວຢ່າງ: "**ແຂນ**" ວັດຖຸຕົວຈິງ.

ແບ່ງ	**ບໍ່ແບ່ງ**
- ລາວ: ແຂນ ມື	- ຫວຽດນາມ tay
- ອັງກິດ: arm-hand	"dautay"
- ຝຣັ່ງ: bras-main	ເຈັບແຂນ ຫຼືເຈັບມື
- ລັດເຊຍ: РуКа(утня БаЛТ Руka)	

ພວກເຮົາອາດສະຫຼຸບດ້ວຍແຜນວາດ ດັ່ງນີ້:



- ວັດຖຸຕົວຈິງ

- ຕັດແບ່ງ

- ບໍ່ຕັດແບ່ງ

ຈາກເຫດການຕົວຈິງຄືຂ້າງເທິງນີ້, ພວກເຮົາສາມາດນິຍາມໄດ້ວ່າ: ຄວາມໝາຍສະແດງວັດຖຸ ແມ່ນການຕັດແບ່ງຕົວຈິງພາວະວິໄສທີ່ສົມຄູ່ແຕ່ລະຄຳສັບຢູ່ໃນແຕ່ລະພາສາ ຫຼືເວົ້າວ່າ ຄວາມໝາຍສະແດງວັດຖຸແມ່ນການຕັດແບ່ງຕົວຈິງພາວະວິໄສ ທີ່ໄດ້ສ່ອງແສງເຂົ້າໃນພາສາ ໂດຍຜ່ານຄຳສັບ.

ການສ່ອງແສງບໍ່ຄວນເຂົ້າໃຈແບບກົນຈັກ ເພາະມັນສ່ອງແສງແບບນາມທຳ. ກ່ຽວກັບບັນຫານີ້, ທ່ານ ເລນິນ ໄດ້ເວົ້າວ່າ: "ສ່ອງແສງບໍ່ແມ່ນຄືຮູບພາບຢູ່ໃນແວ່ນ" ໝາຍຄວາມວ່າສິ່ງທີ່ຖືກສ່ອງແສງ ມັນບໍ່ຄືກັນກັບສິ່ງສ່ອງແສງອ້ອຍຕ້ອຍ.

๔. ຄວາມໝາຍສະແດງມະໂນພາບແມ່ນຫຍັງ?

ຄວາມໝາຍສະແດງມະໂນພາບ ແມ່ນບັນດາຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຕັດແບ່ງຕົວຈິງພາວະວິໄສ ທີ່ໄດ້ສ່ອງແສງເຂົ້າໃນພາສາຕ່າງກັນ ຫຼືເວົ້າວ່າຄວາມໝາຍສະແດງມະໂນພາບ ແມ່ນຄວາມເຂົ້າໃຈຕໍ່ກັບຄວາມໝາຍສະແດງວັດຖຸ ຢູ່ໃນແຕ່ລະພາສາຕ່າງກັນ . ໝາຍຄວາມວ່າ ຄວາມເຂົ້າໃຈກ່ຽວກັບການຕັດແບ່ງ.

ຕົວຢ່າງ: - "ຂາ" ແມ່ນພາກສ່ວນໜຶ່ງຂອງອະໄວຍະວະ

- ແຕ່ໃນພາສາຫວຽດນາມ ເຂົາເຈົ້າໃຊ້ "Chân" ເຊິ່ງໝາຍເອົາຕັ້ງແຕ່ກົກຂາ ລົງໄປຈົນສຸດຮອດຕີນ, ບໍ່ໄດ້ແຍກຂາ-ແຄ່ງ-ຕີນ.

ວັດຖຸ = ແນ່ນອນ ✓

ມາຮອດປັດຈຸບັນນີ້, ໄດ້ເກີດມີ ๔ ທັດສະນະແຕກຕ່າງກັນ ກ່ຽວກັບບັນດາຄວາມໝາຍ ສະແດງມະໂນພາບ ຄື

① ທັດສະນະທີ ๑ ຄວາມໝາຍມສະແດງໂນພາບ ມັນແມ່ນກ້ອນເອກະພາບອັນໜຶ່ງ ເຊິ່ງບໍ່ສາມາດແຍກອອກໄດ້, ມັນມີລັກສະນະບູຮານ.

ຕົວຢ່າງ: ຄຳວ່າ "ແມ່" ບໍ່ສາມາດແຍກອອກໄດ້.

② ທັດສະນະທີ ๔ ຄວາມໝາຍມສະແດງໂນພາບນີ້, ມັນໂຮມເອົາຫຼາຍພາກສ່ວນຄວາມໝາຍປະກອບເຂົ້າ ຫຼືວ່າຄວາມໝາຍມສະແດງໂນພາບ ອາດຕັດແບ່ງເປັນມູນພາກນ້ອຍ ຫຼືແງ່ນ້ອຍໄດ້.

ຕົວຢ່າງ: - "ພໍ່" ຜູ້ຊາຍ, ມີລູກ, ລູກເປັນຜູ້ເອີ້ນ.

- "ອ້າຍ" ຜູ້ຊາຍ, ມີພໍ່ແມ່, ເກີດກ່ອນ, ຜູ້ເກີດຕາມຫຼັງເປັນຜູ້ເອີ້ນ.
- "ຍ່າງ" ໄປດ້ວຍຕີນ, ຍ້າຍບ່ອນ, ໃຊ້ຕີນ, ເທິງໜ້າດິນ ດ້ວຍຈັງຫວະທຳມະດາ.

ພວກເຮົາເຫັນວ່າ ທັດສະນະທີສອງມີເຫດຜົນຫຼາຍກວ່າ ແລະໃນປັດຈຸບັນເຂົາເຈົ້າ ກໍຖືເອົາຕາມທັດສະນະທີສອງນີ້.

III. ປາກົດການຫຼາຍຄວາມໝາຍຂອງສັບ

๑. ປາກົດການຫຼາຍຄວາມໝາຍຂອງສັບແມ່ນຫຍັງ?

ໃນປະມວນວັດຈະນາຂອງແຕ່ລະພາສາ ບາງເທື່ອສັບດຽວກໍມີແຕ່ຄວາມໝາຍສະແດງວັດຖຸດຽວ. ສະນັ້ນ, ມັນກໍມີຄວາມໝາຍສະແດງມະໂນພາບດຽວ.

ຕົວຢ່າງ: ຄວາຍ, ລົດຈັກ, ລີງ } ສະແດງວັດຖຸດຽວ ແລະມະໂນພາບດຽວ.

ນອກນີ້ແລ້ວ, ກໍຍັງມີປາກົດການທີ່ວ່າ ສັບດຽວແຕ່ມີຄວາມໝາຍສະແດງວັດຖຸຫຼາຍຢ່າງ, ມີຄວາມໝາຍສະແດງມະໂນພາບຫຼາຍຢ່າງ.

ຕົວຢ່າງ: - "ແມ່" ① ແມ່ຍິງ, ມີລູກ, ລູກເອີ້ນ.
② ລວມເອົາທັງຜູ້ມີລູກ ແລະບໍ່ມີລູກ(ເພດແມ່)
③ ສະແດງເຖິງຄວາມໃຫຍ່, ມີຈຸດທ້ອນໂຮມ ເຊັ່ນ ແມ່ທັບ, ແມ່ນ້ຳ, ແມ່ເຫຼັກ...

- "ໜ້າ" ① ໜ້າຄົນ, ໜ້າສັດ...
② ກົງກັນຂ້າມກັບຫຼັງ.
③ ລັກສະນະນາມ(ໜ້າປຶ້ມ).
④ ອາວຸດຊະນິດໜຶ່ງ.

- "ເຂົ້າ" ① ອາຫານຊະນິດໜຶ່ງ.
② ກົງກັນຂ້າມກັບອອກ.
③ ກົງກັນຂ້າມກັບບໍ່ເຂົ້າ.

ສະຫຼຸບລວມແລ້ວ, ສັບດຽວແຕ່ມີຫຼາຍຄວາມໝາຍສະແດງວັດຖຸ ແລະຫຼາຍຄວາມໝາຍສະແດງມະໂນພາບ ປາກົດການນີ້ ເອີ້ນວ່າ ປາກົດການຫຼາຍຄວາມໝາຍຂອງສັບ.

๔. ສາຍພົວພັນລະຫວ່າງຄວາມໝາຍຕ່າງກັນຢູ່ໃນສັບດຽວ

ບັນດາຄວາມໝາຍສະແດງວັດຖຸ ແລະຄວາມໝາຍສະແດງມະໂນພາບ ຕ່າງກັນຢູ່ໃນສັບດຽວ ນັ້ນ ບໍ່ແມ່ນວ່າມັນກະແຈກກະຈາຍ , ພວກມັນມີສາຍພົວພັນນຳກັນຄັກແນ່. ໝາຍຄວາມວ່າ ມັນມີຈຸດໃດຈຸດໜຶ່ງຄ້າຍຄືກັນ.

ຕົວຢ່າງ: ເມື່ອເວົ້າເຖິງ "ແມ່" ຈະແມ່ນແມ່ຄົນ, ແມ່ສັດ, ແມ່ທັບ, ແມ່ນ້ຳ... ມັນກໍມີລັກສະນະລວມຢູ່ບ່ອນວ່າ ເມື່ອເວົ້າເຖິງແມ່ແລ້ວ ຕ້ອງມີສິ່ງສືບຕໍ່ທີ່ນ້ອຍລົງໄປອີກ.

IV. ການຜັນປ່ຽນ ແລະວິທີປ່ຽນຄວາມໝາຍຂອງສັບ

๑. ການປ່ຽນຄວາມໝາຍຂອງສັບ

ພາສາມັນກໍແມ່ນປາກົດການໜຶ່ງທີ່ມີການປ່ຽນແປງ ທ່ານ ເລນິນ ເວົ້າວ່າ: "ພາສາມີການປ່ຽນແປງເລື້ອຍໆ". ການປ່ຽນແປງຂອງພາສາແມ່ນບັນຫາທີ່ເຫັນໄດ້ຍາກ ເພາະມັນໃຊ້ເວລາເທິງນານ , ສັບໜຶ່ງເມື່ອມັນຫາກໍກຳເນີດ ມັນອາ ດຈະມີຄວາມໝາຍດຽວ(ສະແດງວັດຖຸ ແລະມະໂນພາບດຽວ) ແຕ່ຕໍ່ໆມາຈຶ່ງມີຫຼາຍຄວາມໝາຍ, ປາກົດການອັນນີ້, ເພີ່ນເອີ້ນວ່າ ການປ່ຽນແປງຄວາມໝາຍຂອງສັບ ຫຼືປາກົດການຫຼາຍຄວາມໝາຍຂອງສັບ.

ຕົວຢ່າງ: "ນົກ" ເມື່ອມັນມັນຫາກໍກຳເນີດອາດມີຄວາມໝາຍດຽວ ແຕ່ຕໍ່ມາຈຶ່ງມີຫຼາຍຄວາມໝາຍ. ໝາຍຄວາມວ່າ "ນົກ" ມີຫຼາຍຊະນິດ.

๒. ວິທີປ່ຽນຄວາມໝາຍຂອງສັບ

ການປ່ຽນຄວາມໝາຍຂອງສັບ, ມັນບໍ່ແມ່ນເລື່ອງບັງເອີນ ບໍ່ແມ່ນເລື່ອງທີ່ຂຶ້ນກັບແນວຄິດຈິດໃຈຂອງໃຜໜຶ່ງ. ການປ່ຽນຄວາມໝາຍມັນກໍມີວິທີປ່ຽນ ເຊັ່ນວ່າ

ก. ວິທີຊ້ອນຄວາມໝາຍ

ວິທີຊ້ອນຄວາມໝາຍ ແມ່ນວິທີປ່ຽນຊື່ເອີ້ນ **N** ຂອງວັດຖຸ **a** ເປັນວັດຖຸ **b, c, d** ມີຊື່ເອີ້ນຄືກັນວ່າ **N**.

ຕົວຢ່າງ: ① **N ເຂັ້ມ**

a ເຂັ້ມຫຍິບ
b ເຂັ້ມໂມງ
c ເຂັ້ມໝຸດ
d ເຂັ້ມທິດ

} **a b c d** ຄືກັນຢູ່ບ່ອນວ່ານ້ອຍ, ຍາວ, ແຫຼມ ໄດ້ຊື່ວ່າ **N**

② **N** ຕົນ

a ຕົນຄົນ
b ຕົນສັດ
c ຕົນໂຕະ
d ຕົນພູ

} **a b c d** ຄືກັນຢູ່ບ່ອນວ່າ ແມ່ນບ່ອນລຸ່ມຂອງວັດຖຸ ແລະ ເຄີຍຕິດແປະກັບໜ້າພຸງໜຶ່ງ ໄດ້ຊື່ວ່າ **N**

ຢູ່ໃນວິທີຊ້ອນຄວາມໝາຍນີ້, ຍັງແບ່ງອອກເປັນ ๔ ຊະນິດ ຄື

❶ ວິທີຊ້ອນຄວາມໝາຍຮູປະທຳ

ວິທີຊ້ອນຄວາມໝາຍຮູປະທຳ ໝາຍຄວາມວ່າວັດຖຸ **a** ກໍຍັງແມ່ນວັດຖຸຕົວຈິງ, ສ່ວນວ່າ **b c d** ກໍແມ່ນວັດຖຸຕົວຈິງ

ຕົວຢ່າງ: ① **N** **ເຂັ້ມ**

a ເຂັ້ມຫຍິບ
b ເຂັ້ມໂມງ
c ເຂັ້ມໝຸດ
d ເຂັ້ມທິດ

} ລ້ວນແຕ່ແມ່ນວັດຖຸຕົວຈິງ(ຮູປະທຳ)

❷ ວິທີຊ້ອນຄວາມໝາຍນາມທຳ

ວິທີຊ້ອນຄວາມໝານາມທຳ ໝາຍຄວາມວ່າວັດຖຸ **a** ກໍຍັງແມ່ນວັດຖຸຕົວຈິງ, ສ່ວນວ່າ **b c d** ແມ່ນນາມທຳ.

ຕົວຢ່າງ: **N** ໄຟ

a ໄຟໄໝ້ໃນຕົວຈິງ
b ໄຟລຸກໃນໃຈ

} ຮູປະທຳ

c ແປວໄຟແຫ່ງການປະຕິວັດ
d ຕົນໄຟ

} ນາມທຳ

❸ ວິທີຊ້ອນຄວາມໝາຍດ້ານພາລະກຳ

ວິທີຊ້ອນຄວາມໝາຍດ້ານພາລະກຳ ໝາຍຄວາມວ່າ **a b c...** ມັນຕ່າງກັນດ້ານຮູບການ ແຕ່ມັນພັດຄືກັນຢູ່ບ່ອນພາລະກຳ(ໜ້າທີ່).

ຕົວຢ່າງ: **N** ທາງ

a ທາງບິນ
b ທາງນ້ຳ
c ທາງອາກາດ

} ມັນຕ່າງກັນດ້ານຮູບການ ແຕ່ມັນຄືກັນດ້ານພາລະກຳ ຄື "ຮັບໃຊ້ການຂົນສົ່ງ".

❹ ຊ້ອນຄວາມໝາຍຍ້ອນການຜັນປ່ຽນສະຕິຮູ້ສຶກ

ຕາມທຳມະດາຄົນເຮົາ ເຄີຍໄດ້ຮັບການກະຕຸກດ້ວຍອິນຊີທັງຫ້າ ຄື ຫູ, ຕາ, ດັ່ງ, ລີ້ນ, ກາຍ.

ຕົວຢ່າງ: ກາຍ **a** ຮ້ອນ
b ໜາວ
c ອຸ່ນ

ຕາ **a** ເຫຼື້ອມ
b ເຢັ້ນຕາ
c ແຈດຕາ

ດັ່ງ **a** ຫອມ
b ເໝັນ
c ຂີ້ວ

ລີ້ນ **a** ຂົມ
b ຫວານ
c ສົ້ມ

ຫູ **a** ສຽງແຈດ
b ສຽງເຢັ້ນ
c ສຽງຫວານ

ຂ. ວິທີເຊື່ອງຄວາມໝາຍ

ແມ່ນຮູບການສະແດງມະໂນພາບໜຶ່ງດ້ວຍມະໂນພາບອື່ນ ຫຼືເວົ້າວ່າແມ່ນການເອົາຊື່ເອີ້ນຂອງວັດຖຸ A ເພື່ອໄປເອີ້ນວັດຖຸ B, C, D... ຍ້ອນວ່າ A, B, C, D... ເຄີຍປາກົດຄູ່ກັນ.

N ແມ່ນຊື່ເອີ້ນຂອງວັດຖຸໃດໜຶ່ງ A ແມ່ນຫ້ອງຮຽນ ເຊິ່ງລວມມີໂຕະ, ຕັ່ງ, ກະດານ...
B ແມ່ນຈຳນວນພົນຂອງຫ້ອງ.

N ແມ່ນຫ້ອງຮຽນປີທີ ๘ A ແມ່ນໂຕະ, ຕັ່ງ, ກະດານ... ໃນຫ້ອງຮຽນນັ້ນ.
B ແມ່ນຈຳນວນພົນຕົວຈິງຂອງຫ້ອງປີທີ ๘ ນັ້ນ.

ຖ້າເວົ້າວ່າ **N** ໄປອອກແຮງງານ, ກໍໝາຍຄວາມວ່າ B ຕ້ອງໄປອອກແຮງງານ, ບໍ່ແມ່ນ A ເອົາ N ເອີ້ນ B ກໍຍ້ອນວ່າ ເຄີຍສົມຄູ່ກັບ A. ຫຼືໃຊ້ໃນບາງກໍລະນີ ເຊັ່ນ

+ ເຜົ່າມົ້ງລາຍ ໃນຕົວຈິງຄົນບໍ່ລາຍ ແຕ່ເຂົາເຈົ້ານຸ່ງເຄື່ອງຫຼາຍສີ.
+ ສາກລະຄອນ ບໍ່ແມ່ນຜ້າກັ້ງ ແຕ່ແມ່ນຕອນໜຶ່ງຂອງລະຄອນ.

ຄ. ວິທີປ່ຽນຄວາມໝາຍຕາມສະພາບແວດລ້ອມ

ພວກເຮົາເຄີຍພົບກໍລະນີນີ້, ຢູ່ຕາມບົດນິພົນວັນນະຄະດີ, ບົດການເມືອງຕ່າງໆ ເຊິ່ງມີບາງນຳ

ປະໂຫຍກກໍຖືກເວົ້າ ຫຼືຂຽນຊ້ຳໄປຊ້ຳມາຫຼາຍເທື່ອ ; ສຸດທ້າຍກໍມີສັບໜຶ່ງໃນປະໂຫຍກນັ້ນຖືກນຳໃຊ້ ແທນປະໂຫຍກນັ້ນ, ແຕ່ກໍຕ້ອງນຳໃຊ້ຢູ່ໃນຂອບເຂດ ແລະສະພາບແວດລ້ອມໃດໜຶ່ງ.

ຕົວຢ່າງ: + ລາວ ແທນໃຫ້ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

+ ຫວຽດນາມ ແທນໃຫ້ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

V. ການຈັດແບ່ງປະເພດຄວາມໝາຍຢູ່ໃນສັບຫຼາຍຄວາມໝາຍ

ຖ້າພວກເຮົາສັງເກດເບິ່ງດ້ານພາລະກຳຂອງສັບ ທີ່ມີຫຼາຍຄວາມໝາຍແລ້ວ, ພວກເຮົາຈະເຫັນວ່າ ສາຍພົວພັນລະຫວ່າງມັນກັບເປົ້າໝາຍ ຢູ່ໃນວິວັດການຮັບຮູ້ຕົວຈິງພາວະວິໄສນັ້ນ ມີຄວາມໝາຍວັດຈະນາຢູ່ ๔ ຢ່າງ ຄື ຄວາມໝາຍພື້ນຖານ ແລະຄວາມໝາຍກຳເນີດໃໝ່.

๑. ຄວາມໝາຍພື້ນຖານ

ຄວາມໝາຍພື້ນຖານ(ຄວາມໝາຍເດີມ) ແມ່ນຄວາມໝາຍເຄົ້າ ຫຼືຄວາມໝາຍທຳອິດຂອງສັບ. ຄວາມໝາຍຂອງສັບມັນບໍ່ສູ້ຂຶ້ນກັບສະພາບແວດລ້ອມ ເພາະມັນເປັນພື້ນຖານໃຫ້ແກ່ການຂະຫຍາຍຂອງບັນດາຄວາມໝາຍກຳເນີດໃໝ່.

ຕົວຢ່າງ: - ຫົວ ຄວາມໝາຍພື້ນຖານແມ່ນ ພາກສ່ວນເທິງສຸດຂອງຮ່າງກາຍຄົນເຮົາ.

- ຕີນ ຄວາມໝາຍພື້ນຖານແມ່ນ ພາກສ່ວນລຸ່ມສຸດຂອງຮ່າງກາຍຄົນເຮົາ.

๔. ຄວາມໝາຍກຳເນີດໃໝ່

ຄວາມໝາຍກຳເນີດໃໝ່ ແມ່ນປະເພດຄວາມໝາຍທີ່ສ້າງຂຶ້ນ ບົນພື້ນຖານຄວາມໝາຍເຄົ້າ ແລະອີງຕາມສະພາບແວດລ້ອມໃໝ່ທີ່ປະກອບມັນຂຶ້ນ ໂດຍອີງໃສ່ຄວາມໝາຍພື້ນຖານ , ພວກເຮົາຈະໄດ້ຄວາມໝາຍກຳເນີດໃໝ່ ເຊິ່ງມັນມີຈຸດໃດຈຸດໜຶ່ງຄ້າຍຄືຄວາມໝາຍພື້ນຖານ.

ຕົວຢ່າງ: - ຕີນ: ຕີນພູ, ຕີນພຽ, ຕີນສິ້ນ, ຕີນ(**n**). ເມື່ອເວົ້າເຖິງ "ຕີນ" ແມ່ນພາກສ່ວນໃຕ້ສຸດຂອງວັດຖຸໃດໜຶ່ງ.

ສະຫຼຸບແລ້ວເຫັນວ່າ: ຄວາມໝາຍທັງສອງຊະນິດຂອງສັບຫຼາຍຄວາມໝາຍນີ້ ມັນມີການພົວພັນກັນຢ່າງສະໜິດແໜ້ນ. ຖ້າຄວາມໝາຍພື້ນຖານປ່ຽນແປງໄວຫຼືຊ້າ ຄວາມໝາຍກຳເນີດໃໝ່ກໍຈະປ່ຽນແປງ, ຄວາມໝາຍພື້ນຖານເປັນບ່ອນອີງຂອງຄວາມໝາຍກຳເນີດໃໝ່.

ຄຳຖາມ

๑. ຄວາມໝາຍຂອງສັບ ລວມມີຈັກພາກສ່ວນ? ແຕ່ລະພາກສ່ວນເປັນແນວໃດ? ຍົກຕົວຢ່າງ.

๔. ເປັນຫຍັງຈຶ່ງເວົ້າວ່າ ຄວາມໝາຍສະແດງວັດຖຸ ແມ່ນການຕັດແບ່ງຕົວຈິງພາວະວິໄສ? ຍົກຕົວຢ່າງ.

๓. ຈົ່ງເວົ້າແຈ້ງວິທີການປ່ຽນຄວາມໝາຍຂອງສັບເປັນ ແນວໃດ? ຍົກຕົວຢ່າງ.

๔. ແນວໃດຈຶ່ງເອີ້ນວ່າ ປາກົດການຫຼາຍຄວາມໝາຍຂອງສັບ? ແຕ່ລະຄວາມໝາຍຢູ່ໃນສັບດຽວນັ້ນ ມີສາຍພົວພັນນຳກັນແນວໃດ? ຍົກຕົວຢ່າງ.

๕. ຈົ່ງຊອກເອົາຄຳສັບທີ່ມີຄວາມໝາຍສະແດງວັດຖຸຫຼາຍຢ່າງ ແລະມີຄວາມໝາຍສະແດງມະໂນພາບຫຼາຍຢ່າງ ໃຫ້ໄດ້ຜູ້ລະ ๑๕ ຄຳ.

ບົດທີ ๔
ລະບົບວັດຈະນາ

ເປົ້າໝາຍຄົ້ນຄວ້າວັດຈະນາວິທະຍາ ມັນກໍແມ່ນຫົວນ່ວຍວັດຈະນາ ແລະມັນຕ້ອງແມ່ນວັດຈະນາຂອງພາສາໃດໜຶ່ງ. ດັ່ງນັ້ນ, ພວກເຮົາຈະໄດ້ເວົ້າເຖິງວັດຈະນາທີ່ນອນໃນລະບົບຂອງມັນ. ເບື້ອງຕົ້ນແມ່ນອີງໃສ່ຄວາມໝາຍຂອງສັບ ເພື່ອແ ຍກມັນອອກເປັນລະບົບນ້ອຍໆລົງໄປອີກ. ຈາກລະບົບເປັນກຸ່ມຄວາມໝາຍ ຫຼືທີ່ງຄວາມໝາຍ.

I. ບັນດາກຸ່ມຄວາມໝາຍ ຫຼືທີ່ງຄວາມໝາຍ

๑. ທີ່ງຄວາມໝາຍແມ່ນຫຍັງ

ທີ່ງຄວາມໝາຍ ແມ່ນການສັງລວມຫົວໜ່ວຍວັດຈະນາ, ຕົ້ນຕໍແມ່ນບັນດາຄຳສັບທີ່ມີຄວາມໝາຍເອກະພາບກັນຢູ່ຈຸດໃດຈຸດໜຶ່ງ. ຢູ່ໃນວັດຈະນາມັນມີຄວາມໝາຍສະແດງວັດຖຸ ແລະຄວາມໝາຍສະແດງມະໂນພາບ. ສະນັ້ນ, ຖ້າເຮົາອີງໃສ່ຈຸດເອກະພາບທາງດ້ານຄວາມໝາຍສະແດງວັດຖຸ ເຮົາຈະເຫັນໄດ້ທີ່ງຄວາມໝາຍສະແດງວັດຖຸ ແລະອີງໃສ່ຈຸດເອກະພາບ ທາງດ້ານຄວາມໝາຍສະແດງມະໂນພາບ ເຮົາກໍຈະໄດ້ທີ່ງຄວາມໝາຍສະແດງມະໂນພາບ.

๑.๑ ທີ່ງຄວາມໝາຍສະແດງວັດຖຸແມ່ນຫຍັງ

ທີ່ງຄວາມໝາຍສະແດງວັດຖຸ ແມ່ນບັນດາສັບທີ່ມີຈຸດເອກະພາບໃດໜຶ່ງ ກ່ຽວກັບດ້ານຄວາມໝາຍສະແດງວັດຖຸ, ປາກົດການ ແລະເຫດການໃດໜຶ່ງ. ທີ່ງຄວາມໝາຍສະແດງວັດຖຸ ແມ່ນການສັງຮວມ ສັບທີ່ມີຄວາມໝາຍສະແດງວັດຖຸຂອງພວກມັນ ມີສາຍພົວພັນກັບຊະນິດວັດຖຸ , ປາກົດການ ແລະເຫດການໃດໜຶ່ງ.

ຕົວຢ່າງ:

- ↳ ກຸ່ມຄວາມໝາຍສະແດງຊື່ເອີ້ນກ່ຽວກັບຄົນ: ມະນຸດ, ສັດປະເສີດ, ນັກປາດ, ກຳມະກອນ, ນັກສຶກສາ, ທ່ານໝໍ, ທະຫານ,...
- ການກະທຳ: ໄປ, ມາ, ນັ່ງ...
- ລັກສະນະ: ດີ, ງາມ, ໂງ່...
- ↳ ກຸ່ມຄວາມໝາຍສະແດງຊື່ເອີ້ນກ່ຽວກັບສັດ: ປາ, ມ້າ, ນົກ...
- ການກະທຳ: ລອຍ, ແລ່ນ, ບິນ...
- ລັກສະນະ: ຂາວ, ລາຍ, ແຫ...
- ↳ ກຸ່ມຄວາມໝາຍສະແດງຊື່ເອີ້ນກ່ຽວກັບພືດ: ຍາງ, ສັກ ໄຜ່...
- ການເຄື່ອນໄຫວ: ປົ່ງ, ຫຼົ່ນ, ຫັກ...
- ລັກສະນະ: ອ່ອນ, ເຫຼືອງ, ສູງ...
- ↳ ກຸ່ມຄວາມໝາຍສະແດງຊື່ເອີ້ນກ່ຽວກັບວັດຖຸທີ່ຄົນເຮົາສ້າງຂຶ້ນ: ໂຕະ, ຕັ່ງ, ເຮືອນ...
- ການກະທຳ: ເຮັດ, ຜະລິດ, ສ້າງ...
- ລັກສະນະ: ໝັ້ນ, ດີ, ງາມ...

๑.๘ ທີ່ງຄວາມໝາຍສະແດງມະໂນພາບ

ທີ່ງຄວາມໝາຍສະແດງມະໂນພາບ ແມ່ນການສັງຮວມບັນດາສັບທີ່ມີຄວາມໝາຍສະແດງມະໂນພາບຂອງພວກມັນ ມີຈຸດໃດຈຸດໜຶ່ງຄ້າຍຄືກັນ ແຕ່ຈຸດຄ້າຍຄືກັນຢູ່ບ່ອນນີ້ ບໍ່ແມ່ນອີງໃສ່ວັດຖຸ ແມ່ນອີງໃສ່ຈຸດຄ້າຍຄືກັນດ້ານຄວາມໝາຍສະແດງມະໂນພາບຂອງພວກມັນ.

ຕົວຢ່າງ:

① ກຸ່ມຄວາມໝາຍສະແດງມະໂນພາບ ກ່ຽວກັບການເຄື່ອນທີ່: ໄປ, ມາ, ບິນ, ແລ່ນ, ເຕັ້ນ, ໂຕນ, ຄານ, ລີ້, ລອຍ, ເລືອ...

② ກຸ່ມຄວາມໝາຍສະແດງມະໂນພາບ ກ່ຽວກັບການກະທົບເຮັດໃຫ້ວັດຖຸອື່ນປ່ຽນຮູບ : ບີບ, ຄັ້ນ, ປັ້ນ, ໜ່ຽງ, ຕົບ, ຟາດ, ປາດ, ຟັກ, ທັບທຸບ, ທຸບ, ຫໍ່...

③ ກຸ່ມຄວາມໝາຍສະແດງມະໂນພາບ ກ່ຽວກັບການກະທົບເຮັດໃຫ້ວັດຖຸໃໝ່: ປຸງແຕ່ງ, ແຕ່ງ, ສ້າງ, ແປງ, ປະດິດ, ຄົ້ນພົບ, ເຫັນ, ເຮັດ...

④ ກຸ່ມຄວາມໝາຍສະແດງມະໂນພາບກ່ຽວກັບການກະທົບເຮັດໃຫ້ວັດຖຸອື່ນເສຍໄປ: ທຳລາຍ ດັບສູນ, ຂ້າ, ປະຫານ, ຍິງ, ຈູດ, ເຜົາ...

๘. ສັງເກດລວມກ່ຽວກັບທີ່ງຄວາມໝາຍສະແດງວັດຖຸ ແລະທີ່ງຄວາມໝາຍສະແດງມະໂນພາບ

✸ ເວລາເຮົາສັງຮວມບັນດາສັບ ໃຫ້ກາຍເປັນທີ່ງຄວາມໝາຍສະແດງວັດຖຸ ຫຼືທີ່ງຄວາມໝາຍສະແດງມະໂນພາບ ພວກ ເຮົາບໍ່ຄວນເອົາຈຳພວກສັບທີ່ໃຊ້ເປັນມູນພາກປະກອບສັນທະກະວີ ຕ້ອງເລືອກເອົາສັບໃດທີ່ມີຄວາມໝາຍແທ້ ຫຼືຄວາມໝາຍສຳຮອງ(ຄວາມໝາຍກຳເນີດໃໝ່).

ຕົວຢ່າງ: ພວກປະຕິການພາກັນ<u>ຫອນເທົ່າ</u> ເພື່ອກອບກູ້ເອົາທ່າປະລາໄຊຂອງພວກມັນ.

✸ ຫາກພວກເຮົາສັງເກດຈະເຫັນວ່າ ທີ່ງ ຄວາມໝາຍສະແດງວັດຖຸ ແລະທີ່ງຄວາມໝາຍສະແດງມະໂນພາບລະຫວ່າງຄົນ, ສັດ, ວັດຖຸ ແລະພືດ ອາດຈະມີກໍລະນີໄຂວ່ກັນ.

ຕົວຢ່າງ: ແຜນອາດສະແດງກ່ຽວກັບແຕ່ລະພາກສ່ວນທີ່ມີໃນຮ່າງກາຍ.



ແຜນວາດສະແດງ ດັ່ງນີ້:



ທີ່ງຄວາມໝາຍສະແດງວັດຖຸຢູ່ໃນແຕ່ລະພາສາກໍບໍ່ຄືກັນ, ສະເພາະໃນພາສາລາວເຮົາ ເມື່ອ ສັງເກດລອມແລ້ວເຫັນວ່າ ການ ໄຂວ່ກັນລະຫວ່າງຄົນກັບສັດ ເວລາໃດກໍໃຫຍ່ກວ່າການໄຂວ່ກັນລະ ຫວ່າງຄົນກັບພືດ.

ຄົນ - ສັດ



ຄົນ - ພືດ



ໃນທິດສະດີພວກເຮົາເຫັນວ່າ ລະບົບຂອງວັດຈະນາ ມີລະບົບນ້ອຍຫຼາຍລະບົບທີ່ປະກອບເຂົ້າ ເປັນລະບົບໃຫຍ່. ອີງໃສ່ມາດຖານນີ້, ພວກເຮົາສາມາດແຍກບັນດາທີ່ງຄວາມໝາຍອອກເປັນລະບົບ ນ້ອຍກວ່ານັ້ນອີກກໍໄດ້.

❶ ຊື່ເອີ້ນກ່ຽວກັບຄົນ

ມະນຸດ, ນັກວິສະວະກອນ, ນັກຮຽນ, ນັກສຶກສາ, ນັກສິລະປະ... ຫາກວ່າພວກເຮົາອີງໃສ່ ມາດຖານ: ເພດ, ໄວອາຍຸ, ຊັ້ນຕຳແໜ່ງ, ວິຊາສະເພາະ ແລະສາຍພົວພັ່ນອ້ອງ. ພວກເຮົາກໍຈະເຫັນ ໄດ້ຫຼາຍລະບົບນ້ອຍຕື່ມອີກ ເຊິ່ງອາດຈະສະຫຼຸບດ້ວຍຕາຕະລາງ ດັ່ງລຸ່ມນີ້:

ເພດ		ໄວອາຍຸ			ຊັ້ນຕຳແໜ່ງ	ວິຊາສະເພາະ	ສາຍພົວພັນພີ່ນ້ອງ
ຊາຍ	ຍິງ	ນ້ອຍ	ໃຫຍ່	ເຖົ້າ			
ບ່າວ	ສາວ	ເດັກ	ໜຸ່ມ	ຕູ້	ປະທານ	ນັກວິສະວະກອນ	ລຸງ-ປ້າ
ອາວ	ອາ	ທາລົກ	ໂສດ	ປູ່	ລັດຖະມົນຕີ	ນັກຄົ້ນຄວ້າ	ອາວ-ອາ
ອ້າຍ	ເອື້ອຍ	ເຍົາວະຊົນ	ກາງ	ຍ່າ	ຫົວໜ້າກົມ	ນັກປາດ	ຍ່າ-ຫຼານ
ບັກ	ອີ່	ອະນຸຊົນ	ສະກັນ		ນາຍພົນ	ແພດ	ພໍ່ເຖົ້າ-ລູກເຂີຍ
ເຂີຍ	ໃພ້				ອຳນວຍການ		ລູກໃພ້-ແມ່ຍ່າ
ຜົວ	ເມຍ						

❷ ມະໂນພາບກ່ຽວກັບການເຄື່ອນທີ່

ການເຄື່ອນທີ່ດ້ວຍຕົນເອງ		ເຮັດໃຫ້ວັດຖຸອື່ນເຄື່ອນທີ່		
ມີທິດ	ບໍ່ມີທິດ	ຈາກເຈົ້າມື	ມາຫາເຈົ້າມື	ອ້ອມເຈົ້າມື
ຂຶ້ນ	ໄປ	ແກວ່ງ	ດຶງ	ປັ່ນ
ລົງ	ມາ	ໂຍນ	ລາກ	ວຽນ
ເຂົ້າ	ແລ່ນ	ຊັດ	ດູດ	ອ້ອມ
ອອກ	ເຕັ້ນ	ຊຸກ	ຖີກ	ກ້ຽວ
		ຍູ້	ແກ່	ຫັນ
		ຟາດ		

ຈາກການສະແດງຂອງຕາຕະລາງທັງສອງຂ້າງເທິງນີ້: ມັນຊີ້ໃຫ້ພວກເຮົາເຫັນວ່າ ແຕ່ລະທິ່ງຄວາມໝາຍນັ້ນ ພວກເຮົາສາມາດຈຳແນກ ຫຼືແຍກມັນອອກເປັນທິ່ງຄວາມໝາຍນ້ອຍໄດ້ຕາມແຕ່ລະເງື່ອນໄຂຂອງມັນ. ພວກເຮົາຕ້ອງເຂົ້າໃຈວ່າ ການຈັດທິ່ງຄວາມໝາຍຂອງສັບ ຕ້ອງແມ່ນຈຳພວກສັບທີ່ມີຄວາມໝາຍເດີມ ຫຼືຄວາມໝາຍກຳເນີດໃໝ່ ບໍ່ແມ່ນຈຳພວກສັບທີ່ນຳໃຊ້ຢູ່ໃນບົດກາບກອນຫຼືສັນທະກະວີ.

I. ສັບພ້ອມຄວາມໝາຍ

๑. ສັບພ້ອມຄວາມໝາຍແມ່ນຫຍັງ?

ພວກເຮົາສາມາດແຍກທົ່ງຄວາມໝາຍຂອງສັບໃດໜຶ່ງ ອອກເປັນຫຼາຍທົ່ງຄວາມໝາຍນ້ອຍໄດ້ ເພາະແຕ່ລະສັບທີ່ນອນຢູ່ໃນທົ່ງຄວາມໝາຍນ້ອຍນັ້ນ ອາດຈະມີສັບໃດສັບໜຶ່ງຄ້າຍຄືກັນ.

ຕົວຢ່າງ: "ທົ່ງຄວາມໝາຍຂອງການເຄື່ອນທີ່" ໂດຍອີງໃສ່ດ້ານຄວາມໝາຍແລ້ວ, ພວກເຮົາ ສາມາດແບ່ງເປັນທົ່ງຄວາມໝາຍທີ່ນ້ອຍກວ່ານັ້ນໄດ້ອີກ ເຊັ່ນ

+ ການເຄື່ອນທີ່ໄກອອກຈາກມື: ແບ່ນ, ຄວ່າງ, ໂຍນ, ທັ່ງ, ຊຸກ, ແກວ່ງ...
+ ການເຄື່ອນທີ່ກັບມາຫາເຈົ້າມື: ແກ່, ດຶງ, ລາກ, ດູດ, ທົກ...
+ ການເຄື່ອນທີ່ອ້ອມເຈົ້າມື: ໝູນ, ວຽນ, ປິ່ນ, ກ້ຽວ, ຫັນ...

ແຕ່ລະທົ່ງຄວາມໝາຍນ້ອຍເຫຼົ່ານີ້ ລ້ວນແຕ່ມີຈຸດໃດຈຸດໜຶ່ງຄ້າຍຄືກັນ ສົມມຸດທັ່ງ-ຍູ້ ກໍລ້ວນ ແລ້ວແຕ່ເຮັດໃຫ້ວັດຖຸໄກອອກຈາກມື ແລະຕິດແທດກັບວັດຖຸ ຫຼືວ່າທົ່ງຄວາມໝາຍລວມຄະນະ ເຊັ່ນ ກຸ່ມ, ກອງ, ໝວດ, ໝູ່, ຝູງ, ຈຸ້ມ, ກຸ່ມ... ກໍລ້ວນແຕ່ມີຈຸດຄືກັນ ເພາະມັນສະແດງເຖິງຈຳນວນ ຫຼາຍທີ່ໂຮມຢູ່ບ່ອນດຽວ.

ລວມຄວາມແລ້ວ, ສັບພ້ອມຄວາມໝາຍແມ່ນບັນດາສັບທີ່ມີຄວາມໝາຍຄ້າຍຄືກັນ ຫຼືແມ່ນວັດ ຖຸເທດການໃດໜຶ່ງ ແຕ່ມີຊື່ເອີ້ນຕ່າງກັນ. ໃນປາກົດການພ້ອມຄວາມໝາຍຂອງສັບນີ້, ເຖິງວ່າຄວາມ ໝາຍຂອງພວກມັນຈະຄ້າຍຄືກັນ ແຕ່ໜ້ອຍທີ່ສຸດຈະໃຊ້ແທນກັນໄດ້, ສ່ວນຫຼາຍແມ່ນໃຊ້ໃນກໍລະນີ ຕ່າງກັນ ເຊັ່ນວ່າ

ຮ້ອນ	ກັບ	ເອົ້າ	ຄ້າຍຄືກັນແຕ່ໃຊ້ຕ່າງກັນ.
ນັກສຶກສາ	"	ນັກຮຽນ	"
ກິນ	"	ຮັບປະທານ	"

๘. ປະເພດສັບພ້ອມຄວາມໝາຍ

ພວກເຮົາໄດ້ແບ່ງປະມວນ ສັບພ້ອມຄວາມໝາຍອອກເປັນ ๘ ປະເພດ ຄື ຄວາມ ໝາຍຄືກັນ ອ້ອຍຕ້ອຍ ແລະຄວາມໝາຍຄືກັນແຕ່ຈຸດໃດຈຸດໜຶ່ງ.

๘.๑ ສັບພ້ອມຄວາມໝາຍຄືກັນອ້ອຍຕ້ອຍ

ບັນດາສັບທີ່ນອນຢູ່ໃນກຸ່ມຄວາມໝາຍຊະນິດນີ້ ແມ່ນຄືກັນອ້ອຍຕ້ອຍ, ຄວາມໝາຍຂອງພວກ ມັນບໍ່ມີດ້ານໃດແຕກຕ່າງກັນ ແລະອາດຈະໃຊ້ແທນກັນໄດ້.

ຕົວຢ່າງ: ຄົນ	=	ມະນຸດ	
	ສັນຕິພາບ	=	ຄວາມສະຫງົບ
	ໂລຫິດ	=	ເລືອດ

๘.๘ ສັບພ້ອມຄວາມໝາຍຕ່າງຄືກັນດ້ານພາວະ

ສ່ວນຫຼາຍແລ້ວ, ສັບທີ່ພ້ອມຄວາມໝາຍບໍ່ຄືກັນອ້ອຍຕ້ອຍ, ມັນອາດຈະຕ່າງກັນທາງດ້ານ ຄວາມໝາຍສະແດງມະໂນພາບ ແລະສະແດງວັດຖຸ ຫຼືພາວະ.

ຕົວຢ່າງ:

① ທັ່ງ-ຍູ້ ທັງສອງລ້ວນແຕ່ເຮັດໃຫ້ວັດຖຸໄຫຈາກເຈົ້າຂອງມື ແຕ່ວ່າ "ທັ່ງ" ໃຊ້ຄວາມແຮງກະທົບໃສ່ວັດຖຸບໍ່ປົກກະຕິ. "ຍູ້" ໃຊ້ຄວາມແຮງກະທົບໃສ່ວັດຖຸບໍ່ປົກກະຕິ.

② ແບ່ນ-ຊັດ ທັງສອງກໍລ້ວນແຕ່ເຮັດໃຫ້ວັດຖຸໄຫຈາກເຈົ້າມືຄືກັນ ແຕວ່າ "ແບ່ນ" ໃຊ້ວັດຖຸທີ່ມີລັກສະນະເປັນກ້ອນ. "ຊັດ" ໃຊ້ວັດຖຸທີ່ມີລັກສະນະຍາວ.

③ ຕາຍ-ເສຍສະຫຼະ ທັງສອງສັບນີ້ລ້ວນແຕ່ມີຄວາມໝາຍອັນດຽວກັນ ແຕ່ຕ່າງກັນທາງດ້ານອາລົມຈິດ.

ສັງເກດແລ້ວເຫັນວ່າ ສັບ ພ້ອມຄວາມໝາຍຕ່າງກັນດ້ານພາວະ(ປະເພດທີ ๔) ມັນຢຶດເອົາປະລິມານຫຼາຍກວ່າໝູ່ຢູ່ໃນພາສາໃດໜຶ່ງ ແລະມັນກໍມີຄຸນຄ່າສູງພໍສົມຄວນ ເພາະມັນເປັນພາຫະນະອັນອຸດົມສົມບູນ ໃຫ້ແກ່ການສະແດງວັດຖຸຕ່າງກັນທີ່ມີຢູ່ໃນຕົວຈິງພາວະວິໄສ.

๓. ກໍລະນີພິເສດ

ສັບນີ້ພ້ອມຄວາມໝາຍກັບສັບນັ້ນ ກໍ ໝາຍຄວາມວ່າ ສັບນີ້ມັນຕ້ອງມີອັນໃດອັນໜຶ່ງຄ້າຍຄືສັບນັ້ນ. ຍ້ອນແນວນັ້ນ, ມັນຈຶ່ງເກີດມີຫຼາຍກໍລະນີ.

๓.๑ ສັບຕ່າງກັນ ແຕ່ເວລາໃຊ້ອາດຈະພ້ອມຄວາມໝາຍນຳກັນ

ກໍລະນີນີ້, ຖ້າພວກເຮົາເບິ່ງໂດຍທົ່ວໄປແລ້ວ, ຈະເຫັນວ່າບັນດາສັບນັ້ນ ຄືບໍ່ພ້ອມຄວາມໝາຍ ເພາະມັນຕ່າງກັນ ເພາະວ່າມັນຕ່າງກັນ ເຊັ່ນວ່າ

ແລ່ນ ກັບ ບັນຊາ / ຊອກຫາ ກັບ ພົວພັນ ເອົາ ... ພວກເຮົາເຫັນວ່າມັນຕ່າງກັນ, ແຕ່ເວລາໃຊ້ມັນອາດຈະພ້ອມຄວາມໝາຍນຳກັນ.

ຕົວຢ່າງ: - ລາວແລ່ນຈັກ ๑๐ ເຄື່ອງຜູ້ດຽວ = ລາວບັນຊາຈັກ ๑๐ ເຄື່ອງຜູ້ດຽວ.
- ລາວແລ່ນບ່ຽງນ້ຳມັນ = ລາວໄປພົວພັນເອົາບ່ຽງນຳມັນ.

๓.๔ ເນື້ອໃນຂອງສັບຕ່າງກັນ ແຕ່ເວລາເວົ້າອາດພ້ອມຄວາມໝາຍນຳກັນ

ໃນເວລາເວົ້ານັ້ນ, ບາງເທື່ອສັບບໍ່ພ້ອມຄວາມໝາຍນຳກັນຈັກໜ້ອຍ ມັນມີເນື້ອຄວາມແຕກຕ່າງກັນ, ແຕ່ເວລາໝູນໃຊ້ຕົວຈິງ ມັນກໍອາດພ້ອມຄວາມໝາຍນຳກັນ.

ຕົວຢ່າງ: ຜົວ ≠ ເມຍ ≠ ຄອບຄົວ
ເອົາຜົວ = ສ້າງຄອບຄົວ
ເອົາເມຍ = ສ້າງຄອບຄົວ
ປະໂຫຍກ "ນ້ອງສາວສ້າງຄອບຄົວແລ້ວບໍ"? = ນ້ອງເອົາຜົວແລ້ວບໍ?

๓.๓ ສັບພ້ອມຄວາມໝາຍໃນກໍລະນີອື່ນ

ນອກຈາກສອງກໍລະນີຂ້າງເທິງນີ້ແລ້ວ, ຍັງປາກົດມີກໍລະນີພ້ອມຄວາມໝາຍໃນຫຼາຍແງ່ອີກ ເຊັ່ນວ່າ

- ໂຈນ = ຄົນເຖື່ອນ = ຄົນໂຫດຮ້າຍ.

- ບາງເທື່ອປະໂຫຍກກໍພ້ອມຄວາມໝາຍນຳກັນ ເຊັ່ນ ປະເທດລາວມີສັນຕິພາບ = ປະເທດລາວບໍ່ມີສົງຄາມ = ປະເທດລາວມີຄວາມສະຫງົບ.

ການພ້ອມຄວາມໝາຍຢູ່ໃນປະໂຫຍກ ຫຼືຄວາມເວົ້ານີ້ແມ່ນພຽງແຕ່ເປັນການຊ່ວຍຄາວເທົ່ານັ້ນ; ສ່ວນຫຼາຍແມ່ນຂຶ້ນກັບຫົວຄິດປະດິດສ້າງຂອງຜູ້ເວົ້າ ຫຼືຜູ້ຂຽນ.

III. ສັບຂັດຄວາມໝາຍ

๑. ແນວໃດຈຶ່ງເອີ້ນວ່າສັບຂັດຄວາມໝາຍ?

ປາກົດການຂັດຄວາມໝາຍຂອງສັບ ແມ່ນປາກົດການກົງກັນຂ້າມກັບປາກົດການພ້ອມຄວາມໝາຍຂອງສັບ ແຕ່ທັງສອງປາກົດການນີ້ ລ້ວນແລ້ວແຕ່ມີພື້ນຖານອັນດຽວກັນ ເພາະວ່າຈະແມ່ນປາກົດການຂັດຄວາມໝາຍ ຫຼືພ້ອມຄວາມໝາຍກໍຕາມ ທັງສອງປາກົດການນີ້ຕ້ອງຂຶ້ນກັບທິ່ງຄວາມໝາຍໃດໜຶ່ງ.

ຕົວຢ່າງ: "ທິ່ງຄວາມໝາຍເຮັດໃຫ້ຍ້າຍບ່ອນ"

ເຄື່ອນເຂົ້າຫາເຈົ້າມື		**ເຄື່ອນອອກຈາກມື**
ດຶງ	><	ຊຸກ
ແກ່	><	ຍູ້
ດູດ	><	ເປົ່າ

ພວກເຮົາເຫັນວ່າ ກຸ່ມຄວາມໝາຍທັງສອງຢ່າງນີ້ແມ່ນຂັດກັນ, ແຕ່ພວກມັນພັດເອກະພາບທາງດ້ານຄວາມໝາຍ ແທ່ງການເຄື່ອນທີ່.

ອີງໃສ່ຄວາມໝາຍເຮັດໃຫ້ເຄື່ອນທີ່ແລະບໍ່ເຄື່ອນທີ່. ພວກເຮົາຈະໄດ້ກຸ່ມຄວາມໝາຍນ້ອຍສອງກຸ່ມທີ່ຂັດກັນ.

ຕົວຢ່າງ: ແລ່ນ, ເຕັ້ນ, ໂຕນ, ໄປ >< ຢຸດ, ຢືນ, ເຊົາ.

ພວກເຮົາອາດຈະຖືເອົາຈຸດຄືກັນຂອງບັນດາສັບ ເພື່ອເປັນພື້ນຖານອັນໜຶ່ງ ຈາກນັ້ນພວກເຮົາກໍຈະອີງໃສ່ຈຸດຄືກັນຂອງພວກມັນນັ້ນ ເພື່ອແຍກມັນອອກເປັນສອງທິ່ງຄວາມໝາຍທີ່ຂັດກັນ, ສ່ວນປາກົດການພ້ອມຄວາມໝາຍຂອງສັບນັ້ນ; ພວກເຮົາຖືເອົາຈຸດຄືກັນເປັນພື້ນຖານສັງລວມ, ຖ້າບໍ່ມີຈຸດຄືກັນແລ້ວ ແມ່ນບໍ່ອາດຈະມີປາກົດການພ້ອມຄວາມໝາຍໄດ້ ເຊັ່ນ

ອີງໃສ່ຈຸດຄືກັນ
- ທ້ອນເຂົ້າ → ພ້ອມຄວາມໝາຍ
- ແຍກອອກ → ຂັດຄວາມໝາຍ

ຕົວຢ່າງ: ກວ້າງ ແລະສັ້ນມັນນອນຢູ່ໃນທິ່ງຄວາມໝາຍຕ່າງກັນ.

ກວ້າງ >< ແຄບ → ບໍລິມາດ

ຍາວ >< ສັ້ນ → ລະດັບຄວາມຍາວ

ໃຫຍ່ >< ນ້ອຍ ⟶ ລະດັບຄວາມໃຫຍ່

ຫຼາຍ >< ໜ້ອຍ ⟶ ປະລິມານ

ສະນັ້ນ, ພວກເຮົາເຫັນວ່າປາກົດການຂັດຄວາມໝາຍ ກໍຄືປາກົດການພ້ອມຄວາມໝາຍ ເພາະທັງສອງປາກົດການນີ້, ລ້ວນແຕ່ໄດ້ມາຈາກຫຼາຍສັບ ພຽງແຕ່ສັບເຫຼົ່ານັ້ນມີມາດຖານກົງກັນ.

ຕົວຢ່າງ: - ສັບທີ່ມີລັກສະນະດ້ານມັນສະໝອງ

ກ້າວໜ້າ >< ຫຼ້າຫຼັງ

ສະຫຼາດ, ຫຼັກ >< ໂງ່, ຈ້ຳ

ແຫຼມ, ລ່ຽມ >< ອ່ອນ, ປຶກ

- ສັບທີ່ມີລັກສະນະຈິດຕະສາດ

ຄ່ຽມຄົມ, ດີ >< ກະລີກກະລົນ, ຮ້າຍ

ນິ້ມນວນ >< ແຂງກະດ້າງ

- ສັບທີ່ມີລັກສະນະພາວະ

ມ່ວນຊື່ນ, ປິຕິ >< ເໜງົາ, ໂສກເສົ້າ

ພາກພູມໃຈ >< ອຸກອັ່ງ

ຈາກຕົວຢ່າງຂ້າງເທິງນີ້, ພວກເຮົາສາມາດເວົ້າໄດ້ວ່າ ປາກົດການຂັດຄວາມໝາຍຂອງສັບ ແມ່ນປາກົດການທີ່ໄດ້ມາຈາກຈຸດລອມຄວາມໝາຍໃດໜຶ່ງ ຫຼືມາດຖານລອມໃດໜຶ່ງ ເຊິ່ງໄດ້ແບ່ງ ອອກເປັນ ८ ພາກສ່ວນ ທີ່ມີຄວາມໝາຍກົງກັນຂ້າມກັນ.

८. ປະເພດສັບຂັດຄວາມໝາຍ

ອີງໃສ່ມາດຖານລອມ ແລະການຈັດແບ່ງມາດຖານນັ້ນ, ພວກເຮົາອາດແບ່ງສັບຂັດຄວາມໝາຍອອກເປັນ ८ ຊະນິດ ຄື ສັບຂັດຄວາມໝາຍເດັດຖານ ແລະສັບຂັດຄວາມໝາຍທຽບຖານ.

८.१ ສັບຂັດຄວາມໝາຍເດັດຖານ

ສັບຂັດຄວາມໝາຍເດັດຖານ ແມ່ນຈຳພວກສັບທີ່ມີຄວາມໝາຍຊີ້ເຖິງສິ່ງວັດຖຸ ຫຼື ລັກສະນະໃດໜຶ່ງ ເຊິ່ງມີຄວາມໝາຍຂັດກັນຢ່າງແທ້ຈິງ(ເດັດຖານ) ບໍ່ມີບ່ອນໃດຄືກັນ, ມີແນວໜຶ່ງແລ້ວບໍ່ມີແນວອື່ນ.

ຕົວຢ່າງ: ໄຂ >< ອັດ

ໄປ >< ມາ

ຕາຍ >< ມີຊີວິດ

ໄຫ້ >< ຫົວ

ມ່ວນ >< ໂສກເສົ້າ

ງາມ >< ຂີ້ຮ້າຍ

๔.๔ ສັບຂັດຄວາມໝາຍທຽບຖານ

ສັບຂັດຄວາມໝາຍທຽບຖານ ໄດ້ແກ່ຈຳພວກສັບທີ່ຂັດຄວາມໝາຍກັນຢູ່ໃນລະດັບປຽບທຽບໃດໜຶ່ງ. ເຂົາເຈົ້າໄດ້ແບ່ງສັບຂັດຄວາມໝາຍທຽບຖານ ອອກເປັນ ๔ ຊະນິດ ຄື

❖ ອີງຕາມທິດທີ່ສົມທຽບ

ຂວາ >< ຊ້າຍ

ໃຕ້ >< ເໜືອ

ເທິງ >< ລຸ່ມ

ໄປ >< ມາ

❖ ອີງຕາມຄວາມໝາຍທີ່ຊີ້ລະດັບຢູ່ໃນມາດຖານດຽວ

ສັ້ນ >< ຍາວ

ກວ້າງ >< ແຄບ

ໃຫຍ່ >< ນ້ອຍ

ສູງ >< ຕ່ຳ

๑. ສັບຂັດຄວາມໝາຍ ແລະປາກົດການໜາຍຄວາມໝາຍ

ສັບໜຶ່ງອາດມີຫຼາຍຄວາມໝາຍ ໃນສັບຫຼາຍຄວາມໝາຍນັ້ນ ມັນອາດມີຫຼາຍສັບທີ່ມີຄວາມໝາຍຂັດກັນ.

ຕົວຢ່າງ:

ຊົ່ວ >< ດີ

ງາມ >< ຂີ້ຮ້າຍ

ສູງ >< ຕ່ຳ

ສະຫຼຸບ: ສ່ວນຫຼາຍສັບຂັດຄວາມໝາຍນີ້, ມັນມີແຕ່ຢູ່ໃນຄຳຄຸນນາມ ແລະຄຳກຳມະ ແຕ່ຫາກບໍ່ຫຼາຍ ແລະມີກໍແມ່ນໃຊ້ໃນລະດັບປຽບທຽບ.

ຕົວຢ່າງ:

ຊ້າງ >< ມົດ

ຕີນຊ້າງ >< ປາກນົກ

ເງືອກ >< ປາຊິວ

IV. ສັບພ້ອມສຽງ

ສັບພ້ອມສຽງ ແມ່ນບັນດາສັບທີ່ມີສຽງຄືກັນ, ໝາຍຄວາມວ່າ ມັນຄືກັນທາງດ້ານຮູບການ, ແຕ່ອາດຈະຕ່າງກັນທາງດ້ານຄວາມໝາຍໄວຍາກອນ.

ຕົວຢ່າງ:

ເຂົ້າ
- ນ. ເຂົ້າສຸກ, ເຂົ້າສານ, ເຂົ້າເປືອກ...
- ກ. ກົງກັນຂ້າມກັບອອກ.
- ຄ. ກົງກັນຂ້າມກັບປູ້.

ຫົວ
- ນ. ກົງກັນຂ້າມກັບຕີນ.
- ກ. ກົງກັນຂ້າມກັບໄຫ້.
- ລ. ຜັກບົ່ວ ง ຫົວ.

ມັນ
- ນ. ເຜືອກມັນ.
- ທ. ແທນນາມບຸລຸດທີ ๓ .
- ຄ. ໝູມັນ

✍ **ໝາຍບອກ:**

❶ ນ.ຄຳນາມ

❷ ກ. ຄຳກິຳມະ

❸ ຄ. ຄຳຄຸນນາມ

❹ ລ. ຄຳລັກສະນະນາມ

❺ ທ. ຄຳແທນນາມບອກບຸລຸດ

ຄຳຖາມ

๑. ແນວໃດຈຶ່ງເອີ້ນວ່າ ທົ່ງຄວາມໝາຍ? ຢູ່ໃນຄວາມໝາຍຂອງສັບ ລວມມີຄວາມໝາຍຊະນິດໃດແດ່ ແຕ່ລະຊະນິດເປັນແນວໃດ?

๘. ແນວໃດຈຶ່ງເອີ້ນວ່າ ສັບພ້ອມຄວາມໝາຍ, ມີຈັກປະເພດ? ປະເພດໃດແດ່?

๓. ແນວໃດຈຶ່ງເອີ້ນວ່າ ປາກົດການຂັດຄວາມໝາຍຂອງສັບ, ມີຈັກປະເພດ, ແຕ່ລະປະເພດເປັນແນວໃດ? ຍົກຕົວຢ່າງ.

๔. ແນວໃດຈຶ່ງເອີ້ນວ່າປາກົດການຂັດຄວາມໝາຍ ແລະຫຼາຍຄວາມໝາຍຂອງສັບ? ຍົກຕົວຢ່າງ

๕. ຈົ່ງຊອກຫາສັບພ້ອມສຽງໃນພາສາລາວ ໃຫ້ໄດ້ ๑๐ ສັບ, ພ້ອມດ້ວຍຄຳອະທິບາຍ.

ບົດທີ ๕
ການແບ່ງວັດຈະນາຕາມເຂດພູມສາດ

I. ວັດຈະນາທ້ອງຖິ່ນ

๑. ພາສາແຫ່ງຊາດ ແລະຄວາມເອົ້າທ້ອງຖິ່ນ

ເວົ້າເຖິງພາສາ ມັນອາດຈະແມ່ນພາສາລວມໃຫ້ແກ່ທຸກຊັ້ນຄົນໃນປະເທດໜຶ່ງໆ. ມັນແມ່ນພາສາເອກະພາບທີ່ກຳນົດນຳໃຊ້ໃນປຸະເທດໃດໜຶ່ງ; ແຕ່ເມື່ອເບິ່ງໃຫ້ລະອຽດແລ້ວ, ພວກເຮົາກໍເຫັນວ່າ ພາສາ ຂອງແຕ່ລະຊາດນັ້ນມັນຍັງມີບັນຫາທີ່ສັບສົນຢູ່ ເພາະຍັງມີຫຼາຍບັນຫາທີ່ແຕກຕ່າງກັນ ໂດຍອີງຕາມທີ່ຕັ້ງເຂດພູມສາດ. ບ່ອນແຕກຕ່າງກັນນີ້, ເພິ່ນເອີ້ນວ່າ ພາສາທ້ອງຖິ່ນ. ບັນຫານີ້ມັນລວມເອົາທັງອັກຂະຫຼະ, ວັດຈະນາ ແລະໄວຍາກອນ. ຈຸດຕ່າງກັນລະຫວ່າງພາສາທ້ອງຖິ່ນ ແລະພາສາແຫ່ງຊາດ ບາງ ເທື່ອນັ້ນໄກກັນທີ່ສຸດ. ໝາຍຄວາມວ່າ ຄົນ ທ້ອງຖິ່ນນີ້ເວົ້າ, ແຕ່ຄົນທ້ອງຖິ່ນອື່ນບໍ່ເຂົ້າໃຈ, ບາງເທື່ອກໍຕ່າງກັນແຕ່ຈຸດໃດຈຸດໜຶ່ງ ແລະບາງຈຸດກໍຄືກັນ.

๘. ວັດຈະນາທ້ອງຖິ່ນ

ມັນປະກອບດ້ວຍຫົວໜ່ວຍວັດຈະນາ(ສັບສຳນວນ) ລວມທັງຮູບການສະແດງດ້ານຄວາມໝາຍ ທີ່ໄດ້ນຳໃຊ້ຢ່າງກວ້າງຂວາງ ໃນຂົງເຂດພູມສາດໃດໜຶ່ງທີ່ແນ່ນອນ. ໃນວັດຈະນາທ້ອງຖິ່ນເຄີຍມີຫຼາຍກໍລະນີ ເຊັ່ນ

๘.๑ ສັບ ແລະຄວາມໝາຍຂອງສັບ ສະເພາະທ້ອງຖິ່ນໃດໜຶ່ງ

ສັບປະເພດນີ້ ແມ່ນມີຢູ່ຕາມແຕ່ລະທ້ອງຖິ່ນໃດໜຶ່ງເທົ່ານັ້ນ, ທ້ອງຖິ່ນອື່ນບໍ່ມີ ໝາຍ ຄວາມວ່າ ທ້ອງຖິ່ນນີ້ເວົ້າ ແລະເຂົ້າໃຈ, ແຕ່ທ້ອງຖິ່ນອື່ນພັດບໍ່ເຂົ້າໃຈເລີຍ.

ຕົວຢ່າງ: ໝາກນອດ, ໝາກແຫ້ວ, ໝາກເຂົ່າງົ່ວ, ໝາກຫູ້, ນ້ຳໝອກຂຸ້ນ — ມີຢູ່ທາງພາກເໜືອ, ພາກໃຕ້ບໍ່ມີ ແລະບໍ່ຮູ້ວ່າມັນເປັນແນວໃດ

๘.๘ ຄວາມໝາຍຄືກັນ ແຕ່ຮູບການອັກຂະຫຼະຕ່າງກັນ

ປາກົດການນີ້ ແມ່ນກໍລະນີສິ່ງທີ່ຖືກສະແດງອັນດຽວກັນ, ແຕ່ສິ່ງສະແດງຕ່າງກັນ ຫຼືເວົ້າວ່າ ວັດຖຸຕົວຈິງແມ່ນອັນດຽວກັນ ແຕ່ໃຫ້ຊື່ເອີ້ນຕ່າງກັນ.

ຕົວຢ່າງ:	**ພາກເໜືອ**	**ພາກໃຕ້**
	- ໝາກພຸກ	- ໝາກສົ້ມໂອ
	- ໝາກເຜັດ, ໝາກເອືອດ	- ໝາກພິກ
	- ຈາບ	- ຫໍ່ສົ້ມ
	- ຊອຍ	- ຄົກ

- ໝາກຝັກຄຳ	- ໝາກອຶ
- ອັນເດີ	- ແມ່ນຫຍັງ
- ເລົາ	- ກິນ
- ເສົາ	- ມັນ, ລາວ(ຄຳແທນນາມ ບຸລຸດທີ ๓)
- ໂຕສຸມ	- ເປັດ

๔.๓ ຮູບການອັກຂະຫວຍຄືກັນ ແຕ່ເນື້ອໃນຄວາມໝາຍຕ່າງກັນ

ປາກົດການນີ້ ແມ່ນກໍລະນີສິ່ງສະແດງແມ່ນອັນດຽວກັນ ແຕ່ສິ່ງທີ່ຖືກສະແດງຕ່າງກັນ ຫຼື ເວົ້າ ວ່າ ແຕ່ລະທ້ອງຖິ່ນເວົ້າຄືກັນ, ແຕ່ຄວາມໝາຍຕ່າງກັນ.

ຕົວຢ່າງ: **ພາກເໜືອ**	**ພາກໃຕ້**
- ໝາກຄ້ໍ(ໝາກຕົ້ມກິນກັບເຂົ້າ)	- ໝາກຄ້ໍ(ສຳລັບກິນສົ້ມ)
- ໝາກຈອງ(ບໍ່ຕ້ອງແຊ່ນ້ຳກ່ອນກິນ)	- ໝາກຈອງ(ແຊ່ນ້ຳກ່ອນການປຸງອາຫານ)
- ຜັກກະຫຼ່ຳ	- ຜັກຊູ

๔.๔ ຮູບການອັກຂະຫວຍຄືກັນ ແລະຄວາມໝາຍຄືກັນ

ກໍລະນີນີ້ ແມ່ນສິ່ງສະແດງແມ່ນອັນດຽວກັນ ແລະສິ່ງຖືກສະແດງກໍແມ່ນອັນດຽວກັນ. ໝາຍ ຄວາມວ່າ ແຕ່ລະທ້ອງຖິ່ນເວົ້າຄືກັນ ແລະຄວາມໝາຍກໍຄືກັນ.

ຕົວຢ່າງ: **ພາກເໜືອ**	**ພາກໃຕ້**
- ພີ່ອ້າຍ	- ພີ່ອ້າຍ
- ອ້າຍເຂີຍ	- ອ້າຍເຂີຍ
- ແມ່ນ້ຳ	- ແມ່ນ້ຳ

๕. ສາຍພົວພັນລະຫວ່າງວັດຈະນາທ້ອງຖິ່ນ ແລະວັດຈະນາແຫ່ງຊາດ

ວັດຈະນາແຫ່ງຊາດ ແມ່ນຫົວໜ່ວຍວັດຈະນາທີ່ທຸກຊັ້ນຄົນໃນຊາດນັ້ນ ລ້ວ ນແຕ່ໄດ້ໝູນໃຊ້ ແລ້ວເຂົ້າໃຈຮັບຮູ້, ແມ່ນຫົວໜ່ວຍທີ່ໄດ້ໝູນໃຊ້ເຂົ້າໃນວັນນະຄະດີ, ການເມືອງ, ວາລະສານ ຕະ ຫຼອດເຖິງຫຼັກສູດການສຶກສາ, ການຮ່ຳຮຽນ. ໝາຍຄວາມວ່າ ຄວາມເວົ້າທີ່ໃຊ້ເປັນທາງການໃນຊາດ ນັ້ນ.

ວັດຈະນາທ້ອງຖິ່ນ ແມ່ນບັນດາປະມວນສັບ ເຊິ່ງທ້ອງຖິ່ນໃດໜຶ່ງເຂົ້າໃຈກັນ ແລະນຳໃຊ້ເທົ່າ ນັ້ນ. ວັດຈະນາທ້ອງຖິ່ນ ແລະວັດຈະນາແຫ່ງຊາດ ມັນ ກໍມີອັນແຕກຕ່າງກັນແທ້, ແຕ່ພວກມັນກໍມີ ສາຍພົວພັນຢ່າງສະໜິດແໜ້ນນຳກັນ, ວັດຈະນາທ້ອງຖິ່ນມີຄຸນຄ່າ ມັນ ກໍຈະເຮັດໃຫ້ວັດຈະນາແຫ່ງ ຊາດອຸດົມສົມບູນຂຶ້ນ. ວັດຈະນາແຫ່ງຊາດກໍມີຜົນສະທ້ອນຕໍ່ວັດຈະນາທ້ອງຖິ່ນ ໂດຍສະເພາະແມ່ນ ຈຳພວກສັບການເມືອງ, ເສດຖະກິດ, ວິທະຍາສາດ, ວັດທະນະທຳ ເຊິ່ງແຕ່ລະທ້ອງຖິ່ນໄດ້ນຳເອົາ ວັດຈະນາແຫ່ງຊາດໄປນຳໃຊ້. ສະນັ້ນ, ພວກເຮົາຈຶ່ງເວົ້າໄດ້ວ່າ ວັດຈະ ນາທ້ອງຖິ່ນ ແລະວັດຈະນາ ແຫ່ງຊາດ ມັນມີສາຍພົວພັນແບບສົ່ງຜົນສະທ້ອນເຊິ່ງກັນແລະກັນ.

II. ຄວາມເວົ້າສະເພາະຂອງຊັ້ນຄົນຢູ່ໃນສັງຄົມ

๑. ຄວາມເວົ້າສະເພາະຂອງຊັ້ນຄົນຢູ່ໃນສັງຄົມແມ່ນຫຍັງ

ໃນສັງຄົມມີຫຼາຍຊັ້ນຄົນ, ແຕ່ລະຊັ້ນຄົນນັ້ນອາດຈະແຕກຕ່າງກັນທາງດ້ານວິຊາຊີບ, ການເຊື່ອຖືສາສະໜາ ຫຼືບັນຫາອື່ນໆ. ອັນນີ້ມັນກໍເປັນຜົນສະທ້ອນເຖິງພາສາຫຼາຍສົມຄວນ ໂດຍສະເພາະແມ່ນປະເພດຄຳເວົ້າທີ່ໃຊ້ສະເພາະແຕ່ກຸ່ມຄົນໃດໜຶ່ງ. ຄວາມເວົ້າສະເພາະຂອງຊົນຊັ້ນຄົນຢູ່ໃນສັງຄົມ ແມ່ນຢູ່ໃນວົງແຄບ, ແຕ່ມັນກໍໄດ້ໝູນໃຊ້ຫຼັກການລວມຂອງພາສາແຫ່ງຊາດຄືກັນ.

ຕົວຢ່າງ: **ຄວາມເວົ້າທ້ອງຖິ່ນ**	**ຄວາມເວົ້າຂອງບຸກຄົນ**
- ກິນເຂົ້າເຊົ້າ	- ສະເຫວີຍພະກະຍາທານເຊົ້າ/ສັນຈັງຫັນ
- ໃຫ້	- ພະລາຊະທານ/ທານ
- ໄປ	- ສະເດັດ
- ຍ່າງ	- ສະເດັດພະລາຊະດຳເນີນ
- ເຈັບ	- ປະຊວນ
- ໄຫ້	- ກັນແສງ

๘. ປະເພດຄຳເວົ້າສະເພາະຂອງຊັ້ນຄົນຢູ່ໃນສັງຄົມ

๘.๑ ປະເພດຄຳເວົ້າສະເພາະຂອງຊັ້ນຄົນຢູ່ໃນສັງຄົມ ໃດໜຶ່ງ

❖ ຄວາມເວົ້າຂອງພວກເຈົ້າຊີວິດ ຫຼືເຈົ້າຂຸນມຸນນາຍ: ລາຊະກຸມານ, ອັກຄະມະເທສີ, ມະເທສີ, ພະມານດາ, ພະລາຊະວັງ, ຂ້າພະບາດ, ພະໂອດ, ພິໂລດ, ພະກັນ, ພະເນດ, ສະຫວັນນະຄົດ...

❖ ຄວາມເວົ້າຂອງສາສະໜາໃດໜຶ່ງ: ທະຫານ, ຕຳຫຼວດ, ນັກສຶກສາ, ປັນຍາຊົນ, ແພດ, ວະສະວະກອນ...

❖ ຄວາມເວົ້າກ່ຽວກັບການຫຼິ້ນຕ່າງໆ: ຫຼິ້ນບານ, ຫຼິ້ນໄພ້, ຫຼິ້ນໝາກດາມ, ຫຼິ້ນໝາກລີ້...

๘.๘ ຄຳເວົ້າທີ່ມີລັກສະນະປິດລັບ

ຄວາມເວົ້າປະເພດນີ້ ແມ່ນໄດ້ແກ່ຄວາມເວົ້າຂອງພວກຄົນທີ່ບໍ່ດີ, ພວກເຂົາໄດ້ກຳນົດສັບຂຶ້ນໃຊ້ພາຍໃນກຸ່ມຂອງພວກເຂົາ, ພວກເຂົາອາດຈະໃຊ້ວິທີເຊື່ອງຄວາມໝາຍ ຫຼື ຊ້ອນຄວາມໝາຍ ໂດຍທີ່ພວກເຂົາກຳນົດຂຶ້ນເອງແບບບໍ່ໃຫ້ຜູ້ອື່ນເຂົ້າໃຈນຳ ເຊັ່ນ ຄວາມ ເວົ້າຂອງພວກນັກປຸ້ນ, ນັກເລງ ຫຼືອັນທະພານຕ່າງໆ.

III. ສັບວິຊາການ

๑. ສັບວິຊາການແມ່ນຫຍັງ

ສັບວິຊາການ ແມ່ນປະມວນຄຳສັບ ຫຼືອະລິຄົງຕົວ ເຊິ່ງມີໜ້າທີ່ສະແດງມະໂນພາບຂອງຂະແໜງວິທະຍາສາດໃດໜຶ່ງສະເພາະ ເຊັ່ນ ສັບວິຊາການກ່ຽວກັບການເມືອງ, ຄະນິດ, ຟີສິກ, ເຄມີ, ຊີວະ, ພູມສາດ, ຈິດຕະສາດ, ວັນນະຄະດີ... ແຕ່ລະຂະແໜງລ້ວນແລ້ວແຕ່ມີສັບສະເພາະຂອງຕົນເອງ.

ຕົວຢ່າງ:

★ ພາສາສາດ: ອັກຂະຫຼະວິທະຍາ, ວັດຈະນາວິທະຍາ, ໄວຍາກອນວິທະຍາ, ສັນທະສິນ ສາດ, ສຳນວນ...

★ ເສດຖະສາດການຜະລິດ: ການພົວພັນການຜະລິດ, ອຸປະກອນການຜະລິດ, ຜະລິດຕະ ພັນ, ສະມັດຖະພາບຂອງງານ, ທຶນຄົງທີ່, ທຶນເຄື່ອນທີ່...

ບັນຫາສຳຄັນພວກເຮົາຕ້ອງເຂົ້າໃຈວ່າ ສັບວິຊາການບໍ່ແມ່ນສັບຊະນິດພິເສດ ເພາະວ່າມັນກໍ ໄດ້ປະຕິບັດຕາມຫຼັກການລວມຂອງພາສາແຫ່ງຊາດຄືກັນ.

๘. ຈຸດພິເສດສັບວິຊາການ

๘.๑ ລັກສະນະຊັດເຈນທາງດ້ານຄວາມໝາຍ

ເພື່ອຮັບປະກັນລັກສະນະຊັດເຈນທາງດ້ານຄວາມໝາຍນີ້ ສັບວິຊາການສັບໜຶ່ງຈະເທົ່າກັບມະ ໂນພາບໜຶ່ງ ໝາຍຄວາມວ່າ ສັບໜຶ່ງກໍຊີ້ເຖິງວັດຖຸໜຶ່ງສະເພາະ, ມີຄວາມໝາຍດຽວ.

ຕົວຢ່າງ: ໂລຊິກ, ອຳແປ, ອົກຊີແຊນ...

๘.๘ ລັກສະນະລະບົບ

ວິທະຍາສາດທຸກຂະແໜງ ລ້ວນ ແລ້ວແຕ່ເປັນລະບົບ. ສະນັ້ນ, ການສ້າງສັບວິຊາການກໍຕ້ອງ ໃຫ້ມີລັກສະນະລະບົບນັບທັ້ງເນື້ອໃນ ແລະຮູບການ. ພວກເຮົາອາດເວົ້າວ່າ ລັກສະນະລະບົບຂອງ ສັບວິຊາການໃນວິທະຍາສາດ ແມ່ນຍ້ອນລະບົບຂອງແຕ່ລະແໜງວິທະຍາສາດນັ້ນຕັດສິນ.

ຕົວຢ່າງ:

- ❁ ເວົ້າເຖິງໄຟຟ້າ: ໄຟຟ້າສະຫຼັບ, ໄຟຟ້າກົງ, ໄຟຟ້າແຮງສູງ...
- ❁ ເວົ້າເຖິງສະຫຼະ: ສະຫຼະເຄົ້າ, ສະຫຼະປະສົມ, ສະຫຼະສັ້ນ, ສະຫຼະຍາວ, ສະຫຼະພິເສດ...

๘.๓ ລັກສະນະສາກົນ

ໃນປັດຈຸບັນນີ້, ຂະແໜງວິທະຍາສາດທັ້ງຫຼາຍ ໄດ້ຜ່ານຂ້າມຊາຍແດນລະຫວ່າງຊາດ ກ້າວ ຂຶ້ນສູ່ຂອບເຂດສາກົນ ກາຍເປັນຜະລິດຕະພັນລວມຂອງມະນຸດ. ສະນັ້ນ, ສັບວິຊາການຕ້ອງມີລັກ ສະນະສາກົນ ເຊິ່ງມັນສະແດງອອກ ๘ ດ້ານ ຄື

✷ ດ້ານເນື້ອໃນ: ມະໂນພາບກ່ຽວກັບວິທະຍາສາດ ແມ່ນລ້ວນແລ້ວເຂົ້າໃຈໃນທົ່ວໂລກ ເຊັ່ນ ວ່າມະໂນພາບກ່ຽວກັບຟີສິກ, ເຄມີ, ໂມເລກຸນ... ແຕ່ລະປະເທດລ້ວນແລ້ແຕ່ເຂົ້າໃຈ.

✷ ດ້ານຮູບການ: ເວົ້າເຖິງຮູບການຂອງສັບວິຊາການ ແມ່ນຕ້ອງໄດ້ຮັກສາລັກສະນະສ່ຽງ ລວມໃຫ້ແກ່ທຸກໆພາສາ ແຕ່ກໍບໍ່ອາດຄືກັນອ້ອຍຕ້ອຍ ເພາະຂຶ້ນກັບຈຸດພິເສດຂອງລະບົບອັກຂະຫຼະ ແຕ່ລະພາສາ ເຊັ່ນວ່າ

- ອົກຊີແຊນ ເຮົາໃຊ້ ອົກຊີ
- ກະລໍຣີ " ກະລໍ
- ຮີໂດຣແຊນ " ຮີໂດ

๔.๔ ລັກສະນະພິເສດຂອງສັບວິຊາການ

ໃນຕົວຈິງສັບວິຊາການ ມັນກໍມີລັກສະນະເດັ່ນຊັດຂອງມັນອີກ ๔ ດ້ານ ຄື ລັກສະນະ ຊາດ ແລະລັກສະນະມະຫາຊົນ.

★ ລັກສະນະຊາດ: ວິທະຍາສາດໄດ້ກາຍເປັນມໍລະດົກຂອງຊາວຜູ້ອອກແຮງງານໃນທົ່ວໂລກ ກໍຕາມ, ແຕ່ຊາວອອກແຮງງານນັ້ນມັນອາດຈະນອນຢູ່ໃນຊາດໃດໜຶ່ງແນ່ນອນ. ສະນັ້ນ, ສັບທີ່ເຂົ້າ ເຈົ້າແຕ່ງຂຶ້ນຕ້ອງຮັກສາລັກສະນະຊາດ ໝາຍ ຄວາມວ່າ ຕ້ອງສ້າງຂຶ້ນບົນພື້ນຖານຂອງພາສາຊາດ ຕົນ.

★ ລັກສະນະມະຫາຊົນ: ການປະດິດແຕ່ງສັບວິຊາການໃດໜຶ່ງຂຶ້ນ ຕ້ອງ ຄຳນຶງວ່າເຮັດແນວ ໃດມະຫາຊົນຈຶ່ງຈະຈື່ງ່າຍ ແລະເຂົ້າໃຈງ່າຍ. ສະນັ້ນ, ສັບວິຊາການຕ້ອງມີລັກສະນະມະຫາຊົນ.

ສະຫຼຸບລວມ: ການຂະຫຍາຍຕົວຂອງນາໆຊາດໃນທຸກດ້ານ ມັນ ຕ້ອງການໃຫ້ມີສັບວິຊາການ ຢ່າງຫຼວງຫຼາຍ, ສ້າງສັບວິຊາການຫຼາຍ ແລະດີເທົ່າໃດ ມັນ ກໍຈະເປັນສິ່ງຍູ້ດັນໃຫ້ແກ່ຊາດນັ້ນຂະ ຫຍາຍຕົວໄວເທົ່ານັ້ນ.

ຄຳຖາມ

๑. ແນວໃດຈຶ່ງເອີ້ນວ່າ ພາສາແຫ່ງຊາດ? ລະຫວ່າງພາສາແຫ່ງຊາດ ແລະພາສາທ້ອງຖິ່ນມັນມີ ສາຍພົວພັນແນວໃດນຳກັນ?

๒. ສັບວິຊາການແມ່ນສັບແນວໃດ? ມັນມີຈຸດພິເສດຫຍັງແດ່? ຍົກຕົວຢ່າງ.

๓. ຈົ່ງຊອກຫາສັບວິຊາການຂອງຂະແໜງໃດໜຶ່ງ ຫຼືວິຊາໃດວິຊາໜຶ່ງສະເພາະໃຫ້ໄດ້ ๑๔-๘๐ ສັບ

ບົດທີ ຜ
ການຂະຫຍາຍຕົວຂອງວັດຈະນາ

I. ຄວາມສຳນຶກກ່ຽວກັບການຂະຫຍາຍຕົວຂອງວັດຈະນາ

ສັງຄົມມະນຸດນັບມື້ນັບຂະຫຍາຍ ຄວາມ ຮຽກຮ້ອງຕ້ອງການຂອງສັງຄົມກໍນັບມື້ສູງ; ພາສາ ຊ່ຳພັດເປັນພາຫະນະແລກປ່ຽນຄົບຄ້າໃນສັງຄົມ. ສະນັ້ນ, ພາສາຈຳເປັນກໍຕ້ອງໄດ້ຂະຫຍາຍຕົວ ຕາມຄວາມກ້າວໜ້າຂອງສັງຄົມ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ການຂະຫຍາຍຕົວໄປຕາມສັງຄົມ. ດັ່ງນັ້ນ, ພາສາຈຶ່ງເຮັດໜ້ອນໜ້າທີ່ພາລະກຳຕົ້ນຕໍຂອງຕົນເອງ. ຄວາມຮຽກຮ້ອງຕ້ອງການຂອງສັງຄົມສູງ ແລະຮີບດ່ວນເທົ່າໃດ ພາສາ ກໍຕ້ອງໄດ້ຂະຫຍາຍຕົວສູງ ແລະໄວເທົ່ານັ້ນ.

ການປ່ຽນແປງຫຼືການຂະຫຍາຍຕົວຂອງພາສາ ມັນເກີດມີຢູ່ໃນທຸກຂະແໜງການ ໝາຍ ຄວາມ ວ່າ ອັກຂະຫຼະ, ວັດຈະນາ, ໄວຍາກອນ ແລະສັນທະສິນ ກ ລ້ອນແຕ່ປາກົດການຂະຫຍາຍຕົວ ຫຼື ການປ່ຽນແປງຂອງພາສາ. ພວກເຮົາເຫັນແຈ້ງກວ່າໝູ່ແມ່ນຢູ່ໃນວັດຈະນາ. ເວົ້າເຖິງວັດຈະນາແມ່ນ ເວົ້າເຖິງສັບ. ສະນັ້ນ, ການປາກົດຕົວຂອງສັບໃໝ່ແຕ່ລະຄັ້ງ ມັນ ແມ່ນສັນຍະລັກທີ່ບອກໃຫ້ພວກ ເຮົາຮູ້ວ່າ ພາສາ ມັນໄດ້ຂະຫຍາຍຕົວຂຶ້ນອີກກ້າວໜຶ່ງແລ້ວ; ແຕ່ພວກເຮົາຕ້ອງເຂົ້າໃຈວ່າ ການ ຂະຫຍາຍຕົວຂອງພາສາ ມັນ ແມ່ນການປາກົດມີມູນສານໃໝ່ທີ່ກ້າວໜ້າກວ່າ, ແທນມູນພາກເກົ່າທີ່ ຫຼ້າຫຼັງ ເຊິ່ງມັນຈະຕ້ອງສູນເສຍໄປ.

II. ການຂະຫຍາຍຕົວຂອງວັດຈະນາ

ພວກເຮົາອາດຈະເວົ້າໄດ້ວ່າ ໃນແຕ່ລະມື້ພວກເຮົາໄດ້ເຫັນສັບໃໝ່ເກີດຂຶ້ນເປັນຈຳນວນຫຼວງ ຫຼາຍ, ເວລາພວກເຮົາລົມກັນ ພວກ ເຮົາໄດ້ປະກອບສ່ວນແຕ່ງພາສາ(ສັບໃໝ່) ຂຶ້ນ, ແຕ່ວ່າມີບາງ ກໍລະນີ ມື້ນີ້ເວົ້າມື້ອື່ນພັດລືມມັນໄປ ແລ້ວເວົ້າສັບໃໝ່ໄປເລື້ອຍໆ. ອັນນີ້ແມ່ນປາກົດການວັດຈະນາບໍ່ ຄົງຕົວ, ພວກເຮົາເວົ້າເຖິງການປ່ຽນແປງ ແລະການຂະຫຍາຍຕົວຂອງວັດຈະນາຄົງຕົວ.

๑. ວັດຈະນາພື້ນຖານ ແລະການຂະຫຍາຍຕົວຂອງວັດຈະນາ

ວັດຈະນາພື້ນຖານ ແມ່ນບັນດາສັບທີ່ມີມາແຕ່ເຫີງນານ ຜ່ານຫຼາຍໄລຍະປະຫວັດສາດ, ມັນບໍ່ ປ່ຽນແປງແບບກະທັນຫັນ ຫຼື ປ່ຽນໃໝ່ມົດ. ໃນຕົວຈິງແລ້ວແມ່ນມີແຕ່ບາງພາກສ່ວນເທົ່ານັ້ນທີ່ປ່ຽນ ແປງ, ສ່ວນຫຼວງຫຼາຍແມ່ນຮັກສາເດີມ. ວັດຈະນາພື້ນຖານມັນມີລັກສະນະຄົງຕົວ ແລະປອງຊົນ. ມັນຍືນຍົງຄົງຕົວຜ່ານຫຼາຍຍຸກຫຼາຍສະໄໝ, ມັນເປັນພື້ນຖານໃຫ້ແກ່ການສ້າງພາສາສັບໃໝ່. ພວກ ເຮົາຮູ້ວ່າພາກສ່ວນຕ່າງໆຂອງພາສາ ແມ່ນວັດຈະນາມີການປ່ຽນແປງໄວກວ່າໝູ່, ແຕ່ສະເພາະວັດ ຈະນາພື້ນຖານແລ້ວ ມັນ ພັດບໍ່ມີການປ່ຽນແປງແບບງ່າຍດາຍຄືແນວນັ້ນ. ຍ້ອນວ່າບັນດາສັບເຫຼົ່ານີ້ ມັນໄດ້ຄົງຕົວມາເປັນເວລາເຫີງນານ ແລະປອງຊົນກໍຮັບຮູ້ມັນ.

ຕົວຢ່າງ: ປະເພດສັບທີ່ວ່າ ກິນ, ນອນ, ໄປ, ມາ, ເຮືອນ, ຄວາຍ... ສັບເຫຼົ່ານີ້ແມ່ນມີມາແຕ່ ເຫີງນານ ແລະປັດຈຸບັນມັນກໍຍັງຄົງຕົວຢູ່.

๔. ສັບບູຮານ ແລະສັບໃໝ່

ວັດຈະນາຂອງຊາດໃດ, ມັນກໍຕ້ອງມີປາກົດການທີ່ວ່າ ມີບາງສັບທີ່ເຄີຍໃຊ້ໃນເມື່ອກ່ອນ ແຕ່ມາຮອດປັດຈຸບັນນີ້ບໍ່ໃຊ້ແລ້ວ ຍ້ອນຫຼາຍສາເຫດ. ແຕ່ວ່າກໍຍັງມີບາງຄົນ ໂດຍສະເພາະແມ່ນຜູ້ເຖົ້າຜູ້ແກ່ອາດຍັງນຳໃຊ້ຢູ່ ຫຼືບໍ່ກໍມີຄວາມເຂົ້າໃຈກັບສັບເຫຼົ່ານັ້ນຢູ່. ສັບເຫຼົ່ານັ້ນໄດ້ຖືກບັນທຶກໄວ້ໃນສິລາເລກ ຫຼືໜັງສືບູຮານຕ່າງໆ. ສັບຈຳພວກນີ້ເພິ່ນເອີ້ນວ່າ ສັບບູຮານ.

ຄຽງຄູ່ກັບສັບບູຮານ ແລະວັດຈະນາພື້ນຖານນັ້ນ, ມະນຸດເຮົາຍັງໄດ້ປະດິດແຕ່ງສັບໃໝ່ຂຶ້ນເພື່ອຮັບໃຊ້ແລກປ່ຽນຄົບຄ້າໃນສັງຄົມ. ສັບເຫຼົ່ານີ້ແມ່ນສັບທີ່ຊີ້ເຖິງເຫດການ ຫຼືປາກົດການໃໝ່ທີ່ເກີດຂຶ້ນໃນຊີວິດປະຈຳວັນຂອງພວກເຮົາ ອັນນີ້ເພິ່ນເອີ້ນວ່າສັບໃໝ່. ຈຳພວກສັບທີ່ວ່າ: ໄຟຟ້າ, ປາລະມະນູ, ນິວຄະເລຍ, ລູກສອນໄຟ, ຍານອາວະກາດ, ດາວທຽມ, ຄອມພິວເຕີ... ສັບຈຳພວກນີ້ໃນເບື້ອງຕົ້ນມັນກຳເນີດນັ້ນ ແມ່ນມີແຕ່ກຸ່ມຄົນໃດໜຶ່ງເທົ່ານັ້ນເປັນຜູ້ຊົມໃຊ້ ແລະເຂົ້າໃຈ, ແຕ່ຫຼັງຈາກນັ້ນ ມັນຈຶ່ງຄ່ອຍໆຂະຫຍາຍຕົວອອກໄປທົ່ວສັງຄົມ.

๕. ທິດຂະຫຍາຍຂອງວັດຈະນາ

ເພື່ອຮັບໃຊ້ໃຫ້ແກ່ການຂະຫຍາຍຕົວຂອງສັງຄົມ ວັດຈະນາອາດຈະຂະຫຍາຍໄດ້ຫຼາຍຮູບການ ແຕ່ເມື່ອສັງລວມເບິ່ງແລ້ວ, ມັນມີທິດຂະຫຍາຍ ດັ່ງນີ້:

๕.๑ ປ່ຽນຄວາມໝາຍ

ທິດຂະຫຍາຍສັບກໍລະນີນີ້ ແມ່ນຄວາມໝາຍເດີມຄ່ອຍໆສູນໄປ ແລ້ວມີຄວາມໝາຍໃໝ່ແທນ ເຊັ່ນວ່າ

- ສ່ອງແສງ ຄວາມໝາຍໃໝ່ແມ່ນ ລາຍງານ
- ສັນໂດດ " ຢາກໄດ້ລິ້ນໝູ່, ຢາກໄດ້ຫຼາຍ
- ມໍລະສຸມ " ເອົາໃຈໃສ່

๕.๘ ສ້າງສັບໃໝ່

ການສ້າງສັບໃໝ່ ແມ່ນອີງໃສ່ວິທີຕ່າງໆກ່ຽວກັບການປະກອບສ້າງສັບ ເຊັ່ນ ວິທີສັງຮວມ, ວິທີຊ້ຳຄຳ, ວິທີປະສົມຄຳ ໂດຍອີງໃສ່ແຕ່ລະວິທີນັ້ນ ພວກເຮົາກໍສາມາດສ້າງສັບໃໝ່ໄດ້.

ຕົວຢ່າງ:

ຫໍ + ພັກ = ຫໍພັກ
ຫ້ອງ + ປະຊຸມ = ຫ້ອງປະຊຸມ
ເກີບ + ໜັງ = ເກີບໜັງ

๕.๓ ທັບສັບ(ສັບຢືມ)

ການທັບສັບ ແມ່ນປາກົດການລວມໃຫ້ແກ່ທຸກພາສາທີ່ມີໃນໂລກນີ້, ມັນກາຍເປັນຄວາມຈຳເປັນພາວະວິໄສ ໂດຍສະເພາະແມ່ນສັບວິທະຍາສາດ ແຕ່ການທັບສັບນີ້ ກໍມີສອງກໍລະນີຕົ້ນຕໍ ຄື

❶ ທັບສັບທາງດ້ານຄວາມໝາຍ: ກໍລະນີນີ້ແມ່ນຢືມເອົາແຕ່ມະໂນພາບ ສ່ວນ ຮູບການອັກຂະຫຼະແມ່ນໃຊ້ອັກຂະຫຼະຂອງຊາດຕົນ.

ຕົວຢ່າງ: ກິລາ, ສະຫະພັນ, ກະເສດສາດ, ສະຫະກອນການຄ້າ, ສະບຽງອາຫານ, ກົນການເມືອງ...

❷ ທັບສັບທາງດ້ານຮູບການ: ແມ່ນການທັບສັບທີ່ໃຊ້ອັກຂະຫຼະຂອງຊາດຕົນ ກໍລະນີນີ້ແມ່ນລວມເອົາທັງຄວາມໝາຍ, ການຜັນສຽງ ແຕ່ຫາກໃຊ້ອັກຂະຫຼະຂອງຊາດຕົນເອງ ເພື່ອຈົດກ່າຍ.

ຕົວຢ່າງ: ກາເຟ, ເບຕົງ, ປິນໂຕ, ໂລຊິກ, ສີວິໄລ, ໄປສະນີ...

ການທັບສັບຈະເປັນສິ່ງໜຶ່ງທີ່ເຮັດໃຫ້ພາສາຂອງຊາດຂະຫຍາຍຕົວ, ພວກເຮົາບໍ່ສາມາດປະຕິເສດການທັບສັບນີ້ໄດ້, ແຕ່ກໍຕ້ອງຕ້ານຢ່າງເດັດດ່ຽວຕໍ່ກັບການທັບສັບໃນສິ່ງທີ່ບໍ່ຕ້ອງການ ແລະບໍ່ຈຳເປັນ.

✍ **ສະຫຼຸບ:** ເມື່ອເວົ້າເຖິງພາສາແລ້ວ, ອັດຈະນາແມ່ນບັນດາຫົວໜ່ວຍທີ່ເປັນຕົວແທນໃຫ້ແກ່ພາສາໃດໜຶ່ງໄດ້. ສະນັ້ນ, ການຄົ້ນຄວ້າອັດຈະນາ ມັນແມ່ນວຽກງານໜຶ່ງທີ່ສຳຄັນ ເພື່ອຈະກ້າວໄປເຂົ້າໃຈເຖິງຈຸດພິເສດຂອງພາສາໃດໜຶ່ງ.

ຄຳຖາມ

๑. ແນວໃດຈຶ່ງເອີ້ນວ່າ ອັດຈະນາພື້ນຖານ? ມັນມີການຂະຫຍາຍຕົວແນວໃດ?

๔. ອັດຈະນາ ມັນມີຫົດຂະຫຍາຍແນວໃດແດ່? ຍົກຕົວຢ່າງ.

๓. ຈົ່ງຊອກຫາຄຳທັບສັບພ້ອມທັງຄວາມໝາຍແລະຮູບການ(ສຽງ) ແຕ່ຫາກໃຊ້ອັກຂະຫຼະຂອງຊາດເຮົາເພື່ອຈົດສຽງ ໃຫ້ໄດ້ຢ່າງໜ້ອຍ ๔๐ ຄຳ.

יחידה 1: שלושת הממדים של הזמן

שלושת הממדים של הזמן

- **הווה** – מתרחש עכשיו
- **עבר** – מה שכבר קרה
- **עתיד** – מה שעוד יקרה

הווה

- **הווה** – מתרחש עכשיו
- **עבר** – מה שכבר קרה
- **עתיד** – מה שעוד יקרה

עבר

- **עבר** – מה שכבר קרה
- **הווה** – מתרחש עכשיו
- **עתיד** – מה שעוד יקרה

עתיד

- **עתיד** – מה שעוד יקרה
- **הווה** – מתרחש עכשיו
- **עבר** – מה שכבר קרה

הווה

- **הווה** – מתרחש עכשיו
- **עבר** – מה שכבר קרה
- **עתיד** – מה שעוד יקרה

עבר

- **עבר** – מה שכבר קרה
- **הווה** – מתרחש עכשיו
- **עתיד** – מה שעוד יקרה

עתיד

- **עתיד** – מה שעוד יקרה
- **הווה** – מתרחש עכשיו
- **עבר** – מה שכבר קרה

הווה

- **הווה** – מתרחש עכשיו
- **עבר** – מה שכבר קרה
- **עתיד** – מה שעוד יקרה

עבר

- **עבר** – מה שכבר קרה
- **הווה** – מתרחש עכשיו
- **עתיד** – מה שעוד יקרה

עתיד

- **עתיד** – מה שעוד יקרה
- **הווה** – מתרחש עכשיו
- **עבר** – מה שכבר קרה

ພາກທີ IV ໄວຍາກອນວິທະຍາ

ບົດທີ ๑

ບາງບັນຫາກ່ຽວກັບໄວຍາກອນ

I. ໄຂຫົວເລື່ອງ

ເວົ້າເຖິງພາສາກໍຕ້ອງໄດ້ເວົ້າເຖິງໄວຍາກອນ, ເພາະໄວຍາກອນ ແມ່ນຫຼັກການລວມຂອງພາສາ. ພາສາໃດກໍຕາມບັນຫາໄວຍາກອນມັນຢຶດເອົາປະລິມານສ່ວນຫຼາຍ, ແຕ່ກໍບໍ່ໝາຍຄວາມວ່າໄວຍາກອນມີຄວາມສຳຄັນກວ່າພາກສ່ວນອື່ນ, ເວົ້າວ່າມັນຢຶດເອົາປະລິມານສ່ວນຫຼາຍ ແມ່ນຢາກໝາຍເຖິງວ່າ ມັນ ແມ່ນພາກສ່ວນໜຶ່ງທີ່ມີຂອບເຂດກວ້າງຂວາງຢູ່ໃນພາສາ. ພາສາແມ່ນລະບົບອັນໜຶ່ງ, ໄວຍາກອນກໍແມ່ນພາກສ່ວນໜຶ່ງຢູ່ໃນພາສາ. ນອກຈາກມັນແລ້ວຍັງມີພາກສ່ວນອື່ນອີກ ແຕ່ທຸກໆ ພາກສ່ວນນັ້ນ ພວກມັນມີສາຍພົວພັນນຳກັນຢ່າງສະໜິດແໜ້ນ.

II. ທີ່ຕັ້ງບົດບາດ ແລະຄວາມສຳຄັນຂອງວິຊາໄວຍາກອນວິທະຍາຢູ່ໃນພາສາສາດ

ອັກຂະຫຼະແມ່ນເປືອກວັດຖຸຂອງພາສາ ແມ່ນພາຫະນະເພື່ອສະແດງພາສາ. ຫາກບໍ່ມີອັກຂະຫຼະກໍຈະບໍ່ມີພາສາ. ສ່ວນວັດຈະນາພັດແມ່ນຫົວໜ່ວຍພື້ນຖານເພື່ອປະກອບສ້າງພາສາ. ຫາກຈະເວົ້າເຖິງການປາກົດຕົວຂອງແຕ່ລະພາກສ່ວນໃນພາສາສາດແລ້ວ, ພວກເຮົາເຫັນວ່າ ໄວຍາກອນວິທະຍາປາກົດຕົວລຸນໜ່ຽ; ແຕ່ການປາກົດຕົວຂອງມັນແມ່ນຂີດໝາຍບອກວ່າ ພາສາ ໄດ້ເລີ່ມເຂົ້າສູ່ຄວາມເປັນເອກະພາບ. ໄວຍາກອນວິທະຍາມັນແມ່ນຂະແໜງວິຊາໜຶ່ງທີ່ສຳຄັນ ແລະຈຳເປັນ. ໃນພາສາສາດອາດເວົ້າໄດ້ວ່າ ຫາກ ບໍ່ມີມັນ ພາສາ ກໍຈະມີລັກສະນະກະແຈກກະຈາຍ, ບໍ່ສາມາດເຕົ້າໂຮມເປັນພາສາເອກະພາບໄດ້; ເພາະໄວຍາກອນມັນເວົ້າເຖິງຫຼັກການນຳໃຊ້ພາສາ. ສະນັ້ນ, ພວກເຮົາຮຽນໄວຍາກອນຂອງຊາດ ແມ່ນພວກເຮົາປະກອບສ່ວນເຮັດໃຫ້ພາສາແຫ່ງຊາດມີຄວາມເປັນເອກະພາບ. ບັນຫາໜຶ່ງ, ເຮັດໃຫ້ພາສາເຮົາມີຄວາມຮູ້ພື້ນຖານເປັນລະບົບກ່ຽວກັບພາສາ ພ້ອມນີ້ກໍຈະຊ່ວຍໃຫ້ຮູ້ນຳໃຊ້ພາສາຢ່າງຖືກຕ້ອງ ແລະຊັດເຈນ.

III. ສັງຮວມກ່ຽວກັບໄວຍາກອນວິທະຍາ

๑. ໄວຍາກອນແມ່ນຫຍັງ

ຄວາມເຂົ້າໃຈແບບທົ່ວໄປແລ້ວ, ໄວຍາກອນແມ່ນລະບຽບຂອງພາສາ. ການຈົດຈຳແບບແຜນຂອງຮູບຄຳ ແລະການແຈກຄຳກຳມະ, ຄວາມຮູ້ກ່ຽວກັບຊະນິດຄຳ, ການວາງຮູບປະໂຫຍກ, ການຮຽນຮູ້ກ່ຽວກັບການນຳໃຊ້ກົດເກນແຫ່ງຄວາມຖືກຕ້ອງຂອງພາສາ ເຊິ່ງມີຮາກຖານມາຈາກຕັກກະວິທະຍາ ສະນັ້ນອາດຈະສັງຮວມໄດ້ວ່າ ທຸກສິ່ງທີ່ພົວພັນກັບພາສານັບທັງກົດເກນ, ຂໍ້ຍົກເວັ້ນ, ຄວາມນິຍົມໃນການໃຊ້ພາສາແລະອື່ນໆ ແມ່ນບັນຫາໄວຍາກອນທັງໝົດ. ບັນຫາໄວຍາກອນແມ່ນຫຍັງ? ເຂົາເຈົ້າໄດ້ແບ່ງອອກເປັນ ๘ ແງ່ ຄື

๑.๑ ຄວາມໝາຍແຄບ

ໄວຍາກອນແມ່ນບັນດາຫຼັກການເຄື່ອນໄຫວຂອງສັບ, ການປະສົມສັບເພື່ອສ້າງເປັນປະໂຫຍກ ຂອງພາສາໃດໜຶ່ງ.

๑.๘ ຄວາມໝາຍກວ້າງ

ໄວຍາກອນ ແມ່ນພາກສ່ວນໜຶ່ງຂອງຂະແໜງວິທະຍາສາດທີ່ຄົ້ນຄວ້າກ່ຽວກັບພາສາ ຄົ້ນຄວ້າ ຫຼັກການການເຄື່ອນໄຫວຂອງສັບ ແລະປະໂຫຍກ ຫຼືບັນດາຫຼັກການການປ່ຽນຮູບຂອງພາສາ.

ສັງຮວມແລ້ວ, ໄວຍາກອນແມ່ນບັນດາຫຼັກການທາງດ້ານໂຄງສ້າງຂອງຄຳເວົ້າ, ການຜັນປ່ຽນ ຂອງຄຳເວົ້າ, ການແຈກຄຳເວົ້າ ແລະບັນດາຫຼັກການປະກອບປະໂຫຍກ.

๔. ໄວຍາກອນວິທະຍາ

ໄວຍາກອນວິທະຍາ ແມ່ນວິທະຍາສາດທີ່ຄົ້ນຄວ້າກ່ຽວກັບຫຼັກການ, ການເຄື່ອນໄຫວຂອງສັບ, ລະບຽບຂອງສັບ, ການພົວພັນຂອງສັບ ແລະການປ່ຽນຮູບຂອງສັບ ເພື່ອປະກອບສ້າງເປັນວະລີ ແລະປະໂຫຍກຂອງພາສາ. ເພິ່ນແບ່ງໄວຍາກອນວິທະຍາອອກເປັນ ๔ ຂະແໜງໃຫຍ່ ຄື

- ໄວຍາກອນວິທະຍາສາມັນ
- ໄວຍາກອນວິທະຍາວາດພາບ
- ໄວຍາກອນວິທະຍາສົມທຽບ
- ປະຫວັດໄວຍາກອນວິທະຍາ

๕. ລັກສະນະຂອງໄວຍາກອນ

๕.๑ ລັກສະນະລະບົບ

ໄວຍາກອນ ກໍມີລະບົບຂອງມັນ ເຊັ່ນ ລະບົບວະຈີວິພາກ, ລະບົບວະລີ, ລະບົບປະໂຫຍກ ເຊິ່ງບັນດາລະບົບເຫຼົ່ານີ້ ລ້ວນແຕ່ມີສາຍພົວພັນຜູກມັດເຊິ່ງກັນແລະກັນ ແລ້ວກາຍເປັນລະບົບແໜ່ນ ແກ່ນອັນໜຶ່ງ.

๕.๘ ລັກສະນະສັ້ນໜຽວ

ໃນພາສາແມ່ນໄວຍາກອນມີລັກສະນະສັ້ນໜຽວກວ່າໜ່ວຍພົດ, ມັນເປັນລັກສະນະພິເສດຂອງໄວ ຍາກອນ, ຖ້າທຽບໃສ່ພາກສ່ວນອື່ນແລ້ວ ໄວຍາກອນມີລັກສະນະສັງຮວມຫຼາຍກວ່າ. ສະນັ້ນ, ນັກ ພາສາສາດທັ້ງຫຼາຍຈຶ່ງເວົ້າວ່າ ໄວຍາກອນແມ່ນສັງຮວມຂອງສັງຮວມ.

ຕົວຢ່າງ: ກິນ → [kin]

$$[kin]\begin{cases}[kin]^1\\[kin]^2\\[kin]^n\end{cases}\quad /i/\begin{cases}i^1\\i^2\\i^n\end{cases}\quad /n/\begin{cases}[n]^1\\[n]^2\\[n]^n\end{cases}$$

[kin]

ທ່ານ ສະຕາລິນ ເວົ້າວ່າ: "ລັກສະນະສະເພາະຂອງໄວຍາກອນແມ່ນສ້າງຫຼັກການ, ການປ່ຽນຮູບຂອງສັບອອກ, ແຕ່ບໍ່ໝາຍຄວາມວ່າຈະແນໃສ່ສັບໃດສັບໜຶ່ງສະເພາະ, ມັນແນໃສ່ສັບທົ່ວໄປ. ເວົ້າລວມບໍ່ມີອັນໃດທີ່ຈະແມ່ນອັນສະເພາະ. ລັກສະນະຂອງໄວຍາກອນ ມັນຍັງໄດ້ສ້າງວິທີຕັ້ງປະໂຫຍກ, ແຕ່ປະໂຫຍກຢູ່ນີ້, ບໍ່ແມ່ນປະໂຫຍກໃດໜຶ່ງສະເພາະ, ມັນແມ່ນປະໂຫຍກກວມລວມ. ດ້ວຍເຫດນີ້, ໄວຍາກອນມັນຈຶ່ງລົບລ້າງອັນໃດທີ່ມີລັກສະນະສະເພາະພິເສດ, ເອົາແຕ່ຈຸດກວມລວມ ເພື່ອເປັນພື້ນຖານໃຫ້ແກ່ການປ່ຽນຮູບຂອງສັບ ແລະການປະສົມສັບ ເພື່ອກາຍເປັນປະໂຫຍກ".

IV. ຄວາມໝາຍໄວຍາກອນ

๑. ມະໂນພາບກ່ຽວກັບຄວາມໝາຍໄວຍາກອນ

ແຕ່ລະມູນພາກທີ່ນອນຢູ່ໃນໄວຍາກອນ ເວລາໃດກໍປະກອບດ້ວຍ ๘ ດ້ານ ຄື ດ້ານ ຮູບການ (ເປືອກນອກ) ແລະດ້ານເນື້ອໃນ(ຄວາມໝາຍ), ຮູບການສະແດງເຖິງເນື້ອໃນ ແລະເນື້ອໃນສະແດງອອກໄດ້ຜ່ານຮູບການ. ທັງສອງດ້ານນີ້ ບໍ່ສາມາດແຍກອອກຈາກກັນໄດ້. ໃນພາສາມີຄວາມໝາຍທີ່ເປັນພື້ນຖານ ๘ ຢ່າງ ຄື ຄວາມໝາຍວັດຈະນາ ແລະຄວາມໝາຍໄວຍາກອນ. ຄວາມໝາຍວັດຈະນາແມ່ນຄວາມໝາຍສະເພາະຂອງສັບ ເພື່ອສະແດງເຖິງສິ່ງຂອງວັດຖຸຕ່າງໆ; ສ່ວນຄວາມໝາຍໄວຍາກອນມັນແມ່ນຄວາມໝາຍລວມ, ມີລັກສະນະສັງເຂບຂອງຫຼາຍຄຳ, ຫຼາຍປະໂຫຍກ ຫຼື ເວົ້າວ່າ ຄວາມໝາຍໄວຍາກອນ ແມ່ນຄວາມໝາຍທີ່ໄປຊ້ອນແຝງກັບຄວາມໝາຍວັດຈະນາ.

ຕົວຢ່າງ:

- ພາສາລາວ:	ເຮືອນ	ໂຕະ	ປາກກາ	ງາມ
- ພາສາຫວຽດນາມ:	nhà	bàn	bút	đẹp
- ພາສາອັງກິດ:	house	desk	pen	beautiful
- ພາສາຝຣັ່ງ:	maison	table	stylo	joli
	Ⓐ	Ⓑ	Ⓒ	Ⓓ

✹ **ສັງເກດດ້ານຄວາມໝາຍວັດຈະນາ**

A ບ່ອນຢູ່ອາໄສຂອງຄົນ.

B ບ່ອນສຳລັບຮອງຂຽນໜັງສື ຫຼືໃຊ້ຮອງວັດຖຸສິ່ງຂອງຕ່າງໆ.

C ວັດຖຸຊະນິດໜຶ່ງສຳລັບໃຊ້ຂຽນ.

D ລັກສະນະອັນໜຶ່ງຂອງວັດຖຸ ເຊິ່ງກົງກັນຂ້າມກັບຂີ້ຮ້າຍ

✹ **ສັງເກດດ້ານຄວາມໝາຍໄວຍາກອນ**

A B C ແມ່ນຄຳນາມ(Noun)

D ແມ່ນຄຳຄຸນນາມ(Adjective-adverb)

๘. ຊະນິດຄວາມໝາຍໄວຍາກອນ

๘.๑ ຄວາມໝາຍກ່ຽວກັບພົດ

ພົດແມ່ນເວົ້າເຖິງຈຳນວນທີ່ມີຢູ່ໃນພາສາ ແລະພາສາໃດກໍມີພົດ; ສ່ວນຫຼາຍແລ້ວແມ່ນມີ ๔ ພົດ ຄື ເອກະພົດ ແລະພະຫຸພົດ, ແຕ່ລະພາສາກໍມີສິ່ງສະແດງຄວາມໝາຍຕ່າງກັນ; ສະເພາະພາສາລາວພວກເຮົາສິ່ງສະແດງກ່ຽວກັບພົດ ກໍ ຍັງມີລັກສະນະສັບສົນຢູ່ ແຕ່ກໍມີຄວາມສາມາດຮູ້ໄດ້ ດັ່ງລຸ່ມນີ້:

① ອະພົດ: ເຮືອນ, ຫຍ້າ, ແມ່ຍິງ, ນັກສຶກສາ, ຄະນະອັກສອນສາດ...

② ເອກະພົດ: ໜຶ່ງ, ດຽວ, ປ່ຽວ, ໜ້ອຍ...

③ ພະຫຸພົດ: ສອງ, ສິບ, ໝູ່, ພວກ, ຝູງ...

๘.๒ ຄວາມໝາຍກ່ຽວກັບເພດ

ເພດແມ່ນເວົ້າເຖິງລັກສະນະຂອງຄຳໃນແຕ່ລະພາສາ ວ່າ ມັນແມ່ນເພດຜູ້, ເພດແມ່ ຫຼື ອະເພດ. ແຕ່ລະພາສາກໍຈັດເພດຂອງຄຳຕ່າງກັນ, ແຕ່ສ່ວນຫຼາຍແລ້ວແມ່ນຈັດເປັນ ๓ ເພດ ແລະພາສາລາວເຮົາກໍຈັດເປັນ ๓ ເພດຄືກັນ ເຊັ່ນ

① ອະເພດ: ດິນ, ນ້ຳ, ລົມ, ໄຟ, ອາກາດ...

② ເພດຊາຍ: ພໍ່, ລຸງ, ອາວ, ເຂີຍ, ນະບ່າວ...

③ ເພດຍິງ: ແມ່, ອາ, ປ້າ, ໃພ້, ອີ່...

๘.๓ ຄວາມໝາຍກ່ຽວກັບກາລະ

ຄວາມໝາຍກ່ຽວກັບກາລະ ໃນພາສາໃດກໍໃຊ້ຕ່າງກັນ, ແຕ່ຮູບການສະແດງຄວາມໝາຍກາລະໃນໄວຍາກອນໃນແຕ່ລະພາສານັ້ນໆຕ່າງກັນ, ມັນຖືກນຳໃຊ້ເຂົ້າກັບຄຳກຳມະ ການປາກົດມີການເຄື່ອນໄຫວໃນແຕ່ລະໄລຍະ. ເພິ່ນໄດ້ແບ່ງກາລະອອກເປັນ ๓ ຊະນິດພື້ນຖານ ຄື ກາລະ ອະດີດ, ກາລະປັດຈຸບັນ ແລະກາລະອະນາຄົດ.

ຕົວຢ່າງ:

❶ ກາລະອະດີດ: ຂ້ອຍໄດ້ໄປໂຮງຮຽນ I went to school.

❷ ກາລະປັດຈຸບັນ: ຂ້ອຍໄປໂຮງຮຽນ I go to school.

❸ ກາລະອະນາຄົດ: ຂ້ອຍຈະໄປໂຮງຮຽນ I' ll go to school.

๘.๔ ຄວາມໝາຍກ່ຽວກັບວິທີແຈກ

ຄວາມໝາຍກ່ຽວກັບວິທີແຈກ ແມ່ນຄວາມໝາຍໃນການແຈກສັບໃນບັນດາພາສາທີ່ປ່ຽນຮູບ ຄື ພາສາອິນໂດ-ເອີຣົບ(Indo-European) ເພາະພາສາຕະກຸນນີ້ມີການແຈກຄຳ. ນອກຈາກຄວາມໝາຍ ๔ ຢ່າງນີ້ແລ້ວ, ກໍຍັງມີຄວາມໝາຍອະຈີວິພາກອີກ ເຊັ່ນ ຄຳນາມ, ຄຳແທນນາມ, ຄຳຄຸນນາມ, ຄຳກຳມະ, ຄຳເຊື່ອມ, ຄຳຕໍ່ ແລະຄຳອຸທານ.

🕮 ສິ່ງທີ່ຄວນເອົາໃຈໃສ່

ໃນບາງກໍລະນີ, ຄຳດຽວກັນ ແຕ່ປະໂຫຍກຕ່າງກັນ ແລະຄວາມໝາຍໄວຍາກອນກໍຕ່າງກັນ; ອັນນີ້ແມ່ນຍ້ອນພາລະກຳໃນປະໂຫຍກ, ເຮັດໃຫ້ໄວຍາກອນມີຄວາມໝາຍຕ່າງກັນ; ໝາຍຄວາມວ່າ ສັບດຽວນັ້ນບາງເທື່ອມັນອາດເປັນຕົວຕັ້ງ, ຕົວປະກອບ ຫຼື ບາງເທື່ອກໍເຮັດໜ້າທີ່ເປັນເປົ້າໝາຍ: ຜູ້ຮັບ, ຈຸດປະສົງແລະອື່ນໆ.

ຕົວຢ່າງ:

❶ ນັກສຶກສາໄປຫາອາຈານ. ນັກສຶກສາເປັນຕົວຕັ້ງຂອງປະໂຫຍກ.
❷ ຄະນະບໍດີຍ້ອງຍໍນັກສຶກສາ. ນັກສຶກສາເປັນເປົ້າໝາຍ.
❸ ອາຈານສອນນັກສຶກສາ. ນັກສຶກສາເປັນຜູ້ຮັບ.
❹ ອາຈານຢາກພົບນັກສຶກສາ. ນັກສຶກສາແມ່ນຈຸດປະສົງ.

IV. ຮູບການໄວຍາກອນ

ໃນພາສາບໍ່ວ່າຄວາມໝາຍໃດໆກໍຕາມ ຈະ ແມ່ນຄວາມໝາຍວັດຈະນາ ຫຼື ຄວາມໝາຍໄວຍາກອນ ກໍ ລ້ວນແຕ່ຜ່ານຮູບການເບື້ອງນອກຈຶ່ງສະແດງອອກໄດ້. ບໍ່ມີຮູບການກໍບໍ່ອາດມີຄວາມໝາຍ, ຄວາມໝາຍເບື້ອງນອກ ເພື່ອສະແດງໄວຍາກອນ; ນີ້ແຫຼະເພິ່ນເວົ້າວ່າ ຮູບ ການໄວຍາກອນ. ຮູບ ການໄວຍາກອນກໍມີຫຼາຍຮູບຫຼາຍແບບ ແລະມີຢູ່ໃນທຸກໆພາສາ, ຕ່າງແຕ່ວ່າແຕ່ລະພາສາມີຮູບການ ໄວຍາກອນຕ່າງກັນ.

ຕົວຢ່າງ:

ພາສາລັດເຊຍ: К НИГа ເພດແມ່ເອກະພົດ a ແມ່ນຮູບການໄວຍາກອນ
КНИГи ເພດແມ່ພະຫຸພົດ И ແມ່ນຮູບການໄວຍາກອນ

- ມີບາງກໍລະນີ, ຮູບການໄວຍາກອນມີຕົວດຽວ ແຕ່ມີການສະແດງຫຼາຍຢ່າງ ເຊັ່ນ “ຄົນ”.

man уеЛОВеК = ເອກະພົດ
men ЛЮgи = ພະຫຸພົດ

ໃນພາສາບາລີຍັງມີກໍລະນີພິເສດຫຼາຍຢ່າງ ກ່ຽວ ກັບຮູບການໄວຍາກອນ. ບາງເທື່ອຄວາມ ໝາຍໄວຍາກອນຕ່າງກັນ, ຮູບການໄວຍາກອນກໍຕ່າງກັນ ເພດແມ່ອາດຈະມີເຄື່ອງໝາຍດ້ວຍ xา x̄ x̄ ẋ ẋ ເຊັ່ນ ปปา, อฑิ, นาธิ, ชาตุ, อฑุ, ແຕ່ຍັງມີບາງກໍລະນີທີ່ວ່າ ຮູບການໄວຍາ ກອນຄືກັນ ແຕ່ຄວາມໝາຍໄວຍາກອນຕ່າງກັນ ເຊັ່ນເຄື່ອງໝາຍ x̄ ແລະ ẋ ບາງເທື່ອກໍເປັນເພດ ແມ່; ບາງເທື່ອກໍເປັນເພດຜູ້ ແລະບາງເທື່ອກໍເປັນອະເພດ.

ຕົວຢ່າງ:

① x̄ ເພດຜູ້ ເຊັ່ນ ມຸນິ(ນັກປາດ) ມະນິ (ແກ້ວມະນີ)
ເພດແມ່ " ຂັນຕິ(ອົດທົນ) ມະຕິ(ຄວາມຮູ້)
ອະເພດ " ອັກຂິ(ແກ່ນຕາ) ປາຕິ(ຝາມື)
ເພດຜູ້ " ສັຕຕຸ(ສັດຕູ, ເທດ)

ເພດແມ່	"	ຊາຕຸ(ຫົວເຂົ່າ)	ລວຈຸ(ໝາກນ້ຳເຕົ້າ)
ອະເພດ	"	ອັສສຸ(ນ້ຳຕາ)	ມະຫຸ(ນ້ຳເຜິ້ງ)

✧ **ໝາຍບອກ:** ພະຍັນຊະນະລາວທີ່ໄດ້ຂີດກ້ອງນັ້ນ, ບໍ່ມີໃນອັກສອນລາວເຮົາ, ສະນັ້ນຈຶ່ງໄດ້ ສະກົດຕາມເຄົ້າສັບ.

ຄຳຖາມ

๑. ໄວຍາກອນ ແລະໄວຍາກອນວິທະຍາຕ່າງກັນແນວໃດ? ອະທິບາຍ.
๘. ໄວຍາກອນມີຈັກລັກສະນະ? ແຕ່ລະລັກສະນະເປັນແນວໃດ?. ໃນນັ້ນແມ່ນລັກສະນະໃດ ສຳຄັນກວ່າໝູ່? ຍ້ອນຫຍັງ?.
๙. ຈົ່ງຈຳແນກຄວາມໝາຍອັດຈະນາ ແລະຄວາມໝາຍໄວຍາກອນເບິ່ງວ່າ ພວກມັນມີສາຍ ກ່ຽວພັນກັນແນວໃດ?.
๔. ຈົ່ງຈຳແນກຄວາມໝາຍໄວຍາກອນ ແລະຮູບການໄວຍາກອນ.

24/7
ຫ້າມຈຳໜ່າຍ

ບົດທີ ๘
ຫົວໜ່ວຍໄວຍາກອນ

I. ມະໂນພາບກ່ຽວກັບຫົວໜ່ວຍ

ມະໂນພາບກ່ຽວກັບຫົວໜ່ວຍ ແມ່ນກ້ອນເອກະລາດອັນໜຶ່ງທີ່ມີລັກສະນະເອກະລາດ, ມີໂຄງປະກອບສ້າງສົມບູນ ແລະໝັ້ນໝຸ່ງ. ຕໍ່ກັບຫົວໜ່ວຍພາສາ ທ່ານ ຊົດເຊຍ(F. Saussure) ໄດ້ໃຫ້ຄຳເຫັນວ່າ: "ຫົວໜ່ວຍພາສາແມ່ນບໍ່ມີລັກສະນະພິເສດທາງດ້ານສຽງໃດໆທັງສິ້ນ. ການນິຍາມກ່ຽວກັບຫົວໜ່ວຍພາສາທີ່ຖືກຕ້ອງກວ່າໝູ່ ຈະຕ້ອງນິຍາມວ່າ ຫົວໜ່ວຍຂອງພາສາ ມັນແມ່ນການຕັດແບ່ງເສັ້ນສຽງໃດໜຶ່ງ ເຊິ່ງເຄີຍໃຊ້ມັນເປັນສິ່ງສະແດງໃຫ້ແກ່ມະໂນພາບໃດໜຶ່ງແນ່ນອນ . ໃນເວລາພວກເຮົາຕັດມູນພາກທີ່ໄປກ່ອນ ແລະຕາມຫຼັງມັນອອກ". ອີງຕາມນິຍາມຂອງ ທ່ານ ຊົດເຊຍ ພວກເຮົາສາມາດຍົກຕົວຢ່າງໄດ້ ດັ່ງລຸ່ມນີ້:

~~ຂ້ອຍ~~ / ໄປ / ~~ຕະຫຼາດ~~ / ＼ / /...＼.../

ສະເພາະ<u>ໄປ</u>ມັນໄດ້ກາຍເປັນຫົວໜ່ວຍຂອງພາສາ.

II. ບັນດາຫົວໜ່ວຍໄວຍກອນ

ກ່ຽວກັບຫົວໜ່ວຍໄວຍາກອນ ກໍໄດ້ ມີຫຼາຍທັດສະນະແຕກຕ່າງກັນ, ນັກພາສາສາດບາງທ່ານໄດ້ ແບ່ງຫົວໜ່ວຍໃນພາສາອັງກິດອອກເປັນ ๕ ຫົວໜ່ວຍ ຄື ຕົວຄຳ , ສັບ, ວະລີ, ອະນຸປະໂຫຍກແລະປະໂຫຍກ. ນັກພາສາສາດຝຣັ່ງໄດ້ແບ່ງຫົວໜ່ວຍໃນພາສາຝຣັ່ງອອກເປັນ ๓ ຫົວໜ່ວຍ ຄື ແຊັກມັ໋ງ, ວະລີ ແລະປະໂຫຍກ.

๑. ຕົວຄຳ(Morpheme)

๑.๑ ຕົວຄຳແມ່ນຫຍັ໋ງ

ຕົວຄຳແມ່ນຫົວໜ່ວຍອັກຂະຫຼະທີ່ນ້ອຍສຸດ ແຕ່ຫາກມີຫຼາຍຄວາມໝາຍ , ເຂົາເຈົ້າຖືຕົວຄຳ ຄື ຈຸລັງຂອງພາສາ, ມັນແມ່ນຫົວໜ່ວຍສຸດທ້າຍຂອງພາສາ ແລະມັນຢູ່ແຖວຫຼັງຖັດຈາກສັບລົງມາ. ສະນັ້ນ, ຈຶ່ງຖືວ່າຕົວຄຳແມ່ນຫົວໜ່ວຍພື້ນຖານຂອງໄວຍາກອນ.

ຕົວຢ່າງ:

ເຮືອນຄົວ	ແມ່ນ	ສັບໜຶ່ງ
ເຮືອນ	"	"
ຄົວ	"	"

ສະນັ້ນ, ເຮືອນ < ເຮືອນຄົວ ແລະ ຄົວ < ເຮືອນຄົວ

๑.๘ ຈຸດພິເສດຂອງຕົວຕໍ

- ຕົວຄຳແມ່ນມູນພາກທີ່ນ້ອຍສຸດທາງດ້ານຮູບການ ແຕ່ມີຄວາມໝາຍ , ຖ້າພວກເຮົາຕັດແບ່ງມັນອອກ ຈະຍັງເຫຼືອແຕ່ສຽງເທົ່ານັ້ນ.

ຕົວຢ່າງ:

/hɛ:ŋ/ ຖ້າຕັດແບ່ງມັນອອກຈະຍັງເຫຼືອແຕ່

/h/ /ɛ:/ /ŋ/

- ມັນເຄີຍປາກົດຫຼາຍເທື່ອຢູ່ໃນຄຳເວົ້າຕ່າງກັນ ແຕ່ມັນຍັງຮັກສາຄວາມໝາຍເດີມຂອງມັນຢູ່.

ຕົວຢ່າງ:

① ນີ້ແມ່ນ<u>ປຶ້ມຂຽນ</u>ຂອງຂ້ອຍ.

② ນັ້ນແມ່ນ<u>ປຶ້ມຂຽນ</u>ຂອງລາວ.

③ ນີ້ແມ່ນ<u>ປຶ້ມຂຽນ</u>ຂອງໃຜ?.

④ ລາວບໍ່ມີ<u>ປຶ້ມຂຽນ</u>.

⑤ <u>ປຶ້ມຂຽນ</u>ຫົວນີ້ບາງກວ່າ<u>ປຶ້ມຂຽນ</u>ຫົວນັ້ນ.

- ມັນແມ່ນຫົວໜ່ວຍເພື່ອປະກອບສ້າງສັບ

ຕົວຢ່າງ:

① ເຮືອນກໍ່, ເຮືອນໄມ້, ເຮືອນຮ້ານ, ເຮືອນນອນ, ເຮືອນຄົວ,...

② Childhood, Childish, Childlike...

๑.๙ ການແບ່ງຊະນິດຕົວຕໍ

ອີງໃສ່ຄວາມເປັນເອກະລາດ ຫຼືບໍ່ເອກະລາດຂອງມັນ ເພິ່ນແບ່ງຕົວຄຳອອກເປັນ ๘ ຊະນິດຄື

- **ຕົວຄຳເອກະລາດ** ແມ່ນຕົວຄຳທີ່ສາມາດເຄື່ອນໄຫວ ແລະໃຊ້ເປັນເອກະລາດໄດ້ຢູ່ໃນທຸກໆ ສະພາບແວດລ້ອມຂອງພາສາ.

ຕົວຢ່າງ:

① ເຮືອນ, ໄປ ມາ ຄວາຍ

② house go come buffalo,...

- **ຕົວຄຳບໍ່ເອກະລາດ** ແມ່ນຈຳພວກຕົວຄຳທີ່ບໍ່ສາມາດໃຊ້ຢ່າງເອກະລາດໄດ້ ມັນຕ້ອງໄປກັບ ມູນພາກອື່ນ ຈຶ່ງມີຄວາມໝາຍ.

ຕົວຢ່າງ:

① ສຸ: ສຸພາບ, ສຸຂຸມ, ສຸຈິນດາ...

② ອະ: ອະທຳ, ອະເພດ, ອະສົງໄຂ...

③ un: unlike, undo, undress...

- ອີງໃສ່ພື້ນຖານໄວຍາກອນມູນເຊື້ອຂອງພາສາອິນດູ-ເອີຣົບ ເພິ່ນແບ່ງຕົວຄຳອອກເປັນ ๘ ຊະນິດ ຄື ຕົວແກນ ແລະຕົວສຳຮອງ.

ຕົວຢ່າງ:

gom - book ແມ່ນຕົວແກນ

ИК - ish ແມ່ນຕົວສຳຮອງ

๘. ສັບ(ຄຳສັບ)

๘.๑ ມະໂນພາບກ່ຽວກັບສັບ

ນິຍາມມະໂນພາບກ່ຽວກັບສັບ ແມ່ນບັນຫາທີ່ຍາກທີ່ສຸດ ຈົນມາຮອດປັດຈຸບັນນີ້ ຕາມຕົວເລກ ທີ່ບໍ່ທັນຄົບຖ້ວນນັ້ນ ແມ່ນມີປະມານ ๖๐๐ ຄຳທີ່ເຫັນ ເປັນຕົ້ນວ່າ

- ທ່ານ ອາແມນເລນ ນັກພາສາສາດຝຣັ່ງ : ສັບແມ່ນການປະສົມຄວາມໝາຍໃນສຽງໃດໜຶ່ງ ເຊິ່ງມີພາລະກຳໃດໜຶ່ງແນ່ນອນ.

- ທ່ານ ປີຕາກອກ ນັກພາສາສາດລັດເຊຍ ສັບແມ່ນຫົວໜ່ວຍທີ່ນ້ອຍສຸດເປັນເອກະລາດ , ປະກອບມີດ້ານວັດຖຸ ແລະນາມທຳ (ຮູບການ ແລະເນື້ອໃນ) ໄດ້ສົມທົບກັນຢູ່ໃນວິວັດສັດຈະວິພາກ ແລະປະຫວັດສາດ. ນອກຈາກສອງທ່ານທີ່ໄດ້ເອີ່ຍນາມໃນຂ້າງເທິງນີ້ ຍັງມີຫຼາຍທ່ານເວົ້າວ່າ:

+ ສັບ ແມ່ນບັ້ນຕອນໜຶ່ງທີ່ນ້ອຍສຸດມີຄວາມໝາຍ ແລະຄວາມສາມາດຢ່າງຮອບດ້ານ ແລະ ໃນຕົວຂອງມັນ ສາມາດເປັນປະໂຫຍກງ່າຍໄດ້.

+ ສັບ ແມ່ ນບັ້ນຕອນໜຶ່ງທີ່ນ້ອຍສຸດມີຄວາມໝາຍທີ່ໄດ້ປະກອບສ້າງດ້ວຍຕົວສຽງ ເຊິ່ງມີ ຄວາມສາມາດປ່ຽນບ່ອນເຊິ່ງກັນແລະກັນໃນປະໂຫຍກ.

+ ສັບ ແມ່ນຫົວໜ່ວຍໄວຍາກອນອັນໜຶ່ງ ທີ່ໄດ້ປະກອບສ້າງດ້ວຍຕົວສຽງ ໃຊ້ສຳລັບສະແດງ ເປົ້າໝາຍ, ວິວັດການ, ລັກສະນະ ແລະບັນດາສາຍພົວພັນຢູ່ໃນຕົວຈິງ, ມີຈຸດພິເສດຈະແຈ້ງ ແລະ ມີຄວາມສາມາດຜັນປ່ຽນຫຼາຍຮູບຫຼາຍແບບ.

✍ ສຳລັບພວກເຮົາເວລາກຳນົດສັບ ຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

- ສັບແມ່ນຫົວໜ່ວຍທີ່ຢູ່ລະຫວ່າງກາງຕົວຄຳ ແລະອະລິ.
- ສັບແມ່ນກ້ອນເອກະພາບອັນໜຶ່ງ ເຊິ່ງຄົບຖ້ວນທາງດ້ານຮູບການ ແລະເນື້ອໃນ.
- ສັບມີຄວາມສາມາດປະກອບສ້າງເປັນປະໂຫຍກ.

ພວກເຮົາສາມາດສະຫຼຸບໄດ້ວ່າ: *ສັບ ແມ່ນຫົວໜ່ວຍພື້ນຖານນ້ອຍສຸດຂອງພາສາ , ອາດຈະ ໃຊ້ເປັນເອກະລາດໄດ້, ມັນຮອບຄອບທາງດ້ານເນື້ອໃນກໍຄືຮູບການ ແລະມັນມີຄວາມ ສາມາດປະ ກອບສ້າງເປັນປະໂຫຍກ.*

๘.๘ ແບ່ງປະເພດຂອງສັບ

- ຖ້າອີງຕາມປະລິມານຂອງພະຍາງທີ່ນອນຢູ່ໃນສັບນັ້ນ, ເຂົາເຈົ້າແບ່ງສັບອອກເປັນ ๘ ປະເພດ ຄື

+ ສັບສຽງດຽວ ເທົ່າກັບສັບພະຍາງດຽວ ເຊັ່ນ ໄປ, ມາ, ນັ່ງ, ນອນ, ຮ້ອນ, ໜາວ...

+ສັບຫຼາຍສຽງ ເທົ່າກັບສັບຫຼາຍພະຍາງ ເຊັ່ນ ສັດຈະ , ຄຸນະພາບ, ຄະນະອັກສອນສາດ, ມະຫາວິທະຍາໄລ..

- ຖ້າອີງຕາມປະລິມານຂອງຕົວຄຳທີ່ມີຢູ່ໃນສັບນັ້ນ ເຂົາເຈົ້າແບ່ງສັບອອກເປັນ ๘ ປະເພດ ຄື
+ ສັບໂດດ(ຄຳປ່ຽວ) ເທົ່າກັບຕົວຄຳໜຶ່ງ ເຊັ່ນ ບ້ານ, ເມືອງ, ແຂວງ, ພູ, ຜາ...
+ ສັບປະສົມ ສ້າງຂຶ້ນບົນພື້ນຖານຫຼາຍຕົວຄຳ ເຊັ່ນ ເຮືອນຢູ່, ດຸໝັ່ນ, ພໍ່ແມ່...
- ຖ້າອີງໃສ່ໂຄງປະກອບສ້າງ ເຂົາເຈົ້າແບ່ງສັບອອກເປັນ ๘ ປະເພດ ຄື
+ ສັບປະສົມດ້ານຄວາມໝາຍ: ອີງໃສ່ຄວາມໝາຍເປັນຕົ້ນຕໍ ເຊັ່ນ ກິນຢູ່, ນຸ່ງຖື, ໄປມາ...
+ ສັບປະສົມດ້ານສຽງ: ອີງໃສ່ສຽງເປັນຕົ້ນຕໍ ເຊັ່ນ ຄົ້ນຄວ້າ, ຮຽບຮຽງ, ກາບກອນ, ຂົ່ມຂູ່...

๓. ອະລິ(ກຸ່ມຄຳ)

๓.๑ ມະໂນພາບກ່ຽວກັບອະລິ

ອະລິແມ່ນການສັງຮວມບັນດາສັບຕັ້ງແຕ່ສອງສັບແທ້ຂຶ້ນໄປ ໃນນັ້ນມີມູນພາກໜຶ່ງເປັນໃຈກາງ ແລະມູນພາກໜຶ່ງ ຫຼືຫຼາຍມູນພາກສຳຮອງ ເຊິ່ງປະກອບສ້າງຂຶ້ນຕາມຫຼັກການອາກະຍະສຳພັນແບບ ຕົ້ນຕໍ ແລະສຳຮອງ.

ຕົວຢ່າງ:

ປຶ້ມຫົວໜຶ່ງ (ປຶ້ມ ຕົ້ນຕໍ).

ຕັ່ງຍາວຫຼາຍໜ່ວຍ (ຕັ່ງ ຕົ້ນຕໍ).

ສຳເລັດຕາມແຜນການ (ສຳເລັດ ຕົ້ນຕໍ).

ມ່ວນຊື່ນເບີກບານໃຈ (ມ່ວນ ຕົ້ນຕໍ).

๓.๘ ການແບ່ງປະເພດອະລິ

ຕາມທຳມະດາແລ້ວ, ເຂົາເຈົ້າແບ່ງອະລິອອກເປັນ ๘ ປະເພດຄື ອະລິເສລີ ແລະອະລິຄົ້ງຕົວ.

+ ອະລິເສລີ ແມ່ນໝວດຄຳເວົ້າໜຶ່ງ ເຊິ່ງມີໂຄງປະກອບສ້າງນຳກັນແບບຊ໊ວຄາວ , ຄວາມໝາຍຂອງມັນແມ່ນຄວາມໝາຍທີ່ໄດ້ມາຈາກຄວາມໝາຍຂອງແຕ່ລະສັບທີ່ປະກອບເຂົ້ານັ້ນ ແລະມັນເປັນເປົ້າໝາຍຄົ້ນຄວ້າຂອງໄວຍາກອນ.

ຕົວຢ່າງ:

- ຮູບແຜ່ນນັ້ນ
- ຄວາຍບັກຕູ້
- ເຮືອນຫຼັງນີ້

+ ອະລິຄົ້ງຕົວ ແມ່ນໝວດຄຳເວົ້າໜຶ່ງ ເຊິ່ງມີມາແຕ່ເທິງນານ ມັນມີໂຄງປະກອບສ້າງແນ່ນອນ ຄວາມໝາຍຂອງມັນແມ່ນຄວາມໝາຍສັງຮວມ ແລະເປັນເປົ້າໝາຍຄົ້ນຄວ້າຂອງວັດຈະນາເພາະມັນເທົ່າທຽມກັບສັບໜຶ່ງ.

ຕົວຢ່າງ:

- ສຸກກ່ອນເທີ່ມ(ຜິດປົກກະຕິ)
- ໝາກິນຄວາມຄິດ(ໂງ່)
- ງາມປານນາງຟ້າ(ງາມທີ່ສຸດ)

ການຈັດແບ່ງປະເພດອະລິໃນແຕ່ລະພາສາມັນບໍ່ຄືກັນ ອັນນີ້ແມ່ນອີງຕາມຈຸດພິເສດຂອງແຕ່ລະພາສາ, ແຕ່ສາມາດສັງຮວມໄດ້ ໓ ປະເພດຕົ້ນຕໍ ຄື

① ນາມອະລິ ແມ່ນກຸ່ມຄຳທີ່ຂຶ້ນຕົ້ນດ້ວຍຄຳນາມ ເຊັ່ນ ນົກເຂົາຕູ້, ຕູ້ຈັນລາ, ຊາວເມືອງວັງວຽງ...

② ກຳມະອະລິ ແມ່ນກຸ່ມຄຳທີ່ມີຄຳກຳ ມະເປັນໃຈກາງ ເຊັ່ນ ພວມອ່ານ, ສົ້ນພະຊົນ, ໄປນອນ, ເລີກຫຼິ້ນ...

③ ຄຸນນາມອະລິ ແມ່ນກຸ່ມຄຳທີ່ມີຄຳຄຸນນາມຢູ່ໜ້າ ເຊັ່ນ ງາມຫຼາຍເຫຼືອລົ້ນພົ້ນປະມານ, ມືດປານກຳຕາ, ຫວານເປັນລົມຂົມເປັນຢາ...

ສະເພາະໃນພາສາລາວເຮົາ, ເພິ່ນຈັດແບ່ງອະລິອອກເປັນ ๗ ປະເພດ ຄື ນາມອະລິ, ແທນນາມອະລິ, ກຳມະອະລິ, ຄຸນນາມອະລິ, ຄຳເຊື່ອມອະລິ, ຄຳຕໍ່ອະລິ ແລະຄຳອຸທານອະລິ.

๔. ປະໂຫຍກ

๔.๑ ຄວາມສຳພັນກ່ຽວກັບປະໂຫຍກ

ປະໂຫຍກແມ່ນຫົວໜ່ວຍໄວຍາກອນອັນໜຶ່ງ ເຊິ່ງປະກອບຂຶ້ນບົນ ພື້ນຖານສັບຢູ່ໃນວິວັດແຫ່ງການຄົ້ນຄິດ, ບອກເລົ່າ; ມັນມີຄວາມໝາຍຮອບຄອບພໍສົມຄວນ, ມີລັກສະນະເອກະລາດ ແລະ ມີໂຄງສ້າງສົມບູນ. ເວລາເວົ້າ, ປະໂຫຍກເວລາໃດມັນກໍມີທຳນອງໃດໜຶ່ງແນ່ນອນ, ເວລາຂຽນປະໂຫຍກ ຈະຖືກຂັ້ນດ້ວຍຈ້ຳ(.), ຈ້ຳໆ(...), ໝາຍຖາມ(?), ຫຼືໝາຍທ້ວງ(!)...

ຕົວຢ່າງ:

- ນັກຮຽນຂຽນໜັງສື.
- ເຈົ້າມາແຕ່ໃສ?
- ມັນມາແລ້ວ!
- ພວກເຮົາຕ້ອງເອົາໃຈໃສ່ຮ່ຳຮຽນ, ຄົ້ນຄວ້າ, ຝຶກຝົນ...

๔.๘ ຊະນິດຂອງປະໂຫຍກ

❖ ອີງໃສ່ຈຸດປະສົງຂອງການປາກເວົ້າ ເພິ່ນແບ່ງປະໂຫຍກອອກເປັນ ๔ ຊະນິດ ຄື

① ປະໂຫຍກບອກເລົ່າ: ລາວໄປຕະຫຼາດ.

② ປະໂຫຍກຮ້ອງຂໍ: ຂໍໃຫ້ທ່ານເດີນທາງດ້ວຍຄວາມປອດໄພ.

③ ປະໂຫຍກຖາມ: ໃຜເວົ້າແນວນີ້?.

④ ປະໂຫຍກສັ່ງ: ເຈົ້າຕ້ອງໄປດຽວນີ້.

⑤ ປະໂຫຍກອຸທານ: ໂອ! ລາວຕັດສິນໃຈຖືກແລ້ວ!

❖ ອີງໃສ່ໂຄງສ້າງ ເພິ່ນໄດ້ແບ່ງປະໂຫຍກອອກເປັນ ๘ ຊະນິດ ຄື

① ປະໂຫຍກສາມັນ ຫຼືປະໂຫຍກງ່າຍ: ໂດຍທົ່ວໄປແລ້ວມີຢູ່ ๓ ພາກສ່ວນ ຄື ຕົວຕັ້ງ, ກຳມະ(ສຳແດງ) ແລະຕົວປະກອບ.

ຕົວຢ່າງ: - ລາວອ່ານໜັງສື.

- ຄວາຍກິນຫຍ້າ.
- ຊາວນາກ່ຽວເຂົ້າ.

② ປະໂຫຍກປະສົມ ຫຼືປະໂຫຍກສົມ ແມ່ນປະໂຫຍກທີ່ມີຫຼາຍເຫດການສະແດງຢູ່ໃນຂອບເຂດດຽວ ຫຼືເວົ້າວ່າແມ່ນປະໂຫຍກທີ່ໄດ້ມາຈາກການປະສົມຂອງຫຼາຍປະໂຫຍກນ້ອຍຕໍ່ເຂົ້າກັນ ໂດຍໃຊ້ຄຳເຊື່ອມ ຫຼືຄຳຕໍ່.

ຕົວຢ່າງ: - ຂ້ອຍແກ້ບົດເລກ<u>ແຕ່</u>ລາວເບິ່ງໂທລະພາບ.
- ລາວຈະໄປທະນາຄານ<u>ແຕ່</u>ຝົນລົມແຮງຈຶ່ງໄປບໍ່ໄດ້.
- ເຈົ້າອ່ານໜັງສືພິມ<u>ແຕ່</u>ລາວຟັງເພງ...

๔.๑ ບັນຫາທີ່ຄວນຈື່

ການຄົ້ນຄວ້າພາສາເວົ້າລວມ, ເວົ້າສະເພາະແມ່ນການຄົ້ນຄວ້າໄວຍາກອນ(ປະໂຫຍກ) ເພິ່ນເຄີຍນຳໃຊ້ວິຊາຄວາມໝາຍຂອງສັບ ເຂົ້າໃນການຄົ້ນຄວ້າວາກະຍະສຳພັນ . ບັນຫາໜຶ່ງອີກ, ການແບ່ງຊະນິດປະໂຫຍກໃນແຕ່ລະພາສາ ອາດຈະມີຄວາມຕ່າງກັນ ເຊິ່ງອີງຕາມຈຸດພິເສດຂອງແຕ່ລະພາສານັ້ນ, ສະເພາະພາສາລາວຂອງພວກເຮົາ ເພິ່ນແບ่งປະໂຫຍກອອກເປັນ ๗ ຊະນິດ ຄື

❶ ປະໂຫຍກກົງ: - ຄວາຍຊົນກັນ.
❷ ປະໂຫຍກອ້ອມ: - ແມ່ໃຫ້ລູກໄປຕະຫຼາດ.
❸ ປະໂຫຍກຮັບ: - ໝາຖືກລົດຢຽບ.
❹ ປະໂຫຍກກຸ້ມຕົວ: - ໄກ່ຂັນ.
❺ ປະໂຫຍກບໍ່ກຸ້ມຕົວ: - ລາວໄປ<u>ຫ້ອງການ</u>(ຕ້ອງມີໂຕປະກອບ ຈຶ່ງມີຄວາມໝາຍ).
❻ ປະໂຫຍກສາມັນ: - ໄກ່ຂັນມ່ວນ.
❼ ປະໂຫຍກປະສົມ: - ຂ້ອຍໄປໂຮງຮຽນເພື່ອຮຽນໜັງສື.

ຄຳຖາມ

๑. ແນວໃດຈຶ່ງເອີ້ນວ່າຕົວຄຳ, ສັບ, ວະລີ ແລະປະໂຫຍກ?
๘. ຈົ່ງຊອກຄຳທີ່ເປັນເອກະລາດ ແລະບໍ່ເອກະລາດໃຫ້ໄດ້ ๑๐ ຄຳ.

ບົດທີ ๓

ວິທີການ ແລະມາດເກນໄວຍາກອນ

I. ວິທີການໄວຍາກອນ

๑. ມະໂນພາບກ່ຽວກັບວິທີການໄວຍາກອນ

ຮູບການໄວຍາກອນແມ່ນອຸດົມສົມບູນ, ແຕ່ພວກເຮົາກໍສາມາດກຳນົດເປັນຮູບການໃດໜຶ່ງໄດ້. ຮູບການທີ່ເຮົາກຳນົດໄດ້ນັ້ນ ເອີ້ນວ່າ ວິທີການໄວຍາກອນ. ວິທີການໄວຍາກອນເວລາໃດ ກໍມີປະລິມານໜ້ອຍກວ່າຮູບການໄວຍາກອນ ເພາະວ່າວິທີການໄວຍາກອນ ໄດ້ມາຈາກການສັງຮວມຫຼາຍຮູບການໄວຍາກອນ.

ຕົວຢ່າງ: ໃນພາສາອັງກິດມີຫຼາຍຮູບການ ເຊັ່ນ ແບ ບການແຈກມີ ເພດ , ພົດ, ກາລະ. ເຂົາເຈົ້າໄດ້ສັງລວມຮູບການໄວຍາກອນເຫຼົ່ານີ້ເຂົ້າເປັນວິທີການໄວຍາກອນໃດໜຶ່ງ ເອີ້ນວ່າ ວິທີການເພີ່ມຄຳ.

ຕົວຢ່າງ: - I go ບຸລຸດທີ ๑ ເອກະພົດ, ກາລະປັດຈຸບັນ.
- You go ບຸລຸດທີ ๘ ເອກະພົດ, ກາລະປັດຈຸບັນ.
- She go ບຸລຸດທີ ๓ ເອກະພົດ, ກາລະປັດຈຸບັນ.

๘. ວິທີການໄວຍາກອນ

ໃນໂລກພາສາສາດປັດຈຸບັນນີ້, ເຂົາເຈົ້າໄດ້ສັງລວມວິທີການໄວຍາກອນ ๗ ວິທີ ຄື ວິທີເພີ່ມຄຳ, ວິທີຊ້ຳຄຳ, ວິທີປ່ຽນສຽງອັກຂະຫຼະ, ວິທີປ່ຽນຄຳມູນ, ວິທີເນັ້ນຄຳ, ວິທີລະບຽບຄຳ, ວິທີໃຊ້ຄຳທີ່ມີໃຈຄວາມບໍ່ເຕັມ ແລະວິທີການໃຊ້ທຳນອງສຽງ.

๘.๑ ວິທີການເພີ່ມຄຳ

ວິທີການເພີ່ມຄຳ ແມ່ ນການໃຊ້ຄຳອື່ນມາເພີ່ມໃສ່ຄຳເດີ້ ແລ້ວຄວາມໝາຍໄວຍາກອນຂອງມັນຈະຕ່າງເກົ່າ, ມູນພາກທີ່ເອົາມາປະກອບຕື່ມນັ້ນ ແມ່ນມູນພາກທີ່ປະກອບສ້າງຄຳ ຫຼືມູນພາກເພື່ອສະແດງຄວາມໝາຍໄວຍາກອນ ແລະຄຳທີ່ເອົາມາປະກອບນັ້ນ ສ່ວນຫຼວງຫຼາຍແລ້ວ ແມ່ນບໍ່ມີຄວາມໝາຍ.

ຕົວຢ່າງ: **ພາສາອັງກິດ**

- ຄຳເດີມແມ່ນ build (ສ້າງ)
  builder (ຜູ້ສ້າງ)
  building(ອາຄານ)
- ຄຳເດີມແມ່ນ farm (ທົ່ງນາ, ສະໜາມ)
  farmer (ຊາວນາ)
  farming(ການເຮັດນາ)

๔.๘ ວິທີການປ່ຽນສຽງອັກຂະຫຼະ

ວິທີການປ່ຽງສຽງອັກຂະຫຼະ ແມ່ນວິທີການປ່ຽງສຽງອັກຂະຫຼະເຄົ້າ ເພື່ອສະແດງຄວາມໝາຍໄວຍາກອນໃໝ່. ວິທີນີ້ບໍ່ແມ່ນການເພີ່ມຄຳອື່ນເຂົ້າໃສ່ຄຳເຄົ້າ, ມັນແມ່ນອັກຂະຫຼະບາງຕົວໃນຄຳເຄົ້ານັ້ນປ່ຽນເປັນຕົວໃໝ່ ເພື່ອສະແດງຄວາມໝາຍໄວຍາກອນຕ່າງຈາກຄຳເດີມ.

ຕົວຢ່າງ:

- **ພາສາອັງກິດ:** ເອກະພົດ ພະຫຸພົດ
  man men
  tooth teeth
  foot feet

๔.๙ ວິທີການປ່ຽນຄຳເຄົ້າ

ວິທີການປ່ຽນຄຳເຄົ້າ ແມ່ນວິທີການໃຊ້ຄຳເຄົ້າຕ່າງກັນ ເພື່ອສະແດງຄວາມໝາຍໄວຍາກອນຕ່າງກັນ, ສ່ວນຄວາມໝາຍວັດຈະນາບໍ່ປ່ຽນແປງ.

ຕົວຢ່າງ:

- **ພາສາລາວ:** ຄົນ(ເອກະພົດ)
  ມວນຊົນ(ພະຫຸພົດ)
  ພວກນັກສຶກສາ(ພະຫຸພົດ)
- **ພາສາອັງກິດ:** I - me ຂ້ອຍ(ບຸລຸດທີ ๑, ເອກະພົດ)
  we - us ພວກເຮົາ(ບຸລຸດທີ ๑, ພະຫຸພົດ)

๔.๔ ວິທີການເນັ້ນສຽງ

ວິທີການເນັ້ນສຽງ ແມ່ນ ວິທີເນັ້ນສຽງຢູ່ໃນສັບໃດໜຶ່ງ ຫຼືປະໂຫຍກໃດໜຶ່ງ , ການເນັ້ນສຽງຢູ່ໃນປະໂຫຍກບໍ່ຄົງຕົວ ເພາະມັນປ່ຽນແປງໄປຕາມຈຸດປະສົງ ແລະຄວາມສຳຄັນຂອງເນື້ອໃນປະໂຫຍກນັ້ນ; ສ່ວນການເນັ້ນສຽງໃນຄຳສັບແມ່ນບັນຫາສຳຄັນທີ່ສຸດ ໂດຍສະເພາະແມ່ນຢູ່ໃນພາສາທີ່ປ່ຽນຮູບ.

ຕົວຢ່າງ:

- **ພາສາອັງກິດ:** protest [prɔ´test]v. (ຄັດຄ້ານ)
  Protest [´proutest]n. (ການຄັດຄ້ານ)
  eleven[´ilevən]
  morning[´mɔ:ning]

๔.๕ ວິທີການຊ້ຳຄຳ

ວິທີການຊ້ຳຄຳ ແມ່ນການຊ້ຳຄືນຄຳເກົ່າ ເພື່ອສະແດງຄວາມໝາຍໄວຍາກອນໃໝ່ , ສ່ວນຄວາມໝາຍວັດຈະນາບໍ່ປ່ຽນແປງ. ບັນຫານີ້, ໃນພາສາລາວເຮົາຍັງບໍ່ທັນແນ່ນອນ ເພາະການຊ້ຳຄຳໃນພາສາລາວ ຍັງບໍ່ທັນໄດ້ສະແດງຄວາມໝາຍໄວຍາກອນຈະແຈ້ງເທື່ອ.

ຕົວຢ່າງ:

- **ພາສາລາວ:** ດຳ ⟶ ດຳໆ
  ງາມ ⟶ ງາມໆ
  ຮ້ອນ ⟶ ຮ້ອນໆ
  } ຊ້ຳຄືນຄຳເກົ່າ, ແຕ່ກໍຍັງເປັນຄຸນນາມ

- **ພາສາມາລະຢູ:** ກໍລະນີຊ້ຳຄຳແມ່ນສະແດງຄວາມໝາຍໄວຍາກອນຊັດແຈ້ງ ເຊັ່ນ
  orang ຄົນ(ເອກະພົດ)
  orang orang ຫຼາຍຄົນ(ພະຫຸພົດ)

- **ພາສາຫວຽດນາມ** ກໍລະນີຊ້ຳຄຳທີ່ສະແດງຄວາມໝາຍໄວຍາກອນກໍມີຄືກັນ ເຊັ່ນ
  ngùơi ⟶ ngùơi ngùơi
  ngành ⟶ ngành ngành

๘.๗ ວິທີການໃຊ້ລະບຽບຄຳ

ວິທີການໃຊ້ລະບຽບຄຳ ແມ່ນວິທີສັບຊ້ອນຄຳໃນປະໂຫຍກໜຶ່ງ ຫຼືອະລີໜຶ່ງ ເພື່ອສະແດງຄວາມໝາຍໄວຍາກອນ, ການປ່ຽນແປງໃນປະໂຫຍກຈະເຮັດໃຫ້ຄວາມໝາຍໄວຍາກອນປ່ຽນແປງ. ທຸກໆພາສາໃນໂລກນີ້, ລ້ວນແຕ່ມີການໃຊ້ລະບຽບຄຳ ຕ່າງແຕ່ວ່າຖືເປັນບັນຫາສຳຄັນໜຸດລື່ນກັນ , ສະເພາະພາສາບໍ່ປ່ຽນຮູບ ແມ່ນຖືວິທີການນີ້ສຳຄັນທີ່ສຸດ.

ຕົວຢ່າງ:

- **ພາສາລາວ:** ຂ້ອຍຂຽນຈົດໝາຍ
  ຈົດໝາຍຂຽນຂ້ອຍ
  ຂຽນຈົດໝາຍຂ້ອຍ

๘.๘ ວິທີໃຊ້ຄຳທີ່ມີໃຈຄວາມບໍ່ເຕັມ

ຄຳທີ່ມີໃຈຄວາມບໍ່ເຕັມ ແມ່ນຄຳທີ່ເປັນພາຫະນະ ເພື່ອສະແດງຄວາມໝາຍໄວຍາກອນ ເຊິ່ງໃນຕົວມັນເອງແລ້ວ, ບໍ່ມີຄວາມໝາຍວັດຈະນານຸກົມແນ່ນອນ; ຖ້າວ່າມີກໍບໍ່ແຈ້ງແລະກໍບໍ່ສາມາດຢືນຢູ່ຢ່າງເອກະລາດໄດ້. ປະລິມານຂອງຄຳທີ່ມີໃຈຄວາມບໍ່ເຕັມນີ້ມີໜ້ອຍ ແຕ່ການປາກົດຕົວຂອງມັນຊ້ຳພັດຫຼາຍ. ວິທີການນີ້ແມ່ນມີຢູ່ໃນທຸກໆພາສາ ໂດຍສະເພາະແມ່ນພາສາທີ່ບໍ່ປ່ຽນຮູບ ໄດ້ຖືເປັນບັນຫາສຳຄັນພິເສດ. ຄຳທີ່ມີໃຈຄວາມບໍ່ເຕັມນີ້ ແມ່ນຄຳຈຳພວກທີ່ບອກເຖິງ ເພດ, ພົດ, ຄຳເຊື່ອມ ຫຼືຄຳຕໍ່ ເພື່ອສະແດງເຖິງການພົວພັນດ້ວຍກັນ.

ຕົວຢ່າງ:

- **ພາສາລາວ:** ເຖິງ, ຈະ, ຫາກ, ແຕ່, ແລະ, ກັບ, ເພາະວ່າ, ສະນັ້ນ(ຄຳເຊື່ອມ ແລະຄຳຕໍ່).
- **ພາສາຝຣັ່ງ:** le, la, un, une, les...
- **ພາສາອັງກິດ:** a, an, the...

๔.๗ ວິທີໃຊ້ທຳນອງສຽງ

ວິທີການໃຊ້ທຳນອງສຽງ ແມ່ນການໃຊ້ທຳນອງສຽງຂຶ້ນ-ລົງ, ຕ່ຳ-ສູງ, ໜັກ-ເບົາ ຢູ່ໃນປະໂຫຍກໃດໜຶ່ງ ແລະພາສາໃດກໍໃຊ້ວິທີນີ້ຄືກັນ . ສະເພາະພາສາລາວ, ສ່ວນຫຼາຍແລ້ວພວກເຮົາໃຊ້ວິທີນີ້ໃນພາສາປາກເວົ້າ, ສ່ວນພາສາຂຽນແມ່ນໃຊ້ເຄື່ອງໝາຍກຳນົດຮູບເອົາ.

ຕົວຢ່າງ: ມັນມາແລ້ວ (ທຳມະດາ)

ມັນມາແລ້ວ? (ມີລັກສະນະຕົກໃຈ)

ມັນມາແລ້ວ! (ມີລັກສະນະເຕືອນໄພ)

ໃນວິທີການທັງ ๗ ນີ້, ເພິ່ນໄດ້ແບ່ງອອກເປັນ ๘ ຊະນິດໃຫຍ່ ຄື ສັງຮວມ ແລະໄຈແຍກ.

✸ ຊະນິດສັງຮວມ: ປະກອບດ້ວຍວິທີເພີ່ມຄຳ, ປ່ຽນສຽງອັກຂະຫຼະ, ປ່ຽນຄຳເຄົ້າ, ເນັ້ນຄຳ ແລະຊ້ຳຄຳ. ຖ້າພາສາໃດໃຊ້ວິທີເຫຼົ່ານີ້ຫຼາຍ ພາສານັ້ນແມ່ນມີລັກສະນະສັງຮວມ.

✸ ຊະນິດໄຈ້ແຍກ: ປະກອບດ້ວຍວິທີໃຊ້ລະບຽບຄຳ, ການໃຊ້ຄຳໃຈຄວາມບໍ່ເຕັມ ແລະການໃຊ້ທຳນອງສຽງ, ຖ້າພາສາໃດໃຊ້ວິທີເຫຼົ່ານີ້ຫຼາຍ ແລະເປັນຈຸດໜັກ ; ພາສານັ້ນແມ່ນມີລັກສະນະໄຈແຍກ.

II. ມາດເກນໄວຍາກອນ

๑. ມະໂນພາບກ່ຽວກັບມາດເກນໄວຍາກອນ

ມາດເກນໄວຍາກອນແມ່ນການສັງຮວມແບບນາມທຳ ເຊິ່ງໄດ້ມາຈາກຄວາມໝາຍໄວຍາກອນຫຼາຍຄວາມໝາຍ; ໜ້ອຍທີ່ສຸດກໍຈະແມ່ນສອງ ແຕ່ຕ້ອງແມ່ນຊະນິດດຽວຈຶ່ງໂຮມເປັນມາດເກນໜຶ່ງໄດ້. ເວົ້າອີກແບບໜຶ່ງ, ມາດເກນໄວຍາກອນແມ່ນການກຳນົດເປັນຊະນິດ ຫຼືການສັງລວມບັນດາຄວາມໝາຍໄວຍາກອນສະເພາະ ເພື່ອໃຫ້ເປັນຫົວໜ່ວຍໃຫຍ່ຂອງມັນ.

ຕົວຢ່າງ:

- ພາສາບາລີ ຄຳເດີມແມ່ນ “ສຸຣິຍະ”

ສຸຣິໂຍ { ແຈກແບບທີ ๑ / ເອກະພົດ / ເພດຜູ້

ໃນສັບ “ສຸຣິໂຍ” ມັນສັງຮວມເອົາສາມມາດເກນ ຄື ວິທີແຈກ, ເພດ ແລະພົດ.

ໃນບັນດາມາດເກນໄວຍາກອນ ແມ່ນໄດ້ມາຈາກການສັງຮວມຄວາມໝາຍໄວຍາກອນ ພ້ອມຊະນິດຂອງຄຳນາມ, ແຕ່ລະພາສາກໍລ້ວນແລ້ວແຕ່ມີມາດເກນໄວຍາກອນ ແຕ່ຫາກມີບໍ່ຄືກັນ , ພາສານີ້ມີມາດເກນນີ້ ແຕ່ຢູ່ໃນພາສາອື່ນພັດບໍ່ມີ.

๒. ບັນດາມາດເກນໄວຍາກອນ

ມາຮອດປັດຈຸບັນນີ້, ໂລກແຫ່ງພາສາສາດໄດ້ຈັດແບ່ງ ມາດເກນໄວຍາກອນອອກເປັນເທົ່າໃດນັ້ນ ມັນຍັງແມ່ນບັນຫາທີ່ສັບສົນຢູ່ ; ເພາະບາງພາສາກໍມີໜ້ອຍ, ບາງພາສາພັດມີຫຼາຍ ຍິ່ງກວ່າ

ນັ້ນຍັງມີບາງພາສາບໍ່ທັນມີຕົວໜັງສື. ເຖິງແມ່ນເປັນບັນຫາສັບສົນ ແຕ່ພວກເຮົາກໍສາມາດກຳນົດໄດ້ ຄືມາດເກນກ່ຽວກັບເພດ, ພົດ, ກາລະ, ບຸລຸດ ວິທີແຈກ ເປັນຕົ້ນ.

๔.๑ ມາດເກນກ່ຽວກັບເພດ

ມາດເກນນີ້ມັກມີຢູ່ກັບຄຳນາມ ແລະຄຳຄຸນນາມເປັນສ່ວ ນຫຼາຍ ແລະແຕ່ລະພາສາກໍມີມາດ ເກນນີ້ຄືກັນ, ແຕ່ຫາກມີໃນກໍລະນີຕ່າງກັນ. ໂດຍທົ່ວໄປແລ້ວມີ ๓ ເພດ ຄື ເພດຜູ້, ເພດແມ່ ແລະ ອະເພດ.

- ບາງພາສາຈັດເປັນ ๔ ເພດ ຄື ຊີວະເພດ ແລະອະຊີວະເພດ.
- ບາງພາສາຈັດເປັນເພດສູງ, ເພດຕ່ຳ, ເພດແຮງ, ເພດອ່ອນ.
- ພາສາຝຣັ່ງຈັດອອກເປັນ ๔ ເພດ ຄື ເພດຜູ້ ແລະເພດແມ່.
- ພາສາລາວ ແລະພາສາລັດເຊຍ ຈັດເປັນ ๓ ເພດ ຄື ເພດຜູ້, ເພດແມ່ ແລະອະເພດ.

ບັນຫາມາດເກນກ່ຽວກັບເພດ ແມ່ນບັນຫາທີ່ສັບສົນ ແມ່ນແຕ່ພາສາທີ່ໄດ້ຮັບການພັດທະນາ ແລ້ວ ກໍຍັງມີຄວາມຫຍຸ້ງຍາກກ່ຽວກັບເພດ, ບາງກໍລະນີກໍອະທິບາຍຍາກທີ່ສຸດ ວ່າເປັນຫຍັງຈຶ່ງເປັນ ແນວນັ້ນ.



- ພາສາລັດເຊຍ cTOЛ ເພດຜູ້
- ພາສາຝຣັ່ງ table ເພດແມ່
- ພາສາອັງກິດ desk ອະເພດ

} ?

๔.๔ ມາດເກນກ່ຽວກັບພົດ

ມາດເກນກ່ຽວກັບພົດນີ້ ກໍມີຢູ່ໃນທຸກໆພາສາ ແລະທຳມະດາແລ້ວຈະມີ ๔ ພົດ ຄື ເອກະພົດ ແລະພະຫຸພົດ. ມາດເກນກ່ຽວກັບພົດນີ້, ອາດສະແດງດ້ວຍຫຼາຍວິທີ ເຊັ່ນ ໃນພາສາຝຣັ່ງ ແລະ ພາສາອັງກິດ; ຖ້າແມ່ນຄຳນາມ ໂດຍທົ່ວໄປແລ້ວ, ເມື່ອເປັນຈຳນວນຫຼາຍມັນຕື່ມ "s" ໃສ່ທ້າຍຄຳ, ແຕ່ມັນກໍຍັງມີກໍລະນີພິເສດຂອງມັນຫຼາຍວິທີອີກ.

ຕົວຢ່າງ:

- **ພາສາຝຣັ່ງ**: table - les tables
- **ພາສາອັງກິດ**: book - books
- **ພາສາລາວ**: ມີ ເພດ ๓ ຄື ເອກະພົດ, ພະຫຸພົດ ແລະອະພົດ.

๘.๓ ມາດເກນກ່ຽວກັບວິທີແຈກ

ມາດເກນກ່ຽວກັບວິທີແຈກ ມັນສະແດງອອກດ້ວຍການປ່ຽນຮູບຂອງສັບ , ມັນມີຢູ່ກັບພາສາທີ່ປ່ຽນຮູບ; ສ່ວນພາສາບໍ່ປ່ຽນຮູບບໍ່ນິຍົມໃຊ້, ແຕ່ລະພາສາທີ່ມີມາດເກນນີ້ ກໍມີວິທີແຈກຕ່າງກັນ, ໃນພາສາທີ່ເປັນຄຳໂດດ ບໍ່ມີມາດເກນກ່ຽວກັບວິທີແຈກ ມີແຕ່ວິທີລະບຽບຄຳ.

ຕົວຢ່າງ:

- ພາສາລັດເຊຍ ແລະພາສາລາແຕ້ງ ມີ ๖ ວິທີແຈກ.
- ພາສາບາລີ-ສັນສະກິດ ມີ ๗ ວິທີແຈກ.

๘.๔ ມາດເກນກ່ຽວກັບກາລະ

ມາດເກນກ່ຽວກັບກາລະ ຕ່າງແຕ່ວ່າວິທີການສະແດງອອກຕ່າງກັນ ແລະຕາມທຳມະດາແລ້ວ ມີ ๓ ຄວາມໝາຍຕົ້ນຕໍ ຄື ປັດຈຸບັນ, ອະດີດ ແລະອະນາຄົດ. ແຕ່ລະພາສາກໍກຳນົດກ່ຽວກັບມາດເກນນີ້ຕ່າງກັນ. ສະເພາະພາສາອັງກິດເຂົາເຈົ້າໄດ້ແບ່ງກາລະປັດຈຸບັນອອກ ๔ ຕື່ມອີກ ຄື ປັດຈຸບັນທຳມະດາ, ປັດຈຸບັນກຳລັງເຮັດ, ປັດຈຸບັນສົມບູນ ປັດຈຸບັນສົມບູນກຳລັງເຮັດ.

ຕົວຢ່າງ: ① I study Chinese
② I am studying Chinese
③ I have studied Chinese
④ I have been studying Chinese

๘.๕ ມາດເກນກ່ຽວກັບບຸລຸດ

ມາດເກນນີ້ກໍມີຢູ່ໃນທຸກໆພາສາ ແລະສ່ວນຫຼາຍແລ້ວພາສາໃນໂລກນີ້ ໄດ້ແບ່ງອອກເປັນ ๓ ບຸລຸດ ຄື ① ຜູ້ເວົ້າເອງ
② ຜູ້ທີ່ເຮົາເວົ້ານຳ
③ ຜູ້ທີ່ເຮົາເວົ້າເຖິງ

ໃນພາສາທີ່ປ່ຽນຮູບ ແຕ່ລະບຸລຸດເປັນຜູ້ຕັດສິນການປ່ຽນແປງຮູບຂອງຄຳກຳມະ .

ຕົວຢ່າງ:

- **ພາສາລັດຝຣັ່ງ** Je parle
  Tu parles
  Il parle
- **ພາສາອັງກິດ:** I speak
  You speak
  He speaks

๘.๖ ມາດເກນກ່ຽວກັບກາລິກແລະວາຈົກ

ມາດເກນນີ້ຖືວ່າສັບສົນກວ່າໝູ່ ເພາະມັນເວົ້າເຖິງຈັງຫວະຂອງການກະທຳ ແລະຂອບເຂດຂອງການກະທຳ, ແຕ່ລະພາສາໃນໂລກນີ້ ກໍມີກາລິກ ແລະວາຈົກຕ່າງກັນ.

ຕົວຢ່າງ: ໃນພາສາອັງກິດ ເຂົາເຈົ້າໄດ້ຈັດໄວ້ດັ່ງນີ້:

- Active voice: The hunter shot the lion.
- Passive voice: The lion was shot by the hunter.

ຫາກພວກເຮົາເບິ່ງຄັກແລ້ວຈະເຫັນວ່າ ບາງພາສາກໍມີຄົບທຸກມາດເກນ, ແຕ່ບາງພາສາກໍບໍ່ຄົບ, ແຕ່ລະພາສາອາດຈະເນັ້ນໜັກມາດເກນໃດໜຶ່ງ ເພື່ອຄວາມສະດວກ ແລະເໝາະສົມແຕ່ລະພາສານັ້ນ.

ຄຳຖາມ

๑. ວິທີການໄວຍາກອນແມ່ນຫຍັງ? ໃນໄວຍາກອນລວມມີຈັກວິທີການ, ແຕ່ລະວິທີການນັ້ນເປັນແນວໃດ?
๘. ມາດເກນໄວຍາກອນແມ່ນຫຍັງ? ໃນໄວຍາກອນລວມມີຈັກມາດເກນ? ແຕ່ລະມາດເກນນັ້ນເປັນແນວໃດ?
๙. ວິທີການ ແລະມາດເກນໄວຍາກອນຕ່າງກັນ ແລະຄືກັນແນວໃດ?

ບົດທີ ๔
ວະຈີວິພາກ ແລະວາກະຍະສຳພັນ

I. ວະຈີວິພາກ(Morphologie)

ວະຈີວິພາກ ມັນມີໜ້າທີ່ຄົ້ນຄວ້າການປ່ຽນຮູບຂອງຄຳ, ການປະກອບສ້າງຄຳ ແລະຊະນິດຂອງຄຳ.

๑. ການປ່ຽນຮູບຂອງສັບ

ການປ່ຽນຮູບຂອງສັບນີ້, ເນື້ອແທ້ແລ້ວແມ່ນ ເພື່ອສະແດງຄວາມໝາຍໄວຍາກອນໃໝ່. ໝາຍຄວາມວ່າ ເມື່ອສັບໃດມັນປ່ຽນຮູບນັ້ນ, ຄວາມໝາຍໄວຍາກອນຂອງມັນກໍຈະປ່ຽນໄປນຳ; ແຕ່ຄວາມໝາຍວັດຈະນາບໍ່ມີການປ່ຽນແປງ. ສະນັ້ນ, ການປ່ຽນຮູບຂອງສັບ ແມ່ນສາມາດສ້າງສັບໃໝ່ຂຶ້ນໄດ້.

ຕົວຢ່າງ: ຄຳສັບ "ສຸລິຍະ"

ສຸລິຍະ ⟶ ສຸລິໂຍ ⟶ ສຸລິຍາ

๘. ການປະກອບສ້າງສັບ

๘.๑ ວິທີເພີ່ມຄຳ

ວິທີເພີ່ມຄຳ ແມ່ນການໃຊ້ມູນພາກອື່ນ ເພື່ອມາຂະຫຍາຍຄຳເຄົ້າ , ແລ້ວໃຫ້ໄດ້ຄວາມໝາຍໃໝ່; ບັນດາມູນພາກທີ່ປະກອບເຂົ້ານີ້ ອາດຈະປະກອບເຂົ້າທາງໜ້າ-ກາງ ຫຼືຫຼັງ ຕາມແຕ່ຈຸດພິເສດຂອງແຕ່ລະພາສາ.

ຕົວຢ່າງ:

- **ພາສາອັງກິດ**: Line ⟶ underline
  Serve ⟶ servant
  Act ⟶ actor

๘.๘ ວິທີປະສົມຄຳເຄົ້າ

ວິທີປະສົມຄຳເຄົ້າ ແມ່ນວິທີເອົາຄຳເຄົ້າຕັ້ງແຕ່ສອງຄຳຂຶ້ນໄປ ມາປະສົມກັນຕາມລະບຽບການອັນແນ່ນອນ. ວິທີນີ້ຖືກນຳໃຊ້ໃນພາສາລາວເຮົາຫຼາຍທີ່ສຸດ ແລະກໍມີຫຼາຍແບບປະສົມ ແຕ່ສັງຮອມແລ້ວ ມີ ๘ ແບບຕົ້ນຕໍ ຄື

❶ ປະສົມແບບສົມທົບ ແມ່ນເອົາຄຳທີ່ພ້ອມຄວາມໝາຍ ຫຼືຂັດຄວາມໝາຍປະສົມກັນ.

ຕົວຢ່າງ:

- ພ້ອມຄວາມໝາຍ: ມືດມົວ, ເຈັບແສບ, ຂົມຂື່ນ, ມຸດມອດ, ຊົມຊື່ນ...
- ຂັດຄວາມໝາຍ: ຂຶ້ນລົງ, ໄປກັບ, ເຂົ້າອອກ, ຊື້ຂາຍ, ຢືມສົ່ງ...

❷ ປະສົມແບບຕົ້ນຕໍ-ສຳຮອງ ແມ່ນການປະສົມທີ່ມີສັບໜຶ່ງເປັນໃຈກາງ(ຕົ້ນຕໍ) ແລະມີສັບອື່ນເປັນສຳຮອງ.

ຕົວຢ່າງ:

- ເຮືອນຄົວ, ລົດຈັກ, ຫ້ອງນອນ, ເດີ່ນບິນ, ເຮືອນກໍ່...

ງ. ປະເພດຂອງສັບ

ການຈັດປະເພດຂອງສັບແມ່ນບັນຫາໜຶ່ງທີ່ສຳຄັນ ເພາະຈຸດພິເສດການເຄື່ອນໄຫວຢູ່ໃນໄວຍາກອນ ມັນບໍ່ຄືກັນໝົດ ແລະຊະນິດຄຳເວົ້ານີ້ ມັນກໍນອນຢູ່ໃນມາດເກນວັດຈະນາ ແລະໄວຍາກອນ . ພວກເຮົາຢາກຈັດປະເພດຂອງສັບໄດ້ ຕ້ອງອີງໃສ່ຄວາມໝາຍວັດຈະນາ ແລະຄວາມໝາຍໄວຍາກອນ; ແຕ່ຄວາມໝາຍວັດຈະນາຢູ່ບ່ອນນີ້ ບໍ່ແມ່ນຄວາມໝາຍຂອງແຕ່ລະສັບ , ມັນແມ່ນຄວາມໝາຍສັງລວມ. ການແບ່ງປະເພດສັບບໍ່ແມ່ນເລື່ອງກະຕວງ ເພາະສັບແຕ່ລະປ ະເພດນັ້ນ ມັນກໍມີຈຸດພິເສດສະເພາະຂອງໃຜມັນ ແລະບໍ່ອາດຫຼົງກັບປະເພດອື່ນໄດ້.

ຕົວຢ່າງ: ເຮົາສາມາດເວົ້າໄດ້ວ່າ ງາມທີ່ສຸດ
ເຮົາບໍ່ສາມາດເວົ້າໄດ້ວ່າ ເຮືອນທີ່ສຸດ

ສະນັ້ນ, ການຮັບຮູ້ ແລະເຂົ້າໃຈປະເພດຂອງສັບ ຈຶ່ງເປັນບັນຫາສຳຄັນທີ່ສຸດ ແລະຕາມທຳມະດາແລ້ວ, ເພິ່ນເຄີຍແບ່ງປະເພດຂອງສັບອອກເປັນ ๗ ປະເພດ ຄື

① ຄຳນາມ(noun) ແມ່ນຄຳທີ່ໃຊ້ເປັນຊື່ເອີ້ນ ຄົນ, ສັດວັດຖຸສິ່ງຂອງຕ່າງໆ ເຊັ່ນ ທ້າວ ຄຳສີ, ປາ, ເຮືອນ,...

② ຄຳແທນນາມ(pronoun) ແມ່ນຄຳທີ່ໃຊ້ແທນຄຳນາມ ເພື່ອບໍ່ໃຫ້ກ່າວເຖິງຄຳນາມຫຼາຍເທື່ອ
ເຊັ່ນ ຂ້ອຍ, ເຈົ້າ, ລາວ...

③ ຄຳກິຣິຍາ(verb) ແມ່ນຄຳທີ່ຊີ້ບອກເຖິງການເຄື່ອນໄຫວການກະທຳຂອງຄຳນາມ ຫຼື ຄຳແທນນາມ ເຊັ່ນ ໄປ, ມາ, ນັ່ງ, ນອນ, ກິນ...

④ ຄຳວິເສດ(Adverb) ແມ່ນຄຳທີ່ສະແດງເຖິງລັກສະນະ ຫຼື ອາການຂອງການເຄື່ອນໄຫວຂອງຄຳນາມ ແລະຄຳສັບພະນາມ. ເວົ້າແບບໜຶ່ງ, ຄຳວິເສດແມ່ນຄຳທີ່ຂະຫຍາຍຄຳກິຣິຍາ ແລະຄຳວິເສດດ້ວຍກັນ ເຊັ່ນ ມ່ວນ, ດີ, ຫຼາຍ, ເກັ່ງ, ອ່ອນ, ແຂງ, ງາມ...

⑤ ຄຳຄຸນສັບ(Adjective) ແມ່ນຄຳທີ່ສະແດງເຖິງລັກສະນະອາການຂອງຄຳນາມ ຫຼື ຄຳແທນນາມ ເຊັ່ນ, ງາມ, ເກັ່ງ, ດີ, ອ່ອນ, ໂງ່, ສະຫຼາດ...

⑥ ຄຳເຊື່ອມ(Preposition) ແມ່ນຄຳທີ່ໃຊ້ເຊື່ອມປະໂຫຍກຕິດກັບປະໂຫຍກອື່ນ ຫຼື ເຊື່ອມຄຳໜຶ່ງຕິດກັບຄຳອື່ນ ເຊັ່ນ ຈາກ, ແຕ່, ສູ່, ໂດຍ, ໄດ້, ຍ້ອນ, ຈົນ...

⑦ ຄຳຕໍ່(Conjuntion) ແມ່ນຄຳທີ່ໃຊ້ຕໍ່ຄຳໜຶ່ງໃສ່ຄຳອື່ນ ຫຼືປະໂຫຍກໜຶ່ງໃສ່ປະໂຫຍກອື່ນ ເຊັ່ນ ຄັນວ່າ, ຫາກວ່າ, ຖ້າວ່າ, ສະນັ້ນ, ກັບ, ແລະ, ຈຶ່ງ...

⑧ ຄຳອຸທານ(Interjection) ແມ່ນຄຳທີ່ໃຊ້ສະແດງເຖິງຄວາມຕົກໃຈ, ປະຫຼາດໃຈ ຫຼືອັດສະຈັນ ເຊັ່ນ ໂຢ່ວ, ໂອ, ໂບ, ເນີ, ໂອຍ, ໄອ່, ອ້າວ, ຟ້າເອີຍ,...

ສະເພາະໃນພາສາລາວ, ເພິ່ນໄດ້ຈັດແບ່ງປະເພດຂອງສັບອອກເປັນ ๗ ປະເພດເທົ່ານັ້ນ.

II. ວາກະຍະສຳພັນ(Syntax)

ວາກະຍະສຳພັນແມ່ນພາກສ່ວນສຳຄັນຂອງໄວຍາກອນ, ຍ້ອນມີວາກະຍະສຳພັນ ບັນດາ ຫົວໜ່ວຍຂອງພາສາຈຶ່ງເຄື່ອນໄຫວໄດ້. ວາກະຍະສຳພັນ ແມ່ນພາກສ່ວນທີ່ຄົ້ນຄວ້າກ່ຽວກັບໝວດຄຳເວົ້າ, ວະລີ ແລະປະໂຫຍກ. ພ້ອມນີ້ມັນຍັງມີໜ້າທີ່ຄົ້ນຄວ້າຜົນສະທ້ອນ ແລະເນື້ອໃນຂອງຄຳເວົ້າແຕ່ລະຄຳຢູ່ໃນປະໂຫຍກ ແລະຄົ້ນຄວ້າສາຍພົວພັນຕ່າງໆຂອງແຕ່ລະພາກສ່ວນຢູ່ໃນປະໂຫຍກ.

ເວົ້າລວມແລ້ວ, ມັນມີໜ້າທີ່ຄົ້ນຄວ້າວະລີ, ປະໂຫຍກ ແລະສາຍພົວພັນວາກະຍະສຳພັນ.

๑. ວະລີ

๑.๑ ຄວາມສຳຄັນຂອງວະລີ

ເມື່ອເວົ້າເຖິງໄວຍາກອນ, ວະລີກໍຍັງມີບັນຫາສັບສົນຢູ່ ເພາະມີຫຼາຍຄວາມເຫັນກ່ຽວກັບວະລີ. ໃນປະມວນປຶ້ມຂອງສະຖາບັນວິທະຍາສາດສັງຄົມແຫ່ງລັດເຊຍ ໄດ້ບັນທຶກໄວ້ວ່າ ອັນທີ່ເອີ້ນວ່າ ວະລີນັ້ນ ແມ່ນຫົວໜ່ວຍໄວຍາກອນອັນໜຶ່ງ ໂດຍແມ່ນສອງສັບແທ້ຂຶ້ນໄປປະກອບເຂົ້າ ເພື່ອສະແດງ ມະໂນພາບໃດໜຶ່ງ ແຕ່ບໍ່ສາມາດແຍກອອກຈາກກັນໄດ້.

ນັກຄົ້ນຄວ້າພາສາຂອງຈີນພັດເວົ້າວ່າ: ນອກຈາກເທິງນັ້ນແລ້ວ, ບັນດາຄຳເວົ້າທີ່ພ້ອມພາລະກຳໄວຍາກອນປະສົມເຂົ້າກັນ ນັບທັງການປະກອບສ້າງຕົວຕັ້ງ-ກຳມະ ກໍເອີ້ນວ່າວະລີ.

ຈາກບັນຫາຂ້າງເທິງນີ້, ພວກເຮົາສາມາດສັງຮວມໄດ້ວ່າ ວະລີແມ່ນການສັງຮວມຄຳເວົ້າເປັນໝວດ ນັບ ຕັ້ງແຕ່ສອງຄຳຂຶ້ນໄປທີ່ໄດ້ປະກອບສ້າງຕາມແບບສາຍພົວພັນຕົ້ນຕໍ-ສຳຮອງ. ໃນນັ້ນມີມູນພາກໜຶ່ງເປັນຕົ້ນຕໍ ແລະມູນພາກໜຶ່ງເປັນສຳຮອງ ວະລີແມ່ນຫົວໜ່ວຍໄວຍາກອນທີ່ຢູ່ລະຫວ່າງກາງຄຳສັບ ແລະປະໂຫຍກ.

๑.๘ ຊະນິດຂອງວະລີ

ຫາກພວກເຮົາ, ອີງໃສ່ບັນດາມູນພາກທີ່ປະກອບເປັນວະລີນັ້ນ ເຂົາເຈົ້າໄດ້ຈັດແບ່ງວະລີອອກເປັນ ๓ ຊະນິດຕົ້ນຕໍ ຄື ນາມວະລີ, ກຳມະວະລີ ແລະຄຸນນາມວະລີ.

① ນາມວະລີ ແມ່ນໝວດຄຳທີ່ມີຄຳນາມຢູ່ໜ້າ ເຊັ່ນ ຄວາຍບັກຕູ້, ນົກເຂົາທອງ, ເມືອງປາກເຊ...

② ກຳມະວະລີ ແມ່ນໝວດຄຳທີ່ມີຄຳກຳມະເປັນໃຈກາງ ເຊັ່ນ ນັ່ງ ອ່ານ, ນອນກິນ, ແລ່ນຫຼິ້ນ, ໄປອາບນ້ຳ...

③ ຄຸນນາມວະລີ ແມ່ນໝວດຄຳທີ່ມີຄຳຄຸນນາມຢູ່ໜ້າ ເຊັ່ນ ງາມປານນາງສາວອາພອນລາວ, ເກັ່ງກ້າສາມາດເຫຼືອເກີນ, ທຶນທານເດັດດ່ຽວໝຽວແໜ້ນ...

๘. ປະໂຫຍກ

๘.๑ ຄວາມສຳຄັນຂອງປະໂຫຍກຕໍ່ກັບພາສາ

ປະໂຫຍກແມ່ນໝວດຄຳເວົ້າທີ່ສົມບູນພາກສ່ວນໜຶ່ງ ເຊິ່ງປະກອບສ້າງຂຶ້ນຕາມຫຼັກການທີ່ແນ່ນອນ, ຕາມໂຄງສ້າງຕົວຕັ້ງ, ຕົວສຳແດງ ແລະຕົວປະກອບ; ມັນມີທຳນອງສຽງອັນແນ່ນອນ. ເວລາຂຽນປະໂຫຍກຈະຖືກຂັ້ນດ້ວຍເຄື່ອງໝາຍຈ້ຳ(.) ໝາຍທ້ອງ(!), ໝາຍຖາມ(?)...

ສັບແລະວະລີ ຍັງ ບໍ່ທັນສາມາດເປັນພາຫະນະໃນການແລກປ່ຽນ ຄົບຄ້າໄດ້ຢ່າງຮອບຄອບ ແລະຄົບຖ້ວນເທື່ອ, ຢາກແລກປ່ຽນຄົບຄ້າໃນສັງຄົມໄດ້ຢ່າງຮອບຄອບ ຄົນ ເຮົາເຄີຍໃຊ້ຫົວໜ່ວຍທີ່ໃຫຍ່ກວ່າວະລີ ແລະສັບນັ້ນເພີ່ນເອີ້ນວ່າ ປະໂຫຍກ.

๘.๘ ຊະນິດປະໂຫຍກ

ການແບ່ງຊະນິດປະໂຫຍກໃນພາສາກໍຍັງມີຄວາມສັບສົນຢູ່ ເພາະແຕ່ລະພາສາກໍມີຊະນິດປະໂຫຍກບໍ່ຄືກັນ ແຕ່ເມື່ອອີງຕາມຈຸດພິເສດຂອງພາສາແລ້ວ, ເພີ່ນແບ່ງປະໂຫຍກອອກເປັນ ๔ ຊະນິດຕົ້ນຕໍ ຄື ປະໂຫຍກງ່າຍ ແລະປະໂຫຍກປະສົມ.

๘.๘.๑ ປະໂຫຍກງ່າຍ(ປະໂຫຍກສາມັນ)

ປະໂຫຍກງ່າຍ ແມ່ນປະໂຫຍກທີ່ມີແຕ່ ๔ ຫຼື ๓ ພາກສ່ວນ ຄື ຕົວຕັ້ງແລະຕົວສຳແດງ ຫຼື ຕົວຕັ້ງ, ຕົວສຳແດງ ແລະຕົວປະກອບ.

ຕົວຢ່າງ: ມ້າແລ່ນ

ລາວນອນ

ພວກເຂົາໄປໂຮງຮຽນ

ໃນປະໂຫຍກງ່າຍນີ້, ເພີ່ນຍັງແບ່ງອອກເປັນ ๔ ຊະນິດຕື່ມອີກ ຄື ປະໂຫຍກທີ່ມີຄຳຕົວຕັ້ງຈະແຈ້ງ ແລະປະໂຫຍກທີ່ບໍ່ມີຄຳຕົວຕັ້ງຈະແຈ້ງ.

ຕົວຢ່າງ:

- ຈະແຈ້ງ: ລາວຊຽນໜັງສື
  ນັກສຶກສາແກ້ບົດຝຶກຫັດ
  ຊາວນາກ່ຽວເຂົ້າ
- ບໍ່ຈະແຈ້ງ: ໃຜເອົາກໍໄດ້
  ຜູ້ໃດຊິມາກະຢ່າ
  ວ່າແນວໃດກໍໄດ້

ນອກຈາກນີ້ແລ້ວ, ຍັງມີກໍລະນີທີ່ວ່າ ປະໂຫຍກມີແຕ່ພາກສ່ວນດຽວ ເຊັ່ນ

- ເຈົ້າໄປຫຼວງພະບາງດ້ວຍຫຍັງ? + ຍົນ
- ເຈົ້າເຫັນວ່າລາວເປັນຄົນແນວໃດ? + ດີ
- ເຈົ້າຄິດວ່າອັນນີ້ມັນງ່າຍຊັ້ນບໍ? + ຍາກ

๘.๘.๘ ປະໂຫຍກສົມ(ປະໂຫຍກປະສົມ)

ປະໂຫຍກສົມ ແມ່ນປະໂຫຍກທີ່ສະແດງເຖິງແນວຄິດອາລົມຈິດສັບສົນໜ້ອຍທີ່ສຸດ, ກໍຕ້ອງມີສອງໂຄງສ້າງຂຶ້ນໄປ ເຊິ່ງອາດຈະຕິດຕໍ່ກັນດ້ວຍຄຳເຊື່ອມ ຫຼືຄຳຕໍ່.

ຕົວຢ່າງ:

- ອ້າຍຫົວ<u>ແຕ່</u>ນ້ອງໄຫ້.
- ນາງວຽງພິມເຈັບ<u>ແຕ່</u>ລາວ<u>ກໍ</u>ຍັງ<u>ມາ</u>ໂຮງຮຽນຢູ່.

- ລາວຮຽນໜັງສືແຕ່ຂ້ອຍຟັງເພງ.

ນ. ສາຍພົວພັນວາກະຍະສຳພັນ

ນ.ງ ສາຍພົວພັນແບບເທົ່າທຽມ

ສາຍພົວພັນແບບເທົ່າທຽມ ແມ່ນສາຍພົວພັນທີ່ເປັນເອກະພາບກັນທາງດ້ານພາລະກຳ, ໝາຍ ຄວາມວ່າມູນພາກຕ່າງໆທີ່ປະກອບເປັນສາຍພົວພັນນີ້, ມັນມີຄວາມສຳຄັນເທົ່າທຽມກັນ, ບໍ່ມີມູນ ພາກໃດຫຼຸດລົ້ນກັນ, ບໍ່ມີມູນພາກໃດຂຶ້ນກັບມູນພາກໃດໝົດ; ທຸກໆມູນພາກແມ່ນເອກະພາບນຳກັນຢູ່ ບ່ອນພາລະກຳ ອາດເວົ້າໄດ້ວ່າ ພວກມັນມີຄວາມສະເໝີພາບກັນ.

ນ.ຄ ຈຸດພິເສດຂອງສາຍພົວພັນແບບເທົ່າທຽມ

- ມູນພາກຕ່າງໆທີ່ປະກອບເປັນສາຍເທົ່າທຽມນີ້, ຕາມທຳມະດາແລ້ວມີຄວາມໝາຍໄວຍາ ກອນຄືກັນ ໝາຍ ຄວາມວ່າ ຖ້າ ເປັນຄຳນາມກໍເປັນຄຳນາມໝົດ, ຖ້າເປັນຄຳກຳມະກໍເປັນຄຳກຳມະ ໝົດ.

ຕົວຢ່າງ:

ນາມ:	ຜົວແລະເມຍ, ອ້າຍກັບນ້ອງ...
ແທນນາມ:	ເຈົ້າແລະຂ້ອຍ, ໂຕກັບເຮົາ...
ກຳມະ:	ນັ່ງກັບນອນ, ໄປແລະມາ...
ຄຸນນາມ:	ທັງໂງ່ທັງຈ້ຳ, ດີແລະຊົ່ວ...

- ລະບຽບຂອງສາຍພົວພັນນີ້, ແມ່ນບໍ່ຄົງທີ່ສາມາດປ່ຽນບ່ອນກັນໄດ້. ໝາຍຄວາມວ່າ ເອົາ ມູນພາກໃດໄວ້ກ່ອນຫຼືຫຼັງກໍໄດ້ ແຕ່ຄວາມໝາຍຂອງພວກມັນຍັງຄືເກົ່າ.

ຕົວຢ່າງ: ເຈົ້າແລະຂ້ອຍ ⟶ ຂ້ອຍແລະເຈົ້າ

ພໍ່ກັບລູກ ⟶ ລູກກັບພໍ່

ໂຕະແລະຕັ່ງ ⟶ ຕັ່ງແລະໂຕະ.

ສາຍພົວພັນນີ້, ມັກເຊື່ອມດ້ວຍຄຳເຊື່ອມແລະຄຳຕໍ່

ຕົວຢ່າງ: ປາ<u>ກັບ</u>ນ້ຳ

ທັງ<u>ກິນ</u>ທັ<u>ງ</u>ຍ່າງ

ນົກເຂົາ<u>ເທົ່າ</u>ນົກກາງແກ

ຂ້ອ<u>ຍແລະ</u>ເຈົ້າ

ນ.ນ ສາຍພົວພັນແບບຕົ້ນຕໍ-ສຳຮອງ

ນ.ນ.ນ ແນວໃດຈຶ່ງເອີ້ນວ່າສາຍພົວພັນແບບຕົ້ນຕໍ-ສຳຮອງ

ສາຍພົວພັນນີ້ ມີບົດບາດສຳຄັນພິເສດຕໍ່ກັບພາສາທີ່ບໍ່ປ່ຽນຮູບ ເພາະອີງໃສ່ສາຍພົວພັນນີ້ ມັນ ຈະຊ່ວຍໃຫ້ພວກເຮົາປະກອບສ້າງມູນພາກໃໝ່ໄດ້ຢ່າງງ່າຍດາຍ ແລະຫຼວງຫຼາຍ . ສາຍພົວພັນນີ້ ສ້າງຂຶ້ນບົນພື້ນຖານທີ່ວ່າ ມູນພາກໜຶ່ງເປັນໃຈກາງ ແລະມູນພາກໜຶ່ງເປັນສຳຮອງ , ເວລາໃດມູນ ພາກຕົ້ນຕໍກໍມີລັກສະນະຕັດສິນກວ່າ. ໝາຍຄວາມວ່າ ມູນພາກຕ່າງໆທີ່ປະກອບເປັນມູນພາກນີ້ ມີ

ຄວາມສຳຄັນທຸດລື່ນກັນ, ສ່ວນຫຼາຍແລ້ວມູນພາກສຳຮອງ ແມ່ນພຽງແຕ່ສະແດງຄວາມໝາຍດ້ານ ປະລິມານ, ທາດແທ້ ຫຼືຈຸດພິເສດຂອງສິ່ງວັດຖຸທີ່ໄດ້ຍົກຂຶ້ນນັ້ນ; ສະເພາະພາສາລາວເຮົາ, ເມື່ອເວົ້າ ເຖິງສາຍພົວພັນນີ້ແລ້ວ ເວລາໃດມູນພາກຕົ້ນຕໍກໍຢູ່ທາງໜ້າສະເໝີ.

๓.๓.๘ ຈຸດພິເສດຂອງສາຍພົວພັນແບບຕົ້ນຕໍ-ສຳຮອງ

- ມູນພາກຕ່າງໆ ທີ່ປະກອບເປັນສາຍພົວພັນນີ້ປ່ຽນບ່ອນກັນບໍ່ໄດ້ ຖ້າປ່ຽນບ່ອນຈະເຮັດໃຫ້ ຄວາມໝາຍປ່ຽນໄປນຳ ຫຼືອາດຈະບໍ່ມີຄວາມໝາຍ.

ຕົວຢ່າງ: ເຮືອນຄົວ ⟶ ຄົວເຮືອນ

ລົດຈັກ ⟶ ຈັກລົດ

ຫ້ອງການ ⟶ ການຫ້ອງ

- ມູນພາກຕ່າງໆທີ່ປະກອບເປັນສາຍພົວພັນນີ້ ບາງເທື່ອອາດແມ່ນຊະນິດດຽວ , ແຕ່ບາງເທື່ອ ກໍແມ່ນຊະນິດຕ່າງກັນ.

ຕົວຢ່າງ: ຊະນິດດຽວ: ເຮືອນຮ້ານ, ຫໍໂຮງ...

ຊະນິດຕ່າງກັນ: ເຮືອນນອນ, ລົດຖີບ, ເດີ່ນຍົນ...

- ພາລະກຳຂອງບັນດາມູນພາກທີ່ປະກອບເປັນສາຍພົວພັນນີ້ ແມ່ນພາລະກຳມູນພາກຕົ້ນຕໍ ສຳຄັນກວ່າ. ສະນັ້ນ, ເວລາພົວພັນກັບສາຍພົວພັນອື່ນ ຈະມີແຕ່ມູນພາກຕົ້ນຕໍເທົ່ານັ້ນທີ່ໄດ້ພົວພັນ ນຳກັນ.

ຕົວຢ່າງ: ລາວ ຊຽນ ໜັງສື <u>ງາມ</u> <u>ທີ່ສຸດ</u>

๓.๔ ສາຍພົວພັນແບບຕົວຕັ້ງ-ກຳມະ

๓.๔.๑ ແນວໃດຈຶ່ງເອີ້ນວ່າສາຍພົວພັນແບບຕົວຕັ້ງ-ກຳມະ

ສາຍພົວພັນແບບຕົວຕັ້ງ-ກຳມະ ຕ່າງຈາກສາຍພົວພັນແບບເທົ່າທຽມ ແລະສາຍພົວພັນແບບ ຕົ້ນຕໍ-ສຳຮອງ, ສາຍພົວພັນນີ້ມັນໄດ້ສະແດງອອກໃນຂັ້ນປະໂຫຍກແລ້ວ. ໝາຍຄວາມວ່າ ມັນມີ ສາຍພົວພັນແບບກົງໄປກົງມາສອງທິດ, ມູນພາກນີ້ຄົງຕົວຢູ່ໄດ້ຍ້ອນອາໄສມູນພາກນັ້ນ. ມູນພາກ ຕ່າງໆ ທີ່ປະກອບເປັນສາຍພົວພັນນີ້ມີຄວາມສຳຄັນເທົ່າໆກັນ ແລະຜູກມັດເຊື່ອງກັນແລະກັນ. ແຕ່ມັນ ຕ່າງຈາກສາຍພົວພັນແບບເທົ່າທຽມຢູ່ບ່ອນມູນພາກຕ່າງໆ ທີ່ປະກອບເປັນສາຍພົວພັນນີ້ ປ່ຽນບ່ອນ ກັນບໍ່ໄດ້ ເພາະມູນພາກໜຶ່ງເຮັດໜ້າທີ່ເປັນຕົວຕັ້ງ, ມູນພາກໜຶ່ງເຮັດໜ້າທີ່ເປັນກຳມະ.

📖 ສົມທຽບສາຍພົວພັນທັ້ງສາມແບບ



ນ.ຄ.ຄ ແນວໃດຈຶ່ງເອີ້ນວ່າສາຍພົວພັນແບບຕົວຕັ້ງກຳມະ

ເວົ້າເຖິງສາຍພົວພັນແບບຕົວຕັ້ງ-ກຳມະນີ້, ຍັງມີຫຼາຍທັດສະນະທີ່ຜິດພາດ, ແຕ່ສັງຮວມແລ້ວ ກໍມີສອງທັດສະນະຕົ້ນຕໍ ຄື ພວກໜຶ່ງຖືວ່າ ມູນພາກຕົວຕັ້ງສຳຄັນກວ່າ ແລະອີກພວກໜຶ່ງຖືວ່າ ມູນພາກກຳມະສຳຄັນກວ່າ.

① ພວກທີ່ຖືວ່າມູນພາກຕົວຕັ້ງສຳຄັນກວ່າ ເຂົາໄດ້ອະທິບາຍວ່າ ຕົວຕັ້ງແມ່ນມູນພາກທີ່ໄດ້ ກຳນົດ, ສ່ວນກຳມະແມ່ນມູນພາກທີ່ຖືກກຳນົດ. ຕົວຕັ້ງມັນກຳນົດປ່ຽນຮູບກຳມະ ໝາຍຄວາມວ່າ ຕົວຕັ້ງມັນມີລັກສະນະຕັດສິນກວ່າ ເພາະຕົວຕັ້ງປ່ຽນ, ກຳມະກໍຕ້ອງປ່ຽນ.

ທັດສະນະນີ້ ແມ່ນ ເຂົ້າຫຼົ່ງປົນເປກັບສາຍພົວພັນແບບຕົ້ນຕໍ-ສຳຮອງ, ຮູບການອາດຈະຄ້າຍຄືກັນບາງອັນ, ແຕ່ຕ້ອງເຂົ້າໃຈວ່າ ສາຍພົວພັນລະຫວ່າງຕົວ ຕັ້ງ-ກຳມະ ມັນຕ່າງຈາກສາຍພົວພັນ ແບບຕົ້ນຕໍ-ສຳຮອງ ເພາະສາຍພົວພັນລະຫວ່າງຕົວຕັ້ງ-ກຳມະ ແມ່ນສາຍພົວພັນຜູກມັດກັນ.

② ພວກທີ່ຖືວ່າ ມູນພາກກຳມະສຳຄັນກວ່າ ເຂົາໄດ້ອະທິບາຍ ຕົວຕັ້ງແມ່ນມູນພາກສຳ ຮອງ, ບໍ່ມີຄວາມສຳຄັນເທົ່າກຳມະ. ມູນພາກກຳມະສຳຄັນກວ່າ ເພາະມູນພາກກຳມະແມ່ນມູນພາກ ທີ່ສະແດງການກ່າວບອກວ່າ ຕົວຕັ້ງມີການເຄື່ອນ ໄຫວແນວໃດ, ຈະຮູ້ໄດ້ກໍຕ້ອງແມ່ນມູນພາກກຳມະເປັນ ຜູ້ຊີ້ບອກ. ສະນັ້ນ, ມູນພາກກຳມະຈຶ່ງສຳຄັນກວ່າຕົວຕັ້ງ.

๔. ບັນຫາທີ່ຄວນເອົາໃຈໃສ່

ທັດສະນະທີ່ຖືວ່າ ມູນພາກຕົວຕັ້ງສຳຄັນກວ່າກຳມະ ຫຼືມູນພາກກຳມະສຳຄັນກວ່າຕົວຕັ້ງ ທັງ ສອງນີ້ລ້ວນແລ້ວແຕ່ຜິດພາດ ເພາະເຂົາເບິ່ງແຕ່ຄວາມສຳຄັນ ດ້ານໃດດ້ານໜຶ່ງສະເພາະເທົ່ານັ້ນ ໃນ ຕົວຈິງແລ້ວສາຍພົວພັນແບບຕົວຕັ້ງ-ກຳມະນີ້ ແມ່ນສາຍພົວພັນແບບຜູກມັດເຊິ່ງກັນແລະກັນ ແລະ ກຳນົດເຊິ່ງກັນແລະກັນ. ມູນພາກນີ້ຄົງຕົວໄດ້ກໍແມ່ນຍ້ອນມູນພາກນັ້ນກຳນົດ ແລະມູນພາກນັ້ນຄົງ ຕົວຢູ່ໄດ້ກໍແມ່ນຍ້ອນມູນພາກນີ້ກຳນົດ.

ບັນຫາໜຶ່ງອີກ, ພວກເຮົາຕ້ອງຮັບຮູ້ວ່າ ສາຍພົວພັນນີ້ , ມັນສະແດງໃນຂັ້ນປະໂຫຍກແລ້ວ. ເມື່ອເວົ້າເຖິງປະໂຫຍກຢ່າງໜ້ອຍທີ່ສຸດພາກສ່ວນຕົວຕັ້ງ ແລະກຳມະແ ມ່ນຂາດບໍ່ໄດ້, ພວກເຮົາບໍ່ ສາມາດເວົ້າໄດ້ວ່າ ຕົວຕັ້ງ ຫຼືກຳມະມີຄວາມສຳຄັນຫຼຸດລົ້ນກັນ. ຕົວຕັ້ງຢາກເຮັດໃຫ້ຜູ້ອື່ນເຫັນການ ເຄື່ອນໄຫວຂອງຕົນເອງ ກໍມີແຕ່ຜ່ານກຳມະ ແລະກຳມະຢາກເຮັດໃຫ້ຜູ້ອື່ນເຫັນວ່າຕົນເອງແມ່ນການ

ເຄື່ອນໄຫວຂອງໃຜ ກໍຕ້ອງອາໄສຕົວຕັ້ງ. ທັງສອງມູນພາກນີ້ ລ້ວນແລ້ວແຕ່ອາໄສເຊິ່ງກັນແລະກັນ, ພ້ອມກັນຄົງຕົວ.

ສະນັ້ນ, ທັດສະນະທີ່ວ່າ ຕົວຕັ້ງສຳຄັນກວ່າກຳມະ ຫຼືກຳມະສຳຄັນກວ່າຕົວຕັ້ງ ລ້ວນແລ້ວແຕ່ແມ່ນທັດສະນະທີ່ຜິດພາດ. ພວກເຮົາຕ້ອງສັງເກດ ແລະໄຈ້ ແຍກບັນຫາໃຫ້ຈະແຈ້ງ ຫາກບໍ່ດັ່ງນັ້ນ ພວກເຮົາກໍຈະຕົກເຂົ້າໃນວົງໂຄຈອນຂອງທັດສະນະທີ່ຜິດພາດດັ່ງກ່າວນັ້ນ.

ຄຳຖາມ

๑. ວະຈີວິພາກມີໜ້າທີ່ຫຍັງແດ່? ແຕ່ລະໜ້າທີ່ນັ້ນເປັນແນວໃດ ຍົກຕົວຢ່າງ.
๘. ວາກະຍະສຳພັນມັນຄົ້ນຄວ້າບັນຫາຫຍັງແດ່? ແຕ່ລະບັນຫານັ້ນເປັນແນວໃດ? ຍົກຕົວຢ່າງ.
๙. ສາຍພົວພັນວາກະຍະສຳພັນມີຈັກແບບ, ແຕ່ລະແບບນັ້ນເປັນແນວໃດ? ຍົກຕົວຢ່າງ.